# ທິດສະດີ

# ການເມືອງ - ການປົກຄອງ

**ວາລະສານຄົ້ນຄວ້າຂອງສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ**




- ໝູນໃຊ້ແນວຄິດໄກສອນ ພົມວິຫານກ່ຽວກັບ ວຽກງານການເງິນ ຢູ່ປະເທດເຮົາ.
- ເສີມຂະຫຍາຍຄຸນຄ່າແນວຄິດໄກສອນ ພົມວິຫານ ກ່ຽວກັບພັກສຶກສາອົບຮົມຊາວໜຸ່ມ.
- ສົ່ງເສີມສະຫະກອນກະສິກຳຢູ່ປະເທດເຮົາ.

ປີທີ 28
ສະບັບທີ 234
ປະຈຳເດືອນ 12
ປີ 2024

# ສາລະບານ

ລຳສີ ຄຳມະນີໂຄດ: ໝູນໃຊ້ແນວຄິດໄກສອນ ພົມວິຫານ ກ່ຽວກັບວຽກງານການເງິນ ຢູ່ປະເທດເຮົາ.................................................. 1

ວຽງພັນ ຈິດສະດີ: ເສີມຂະຫຍາຍຄຸນຄ່າແນວຄິດໄກສອນ ພົມວິຫານ ກ່ຽວກັບພັກສຶກສາອົບຮົມຊາວໜຸ່ມ ຕາມແນວທາງຂອງພັກ............. 9

ນ. ດອກໄມ້ ຈັນດາລາ: ສົ່ງເສີມສະຫະກອນກະສິກຳ ຢູ່ປະເທດເຮົາໃຫ້ມີຄວາມເຂັ້ມແຂງ............................................................ 15

ນ. ເພັດສະດີ ຄັນທະວົງ: ເພີ່ມທະວີການນຳພາຂອງພັກຕໍ່ການກໍ່ສ້າງຖັນແຖວສະມາຊິກພັກ ຢູ່ສະຖາບັນການເມືອງແລະການປົກຄອງແຫ່ງຊາດ. 24

ນ. ສຸກກະເສີມ ຄຳວິໄຊ: ການໝູນໃຊ້ກົດເກນປະລິມານ ແລະຄຸນນະພາບເຂົ້າໃນການກໍ່ສ້າງ-ບຳລຸງພະນັກງານ ຢູ່ສະພາແຫ່ງຊາດ................ 31

ນ. ໂສພາ ໄຊວົງສາ: ຄຸ້ມຄອງລາຍຈ່າຍງົບປະມານຂອງລັດ ຢູ່ຫ້ອງວ່າການສູນກາງພັກ............................................................... 37

ບຸນກັນ ໄຊຍະວົງ: ຍົກສູງຄຸນນະພາບວຽກງານກໍ່ສ້າງ ແລະບຳລຸງພະນັກງານ ຢູ່ກະຊວງການຕ່າງປະເທດ............................................ 42

ບຸນຈັນ ວັນວິໄຊ: ຄຸ້ມຄອງແຮງງານລາວ ແລະແຮງງານຕ່າງປະເທດຢູ່ແຂວງຫຼວງນ້ຳທາ............................................................... 47

ບຸນຕີ ຊົ່ງຢ່າງຈີ່: ເພີ່ມທະວີຕໍ່ວຽກງານກໍ່ສ້າງ-ບຳລຸງພະນັກງານ ຢູ່ແຂວງຫຼວງພະບາງ............................................................... 53

ພອນໄຊ ຫຼວງວິໄລ: ເພີ່ມທະວີການນຳພາຂອງຄະນະພັກກ່ຽວກັບວຽກງານກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຢູ່ກະຊວງສາທາລະນະສຸກ............................................................... 59

ເອກທະນູ ພຸດສະດີ: ຄຸ້ມຄອງການເກັບລາຍຮັບພາສີ ຢູ່ແຂວງຊຽງຂວາງ.. 65

ນ. ສີອຳພອນ ແກ້ວບົວໄຂ: ບົດບາດສະຫະພັນແມ່ຍິງໃນການແກ້ໄຂຄວາມທຸກຍາກຂອງປະຊາຊົນ ຢູ່ແຂວງຄຳມ່ວນ........................ 71

ນ. ຕຸ້ຍ ບົວມະນີຈັນ: ການມີສ່ວນຮ່ວມຂອງປະຊາຊົນໃນການສ້າງຄວາມເຂັ້ມແຂງໃຫ້ແກ່ອົງການບໍລິຫານລັດ ຢູ່ເມືອງຫາດຊາຍຟອງນະຄອນຫຼວງວຽງຈັນ............................................................... 78

ວິນຸດ ໄຊຍະສານ: ຍົກສູງບົດບາດວຽກງານຂະບວນການຊາວໜຸ່ມຢູ່ສູນກາງຊາວໜຸ່ມປະຊາຊົນ ປະຕິວັດລາວ (ຕໍ່ຈາກສະບັບປະຈຳເດືອນ 11/2024)............................................................... 86

ນ. ພູວຽງ ແກ້ວສີມີໄຊ: ພັດທະນາວຽກງານເຕັກໂນໂລຊີຂໍ້ມູນຂ່າວສານ ແລະການສື່ສານ ໃນຂອບເຂດທົ່ວປະເທດ................................. 90

**ຜູ້ຊີ້ນຳ**
ປທ. ນ. ບຸນມີ ຈຸນລະຈັກ
**ຄະນະບັນນາທິການ**
ປອ. ດາວສະຫວັນ ເຄືອມີໄຊ
ປອ. ສີສົມພອນ ວົງພະຈັນ
ປທ. ນ. ວະໄລລັກ ອະໄພ

**ກອງບັນນາທິການ**
ປທ. ສະນຸກສິນ ໂກສີພັນ
ນ. ພູວຽງ ແກ້ວສີມີໄຊ
ນ. ດອກໄມ້ ຈັນດາລາ
**ກອງເລຂາ**
ນ. ພູວຽງ ແກ້ວສີມີໄຊ
**ຈັດໜ້າ**
ລຳພູນ ຖຸນໄຊຍາ
**ຈຳໜ່າຍ**
ນ. ດອກໄມ້ ຈັນດາລາ
ລຳພູນ ຖຸນໄຊຍາ
**ຮູບພາບ**
ນ. ທິດດາວອນ ດວງປະເສີດ
**ແປສາລະບານ**
ລຳພູນ ຖຸນໄຊຍາ
**ຮູບພາບໜ້າປົກ**
ຕາງໜ້າຄະນະພັກ, ຄະນະນຳ ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ເຂົ້າຮ່ວມອວຍພອນເອກອັກຄະລັດຖະທູດ ສສ ຫວຽດນາມ ປະຈຳ ສປປ ລາວ ເນື່ອງໃນໂອກາດວັນສ້າງຕັ້ງພັກກອມມູນິດຫວຽດນາມ ຄົບຮອບ 95 ປີ
**ສຳນັກງານ**
ສູນຂໍ້ມູນຂ່າວສານ
ສະຖາບັນການເມືອງແລະ
ການປົກຄອງແຫ່ງຊາດ
ບ້ານທ່າງ່ອນ ເມືອງໄຊທານີ
ນະຄອນຫຼວງວຽງຈັນ
ໂທລະສັບ/ແຟັກ: 021 752352
020 29994161
ອີເມລ: Valasan.nappa@yahoo.com
ເວບໄຊ: www.nappa.gov.la

# ໝູນໃຊ້ແນວຄິດໄກສອນ ພົມວິຫານ ກ່ຽວກັບວຽກງານການເງິນ ຢູ່ປະເທດເຮົາ

ຂຽນໂດຍ: ລຳສີ ຄຳມະນີໂຄດ

ການເງິນເປັນບັນຫາໃຈກາງໃນໂຄງສ້າງຂອງລະບົບເສດຖະກິດແຫ່ງຊາດ, ແມ່ນຊັບພະຍາກອນທີ່ເປັນສາຍເລືອດໃນຂະບວນວິວັດການເຄື່ອນໄຫວການຜະລິດ ແລະການເຄື່ອນໄຫວທາງດ້ານເສດຖະກິດ, ຍ້ອນວ່າການເງິນຊຸກຍູ້ການຈະເລີນເຕີບໂຕທາງດ້ານເສດຖະກິດ, ຮັບປະກັນສະຖຽນລະພາບທາງດ້ານເສດຖະກິດ. "ນະໂຍບາຍການເງິນແມ່ນນະໂຍບາຍທີ່ໃຊ້ເຄື່ອງມືດ້ານການເງິນ ເຊິ່ງພົວພັນເຖິງລາຍຮັບ ແລະລາຍຈ່າຍຂອງລັດຖະບານ"[(1)]. ປະທານ ໄກສອນ ພົມວິຫານ ໄດ້ສຸມໃສ່ສຶກສາຄົ້ນຄວ້າບັນດາທິດສະດີຕ່າງໆເພື່ອກຳນົດແນວທາງພັດທະນາປະເທດຊາດໃນເງື່ອນໄຂໃໝ່ ໂດຍຍຶດພື້ນຫຼັກການຖືປະເທດຊາດ ແລະປະຊາຊົນສຳຄັນກວ່າສິ່ງອື່ນໃດ ເພິ່ນໄດ້ສຶກສາຄົ້ນຄວ້າທິດສະດີ ເພື່ອເປັນພື້ນຖານໃຫ້ແກ່ການວາງແນວທາງຂອງພັກ. "ການສ້າງເສດຖະກິດ ແລະປົວແປງຊີວິດການເປັນຢູ່ຂອງປະຊາຊົນ ເປັນໜ້າທີ່ພື້ນຖານອັນໜຶ່ງແຫ່ງການຕໍ່ສູ້ປະຕິວັດ"[(2)].

ວຽກງານການເງິນໄດ້ຮັບຄວາມເອົາໃຈໃສ່ຈາກປະທານ ໄກສອນ ພົມວິຫານ ຕະຫຼອດໄລຍະການນຳພາຂອງເພິ່ນ, ມັນແມ່ນໂຄງປະກອບພື້ນຖານຂອງໂຄງສ້າງທາງສັງຄົມທີ່ຂາດບໍ່ໄດ້ ແລະມີລັກສະນະຕັດສິນ ໂດຍສະເພາະແມ່ນມັນຕິດພັນແໜ້ນກັບໂຄງປະກອບເສດຖະກິດຂອງການປະຕິວັດ ຂອງຊາດ ເຊິ່ງປະທານ ໄກສອນ ພົມວິຫານ ໄດ້ນຳພາ-ຊີ້ນຳຕະຫຼອດມາ ແລະໄດ້ມີທັດສະນະແນວຄວາມຄິດກ່ຽວກັບການດຳເນີນພາລະກິດປ່ຽນແປງໃໝ່ ໂດຍເລີ່ມສະແດງອອກໃນກອງປະຊຸມສູນກາງພັກ ຄັ້ງທີ 7 ສະໄໝທີ II ປີ 1979 ເຊິ່ງໄດ້ປຶກສາຫາລື ແລະຮັບຮອງເອົາມະຕິກ່ຽວກັບ "ບາງບັນຫາໃຫຍ່ທາງດ້ານເສດຖະກິດ, ການຫັນໄປສູ່ກົນໄກຄຸ້ມຄອງເສດຖະກິດໃໝ່ທີ່ມີປະສິດທິຜົນ"[(3)] ຄວາມຄິດລິເລີ່ມດັ່ງກ່າວໄດ້ຖືກຜັນຂະຫຍາຍຢ່າງຕໍ່ເນື່ອງໃນມະຕິຂອງກອງປະຊຸມສູນກາງພັກ ແລະກອງປະຊຸມໃຫຍ່ຄັ້ງທີ IV ຂອງພັກ ປີ 1986 ໂດຍໄດ້ເນັ້ນໜັກທັດສະນະພື້ນຖານກ່ຽວກັບການດັດແປງກົນໄກຄຸ້ມຄອງເສດຖະກິດ ເປັນຕົ້ນແມ່ນນຳໃຊ້ການພົວພັນສິນຄ້າ-ເງິນຕາໃຫ້ຖືກຕ້ອງ; ນຳໃຊ້ຄວາມສາມາດບົ່ມຊ້ອນ ຂອງບັນດາພາກສ່ວນເສດຖະກິດ ເພື່ອຂະຫຍາຍການຜະລິດ. ກອງປະຊຸມສູນກາງ ຄັ້ງທີ 5 ສະໄໝທີ IV ທີ່ດຳເນີນແຕ່ວັນທີ 28/12/1987 ຫາ 27/01/1988 ໄດ້ເປັນຂີດ ໝາຍສຳຄັນຂອງການກ້າວເຂົ້າສູ່ການປ່ຽນແປງໃໝ່ຢ່າງເລິກເຊິ່ງ ແລະ

---

(1) ໄກສອນ ພົມວິຫານ ນິພົນເລືອກເຟັ້ນ ເຫຼັ້ມ IV, ປີ 2005, ໜ້າ 468.

(2) ໄກສອນ ພົມວິຫານ, ນິພົນເລືອກເຟັ້ນ ເຫຼັ້ມ I, ປີ 1985, ໜ້າ 59.

(3) 5 ບົດຮຽນຂອງພັກປະຊາຊົນ ປະຕິວັດລາວ ຈາກການນຳພາປ່ຽນແປງໃໝ່, ປີ 2000, ໜ້າ 5.

ຮອບດ້ານໃນຂົງເຂດເສດຖະກິດ, ໃນນັ້ນນັບທັງແຜນນະໂຍບາຍກ່ຽວກັບວຽກງານການເງິນ ສະແດງອອກຄືດັ່ງນີ້:

1). ກ່ຽວກັບພະນັກງານການເງິນ. ຍ້ອນການໄລ່ລຽງເສດຖະກິດ ແລະການບັນຊີການເງິນມີລັກສະນະພິເສດ; ດັ່ງນັ້ນ, ພະນັກງານການເງິນຕ້ອງມີວິຊາສະເພາະເປັນລະບົບ ແລະມີບົດຮຽນຕົວຈິງໃນວຽກງານການເງິນ. “ເມື່ອທຽບກັບຄວາມຮຽກຮ້ອງຕ້ອງການໃໝ່ເຫັນວ່າຖັນແຖວພະນັກງານການເງິນຂອງພວກເຮົາຍັງອ່ອນທີ່ສຸດໃນດ້ານວິຊາການ; ບົດຮຽນ, ຄວາມຮູ້ດ້ານກົດໝາຍການເງິນ ແລະເສດຖະກິດທົ່ວໄປ. ຍ້ອນແນວນັ້ນການຄຸ້ມຄອງການເງິນແຫ່ງລັດຈຶ່ງສັບສົນ, ຊະຊາຍທີ່ສຸດ ແລະຂາດຄວາມສັກສິດ”[1]. ການຄຸ້ມຄອງການເງິນວິສາຫະກິດຍັງແບບປະຖົມປະຖານ, ງ່າຍດາຍບໍ່ຈະແຈ້ງ ແລະຂາດປະສິດທິຜົນ ຕ້ອງເຫັນວ່າຜົນສຳເລັດຂອງການຄຸ້ມຄອງທຸລະກິດໃໝ່ແມ່ນຂຶ້ນກັບສິລະປະການຕະຫຼາດເປັນຕົ້ນຕໍບວກກັບຄວາມສາມາດໃນການຄຸ້ມຄອງດ້ານການເງິນ.

ກ່ຽວກັບການສ້າງພະນັກງານການເງິນ “ຄວນຈັດຕັ້ງຊຸດບຳລຸງໄລຍະສັ້ນກ່ຽວກັບວິຊາການໃໝ່ດ້ານການເງິນ, ເລືອກເຟັ້ນເອົາພະນັກງານຜູ້ທີ່ມີຄວາມສາມາດ, ລະດັບວັດທະນະທຳ, ຊື່ສັດບໍລິສຸດ ແລະທ່ຽງທຳມາເຝິກອົບຮົມ ເພື່ອປະຕິບັດກົນໄກການເງິນໃໝ່. ພ້ອມກັນນັ້ນ, ກໍຕ້ອງມີແຜນການສ້າງນັກວິຊາການດ້ານການບັນຊີ-ການເງິນ, ດ້ານການກວດກາ ແລະກວດກາການເງິນເປັນໄລຍະຍາວ”[2]. ພະນັກງານຄຸ້ມຄອງບໍລິຫານເສດຖະກິດຕ້ອງຄົ້ນຄວ້າຢ່າງລະອຽດກ່ຽວກັບແຜນນະໂຍບາຍ, ນະໂຍບາຍ, ລະບຽບການ ແລະກົດໝາຍການເງິນ. ຕ້ອງຫຼີກເວັ້ນສະພາບທີ່ວ່າມີແຕ່ຄວາມຟົດຟື້ນປະຕິວັດ, ແຕ່ພັດຂາດຄວາມຮູ້ດ້ານນະໂຍບາຍ ແລະລະບຽບການເງິນ, ອັນກໍ່ໃຫ້ເກີດຄວາມເສຍຫາຍຢ່າງໃຫຍ່ຫຼວງໃຫ້ແກ່ລັດ ແລະປະຊາຊົນ.

2). ກ່ຽວກັບນະໂຍບາຍການເງິນ. ນະໂຍບາຍການເງິນຕ້ອງເປັນນະໂຍບາຍລົບລ້າງເກື້ອກູນ, ຕ້ອງເປັນນະໂຍບາຍສ້າງຄວາມຮັ່ງມີ, ເປັນນະໂຍບາຍທີ່ເກີດດອກອອກຜົນຕາມທິດລົງທຶນໜຶ່ງ ແຕ່ໄດ້ຜົນກຳໄລຫຼາຍ, ເຮັດໃຫ້ການໝູນວຽນເງິນໄວຂຶ້ນ, ຮັກສາຄ່າເງິນກີບ ປະທານ ໄກສອນ ພົມວິຫານໄດ້ເນັ້ນໜັກວ່າ: “ນະໂຍບາຍການເງິນຕ້ອງເອົາໃຈໃສ່ຢ່າງຈົດຈໍ່ ແລະຊ່ວຍໝູນໃຫ້ຫົວໜ່ວຍທຸລະກິດເຂົ້າລະບົບເຄື່ອນໄຫວຢ່າງມີປະສິດທິຜົນຕາມລະບົບ, ແບ່ງປັນຜົນປະໂຫຍດທຸລະກິດຢ່າງຖືກຕ້ອງ”[3]. ສະນັ້ນ, ໃນທຸກໆລະບົບເສດຖະກິດການເງິນຈະເຂົ້າແຊກແຊງທຸກຂົງເຂດວຽກງານ, ສະຖານທີ່ ແລະເວລາ. ການຈັດຕັ້ງປະຕິບັດນະໂຍບາຍການເງິນແມ່ນມີສອງລັກສະນະຄື: ໜຶ່ງ, ການປະຕິບັດນະໂຍບາຍການເງິນແບບຂະຫຍາຍຕົວ (ຜ່ອນຜັນ) ເປັນມາດຕະການເຮັດໃຫ້ການລົງທຶນເພີ່ມຂຶ້ນ ດ້ວຍການຫຼຸດອັດຕາພາສີ-ອາກອນ ຫຼື ຂະຫຍາຍແຜນໂຄງການລົງທຶນຂອງລັດ ເພື່ອເຮັດໃຫ້ປະລິມານເງິນເຂົ້າສູ່ຂອດຈໍລະຈອນຫຼາຍຂຶ້ນ, ນະໂຍບາຍການເງິນລັກສະນະນີ້ຈະພົບເຫັນເມື່ອ

---

(1) ບົດຄວາມເຫັນໃນກອງປະຊຸມການເງິນທົ່ວປະເທດ (ໃນລະຫວ່າງ ວັນທີ 26 ມິຖຸນາ 1990), ໜ້າ 29.

(2) ບົດຄວາມເຫັນໃນກອງປະຊຸມການເງິນທົ່ວປະເທດ (ໃນລະຫວ່າງ ວັນທີ 26 ມິຖຸນາ 1990), ໜ້າ 29.

(3) ໄກສອນ ພົມວິຫານ ນິພົນເລືອກເຟັ້ນ ເຫຼັ້ມ II, ປີ 1987, ໜ້າ 342-343.

ການລົງທຶນມີການຫົດຖອຍ; ສອງ, ການປະຕິບັດນະໂຍບາຍການເງິນແບບຫົດຕົວ (ເຂັ້ມງວດ) ແມ່ນການປະຕິບັດມາດຕະການເຂັ້ມງວດຕໍ່ການລົງທຶນ ດ້ວຍການຂຶ້ນອັດຕາພາສີ-ອາກອນ ຫຼື ລັດຖະບານຈະເຄັ່ງຄັດຕໍ່ການລົງທຶນ, ບູລິມະສິດສະເພາະໂຄງການລົງທຶນທີ່ເຫັນວ່າມີຄວາມຈຳເປັນຕໍ່ການພັດທະນາເສດຖະກິດເທົ່ານັ້ນ. ມາດຕະການດັ່ງກ່າວຈະພົບເຫັນໃນເມື່ອເສດຖະກິດມີການຂະຫຍາຍຕົວສູງເກີນໄປຈະກາຍເປັນສະພາວະຟອງສະບູ, ເກີດພາວະເງິນເຟີ້ ຍ້ອນການລົງທຶນສູງເຮັດໃຫ້ປະລິມານເງິນເຂົ້າສູ່ຂອດຈໍລະຈອນສູງເກີນໄປ ຫຼື ລັດຖະບານມີຄວາມຫຍຸ້ງຍາກດ້ານການເງິນ ເປັນຕົ້ນແມ່ນການຂາດດຸນງົບປະມານທີ່ຕໍ່ເນື່ອງມາຫຼາຍປີ.

ການປະຕິບັດເປົ້າໝາຍນະໂຍບາຍເສດຖະກິດມະຫາພາກຈະສຳເລັດ ຫຼື ບໍ່ສຳເລັດ ແມ່ນຂຶ້ນກັບປະສິດທິຜົນຂອງການນຳໃຊ້ເຄື່ອງມືເສດຖະກິດມະຫາພາກດ້ານການເງິນ ເຄື່ອງມືຂອງນະໂຍບາຍການເງິນ ຈຶ່ງມີຄວາມສຳຄັນຫຼາຍ ເນື່ອງຈາກການດຳເນີນກິດຈະກຳທາງດ້ານເສດຖະກິດຕ່າງໆ, ແຫຼ່ງລາຍໄດ້ທີ່ສຳຄັນທີ່ສຸດຂອງລັດຖະບານໄດ້ມາຈາກການນຳໃຊ້ເຄື່ອງມືຂອງນະໂຍບາຍການເງິນ ໂດຍສະເພາະແມ່ນພາສີ-ອາກອນ; ຄຽງຄູ່ກັນນັ້ນ, ກໍຍັງມີລາຍໄດ້ປະເພດອື່ນໆຂອງລັດຖະບານເຊັ່ນ: ລາຍໄດ້ຈາກການຂາຍຊັບສິນ ແລະ ບໍລິການ, ລາຍໄດ້ຈາກການເຮັດທຸລະກິດໃນຮູບແບບຂອງລັດວິສາຫະກິດຄື: ບໍລິສັດໄຟຟ້າ, ນ້ຳປະປາ, ການຂົນສົ່ງ, ສື່ສານ, ລາຍໄດ້ຈາກຄ່າທຳນຽມ, ຄ່າສຳປະທານ, ຄ່າປັບໃໝ ແລະລາຍໄດ້ອື່ນໆ. ນອກນັ້ນ, ກໍຍັງມີການກູ້ຢືມ ແລະຊ່ວຍເຫຼືອຈາກຕ່າງປະເທດທີ່ເປັນລາຍໄດ້ຂອງລັດຖະບານ.

3). ກ່ຽວກັບລາຍຮັບງົບປະມານ. ປະທານ ໄກສອນ ພົມວິຫານ ໄດ້ຊີ້ນຳວ່າ: “ຂະແໜງການເງິນຕ້ອງເຮັດວຽກງານສ້າງ ແລະປະຕິບັດງົບປະມານໃຫ້ດີ, ປະຕິບັດການກວດກາຂຶ້ນບັນຊີ, ກຳແໜ້ນໝົດທຸກແຫຼ່ງຊັບສົມບັດຂອງລັດ, ຄົ້ນຄວ້າ ແລະປະກາດໃຊ້ບັນດານະໂຍບາຍລາຍຮັບ-ລາຍຈ່າຍການເງິນ, ນະໂຍບາຍພາສີຢ່າງທັນການ; ແນະນຳ, ກວດກາ ແລະຊຸກຍູ້ບັນດາຮາກຖານການຜະລິດ, ທຸລະກິດໃຫ້ປະຕິບັດລະບອບການເງິນ, ລະບອບໄລ່ລຽງເສດຖະກິດຢ່າງເຂັ້ມງວດ, ຊີ້ນຳໃຫ້ທຸກຂະແໜງການ, ທຸກຂັ້ນຕ້ອງຄຸ້ມຄອງແຫຼ່ງລາຍຮັບ-ລາຍຈ່າຍເປັນເງິນຢ່າງເຄັ່ງຄັດ”[1].

ການກວດກາແຫຼ່ງລາຍຮັບງົບປະມານ ໂດຍສະເພາະແມ່ນລາຍຮັບຈາກພາສີ, ອາກອນ, ຄ່າເຊົ່າສຳປະທານຂອງລັດແມ່ນເປັນສິ່ງຈຳເປັນ ແລະຕ້ອງດຳເນີນຢ່າງເປັນປະຈຳ. ການກວດກາເພື່ອສະກັດກັ້ນປາກົດການຫຍໍ້ທໍ້ທີ່ອາດຈະເກີດຂຶ້ນ, ຮັບປະກັນບໍ່ໃຫ້ງົບປະມານຕົກເຮ່ຍເສຍຫາຍ, ຕ້ອງແກ້ໄຂຊ່ອງວ່າງໃນນິຕິກຳຕ່າງໆຢ່າງໄວ, ດຳເນີນການຄິດໄລ່ໃຫ້ຊັດເຈນ ເພື່ອເພີ່ມລາຍຮັບເຂົ້າໃນງົບປະມານແຫ່ງຊາດ; ຂຸດຄົ້ນ ແລະນຳໃຊ້ຄວາມອາດສາມາດບົ່ມຊ້ອນຢ່າງສຸດຂີດ ນັບທັງປະຕິບັດການລົງທຶນເພີ່ມເຕີມ, ລົງທຶນຕາມລວງເລິກ, ລົງທຶນເຂົ້າໃນຂະແໜງການທີ່ສ້າງຜົນກຳໄລໄດ້ໄວ ເພື່ອມີທຶນຮອນສຳລັບສ້າງອັນຍາວ

---

[1] ໄກສອນ ພົມວິຫານ, ນິພົນເລືອກເຟັ້ນ ເຫຼັ້ມ II, ປີ 1987, ໜ້າ 222.

ມານ ແນໃສ່ເພີ່ມຜະລິດຕະພັນສິນຄ້າໂດຍໄວ ເປັນຕົ້ນແມ່ນຜະລິດຕະພັນກະສິກຳທີ່ຈະເປັນບ່ອນສ້າງແຫຼ່ງລາຍຮັບໃຫ້ແກ່ປະຊາຊົນ ແລະ ງົບປະມານແຫ່ງຊາດໄດ້ໄວ; ຕ້ອງມີມາດຕະການຄຸ້ມຄອງທຶນຊ່ວຍເຫຼືອລ້າ ແລະທຶນກູ້ຢືມຈາກຕ່າງປະເທດຢ່າງຮັດກຸມ ແນໃສ່ແຈກຢາຍ ແລະນຳໃຊ້ຢ່າງມີຈຸດສຸມ ແລະປະສິດທິຜົນ, ສອດຄ່ອງກັບແນວທາງການເມືອງຂອງພັກ ແລະລັດ ທັງເພີ່ມແຫຼ່ງລາຍຮັບເຂົ້າງົບປະມານ, ຮັບປະກັນໃຊ້ໜີ້ຄືນໃຫ້ຕ່າງປະເທດທັນຕາມກຳນົດເວລາ.

4). ກ່ຽວກັບລາຍຈ່າຍງົບປະມານ. ປະທານ ໄກສອນ ພົມວິຫານ ໄດ້ເນັ້ນວ່າ: "ປະຕິບັດການປະຢັດຢ່າງສຸດຂີດເປັນເນື້ອໃນສຳຄັນອັນໜຶ່ງຂອງນະໂຍບາຍການເງິນ"(1). ປະຢັດໃນການຜະລິດ, ໃນການກໍ່ສ້າງ ແລະການໃຊ້ສອຍ; ການໃຊ້ຈ່າຍເຂົ້າໃນຂົງເຂດທີ່ບໍ່ແມ່ນການຜະລິດຕ້ອງປະຢັດສຸດຂີດ; ຕ້ອງແຈກຢາຍ ແລະຄຸ້ມຄອງທຶນຕາມຄຳຂວັນທີ່ວ່າ: "ດ້ວຍແຫຼ່ງທຶນຮອນທີ່ເທົ່າ ຫຼື ໜ້ອຍກວ່າເກົ່າ, ແຕ່ພັດຜະລິດຊັບສົມບັດໄດ້ຫຼາຍ ແລະດີກວ່າເກົ່າ" ເພື່ອເຮັດໃຫ້ການໃຊ້ຈ່າຍເກີດດອກອອກຜົນ ເພິ່ນໃຫ້ທິດນຳຂອງການໃຊ້ຈ່າຍວ່າ: "ອັນໃດທີ່ເຫັນວ່າຕ້ອງການຈ່າຍແມ່ນຕ້ອງກ້າຈ່າຍ (ເປັນຕົ້ນແມ່ນຮ່ວງລາຍຈ່າຍທີ່ສາມາດສ້າງແຫຼ່ງລາຍຮັບໄດ້); ອັນໃດທີ່ເຫັນວ່າຈ່າຍກໍໄດ້ບໍ່ຈ່າຍກໍໄດ້ແມ່ນບໍ່ຈ່າຍ; ອັນໃດທີ່ເຫັນວ່າຈ່າຍຫຼາຍກໍໄດ້ຈ່າຍໜ້ອຍກໍໄດ້ແມ່ນຈ່າຍໜ້ອຍ; ອັນໃດທີ່ເຫັນວ່າຈ່າຍກໍໄດ້ບໍ່ທັນຟ້າວຈ່າຍກໍໄດ້ແມ່ນໂຈະໄວ້ກ່ອນ"(2) ນັ້ນກໍໝາຍຄວາມວ່າກ່ອນທີ່ຈະມີການໃຊ້ຈ່າຍອັນໃດແມ່ນຕ້ອງມີການຄິດງຳຕຶກຕອງເບິ່ງຄວາມຈຳເປັນຂອງການໃຊ້ຈ່າຍຢ່າງລະອຽດຖີ່ຖ້ວນວ່າມີຄວາມຈຳເປັນແທ້ບໍ ແລະ ເພິ່ນຍັງໄດ້ເນັ້ນໜັກອີກວ່າ: "ພວກເຮົາຕ້ອງພະຍາຍາມຫຼຸດລົງໃນລະດັບຕ່ຳທີ່ສຸດລາຍຈ່າຍເພື່ອໃຊ້, ເພື່ອກິນ, ລາຍຈ່າຍທີ່ບໍ່ພາໃຫ້ເກີດດອກອອກຜົນ, ແຕ່ຕ້ອງເພີ່ມລາຍຈ່າຍເຂົ້າສູ່ການຜະລິດ ຊຸກຍູ້ທຸລະກິດເພື່ອສ້າງລາຍຮັບໃຫ້ຫຼາຍຂຶ້ນ"(3) ໝາຍຄວາມວ່າການໃຊ້ຈ່າຍຕ້ອງຄິດໄລ່ຖີ່ຖ້ວນ ແລະຮັບປະກັນໃຫ້ມີປະສິດທິຜົນ, ບໍ່ແມ່ນວ່າມີຄວາມຕ້ອງການແນວໃດກໍຈ່າຍໃຫ້ໝົດ; ແຜນການລາຍຈ່າຍຕ້ອງຮັບປະກັນຄວາມຮຽກຮ້ອງຕ້ອງການ, ທັງຮັບປະກັນໃຫ້ມີປະສິດທິຜົນ, ສິ່ງໃດບໍ່ມີປະສິດທິຜົນແມ່ນບໍ່ໃຫ້ຈ່າຍເປັນອັນຂາດ, ຕ້ອງຖືນະໂຍບາຍປະຢັດເປັນນະໂຍບາຍເສດຖະກິດອັນສຳຄັນທີ່ສຸດຂອງພັກ ແລະລັດເຮົາ.

ກວດກາລາຍຈ່າຍຕ່າງໆທີ່ຮັບໃຊ້ເຂົ້າໃນການພັດທະນາເສດຖະກິດ-ສັງຄົມຢ່າງເປັນປົກກະຕິ, ບັນ ດາໂຄງການລົງທຶນຕ້ອງປະຕິບັດຕາມຫຼັກການ ແລະຂັ້ນຕອນຂອງການປະມູນຢ່າງຖືກຕ້ອງ, ຮັບປະກັນປະສິດທິຜົນ. ການກວດກາງົບປະມານຕ້ອງເບິ່ງໃຫ້ຖີ່ຖ້ວນ, ຕັດຮ່ວງລາຍຈ່າຍທີ່ບໍ່ສົມເຫດສົມຜົນອອກທັນທີ, ຫຼຸດຮ່ວງລາຍຈ່າຍທີ່ກູ້ທຶນຄືນໄດ້ຊ້າ ແລະຟູມເຟືອຍ, ຫຼຸດຜ່ອນຮ່ວງລາຍຈ່າຍບໍລິຫານທີ່ບໍ່ຈຳເປັນ ຫຼື ບໍ່ທັນຕ້ອງການປານໃດ, ຕ້ອງຄິດອັດຕາສ່ວນການລົງທຶນຢ່າງສົມເຫດສົມຜົນ ໂດຍສະເພາະແມ່ນຄວາມຕ້ອງການ

(1) ໄກສອນ ພົມວິຫານ, ນິພົນເລືອກເຟັ້ນ ເຫຼັ້ມ II, ປີ 1987, ໜ້າ 343.

(2) ໄກສອນ ພົມວິຫານ, ນິພົນເລືອກເຟັ້ນ ເຫຼັ້ມ II, ປີ 1987, ໜ້າ 343.

(3) ໄກສອນ ພົມວິຫານ, ນິພົນເລືອກເຟັ້ນ ເຫຼັ້ມ IV, ປີ 2005, ໜ້າ 471.

ແລະຄວາມສາມາດສະໜອງ. ຄົ້ນຄວ້າອັດຕາສ່ວນດັດສົມລາຍຮັບງົບປະມານຂອງສູນກາງ ແລະທ້ອງຖິ່ນເພື່ອເຮັດໃຫ້ທ້ອງຖິ່ນສາມາດກຸ້ມຕົນເອງໄດ້. ການແບ່ງຂັ້ນງົບປະມານ ລະຫວ່າງຂັ້ນຕ່າງໆຕ້ອງໃຫ້ຈະແຈ້ງເຊັ່ນ: ສູນກາງ, ແຂວງ, ກຳແພງນະຄອນ ແລະເມືອງ ແຕ່ລະຂັ້ນຕ້ອງສ້າງງົບປະມານສະເພາະຂອງໃຜລາວ, ມີແຜນການລາຍຮັບ-ລາຍຈ່າຍ ຮັບປະກັນການປະຕິບັດສອງໜ້າທີ່ຍຸດທະສາດຂອງແຕ່ລະຂັ້ນ. ໄປພ້ອມໆກັບການແບ່ງຂັ້ນງົບປະມານນັ້ນຕ້ອງແບ່ງຂັ້ນຄຸ້ມຄອງບັນດາພື້ນຖານການຜະລິດ-ທຸລະກິດ ເພາະອັນນີ້ເປັນແຫຼ່ງລາຍຮັບງົບປະມານຂອງຂັ້ນຕ່າງໆ; ພ້ອມນັ້ນ, ງົບປະມານຂອງສູນກາງ ເວລາໃດກໍຕ້ອງຮັບປະກັນລັກສະນະເປັນເຈົ້າພາທາງ ແລະສາມາດຊ່ວຍໜູນຂັ້ນທ້ອງຖິ່ນໄດ້ໃນເວລາພົບຄວາມຫຍຸ້ງຍາກ; ນະໂຍບາຍລາຍຈ່າຍຂອງລັດຕ້ອງສາມາດກະຕຸ້ນການພັດທະນາເສດຖະກິດ, ຖ້າລັດຖະບານເພີ່ມລາຍຈ່າຍຂອງຕົນຂຶ້ນ ແລະຖືກທິດ ກໍຄືຈ່າຍເພື່ອຊຸກຍູ້ການຜະລິດ ຈະເຮັດໃຫ້ເສດຖະກິດແຫ່ງຊາດຂະຫຍາຍຕົວ ເຖິງແມ່ນວ່າຈະມີການຂາດດຸນໃນຍາມນີ້ກໍຈະສາມາດດຸນດ່ຽງໄດ້ໃນອະນາຄົດ; ທັງເຊີດຊູສະຕິຄວາມຮັບຜິດຊອບ ແລະປະຕິບັດບັນດາລະບອບ, ລະບຽບການທາງດ້ານການເງິນຢູ່ໃນຂະແໜງການ ແລະຂັ້ນຕ່າງໆຢ່າງເຂັ້ມງວດ.

ຜົນສຳເລັດໃນການໝູນໃຊ້ແນວຄິດໄກສອນ ພົມວິຫານໃນວຽກງານການເງິນ ຢູ່ປະເທດເຮົາ ໃນໄລຍະຜ່ານມາ ສະແດງອອກດັ່ງນີ້: ຕະຫຼອດໄລຍະການຈັດຕັ້ງປະຕິບັດວຽກງານການເງິນພາຍໃຕ້ແນວຄິດຊີ້ນຳຂອງປະທານໄກສອນ ພົມວິຫານ ວຽກງານການເງິນໄດ້ຮັບການພັດທະນາດ້ວຍຄວາມໜັກແໜ້ນ ໂດຍສະເພາະແມ່ນການປະຕິບັດນະໂຍບາຍການເງິນເປີດ ເຮັດໃຫ້ເຄື່ອງມືດ້ານການເງິນກະທົບຢ່າງແຂງແຮງຕໍ່ການພັດທະນາເສດຖະກິດ; ການເງິນໄດ້ປະກອບສ່ວນອັນສຳຄັນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດເຊັ່ນ: ປະກອບສ່ວນຊຸກຍູ້ສົ່ງເສີມການລົງທຶນ, ເຮັດໃຫ້ການລົງທຶນພັດທະນາແຕ່ລະຂະແໜງການ ໂດຍສະເພາະແມ່ນການພັດທະນາພື້ນຖານໂຄງລ່າງທາງດ້ານເສດຖະກິດຮັບໃຊ້ການຜະລິດ ແລະການບໍລິການມີການຂະຫຍາຍຕົວ ສາມາດແກ້ໄຂບັນຫາການຂາດດຸນງົບປະມານໃຫ້ຢູ່ໃນເກນທີ່ພື້ນຖານເສດຖະກິດພໍຮັບເອົາໄດ້ ແລະມີລັກສະນະຕັ້ງໜ້າໝາຍຄວາມວ່າທັງຮັບປະກັນໃຫ້ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງທັງຮັກສາສະຖຽນລະພາບທາງດ້ານເສດຖະກິດມະຫາພາກ, ໃນບາງໄລຍະເຖິງວ່າຈະມີການຂາດດຸນຫຼາຍສົມຄວນ ແຕ່ການຂາດດຸນດັ່ງກ່າວຖືວ່າຍັງສູງກວ່າມາດຕະຖານທີ່ຈຳເປັນ ແລະເປັນການຂາດດຸນທີ່ຕັ້ງໜ້າ ເພື່ອເລັ່ງລັດການພັດທະນາ ໝາຍຄວາມວ່າແຫຼ່ງທຶນຊຸມການຂາດດຸນດັ່ງກ່າວນີ້ ໄດ້ນຳໃຊ້ເຂົ້າໃນການພັດທະນາພື້ນຖານໂຄງລ່າງເປັນຕົ້ນຕໍ ເຊິ່ງຈະເປັນຜົນດີຕໍ່ການພັດທະນາເສດຖະກິດໃນໄລຍະຍາວນານເວົ້າລວມແລ້ວ, ໃນແຕ່ລະປີລາຍຮັບງົບປະມານພາຍໃນໄດ້ເພີ່ມຂຶ້ນສູງກວ່າອັດຕາເພີ່ມຂອງລາຍຈ່າຍບໍລິຫານ; ດັ່ງນັ້ນ, ຖານະການເງິນງົບປະມານເລີ່ມແຕ່ ສົກປີ 1992-1993 ເປັນຕົ້ນມາຈົນເຖິງປັດຈຸບັນມີການຫັນປ່ຽນໃນທິດທາງບວກ, ລາຍຮັບພາຍໃນສາມາດກຸ້ມລາຍຈ່າຍບໍລິຫານ ແລະມີສ່ວນສະສົມ ເພື່ອລົງທຶນເຂົ້າໃນຂົງເຂດເສດຖະ

ກິດ-ສັງຄົມ ນັບມື້ຫຼາຍຂຶ້ນ; ນະໂຍບາຍລາຍຈ່າຍງົບປະມານໄດ້ເປັນເຄື່ອງມືດັດສົມຕະຫຼາດ, ລາຄາ, ກຳນົດທິດໃຫ້ແກ່ການຜະລິດ; ພ້ອມດຽວກັນນັ້ນ, ເປັນເຄື່ອງມືດັດສົມລາຍໄດ້ເປັນຕົ້ນແມ່ນຜ່ານໂຄງການພັດທະນາຊົນນະບົດ ແລະນະໂຍບາຍອຸດໜູນ, ສິ່ງເຄາະຂອງລັດຖະບານໃຫ້ແກ່ປະຊາຊົນຜູ້ທຸກຍາກ ແລະດ້ອຍໂອກາດ. ການປະຕິບັດນະໂຍບາຍການເງິນທີ່ສອດຄ່ອງ ບົນພື້ນຖານການໝູນໃຊ້ແນວຄິດໄກສອນ ພົມວິຫານກ່ຽວກັບວຽກງານການເງິນ ເຮັດໃຫ້ສະພາບເສດຖະກິດມະຫາພາກຢູ່ປະເທດເຮົາມີສະຖຽນລະພາບຢ່າງຍາວນານ, ບັນດາປັດໄຈສຳຄັນ ເພື່ອພັດທະນາເສດຖະກິດໄດ້ຮັບການກໍ່ສ້າງ, ປັບປຸງ ແລະແກ້ໄຂໄດ້ເປັນຢ່າງດີ ເຖິງວ່າສະພາບເສດຖະກິດມະຫາພາກຈະພົບຄວາມຫຍຸ້ງຍາກໃນບາງໄລຍະ ແຕ່ກໍສາມາດແກ້ໄຂໄດ້ຢ່າງທັນການ, ຮັບປະກັນໄດ້ການຂະຫຍາຍ ຕົວສູງທາງດ້ານເສດຖະກິດຢ່າງຕໍ່ເນື່ອງມາຫຼາຍປີ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປ່ຽນແປງໃຫ້ດີຂຶ້ນ, ອັດຕາຄວາມທຸກຍາກຂອງປະຊາຊົນຫຼຸດລົງຢ່າງຕໍ່ເນື່ອງ, ປະເທດຊາດໄດ້ຮັບການພັດທະນາຮຸ່ງເຮືອງສີວິໄລຂຶ້ນເປັນກ້າວໆ ສະແດງອອກ "ໃນປີ 1985 ລາຍຮັບງົບປະມານພາຍໃນ ເພີ່ມຂຶ້ນ 4,6 ເທື່ອ ກວມເອົາ 54% ຂອງລາຍຮັບທັງໝົດ, ສ່ວນແຫຼ່ງລາຍຮັບຈາກຕ່າງປະເທດ ກວມ 46%. ອັນພົ້ນເດັ່ນແມ່ນມີບາງແຂວງສາມາດດຸນດ່ຽງລາຍຮັບລາຍ-ຈ່າຍດ້ວຍຕົນເອງ"[1] ຜົນສຳເລັດດັ່ງກ່າວໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງ "ມີລາຍຮັບເພີ່ມຂຶ້ນ 7,8% ໃນແຕ່ລະປີ (2016-2018)"[2] ແລະມາຮອດປັດຈຸບັນ "ລາຍໄດ້ສະເລ່ຍຕໍ່ຫົວຄົນແມ່ນ 1.832 ໂດລາສະຫະລັດຕໍ່ຄົນຕໍ່ປີ)"[3].

ຄຽງຄູ່ກັບຜົນສຳເລັດໃນການໝູນໃຊ້ແນວຄິດໄກສອນ ພົມວິຫານ ກ່ຽວກັບວຽກງານການເງິນຢູ່ປະເທດເຮົາ ໃນໄລຍະຜ່ານມານັ້ນ, ເຫັນວ່າຍັງມີຂໍ້ຄົງຄ້າງບາງດ້ານທີ່ຈະຕ້ອງໄດ້ພ້ອມກັນປັບປຸງແກ້ໄຂໃນຕໍ່ໜ້າຄື:

ໜຶ່ງ, ພະນັກງານຂົງເຂດການເງິນຈຳນວນໜຶ່ງຍັງບໍ່ທັນມີຄວາມໜັກແໜ້ນທາງດ້ານໜ້າທີ່ການເມືອງ ແລະຄວາມຮັບຜິດຊອບ ຈຶ່ງເປັນສາເຫດໜຶ່ງທີ່ກໍ່ໃຫ້ເກີດປາກົດການຫຍໍ້ທໍ້ ແລະກາຍເປັນບັນຫາທີ່ສັງຄົມຕຳນິສິ່ງຂ່າວຕະຫຼອດມາ ແຕ່ການແກ້ໄຂບັນຫາດັ່ງກ່າວບໍ່ທັນເດັດຂາດ ແລະລ້າຊ້າ.

ສອງ, ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍຍັງບໍ່ທັນເຂັ້ມງວດ, ການປະຕິບັດວິໄນແຜນການ ແລະວິໄນການເງິນຍັງບໍ່ທັນເຂັ້ມງວດເທົ່າທີ່ຄວນພາໃຫ້ເກີດມີໜີ້ສິນຄຸມເຄືອ, ແກ້ໄຂຍາກ ແລະແກ່ຍາວ; ການນຳໃຊ້ງົບປະມານຂອງລັດຍັງມີການຟູມເຟືອຍ ແລະຮົ່ວໄຫຼຫຼາຍ. ຍັງມີປາກົດການສວຍໃຊ້ ແລະລ່ວງລະເມີດກົດໝາຍ ກໍຄືເກີດມີການສໍ້ລາດບັງຫຼວງດ້ວຍຫຼາຍຮູບການ ແລະຫຼາຍລະດັບ.

ສາມ, ດ້ານການເງິນການລົງທຶນ ກໍຄືການນຳໃຊ້ງົບປະມານຍັງບໍ່ທັນເຂັ້ມງວດໃນການປະຕິບັດນະໂຍບາຍການເງິນ ໂດຍສະເພາະແມ່ນການຄຸ້ມຄອງລາຍຮັບ ກໍຄືການປະ

---

(1) ບົດສັງລວມນະໂຍບາຍການເງິນ, ປີ 1975-2005, ໜ້າ 3.

(2) ບົດລາຍງານເສດຖະກິດປະຈຳປີ 2017, ໜ້າ 4.

(3) ບົດລາຍງາຍເສດຖະກິດ ປີ 2023, ໜ້າ 3.

ຕິບັດລາຍຈ່າຍງົບປະມານ ເຮັດໃຫ້ການເກັບລາຍຮັບຍັງບໍ່ທັນສາມາດຂຸດຄົ້ນໄດ້ທັງໝົດຄວາມອາດສາມາດບົ່ມຊ້ອນຕົວຈິງ, ການຮົ່ວໄຫຼຂອງງົບປະມານໄດ້ກາຍເປັນບັນຫາທີ່ແກ້ຍາກ ແລະສືບເນື່ອງມາເປັນເວລາຫຼາຍປີ.

ສີ່, ການຄຸ້ມຄອງລາຍຈ່າຍບໍ່ທັນຮັດກຸມໂດຍສະເພາະແມ່ນລາຍຈ່າຍເພື່ອການລົງທຶນຈຶ່ງມີໂຄງການນອກແຜນ, ໂຄງການບໍ່ມີຕົວຕົນໃນຫຼາຍທ້ອງຖິ່ນເກີດຂຶ້ນ, ການຕິດຕາມ-ກວດກາການນຳໃຊ້ແຫຼ່ງທຶນບໍ່ດຳເນີນຢ່າງປົກກະຕິ, ຍັງບໍ່ເຄື່ອນໄຫວຕາມຫຼັກການບໍລິການສອງສົ້ນຂອງຂະແໜງການທະນາຄານຢ່າງຈິງຈັງ.

ຫ້າ, ການນຳໃຊ້ມາດຕະການ ຫຼື ເຄື່ອງມືຕ່າງໆທາງດ້ານເສດຖະກິດມະຫາພາກເຂົ້າໃນການແກ້ໄຂບັນຫາທາງດ້ານເສດຖະກິດທີ່ເກີດຂຶ້ນຍັງຊັກຊ້າ, ບໍ່ທັນກັບສະພາບການທີ່ເກີດຂຶ້ນ ອັນໄດ້ເຮັດໃຫ້ເກີດມີຄວາມສ່ຽງຫຼາຍບັນຫາທາງດ້ານເສດຖະກິດຕາມມາ ແລະເພື່ອຈະແກ້ໄຂໄດ້ກໍຈຳເປັນຕ້ອງໃຊ້ເວລາຍາວນານ.

ເພື່ອເສີມຂະຫຍາຍແນວຄິດໄກສອນພົມວິຫານ ກ່ຽວກັບວຽກງານການເງິນຢູ່ປະເທດເຮົາໃນຕໍ່ໜ້າ ໃຫ້ນັບມື້ມີຜົນສຳເລັດ ຕາມທັດສະນະຂອງຜູ້ຂຽນເຫັນວ່າຄວນເອົາໃຈໃສ່ຕື່ມບາງວຽກດັ່ງນີ້:

1). ກ່ອນອື່ນໝົດຕ້ອງເພີ່ມທະວີວຽກງານສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານຂົງເຂດການເງິນມີແນວຄິດການເມືອງໜັກແໜ້ນ, ມີຄວາມຮັບຜິດຊອບສູງ, ມີຄວາມສັດຊື່ບໍລິສຸດຕໍ່ອາຊີບ; ໄປຄຽງຄູ່ກັບການກໍ່ສ້າງ-ບຳລຸງພະນັກງານໃຫ້ມີຄວາມຮູ້, ຄວາມສາມາດ, ມີຄວາມຊຳນານ ແລະກຳແໜ້ນແນວທາງ, ນະໂຍບາຍຂອງພັກກ່ຽວກັບການພັດທະນາເສດຖະກິດ-ສັງຄົມ, ເຄື່ອນໄຫວບໍລິການຮັບໃຊ້ຂະແໜງການຂອງຕົນ ດ້ວຍຄວາມບໍລິສຸດໂປ່ງໃສ, ຈຳກັດການບໍລິການຮັບໃຊ້ປະຊາຊົນ ເພື່ອຜົນປະໂຫຍດຂອງຕົນເອງແລະກຸ່ມກ້ອນ ໂດຍສະເພາະແມ່ນເຊື່ອມຊຶມກຳແໜ້ນທັດສະນະຊີ້ນຳຂອງປະທານ ໄກສອນ ພົມວິຫານຕໍ່ກັບວຽກງານການເງິນ ແລະນຳໄປຜັນຂະຫຍາຍຢ່າງເໝາະສົມກັບໜ້າທີ່ການເມືອງຂອງຕົນ.

2). ເອົາໃຈໃສ່ຢ່າງເຂັ້ມງວດຕໍ່ການປະຕິບັດພັນທະໃຫ້ຖືກຕ້ອງຕາມກົດໝາຍ ແລະລະບຽບຂອງບັນດາຫົວໜ່ວຍທຸລະກິດ; ເອົາໃຈໃສ່ໄຈ້ແຍກຢ່າງລະອຽດກ່ຽວກັບຂະແໜງການ, ຫົວໜ່ວຍທຸລະກິດທີ່ຍັງຄ້າງມອບພັນທະເຂົ້າງົບປະມານແຫ່ງລັດໃນໄລຍະຜ່ານມາເພື່ອລະດົມ, ຊຸກຍູ້ການປະຕິບັດພັນທະດັ່ງກ່າວໃຫ້ໄດ້ຢ່າງຂາດຕົວ; ພ້ອມນັ້ນ, ກໍມີມາດຕະການຂັ້ນເດັດຂາດເພື່ອຈຳກັດການຮົ່ວໄຫຼຂອງລາຍຮັບງົບປະມານ.

3). ຍົກສູງປະສິດທິພາບການຕິດຕາມ, ກວດການຳໃຊ້ງົບປະມານແຫ່ງລັດຢ່າງເປັນປະຈຳ ເພື່ອແກ້ໄຂປາກົດການຫຍໍ້ທໍ້ຢ່າງທັນການ, ກວດກາການເງິນຕ້ອງເຮັດຢ່າງເປັນປະຈຳ ແລະມີຈຸດສຸມ, ມີປະສິດທິຜົນ, ບໍ່ແມ່ນກວດກາເພື່ອກວດກາ, ກວດກາແລ້ວກໍແລ້ວໄປຊື່ໆກວດກາດ້ານການເງິນ ໂດຍສະເພາະແມ່ນກວດກາລາຍຮັບງົບປະມານຕ້ອງສະແດງອອກ ເຮັດໃຫ້ລາຍຮັບງົບປະມານໃນຕໍ່ໜ້າເພີ່ມຂຶ້ນ; ຄຽງຄູ່ກັບຄວາມເຂັ້ມງວດຂອງການປະຕິບັດວິໄນການເງິນຕ້ອງມີມາດຕະການກະຕຸ້ນການລົງທຶນໃຫ້ມີຄວາມຕໍ່ເນື່ອງ.

4). ຕ້ອງພະຍາຍາມຫຼຸດລາຍຈ່າຍລົງຕ່ຳ

ທີ່ສຸດ ເປັນຕົ້ນແມ່ນລາຍຈ່າຍເພື່ອໃຊ້, ເພື່ອກິນ, ລາຍຈ່າຍທີ່ບໍ່ພາໃຫ້ເກີດດອກອອກຜົນ, ແຕ່ຕ້ອງເພີ່ມລາຍຈ່າຍເຂົ້າສູ່ການຜະລິດ ຊຸກຍູ້ທຸລະກິດ ເພື່ອສ້າງລາຍຮັບໃຫ້ຫຼາຍຂຶ້ນ, ແຜນການລາຍຈ່າຍຕ້ອງຮັບປະກັນຄວາມຮຽກຮ້ອງຕ້ອງການທັງຮັບປະກັນໃຫ້ມີປະສິດທິຜົນ, ສິ່ງໃດບໍ່ມີປະສິດທິຜົນແມ່ນບໍ່ໃຫ້ຈ່າຍໂດຍເດັດຂາດ ດັ່ງທິດຊີ້ນຳຂອງປະທານ ໄກສອນ ພົມວິຫານ ທີ່ວ່າ: ອັນໃດທີ່ເຫັນວ່າຕ້ອງການຈ່າຍແມ່ນຕ້ອງກ້າຈ່າຍ (ເປັນຕົ້ນແມ່ນຮ່ວງລາຍຈ່າຍທີ່ສາມາດສ້າງແຫຼ່ງລາຍຮັບໄດ້); ອັນໃດທີ່ເຫັນວ່າຈ່າຍກໍໄດ້ບໍ່ຈ່າຍກໍໄດ້ແມ່ນບໍ່ຈ່າຍ; ອັນໃດທີ່ເຫັນວ່າຈ່າຍຫຼາຍກໍໄດ້ຈ່າຍໜ້ອຍກໍໄດ້ແມ່ນຈ່າຍໜ້ອຍ; ອັນໃດທີ່ເຫັນວ່າຈ່າຍກໍໄດ້ບໍ່ທັນຟ້າວຈ່າຍກໍໄດ້ແມ່ນໂຈະໄວ້ກ່ອນ.

5). ດັ່ງທີ່ພວກເຮົາຮູ້ແລ້ວວ່າເຕັກໂນໂລຊີ ແລະການສື່ສານໄດ້ມີການຫັນປ່ຽນໄວທີ່ສຸດ, ບັນດາເຄື່ອງມືເຕັກໂນໂລຊີເຫຼົ່ານັ້ນໄດ້ກໍ່ໃຫ້ເກີດການຫັນປ່ຽນໃນຂົງເຂດການຜະລິດ ແລະການບໍລິການຢ່າງຫຼວງຫຼາຍ, ຂົງເຂດການຜະລິດໄດ້ເຮັດໃຫ້ປະລິມານການຜະລິດເພີ່ມຂຶ້ນ, ຂົງເຂດບໍລິການເຮັດໃຫ້ບໍລິການສະດວກວ່ອງໄວຂຶ້ນ ສະພາບແວດລ້ອມດັ່ງກ່າວນັ້ນມັນຮຽກຮ້ອງໃຫ້ຂະແໜງການເງິນຕ້ອງປັບປຸງພື້ນຖານໂຄງລ່າງເຕັກໂນໂລຊີຂອງຕົນຢ່າງເປັນປະຈຳການຫັນເປັນທັນສະໄໝຈະປະກອບສ່ວນສຳຄັນໃຫ້ແກ່ການຊຸກຍູ້ການຜະລິດ, ເຮັດໃຫ້ສາມາດປະຢັດຕົ້ນທຶນການຜະລິດ, ຈຳກັດການຮົ່ວໄຫຼຂອງງົບປະມານລົງເທື່ອລະກ້າວ; ດັ່ງນັ້ນ, ພະນັກງານການເງິນຕ້ອງຮູ້ໝູນໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນວຽກງານຂອງຕົນເອງໃຫ້ນັບມື້ຫຼາຍຂຶ້ນ.

ສະຫຼຸບລວມແລ້ວ, ແນວຄິດໄກສອນ ພົມວິຫານ ກ່ຽວກັບວຽກງານການເງິນແມ່ນມີຄຸນຄ່າທາງວິທະຍາສາດຫຼາຍທີ່ສຸດ ເພື່ອການສືບຕໍ່ສຶກສາຄົ້ນຄວ້າ ແລະຖອດຖອນເປັນບົດຮຽນໝູນໃຊ້ເຂົ້າໃນພຶດຕິກຳຕົວຈິງຂອງປະເທດເຮົາ. ເນື້ອໃນສຳຄັນ ແລະເປັນໃຈກາງແນວຄວາມຄິດກ່ຽວກັບການເງິນທີ່ຖອດຖອນໄດ້ແມ່ນການຍຶດໝັ້ນຄວາມເຂັ້ມງວດ ແລະການມີລະບຽບວິໄນທີ່ສຸດຕໍ່ການຈັດຕັ້ງປະຕິບັດນະໂຍບາຍການເງິນ, ໃນນັ້ນ ເພິ່ນໄດ້ລະບຸແຈ້ງຄວາມເຂັ້ມງວດທາງດ້ານການເງິນແມ່ນຕ້ອງລົງທຶນໃຫ້ຖືກເປົ້າໝາຍ, ມີຈຸດສຸມ, ປະຢັດມັດທະຍັດ, ຕ້ອງຈຳກັດການໃຊ້ຈ່າຍຟູມເຟືອຍ, ບໍ່ຈຳເປັນ, ຂາດປະສິດທິຜົນ, ການລົງທຶນຕ້ອງນຳເອົາຜົນປະໂຫຍດທາງດ້ານເສດຖະກິດມາສູ່ປະເທດຊາດ ແລະປະຊາຊົນໂດຍໄວ.

# ເສີມຂະຫຍາຍຄຸນຄ່າແນວຄິດໄກສອນ ພົມວິຫານ ກ່ຽວກັບພັກສຶກສາອົບຮົມຊາວໜຸ່ມ ຕາມແນວທາງຂອງພັກ

ຂຽນໂດຍ: ວຽງພັນ ຈິດສະດີ

ຊາວໜຸ່ມເປັນກຳລັງອັນໃຫຍ່ຫຼວງ, ມີຖານະບົດບາດສຸດທີ່ສຳຄັນໃນທຸກຂົງເຂດວຽກງານເພີ່ມພູນຜະລິດຜົນ, ສູ້ຮົບ, ວິທະຍາສາດ ແລະອື່ນໆ ໃນປະຫວັດສາດຂອງຊາດລາວ ໄດ້ຢັ້ງຢືນໄວ້ຢ່າງຈະແຈ້ງວ່າວິລະກຳຂອງຊາວໜຸ່ມລາວໃນພາລະກິດຕໍ່ສູ້ກອບກູ້ເອົາປະເທດຊາດໄດ້ຢ່າງສົມບູນ ຊາວໜຸ່ມປະຊາຊົນປະຕິວັດລາວແມ່ນກຳລັງສືບທອດທີ່ດີ ແລະໄວ້ເນື້ອເຊື່ອໃຈຂອງພັກປະຊາຊົນ ປະຕິວັດລາວ, ເປັນກຳລັງແຮງງານຜະລິດຕົ້ນຕໍແກ່ນສານຂອງສັງຄົມ, ເປັນແຂນຂວາທີ່ເອົາການເອົາງານຂອງພັກ ທັງເປັນກະດູກສັນຫຼັງຂອງປະເທດຊາດ. "ພັກເຮົາຍາມໃດກໍໃຫ້ຄວາມສຳຄັນ, ມີຄວາມເຊື່ອໝັ້ນໄວ້ວາງໃຈ ແລະຖືວ່າຊາວໜຸ່ມເຮົາຍາມໃດກໍເປັນແຂນຂວາຂອງພັກ, ເປັນກະດູກສັນຫຼັງຂອງຊາດ, ເປັນກຳລັງອັນແກນສານໃນການປະຕິບັດສອງໜ້າທີ່ຍຸດທະສາດຂອງພັກ"(1). ນັບແຕ່ມື້ເລີ່ມຕົ້ນສ້າງອົງການຈັດຕັ້ງຊາວໜຸ່ມຂຶ້ນ ພັກເຮົາກໍໄດ້ເອົາໃຈໃສ່ສຶກສາອົບຮົມບົ່ມສອນ, ໃກ້ຊິດຕິດແທດ ແລະໃຫ້ຄວາມສຳຄັນຕໍ່ກັບວຽກງານຊາວໜຸ່ມຕະຫຼອດມາ.

ປະທານ ໄກສອນ ພົມວິຫານ ເວົ້າວ່າ: "ບົດບາດປະຫວັດສາດຂອງຊາວໜຸ່ມແມ່ນໜັກໜ່ວງ ແລະສຳຄັນທີ່ສຸດ, ແຕ່ພ້ອມກັນນັ້ນ, ກໍມີກຽດສະຫງ່າງາມທີ່ສຸດ ເພາະວ່າຊາວໜຸ່ມໃນປັດຈຸບັນບໍ່ພຽງແຕ່ເຮັດໜ້າທີ່ຕໍ່ຊາດ, ຍັງມີໜ້າທີ່ຕໍ່ສາກົນອີກດ້ວຍ"(2). ເພິ່ນໄດ້ຍົກເອົາຄຳເວົ້າ ສະຕາລິນ ທີ່ວ່າ: "ຊາວໜຸ່ມແມ່ນອະນາຄົດ, ແມ່ນຄວາມຫວັງຂອງພວກເຮົາ, ຊາວໜຸ່ມເປັນຜູ້ທົດແທນພວກເຮົາຜູ້ເຖົ້າແກ່ໄປແລ້ວ ເພື່ອເອົາຄັນທຸງອັນສະຫງ່າລາສີຂອງພັກໄປເຖິງໄຊຊະນະສົມບູນ"(3). ເພິ່ນໄດ້ເນັ້ນໜັກວ່າ "ການສ້າງສາພັດທະນາປະເທດຊາດພວມຮຽກຮ້ອງຄວາມຟົດຟື້ນປະຕິວັດ, ມັນສະໝອງອັນປອດໂປ່ງ ແລະສອງແຂນອັນລ້ຳສັນຂອງໄວໜຸ່ມ"(4). ດັ່ງນັ້ນ, ພວກເຮົາເຫັນໄດ້ວ່າຢາກສ້າງສາປະເທດຊາດບ້ານເມືອງໃຫ້ຮັ່ງມີເຂັ້ມແຂງຮຸ່ງເຮືອງສີວິໄລໃນອະນາຄົດນັ້ນ, ພັກເຮົາຕ້ອງໄດ້ເອົາໃຈໃສ່ກໍ່ສ້າງ

(1) ຄຳປາໄສຂອງສະຫາຍ ໄກສອນ ພົມວິຫານ ຕໍ່ກອງປະຊຸມໃຫຍ່ ຄັ້ງທີ II ຂອງຄະນະຊາວໜຸ່ມປະຊາຊົນ ປະຕິວັດລາວ, 13/7/ 1988), ປີ 2009, ໜ້າ 130.

(2) ບົດໂອ້ລົມຂອງທ່ານ ໄກສອນ ພົມວິຫານ ກ່າວໃນກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມລາວຮັກຊາດ ອ້ອມຂ້າງສູນກາງ ເທື່ອທີ II, ໜ້າ 17.

(3) ບົດໂອ້ລົມຂອງທ່ານ ໄກສອນ ພົມວິຫານ ກ່າວໃນກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມລາວຮັກຊາດອ້ອມຂ້າງສູນກາງ ເທື່ອທີ II (ສະບັບລາຍມືຂຽນ), ໜ້າ 3.

(4) ໄກສອນ ພົມວິຫານ ຊາວໜຸ່ມຈົ່ງເປັນດັ່ງນົກອິນຊີທີ່ບໍ່ຫວັ່ນກົວຕໍ່ພະຍຸລົມແດງ, ຈົ່ງກາຍເປັນສິນໄຊຂອງຍຸກສະໄໝຂອງພວກເຮົາ, ປີ 1983, ໜ້າ 31.

ຊາວໜຸ່ມໃຫ້ຂະຫຍາຍຕົວຢ່າງຮອບດ້ານ, ມີຄວາມຮູ້, ຄວາມສາມາດຮອບດ້ານ, ມີກໍາລັງແຮງພຽງພໍ ໂດຍເຫັນໄດ້ຄວາມສໍາຄັນ ຂອງຊາວໜຸ່ມຄືແນວນັ້ນ, ປະທານ ໄກສອນ ພົມວິຫານ ເວລາໃດກໍໄດ້ເອົາໃຈໃສ່ຢ່າງຈິດຈໍ່ອົບຮົມບົ່ມເພາະຊີ້ນໍາຕັກເຕືອນຊາວໜຸ່ມຕະຫຼອດມາ ແນໃສ່ປຸກລະດົມໃຫ້ຖັນແຖວຊາວໜຸ່ມໃຫ້ມີຄວາມຫ້າວຫັນປະກອບສ່ວນເຂົ້າໃນທຸກຂົງເຂດວຽກງານ, ໃຫ້ສົມກັບເປັນຊາວໜຸ່ມຮຸ່ນສືບທອດ ແລະເສີມຂະຫຍາຍມູນເຊື້ອຂອງຊາວໜຸ່ມຮຸ່ນກ່ອນ. ຍ້ອນຊາວໜຸ່ມແມ່ນຄົນທີ່ຍັງໜຸ່ມແໜ້ນ, ແມ່ນກໍາລັງການຜະລິດ ແລະກໍາລັງການປະຕິວັດເປັນບຸກຄົນທີ່ສໍາຄັນຕົ້ນຕໍທີ່ໄວ້ໃຈຂອງພັກ, ເປັນແຂນຂວາທີ່ເອົາການເອົາງານ, ເປັນກໍາລັງໜູນທີ່ແຂງແກ່ນໜຸ່ມແໜ້ນ, ວ່ອງໄວ, ສະຫຼາດສະຫຼຽວຂອງຊາດ, ເປັນຜູ້ສືບທອດພາລະກິດຂອງພັກ, ຂອງປະເທດຊາດຂອງປະຊາຊົນ ສະແດງອອກໃນໄລຍະການຕໍ່ສູ້ກູ້ຊາດ, ເຖິງວ່າຈະຢູ່ໃນເງື່ອນໄຂອັນຫຍຸ້ງຍາກກັນດານ, ການເຄື່ອນໄຫວປິດລັບ, ສັດຕູໄດ້ເອົາໃຈໃສ່ກວາດລ້າງປາບປາມ, ໂຄສະນາຕົວະຍົວະຫຼອກລວງຊື້ຈ້າງຮ້ອຍແປດພັນປະການ ເພື່ອຍາດແຍ່ງແກ່ດຶງເອົາຊາວໜຸ່ມໃຫ້ໄປຕາມພວກມັນ, ແຕ່ພັກເຮົາພາຍໃຕ້ການນໍາພາຂອງເລຂາທິການປະທານ ໄກສອນ ພົມວິຫານ ໄດ້ເອົາໃຈໃສ່ສຶກສາອົບຮົມຊັກຈູງຊາວໜຸ່ມ, ຈັດຕັ້ງນໍາພາຂະບວນການຊາວໜຸ່ມທວງເອົາເອກະລາດແຫ່ງຊາດ, ສິດເສລີພາບ ປະຊາທິປະໄຕ ແລະຕໍ່ສູ້ເພື່ອອະນາຄົດຂອງໄວໜຸ່ມ ໂດຍຖືເອົາວຽກງານສຶກສາອົບຮົມເປັນວຽກງານກົກ.

ກອງປະຊຸມໃຫຍ່ ຄັ້ງທີ II ຜູ້ແທນຊາວໜຸ່ມທົ່ວປະເທດ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ ໄດ້ກ່າວວ່າ: "ພັກເຮົາຍາມໃດກໍໃຫ້ຄວາມສໍາຄັນ, ມີຄວາມເຊື່ອໝັ້ນໄວ້ວາງໃຈ ແລະຖືວ່າຊາວໜຸ່ມເຮົາຍາມໃດກໍເປັນແຂນຂວາຂອງພັກ, ເປັນກະດູກສັນຫຼັງຂອງຊາດ, ເປັນກໍາລັງອັນແກນສານໃນການປະຕິບັດສອງໜ້າທີ່ຍຸດທະສາດຂອງພັກ"[1]. ພັກເຮົາຮັບຮູ້ຢ່າງຈະແຈ້ງ ແລະຖືກຕ້ອງວ່າກໍາລັງຊາວໜຸ່ມມີບົດບາດສໍາຄັນຕໍ່ພາລະກິດປະຕິວັດຂອງພັກ, ຕ້ອງເຊື່ອມຊຶມທັດສະນະມາກ-ເລນິນ ເຂົ້າໃນການຂົນຂວາຍຊາວໜຸ່ມ ນັບແຕ່ມື້ເລີ່ມຕົ້ນສ້າງອົງການຈັດຕັ້ງຊາວໜຸ່ມຂຶ້ນພັກເຮົາກໍໄດ້ເອົາໃຈໃສ່ສຶກສາອົບຮົມບົ່ມສອນ, ໃກ້ຊິດຕິດແທດ ແລະໃຫ້ຄວາມສໍາຄັນຕໍ່ກັບວຽກງານຊາວໜຸ່ມຕະຫຼອດມາ.

ປະທານ ໄກສອນ ພົມວິຫານ ໄດ້ເວົ້າວ່າ "ວຽກງານສຶກສາອົບຮົມກໍເປັນວຽກງານໜຶ່ງທີ່ສໍາຄັນ ແລະຂາດບໍ່ໄດ້ໃນໄລຍະປັດຈຸບັນ". ຍ້ອນແນວນັ້ນ "ພັກ, ລັດຕ້ອງຮູ້ສ້າງເງື່ອນໄຂໃຫ້ຊາວໜຸ່ມຄົ້ນຄິດ ແລະປະດິດສ້າງ, ບໍາລຸງເສີມຂະຫຍາຍສະຕິປັນຍາຂອງຕົນ, ການປຸກລະດົມພັນທະຂອງຊາວໜຸ່ມ"[2]. ຕ້ອງໃຫ້ຄວາມສໍາຄັນຢ່າງຍິ່ງກ່ຽວກັບວຽກງານການສຶກສາອົບຮົມການເມືອງ-ແນວຄິດ, ການບໍາລຸງອຸດົມຄະຕິປະຕິວັດໃຫ້ແກ່ຊາວໜຸ່ມ, ເຍົາວະຊົນ ແລະອະນຸຊົນ. ພ້ອມກັນນັ້ນ, ກໍຕ້ອງ

---

[1] ຄໍາປາໄສຂອງສະຫາຍ ໄກສອນ ພົມວິຫານ ຕໍ່ກອງປະຊຸມໃຫຍ່ ຄັ້ງທີ II ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, 13/7/ 1988), ປີ 2009, ໜ້າ 130.

[2] ຄໍາປາໄສຂອງສະຫາຍ ໄກສອນ ພົມວິຫານ ຕໍ່ກອງປະຊຸມໃຫຍ່ ຄັ້ງທີ II ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, 13/7/ 1988), ປີ 2009, ໜ້າ 18.

ຖືສຳຄັນເນື້ອໃນການໂຄສະນາສຶກສາອົບຮົມອື່ນໆອີກເຊັ່ນ: ສຶກສາອົບຮົມແບບແຜນດຳລົງຊີວິດທີ່ສີວິໄລ, ກ່ຽວກັບຄອບຄົວວັດທະນະທຳໃໝ່, ສຶກສາອົບຮົມກ່ຽວກັບຄວາມງາມ, ການອອກແຮງງານ, ຂະຫຍາຍການແຕ່ງກາບກອນ, ການປະພັນ, ດົນຕີ, ຈິດຕະກຳ, ກິລາກາຍຍະກຳ, ຕ້ອງໃຫ້ຄວາມສຳຄັນເປັນພິເສດກ່ຽວກັບການສຶກສາອົບຮົມຍົກລະດັບວັດທະນະທຳ, ວິທະຍາສາດ-ເຕັກນິກໃຫ້ແກ່ຊາວໜຸ່ມເພື່ອໃຫ້ເຂົາເຈົ້າມີເງື່ອນໄຂເປັນເຈົ້າປະເທດຊາດ, ເປັນເຈົ້າສັງຄົມ ແລະເປັນເຈົ້າອະນາຄົດ. ສິ່ງສຳຄັນທີ່ສຸດ, ຄະນະຊາວໜຸ່ມ ແລະຊາວໜຸ່ມໃນທົ່ວປະເທດຕ້ອງເສີມຂະຫຍາຍບົດບາດປະຈັນບານປະດິດສ້າງຂອງຕົນໃນການປະຕິບັດ 2 ໜ້າທີ່ຍຸດທະສາດ. ສ່ອງແສງໃຫ້ເຫັນວ່າວຽກງານສຶກສາອົບຮົມການເມືອງ-ແນວຄິດໃຫ້ຊາວໜຸ່ມແມ່ນມີຄວາມສຳຄັນ ແລະຂາດບໍ່ໄດ້; ຕ້ອງນຳໃຊ້ຫຼາຍເນື້ອໃນ ເພື່ອໃຫ້ສອດຄ່ອງກັບແຕ່ລະເປົ້າໝາຍໃຫ້ທົ່ວເຖິງ ແລະກວ້າງຂວາງ. ສິ່ງສຳຄັນ, ຖ້າຢາກເຮັດວຽກງານການເມືອງ-ແນວຄິດໃຫ້ຖັນແຖວຊາວໜຸ່ມຢ່າງມີປະສິດທິຜົນນັ້ນ, ປະທານ ໄກສອນ ພົມວິຫານ ໄດ້ມີທິດຊີ້ນຳວ່າຄະນະຊາວໜຸ່ມປະຊາຊົນ ປະຕິວັດລາວ ສົມທົບຢ່າງແໜ້ນແຟ້ນກັບບັນດາອົງການຈັດຕັ້ງພັກ, ອົງການປົກຄອງທຸກຂັ້ນ, ບັນດາອົງການຈັດຕັ້ງມະຫາຊົນ ແລະໂຮງຮຽນຂັ້ນຕ່າງໆ ເພື່ອເຮັດໃຫ້ວຽກງານການສຶກສາອົບຮົມປຸກລະດົມໄວໜຸ່ມໃຫ້ໄດ້ດີ. ຕ້ອງຍົກສູງນ້ຳໃຈຮັກຊາດ, ຮັກປະຊາຊົນເຜົ່າຕ່າງໆໃຫ້ແກ່ຊາວໜຸ່ມຢ່າງເປັນປະຈຳ, ມີແຕ່ສ້າງນ້ຳໃຈຮັກຊາດອັນດູດດື່ມໃຫ້ແກ່ໄວໜຸ່ມເທົ່ານັ້ນຈຶ່ງຈະມີພື້ນຖານເພື່ອສ້າງສັງຄົມນິຍົມ ແລະນ້ຳໃຈສາກົນອັນຜ່ອງໃສ ຍ້ອນຈຸດພິເສດຂອງຊາວໜຸ່ມເປັນຄືແນວນັ້ນ, ຊາວໜຸ່ມພວກເຮົາຈຶ່ງເປັນເປົ້າໝາຍມ້າງເພທຳລາຍຂອງອິດທິກຳລັງປໍລະປັກ. ເພິ່ນເນັ້ນໜັກອີກວ່າ "ການສຶກສາອົບຮົມ ແລະບົວລະບັດເບິ່ງແຍງເຢົາວະຊົນ, ອະນຸຊົນ ເປັນຄວາມຮັບຜິດຊອບຂອງທົ່ວສັງຄົມ, ຄະນະພັກ, ອົງການປົກຄອງທຸກຂັ້ນ"(1).

ເພິ່ນໄດ້ເນັ້ນໜັກວ່າ: "ການສຶກສາອົບຮົມຊາວໜຸ່ມເປັນວຽກງານໜຶ່ງທີ່ສຳຄັນທີ່ສຸດ ບໍ່ພຽງແຕ່ຕ້ອງເຮັດໃນປັດຈຸບັນ ຍັງຈະຕ້ອງເຮັດຢ່າງຍາວນານໃນການສ້າງປະເທດຊາດໃນອະນາຄົດ"(2). ດ້ວຍເຫດນັ້ນ, ພັກຍາມໃດກໍເອົາໃຈໃສ່ຢ່າງຈິດຈໍ່ສຶກສາອົບຮົມອຸດົມຄະຕິເອກະລາດ, ອິດສະລະພາບ ແລະສັງຄົມນິຍົມໃຫ້ຊາວໜຸ່ມ, ເຮັດໃຫ້ຊາວໜຸ່ມຮູ້ແພງຖະໜອມ, ສືບທອດ ແລະຂະຫຍາຍມູນເຊື້ອຂອງຊາດ ແລະຂອງການປະຕິວັດ, ເຝິກຝົນຫຼໍ່ຫຼອມຊາວໜຸ່ມໃນຂະບວນການປະຕິວັດອັນເນື່ອງນິດລຽນຕິດ ແລະຟົດຟື້ນຂອງປະຊາຊົນເຜົ່າຕ່າງໆ, ຮູ້ຈັດຕັ້ງ ແລະລະດົມຊາວໜຸ່ມເຂົ້າໃນບັນດາປາຍແຫຼມແຫ່ງການຕໍ່ສູ້ປະຕິວັດ, ເສີມຂະຫຍາຍບົດບາດປະຈັນບານຂອງຊາວໜຸ່ມໃນບັນດາບາດລ້ຽວແຫ່ງການຕໍ່ສູ້ ແລະສ້າງເງື່ອນໄຂໃຫ້ໄວໜຸ່ມອຸທິດແກ່ປະເທດຊາດໄດ້ຫຼາຍ, ດີທີ່ສຸດ ແລະເຝິກຝົນຫຼໍ່

(1) ບົດໂອ້ລົມຂອງທ່ານ ໄກສອນ ພົມວິຫານ ກ່າວໃນກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມລາວຮັກຊາດອ້ອມຂ້າງສູນກາງ ເທື່ອທີ II, (ສະບັບລາຍມືຂຽນ), ໜ້າ 10.

(2) ບົດປາໄສຂອງທ່ານ ໄກສອນ ພົມວິຫານ ຕໍ່ທີ່ຊຸມນຸມມະໂຫລານຊາວໜຸ່ມລາວຮັກຊາດອ້ອມຂ້າງສູນກາງ ໃນວັນທີ 25 ສິງຫາ 1968, ໜ້າ 7.

ຫຼອມຕົນເອງໃຫ້ເປັນຮຸ່ນຄົນສືບທອດພາລະກິດປະຕິວັດຂອງພັກ ແລະຂອງຊາດດ້ວຍຄວາມຈົງຮັກພັກດີ ແລະສິນໄຊດ, ເພິ່ນເວົ້າວ່າ: "ທຸກໆຜົນງານອັນໃຫຍ່ຫຼວງ ແລະການເຕີບໃຫຍ່ຂະຫຍາຍຕົວຢ່າງໄວວາຂອງຊາວໜຸ່ມເຮົາລ້ວນແຕ່ເກີດມາຈາກແນວທາງອັນຖືກຕ້ອງ, ປະດິດສ້າງ ແລະການນຳພາອັນປີຊາສາມາດຂອງພັກເຮົາ, ມີແຕ່ພາຍໃຕ້ການນຳພາຂອງພັກເທົ່ານັ້ນ ຊາວໜຸ່ມຈຶ່ງມີເງື່ອນໄຂເສີມຂະຫຍາຍຄຸນສົມບັດປະຕິວັດ, ຄວາມສາມາດອັນມັ່ງມີຂອງຕົນຂຶ້ນສູ່ຍອດສູງ ແລະກໍ່ສ້າງອະນາຄົດອັນສວຍສົດງົດງາມຂອງໄວໜຸ່ມໄດ້"[1]. ພັກເຮົາຍາມໃດກໍເຊື່ອໝັ້ນໃນຄຸນສົມບັດ ແລະຄວາມສາມາດຂອງຊາວໜຸ່ມ.

ໃນໄລຍະຜ່ານມາ ພັກເຮົາກໍໄດ້ໃຫ້ຄວາມສຳຄັນຕໍ່ວຽກງານສຶກສາອົບຮົມຊາວໜຸ່ມຕາມແນວທາງຂອງພັກ ຕະຫຼອດມາສະແດງອອກຢູ່ໃນແຕ່ລະກອງປະຊຸມໃຫຍ່ຂອງພັກຄື: ໃນກອງປະຊຸມໃຫຍ່ ຄັ້ງທີ VI ຂອງພັກໄດ້ເວົ້າວ່າ: "ຄະນະຊາວໜຸ່ມປະຊາຊົນ ປະຕິວັດລາວ ມີໜ້າທີ່ເຕົ້າໂຮມຄົນຮຸ່ນໜຸ່ມ ແລະສຶກສາອົບຮົມ, ບຳລຸງສ້າງຊາວໜຸ່ມເຍົາວະຊົນໃຫ້ເປັນຜູ້ຈົງຮັກພັກດີຕໍ່ປະເທດຊາດ ແລະສືບທອດພາລະກິດຂອງພັກ"[2]; ກອງປະຊຸມໃຫຍ່ຄັ້ງທີ VII ຂອງພັກ ໄດ້ເວົ້າວ່າ: "ຕ້ອງອອກແຮງສຶກສາອົບຮົມຊາວໜຸ່ມເຍົາວະຊົນໃຫ້ເປັນຜູ້ສືບທອດທີ່ຈົງຮັກພັກດີຕໍ່ມູນເຊື້ອອັນສະຫງ່າອົງອາດຂອງຊາດ ແລະຂອງພັກ"[3]; ກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ໄດ້ຢືນຢັນວ່າ: "ຄະນະຊາວໜຸ່ມປະຊາຊົນ ປະຕິວັດລາວ ໄດ້ເພີ່ມທະວີການນຳພາສຶກສາອົບຮົມ, ບຳລຸງຖັນແຖວຊາວໜຸ່ມ, ເຍົາວະຊົນ, ນັກຮຽນ, ນັກສຶກສາ ດ້ວຍຫຼາຍຮູບການ ໂດຍໄດ້ສຸມໃສ່ປະຕິບັດຄຳຂວັນ 4 ບຸກ"[4]; ມາຮອດກອງປະຊຸມໃຫຍ່ ຄັ້ງທີ XI ພັກປະຊາຊົນ ປະຕິວັດລາວ ໄດ້ເນັ້ນໜັກວ່າ: "ຄະນະຊາວໜຸ່ມປະຊາຊົນ ປະຕິວັດລາວ... ເປັນບ່ອນເຕົ້າໂຮມ ແລະສຶກສາອົບຮົມຍົກລະດັບຄວາມຕື່ນຕົວທາງດ້ານການເມືອງໃຫ້ປະຊາຊົນບັນດາເຜົ່າ ທັງຈັດຕັ້ງນຳພາເຂົ້າຮ່ວມຄຸ້ມຄອງລັດ-ຄຸ້ມຄອງສັງຄົມ"[5] ແລະໄດ້ມີຮູບການໃໝ່, ວິທີໃໝ່ເຂົ້າໃນການສຶກສາອົບຮົມ ໂດຍນຳໃຊ້ຮູບການຕົວຈິງ, ເຫດການຕົວຈິງ, ບຸກຄົນຕົວຈິງ ແລະນຳໃຊ້ສື່ສັງຄົມອອນລາຍເຂົ້າມາຊ່ວຍ ເຊິ່ງເປັນຮູບການທີ່ແທດເໝາະກັບຈິດຕະສາດຂອງຊາວໜຸ່ມ. ອັນສຳຄັນແມ່ນການນຳຂັ້ນສູງຂອງພັກ-ລັດ, ອົງການປົກຄອງແຕ່ລະຂັ້ນ, ສັງຄົມໃຫ້ການສະໜັບສະໜູນ ແລະເຂົ້າຮ່ວມກິດຈະກຳຫຼາຍຂຶ້ນກວ່າເກົ່າ.

ຄະນະຊາວໜຸ່ມປະຊາຊົນ ປະຕິວັດລາວໄດ້ຖືເອົາການສຶກສາອົບຮົມການເມືອງ-ແນວຄິດເປັນກົກ ມີການເຊື່ອມຊຶມເນື້ອໃນຈິດໃຈມະຕິ, ຄຳສັ່ງ ກໍຄືເອກະສານສຳຄັນຕ່າງໆຂອງຂັ້ນເທິງຢ່າງວ່ອງໄວ, ປະດິດສ້າງ, ມີການຄັດຈ້ອນເນື້ອໃນໃຫ້ສອດຄ່ອງແທດເໝາະກັບໜ້າທີ່ການເມືອງຂອງຊາວໜຸ່ມ ທັງມີຫຼາຍ

---

[1] ສູນທອດພິດຂອງສະຫາຍເລຂາທິການໃຫຍ່ ໃນກອງປະຊຸມໃຫຍ່ ຄັ້ງທີ II ຂອງຄະນະຊາວໜຸ່ມປະຊາຊົນ ປະຕິວັດລາວ (ທີ່ນະຄອນຫຼວງວຽງຈັນ ໃນວັນທີ 27 ເມສາ 1983), ໜ້າ 5.

[2] ເອກະສານກອງປະຊຸມໃຫຍ່ ຄັ້ງທີ VI ຂອງພັກປະຊາຊົນ ປະຕິວັດລາວ, ປີ 1996, ໜ້າ 54.

[3] ເອກະສານກອງປະຊຸມໃຫຍ່ ຄັ້ງທີ VII ຂອງພັກປະຊາຊົນ ປະຕິວັດລາວ, ປີ 2001, ໜ້າ 52.

[4] ເອກະສານກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກປະຊາຊົນ ປະຕິວັດລາວ, ປີ 2016, ໜ້າ 18.

[5] ເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ, ປີ 2021, ໜ້າ 79.

ຮູບການທີ່ດຶງດູດ ແລະທັນຍຸກທັນສະໄໝຂຶ້ນເປັນຕົ້ນແມ່ນການເຊື່ອມຊຶມວັນສຳຄັນຕ່າງໆຂອງພັກ, ຂອງຊາດ, ຂອງຊາວໜຸ່ມ ແລະບັນດາມະຕິ ຄຳສັ່ງຂອງຂັ້ນເທິງ ໂດຍສະເພາະແມ່ນ 2 ວາລະແຫ່ງຊາດ ດ້ວຍຮູບການໂຄສະນາຜ່ານສື່ຕ່າງໆຂອງຊາວໜຸ່ມ ແນໃສ່ເຮັດໃຫ້ຊາວໜຸ່ມ-ເຍົາວະຊົນລາວທຸກທົ່ວໜ້າໄດ້ຮັບຮູ້ເຊື່ອມຊຶມແນວທາງ, ນະໂຍບາຍຂອງພັກ, ໄດ້ຮັບການເຝິກຝົນຫຼໍ່ຫຼອມທາງດ້ານຄຸນສົມບັດສິນທຳປະຕິວັດ, ຮ່ຳຮຽນມູນເຊື້ອຂອງຊາດ, ຂອງພັກ ແລະຂອງຊາວໜຸ່ມດ້ວຍຫຼາຍຮູບການ, ວິທີການ ແລະຫຼາຍລະດັບສອດຄ່ອງກັບຈຸດພິເສດຂອງຊາວໜຸ່ມ ໂດຍສະເພາະແມ່ນການຊຸກຍູ້ສ້າງເງື່ອນໄຂໃຫ້ພະນັກງານຊາວໜຸ່ມ, ສະມາຊິກຊາວໜຸ່ມ ແລະຊາວໜຸ່ມທົ່ວໄປໄດ້ຮ່ຳຮຽນຍົກລະດັບທາງດ້ານທິດສະດີການເມືອງ-ການປົກຄອງ, ວິຊາສະເພາະ, ຮ່ຳຮຽນແນວທາງ, ນະໂຍບາຍຂອງພັກ-ກົດໝາຍຂອງລັດ. ພິເສດແມ່ນໄດ້ລິເລີ່ມສຳມະນາແນວຄິດໄກສອນ ພົມວິຫານ ໃຫ້ຄົນຮຸ່ນໜຸ່ມນັບແຕ່ປີ 2018 ເປັນຕົ້ນມາ ເພື່ອໄຂປິດສະໜາຄຳຂະໜານນາມຂອງປະທານ ໄກສອນ ພົມວິຫານ ທັງຜະລິດເປັນປຶ້ມຄູ່ມືວຽກງານອົບຮົມຊາວໜຸ່ມ.

ຄຽງຄູ່ກັບຜົນສຳເລັດໃນການເສີມຂະຫຍາຍຄຸນຄ່າແນວຄິດໄກສອນ ພົມວິຫານ ກ່ຽວກັບພັກສຶກສາອົບຮົມຊາວໜຸ່ມ ຕາມແນວທາງຂອງພັກ ໃນໄລຍະຜ່ານມານັ້ນ, ເຫັນວ່າຍັງມີຂໍ້ຄົງຄ້າງບາງດ້ານທີ່ເຫັນວ່າຈະຕ້ອງໄດ້ພ້ອມກັບປັບປຸງແກ້ໄຂໃນຕໍ່ໜ້າ.

1). ການນຳພາສຶກສາອົບຮົມການເມືອງ-ແນວຄິດ ເຖິງແມ່ນວ່າໄດ້ມີຄວາມພະຍາຍາມເຄື່ອນໄຫວຢ່າງກວ້າງຂວາງ, ແຕ່ການໂຄສະນາຍັງບໍ່ທັນເລິກເຊິ່ງ ແລະເຮັດເປັນປະຈຳ, ຮູບການໂຄສະນາສຶກສາອົບຮົມຍັງບໍ່ທັນມີຫຼາຍຮູບຫຼາຍສີ.

2). ການສຶກສາອົບຮົມຍັງບໍ່ທັນປະຕິບັດໄດ້ຢ່າງທົ່ວເຖິງ, ເນື້ອໃນສຶກສາອົບຮົມຍັງມີລັກສະນະເປັນອັນລວມ, ບໍ່ທັນໄດ້ສ້າງເນື້ອໃນສຶກສາອົບຮົມຕາມກຸ່ມເປົ້າໝາຍຊາວໜຸ່ມ ຖ້າທຽບກັບຈຳນວນປະຊາກອນໜຸ່ມແລ້ວ ພວກເຮົາຍັງເຮັດວຽກງານການສຶກສາອົບຮົມໄດ້ໜ້ອຍ ໂດຍສະເພາະແມ່ນຊາວໜຸ່ມກຳມະກອນ, ຊາວໄຮ່ນາ, ຊາວຄ້າຂາຍຢູ່ທ້ອງຖິ່ນຕ່າງໆ.

3). ການສຶກສາອົບຮົມຊາວໜຸ່ມຢູ່ຂັ້ນບ້ານ ແລະຊາວໜຸ່ມນັກສຶກສາຢູ່ຕ່າງປະເທດຜ່ານມາບາງບ່ອນຍັງບໍ່ໄດ້ຮັບການນຳພາ-ຊີ້ນຳການເຄື່ອນໄຫວ ແລະສ້າງເງື່ອນໄຂອຳນວຍຄວາມສະດວກຕາມພາລະບົດບາດເທົ່າທີ່ຄວນ. ປັດຈຸບັນ, ຊາວໜຸ່ມເຮົາເປັນຈຳນວນບໍ່ໜ້ອຍບໍ່ທັນເຫັນແຈ້ງທີ່ຕັ້ງຂອງຕົນໃນພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດ.

4). ຍັງມີຊາວໜຸ່ມຈຳນວນໜຶ່ງວົ້ງວຽງຕໍ່ການລົງຮາກຖານ, ບໍ່ຢາກອອກຫ່າງຕົວເມືອງ, ຊາວໜຸ່ມຈຳນວນບໍ່ໜ້ອຍຍັງບໍ່ທັນອຸທິດຕົນຢ່າງເຕັມສ່ວນ ເພື່ອພັດທະນາປະເທດຊາດ, ເພື່ອແນໃສ່ນຳພາປະເທດຊາດຫຼຸດພົ້ນອອກຈາກພື້ນຖານເສດຖະກິດທີ່ດ້ອຍພັດທະນາໃຫ້ກາຍເປັນປະເທດທີ່ພັດທະນາ; ຈຳນວນໜຶ່ງບໍ່ຢາກບຸກບືນຜ່ານຜ່າອຸປະສັກຄວາມຫຍຸ້ງຍາກຕ່າງໆ.

5). ຊາວໜຸ່ມບາງສະຫາຍເກີດມີການເສື່ອມຖອຍແນວຄິດການເມືອງ, ເຫັນແກ່ຕົວ, ຂາດຄວາມເປັນເຈົ້າຕົນເອງ,ເອື່ອຍອີງຄົນ

ອື່ນ, ຂີ້ຄ້ານມັກງ່າຍ, ຟູມເຟືອຍ, ຫາກິນແບບບໍ່ຊອບທຳຜິດຕໍ່ກົດໝາຍ ແລະລະບຽບ, ອັນພາໃຫ້ເກີດມີປາກົດການຫຍໍ້ທໍ້ຕ່າງໆ.

ເພື່ອເສີມຂະຫຍາຍຄຸນຄ່າແນວຄິດໄກສອນ ພົມວິຫານ ກ່ຽວກັບພັກສຶກສາອົບຮົມຊາວໜຸ່ມ ຕາມແນວທາງຂອງພັກໃນຕໍ່ໜ້າ ນັບມື້ໄດ້ຜົນດີ ແລະສອດຄ່ອງກັບເນື້ອໃນຈິດໃຈຂອງແນວຄິດໄກສອນ ພົມວິຫານນັ້ນ, ຕາມທັດສະນະຂອງຜູ້ຂຽນແລ້ວເຫັນວ່າຄວນເອົາໃຈໃສ່ຕື່ມບາງດ້ານດັ່ງນີ້:

ໜຶ່ງ, ຄະນະພັກ, ຄະນະນຳແຕ່ລະຂັ້ນຄວນເອົາໃຈໃສ່ສຶກສາອົບຮົມຊາວໜຸ່ມທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໂດຍສະເພາະແມ່ນການບໍລິໂພກຂ່າວສານຜ່ານສື່ສັງຄົມຕ່າງໆໃຫ້ສາມາດແຍກໄດ້ຂ່າວປອມ, ຂ່າວທີ່ບໍ່ດີ ແລະຂ່າວສານທີ່ບິດເບືອນຄວາມຈິງ, ຂ່າວທີ່ຫວັງແບ່ງແຍກຄວາມສາມັກຄີຂອງປະຊາຊົນລາວບັນດາເຜົ່າ ແລະຫວັງມ້າງເພລະບອບໃໝ່ຂອງພວກເຮົາ.

ສອງ, ຕ້ອງຄົ້ນຄວ້າກຳແໜ້ນແນວຄິດໄກສອນ ພົມວິຫານ ກ່ຽວກັບວຽກງານຊາວໜຸ່ມເວົ້າລວມ, ເວົ້າສະເພາະແມ່ນແນວຄິດໄກສອນພົມວິຫານ ກ່ຽວກັບພັກສຶກສາອົບຮົມຊາວໜຸ່ມຕາມແນວທາງຂອງພັກ ແລະໝູນໃຊ້ເຂົ້າໃນການເພີ່ມທະວີການນຳພາວຽກງານສຶກສາອົບຮົມການເມືອງແນວຄິດໃຫ້ແກ່ຊາວໜຸ່ມ.

ສາມ, ສືບຕໍ່ນຳພາໂຄສະນາ, ສ້າງສະຕິເປັນເຈົ້າໃຫ້ແກ່ຊາວໜຸ່ມ ໂດຍສະເພາະແມ່ນໃນສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດໃນປັດຈຸບັນ ຕ້ອງສຶກສາອົບຊາວໜຸ່ມໃຫ້ມີຄວາມອຸ່ນອ່ຽນ, ທຸ່ນທ່ຽງເຊື່ອໝັ້ນຕໍ່ການນຳພາ-ຊີ້ນຳຂອງພັກ.

ສີ່, ຊາວໜຸ່ມ-ໄວໜຸ່ມຕ້ອງຕັ້ງໜ້າເຝິກຝົນຫຼໍ່ຫຼອມຮ່ຳຮຽນເອົາແບບແຜນການດຳລົງຊີວິດ, ຄຸນສົມ ບັດສົມທຳປະຕິວັດຂອງປະທານໄກສອນ ພົມວິຫານ ໃຫ້ກາຍເປັນຜູ້ທີ່ມີຄວາມເຂັ້ມແຂງ, ມີພູມຄຸ້ມກັນສູງ ບໍ່ວ່າດ້ານຄຸນທາດການເມືອງ, ຄຸນສົມບັດ, ຄວາມຮູ້, ຄວາມສາມາດ, ປະສົບການດຳລົງຊີວິດ ແລະການເຮັດວຽກ, ດ້ານສຸຂະພາບຮ່າງກາຍ ແລະຈິດໃຈ

ຫ້າ, ການຈັດຕັ້ງ ແລະການເຄື່ອນໄຫວຂອງຊາວໜຸ່ມເວລາໃດ ກໍຕ້ອງຍຶດໝັ້ນແນວທາງການເມືອງຂອງພັກ, ຊາວໜຸ່ມຕ້ອງເດັດດ່ຽວປົກປັກຮັກສາ ແລະເສີມຂະຫຍາຍມູນເຊື້ອຂອງຊາວໜຸ່ມຮຸ່ນກ່ອນນັ້ນຄືຊາວໜຸ່ມລາວມີມູນເຊື້ອທີ່ສະຫງ່າອົງອາດ, ມູນເຊື້ອດຸໝັ່ນໃນການອອກແຮງງານ, ມູນເຊື້ອສາມັກຄີປອງດອງ, ມູນເຊື້ອຮັກເຊື້ອແພງຊາດ... ອັນພົ້ນເດັ່ນກວ່າໝູ່ແມ່ນມູນເຊື້ອແຫ່ງການຕໍ່ສູ້ພິລະອາດຫານບໍ່ຍອມຈຳນົນ.

ສະຫຼຸບແລ້ວ, ການເສີມຂະຫຍາຍຄຸນຄ່າແນວຄິດໄກສອນ ພົມວິຫານ ກ່ຽວກັບພັກສຶກສາອົບຮົມຊາວໜຸ່ມຕາມແນວທາງຂອງພັກແມ່ນການໝູນໃຊ້ແນວຄິດໄກສອນພົມວິຫານ ເຂົ້າໃນການສຶກສາອົບຮົມຊາວໜຸ່ມເຮັດໃຫ້ຊາວໜຸ່ມມີຄວາມເຊື່ອໝັ້ນຕໍ່ແນວທາງ, ນະໂຍບາຍຂອງພັກ ໃນໄລຍະຜ່ານມາພັກໄດ້ຖືວ່າວຽກງານສຶກສາອົບຮົມຊາວໜຸ່ມເປັນໜ້າທີ່ຍຸດທະສາດອັນດັບໜຶ່ງຂອງພັກ, ເປັນວຽກງານທີ່ມີຄວາມຮີບດ່ວນ ແລະຈຳເປັນຂອງພັກຕໍ່ການນຳພາວຽກງານຊາວໜຸ່ມເຊິ່ງເນື້ອໃນຈິດໃຈດັ່ງກ່າວຖືກບັນຈຸເຂົ້າໃນແນວທາງຂອງພັກ, ໃນກົດລະບຽບຂອງພັກໃນແຕ່ລະໄລຍະ, ແຕ່ລະສະໄໝກອງປະຊຸມໃຫຍ່ຂອງພັກ.

# ສົ່ງເສີມສະຫະກອນກະສິກຳ ຢູ່ປະເທດເຮົາໃຫ້ມີຄວາມເຂັ້ມແຂງ

ຮຽບຮຽງໂດຍ: ນ. ດອກໄມ້ ຈັນດາລາ

“ສະຫະກອນແມ່ນການຈັດຕັ້ງທຸລະກິດລວມໝູ່ຂອງຜູ້ປະກອບອາຊີບກະສິກຳ, ຫັດຖະກຳ, ຄ້າຂາຍ, ການບໍລິການ ແລະອາຊີບອື່ນໆ ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ ເພື່ອຮ່ວມມືເຊິ່ງກັນແລະກັນທາງດ້ານທຶນຮອນ, ປະສົບການ ແລະເຕັກນິກໃນການດຳເນີນທຸລະກິດການຜະລິດ, ການຄ້າ, ການບໍລິການ. ກຸ່ມແມ່ນການຈັດຕັ້ງລວມໝູ່ຂອງປະຊາຊົນລາວທີ່ມີອາຊີບກະສິກຳ, ຫັດຖະກຳ, ຄ້າຂາຍ, ການບໍລິການ ແລະອາຊີບອື່ນໆທີ່ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ ເພື່ອຮ່ວມມືຊ່ວຍເຫຼືອເຊິ່ງກັນແລະກັນ ລະຫວ່າງສະມາຊິກ ແລະຄອບຄົວສະມາຊິກດ້ວຍກັນທາງດ້ານການຜະລິດ ຫຼືການບໍລິການ”(1). ສະຫະກອນກະສິກຳໝາຍເຖິງການຈັດຕັ້ງທຸລະກິດລວມໝູ່ຂອງຜູ້ປະກອບອາຊີບກ່ຽວກັບການປູກຝັງ, ລ້ຽງສັດ, ປະມົງ, ປຸງແຕ່ງ ແລະການບໍລິການ. ສະຫະກອນກະສິກຳເນື້ອແທ້ແລ້ວແມ່ນ “ສະຫະກອນການຜະລິດ, ແມ່ນການທ້ອນໂຮມເອົາຊາວນານ້ອຍກະແຈກກະຈາຍ ຫຼື ພວກຊ່າງສີມືເຂົ້າກັນໂດຍມີຈຸດປະສົງທຳການຜະລິດ ແລະຈຳໜ່າຍສະບຽງອາຫານຊະນິດຕ່າງໆອອກຈາກຊາວໄຮ່ນາເຊັ່ນ: ຜັກ, ສິນຄ້າປະເພດນ້ຳນົມ ແລະອື່ນໆຈາກຜູ້ທີ່ບໍ່ແມ່ນຊາວນາເຊັ່ນ: ສິນຄ້າອຸດສາຫະກຳ, ວັດຖຸສິ່ງຂອງເຮັດດ້ວຍເຫຼັກ, ໄມ້, ໜັງ ແລະອື່ນໆ; ວິສາຫະກິດແບບສະຫະກອນມີລັກສະນະລວມໝູ່ບໍ່ແຕກຕ່າງຫຍັງກັບວິສາຫະກິດແບບສັງຄົມນິຍົມ ຖ້າວ່າມັນໄດ້ສ້າງຕັ້ງຂຶ້ນໃນທີ່ດິນ ໂດຍອາໄສພາຫະນະການຜະລິດທີ່ເປັນສົມບັດຂອງລັດ, ຂອງຊົນຊັ້ນກຳມະກອນ”(2).

ປະທານ ໄກສອນ ພົມວິຫານ ໄດ້ໃຫ້ທັດສະນະຕໍ່ກັບວຽກງານສະຫະກອນວ່າ: “ຈຸດໝາຍຕົ້ນຕໍອັນດັບໜຶ່ງຂອງສະຫະກອນແມ່ນການຈັດຕັ້ງກຳລັງການຜະລິດຄືນໃໝ່, ແບ່ງງານຄືນໃໝ່, ກໍ່ສ້າງພື້ນຖານວັດຖຸເຕັກນິກ, ນຳເອົາອຸດສາຫະກຳຮັບໃຊ້ກະສິກຳເທື່ອລະກ້າວ, ນຳໃຊ້ວິທີເຕັກນິກທີ່ກ້າວໜ້າ, ເຮັດໃຫ້ການຜະລິດກະສິກຳ-ປ່າໄມ້ຂະຫຍາຍຕົວຕາມທິດການຜະລິດສັງຄົມນິຍົມ ແນໃສ່ເພີ່ມສະມັດຕະພາບຂອງງານ, ເພີ່ມປະລິມານການຜະລິດ ແລະເພີ່ມຜະລິດຕະພັນສິນຄ້າຢ່າງໄວເພື່ອປົວແປງຊີວິດການເປັນຢູ່ຂອງຊາວໄຮ່ ນາໃຫ້ດີຂຶ້ນຢ່າງບໍ່ຢຸດຢັ້ງ ແລະເພື່ອຮັບໃຊ້ຢ່າງໄດ້ການໄດ້ງານໃຫ້ແກ່ພາລະກິດຫັນເປັນອຸດສາຫະກຳສັງຄົມນິຍົມຢູ່ປະເທດເຮົາ”(3).

ການສົ່ງເສີມກະສິກຳຖືໄດ້ວ່າເປັນກົນໄກທີ່ສຳຄັນໃນການສະໜອງຂໍ້ມູນຂ່າວສານ

(1) ດຳລັດ ວ່າດ້ວຍກຸ່ມ ແລະສະຫະກອນ ສະບັບເລກທີ 606/ລບ, ລົງວັນທີ 26 ພະຈິກ 2020. ມາດຕາ 2. ໜ້າ 1

(2) ວ.ອີ.ເລນິນ ກ່ຽວກັບສະຫະກອນ, ສຳນັກພິມປະໂລກະເລັດ, ມົດສະກູ, ປີ 1981, ໜ້າ 55, 69.

(3) ໄກສອນ ພົມວິຫານ, ບັນຫາການຫັນເປັນສະຫະກອນ, ປີ 1979, ໜ້າ 2.

ແລະຄຳແນະນຳໃນການຜະລິດກະສິກຳທັນສະໄໝ ເປັນຕົ້ນແມ່ນການນຳໃຊ້ເຕັກນິກ-ວິທະຍາສາດຊ່ວຍໃນການຍົກສະມັດຕະພາບໝາກຜົນຂອງຜະລິດຕະພັນ ເຊິ່ງເປັນໜ້າທີ່ຂອງພາກລັດໃນການສົ່ງເສີມຊາວກະສິກອນໂດຍສະເພາະແມ່ນຢູ່ໃນເຂດຊົນນະບົດ. ໃນມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກໄດ້ມີທັດສະນະວ່າ: "ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ຢ່າງທົ່ວເຖິງ, ຕັ້ງໜ້າສືບຕໍ່ປະຕິບັດມາດຕະການຍຸດທະສາດທັນລົງກໍ່ສ້າງຮາກຖານພັດທະນາຊົນນະບົດຮອບດ້ານ ຕາມທິດສ້າງຊົນນະບົດໃໝ່, ໃນນັ້ນ ຖືເອົາການສົ່ງເສີມການຜະລິດເປັນສິນຄ້າ ແລະການບໍລິການສ້າງລາຍໄດ້ເຂົ້າຄອບຄົວເປັນໃຈກາງ"(1).

ສະນັ້ນ, ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ເສດຖະກິດແຫ່ງຊາດ ແລະສ້າງລາຍຮັບເຂົ້າງົບປະມານໃນຕໍ່ໜ້າ, ມາເຖິງກອງປະຊຸມຄົບຄະນະບໍລິຫານງານສູນກາງພັກຄັ້ງທີ 7 ສະໄໝທີ XI ໄດ້ເນັ້ນໜັກຕື່ມວ່າ: "ຊຸກຍູ້ເສດຖະກິດເປັນເຈົ້າຕົນເອງ... ສືບຕໍ່ຊຸກຍູ້ສົ່ງເສີມ ແລະພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະຂະໜາດກາງໃຫ້ຂະຫຍາຍຕົວ ແລະເຂັ້ມແຂງຂຶ້ນກວ່າເກົ່າ, ຖືສຳຄັນການສົ່ງເສີມເສດຖະກິດຮ່ວມມືຂອງປະຊາຊົນ ຫຼືສະຫະກອນ"(2).

ເພື່ອສົ່ງເສີມສະຫະກອນກະສິກຳຢູ່ ສປປ ລາວ ເຄື່ອນໄຫວມີປະສິດທິຜົນ ແລະໝັ້ນຄົງ; ປະກອບສ່ວນເຂົ້າໃນການແກ້ໄຂຄວາມທຸກຍາກຂອງປະຊາຊົນຢ່າງແທ້ຈິງ, ລັດຖະບານ ສປປ ລາວ ໄດ້ກຳນົດທິດທາງ, ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ (2021-2025) ຄັ້ງທີ IX ຄື: "ແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະການພັດທະນາຕາມທິດ 3 ສ້າງ ເພື່ອຫຼຸດຜ່ອນຄວາມແຕກໂຕນທາງດ້ານສັງຄົມ (ລະຫວ່າງຄົນຮັ່ງ ແລະຄົນທຸກ, ລະຫວ່າງຕົວເມືອງ ແລະຊົນນະບົດ) ການເຂົ້າເຖິງການບໍລິການສາທາລະນະ (ການສຶກສາ, ສາທາລະນະສຸກ) ຢູ່ເຂດຫ່າງໄກສອກຫຼີກ"(3).

ໃນໄລຍະຜ່ານມາພັກ-ລັດຖະບານ ກໍຄືພາກສ່ວນທີ່ກ່ຽວຂ້ອງໄດ້ເອົາໃຈໃສ່ສົ່ງເສີມສະຫະກອນກະສິກຳຢູ່ປະເທດເຮົາຢ່າງຕັ້ງໜ້າໂດຍໄດ້ວາງແຜນຍຸດທະສາດພັດທະນາກະສິກຳແຕ່ນີ້ຮອດປີ 2025 ແລະວິໄສທັດຮອດປີ 2030; ພ້ອມນັ້ນ, ກໍໄດ້ຫັນມາເປັນແຜນພັດທະນາໄລຍະ 5 ປີຂອງຂະແໜງການໃຫ້ສອດຄ່ອງໄປຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະແຜນປີຂອງຂະແໜງກະສິກຳ ແລະປ່າໄມ້ ເປັນຕົ້ນແມ່ນການວາງແຜນສົ່ງເສີມກຸ່ມສະຫະກອນ ແລະກອງທຶນ ໂດຍມີການວາງແຜນຍ່ອຍຕ່າງໆ, ແຜນການສົ່ງເສີມເຕັກນິກການຜະລິດ ແລະກົນຈັກກະສິກຳ, ແຜນກ່ຽວກັບການສົ່ງເສີມການຜະລິດ ແລະນຳໃຊ້ແນວພັນ, ແຜນວຽກງານຂໍ້ມູນຂ່າວສານການສົ່ງເສີມ ແລະເຊື່ອມໂຍງຕະຫຼາດ, ແຜນວຽກງານສົ່ງເສີມການປຸງແຕ່ງ ແລະໂພຊະນາການ, ແຜນວຽກງານການສົ່ງເສີມການສ້າງ ແລະພັດທະນາ ແລະສະຖານທີ່ບໍລິການເຕັກນິກ, ແຜນວຽກງານດ້ານນິຕິກຳ ແລະແຜນດ້ານ

(1) ເອກະສານກອງປະຊຸມໃຫຍ່ ຄັ້ງທີ X ພັກປະຊາຊົນ ປະຕິວັດລາວ, ປີ 2016, ໜ້າ 40.

(2) ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 7 ສະໄໝທີ XI, ປີ 2021, ໜ້າ 3.

(3) ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ (2021-2025) ຄັ້ງທີ IX, ໜ້າ 47.

ການຮ່ວມມື ສາມາດຍາດໄດ້ຜົນສຳເລັດດັ່ງນີ້:

1). "ການສ້າງນິຕິກຳຮັບໃຊ້ວຽກງານສົ່ງເສີມສະຫະກອນກະສິກຳ. ລັດຖະບານໄດ້ສ້າງ ແລະໄດ້ສະເໜີຜ່ານຮ່າງກົດໝາຍ ວ່າດ້ວຍສະຫະກອນ ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ເພື່ອສ້າງເງື່ອນໄຂອຳນວຍຄວາມສະດວກໃນສະພາບແວດລ້ອມທີ່ເລັ່ງທວງໃຫ້ມີການພັດທະນາສະຫະກອນ ໂດຍສະເພາະແມ່ນປັບປຸງກຳລັງການຜະລິດ ແລະເສດຖະກິດຮ່ວມມືກັບປະຊາຊົນເຮັດໃຫ້ການຄຸ້ມຄອງວຽກງານສະຫະກອນລວມສູນ ແລະມີການຈັດຕັ້ງຮັບຜິດຊອບຢ່າງຈະແຈ້ງ ແລະຫັນເຂົ້າສູ່ກົດໝາຍ, ລະບຽບ ຕາມແນວທາງ, ນະໂຍບາຍຂອງພັກ. ຄຽງຄູ່ກັນນັ້ນ, ກໍໄດ້ຈັດຕັ້ງເຜີຍແຜ່ດຳລັດ ສະບັບເລກທີ 606/ລບ ວ່າດ້ວຍກຸ່ມ ແລະສະຫະກອນໃນ 4 ແຂວງ ຄື: ແຂວງສາລະວັນ, ແຂວງຄຳມ່ວນ, ແຂວງສະຫວັນນະເຂດ ແລະແຂວງບໍ່ແກ້ວ ມີຜູ້ເຂົ້າຮ່ວມທັງໝົດ 475 ຄົນ, ຍິງ 183 ຄົນ.

2). ການສ້າງຄວາມເຂັ້ມແຂງຂອງກິງຈັກສະຫະກອນກະສິກຳ. ໄລຍະຜ່ານມາສະຫະກອນກະສິກຳ ໄດ້ຮັບການຊຸກຍູ້ສົ່ງເສີມໃຫ້ນັບມື້ເຕີບໃຫຍ່ຂະຫຍາຍຕົວທາງດ້ານປະລິມານ ແລະຄຸນນະພາບ ສະແດງອອກ ໃນປີ 2023 ທົ່ວປະເທດມີສະຫະກອນທັງໝົດ 35 ແຫ່ງ ເພີ່ມຂຶ້ນ 8 ແຫ່ງ, ທຽບກັບ ປີ 2022 ຜ່ານມາ ເພີ່ມຂຶ້ນ 29% ແລະມີ 3.214 ກຸ່ມ; ພ້ອມນັ້ນ, ໄດ້ມີການສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມດ້ວຍການຈັດເຝິກອົບຮົມໄດ້ທັງໝົດ 48 ຄັ້ງ, ມີຜູ້ເຂົ້າຮ່ວມທັງໝົດ 1.500 ເທື່ອ ຄົນ, ຍິງ 800 ເທື່ອຄົນ; ໄດ້ເຜີຍແຜ່ບົດແນະນຳ ແລະເອກະສານຕ່າງໆກ່ຽວກັບການສົ່ງເສີມການສ້າງຕັ້ງກຸ່ມສະຫະກອນ ແລະກອງທຶນໄດ້ 10 ຄັ້ງ, ມີຜູ້ເຂົ້າຮ່ວມ 500 ເທື່ອຄົນ, ຍິງ 300 ເທື່ອຄົນ ແລະໄດ້ສ້າງຄູ່ມື-ບົດແນະນຳ ສຳລັບການບໍລິຫານ ແລະການຄຸ້ມຄອງກຸ່ມ ແລະສະຫະກອນ ລວມທັງວຽກງານການຄຸ້ມຄອງກອງທຶນກຸ່ມ ແລະສະຫະກອນການຜະລິດກະສິກຳ ແລະວຽກງານບັນຊີ-ການເງິນ ໄດ້ປະມານ 1.000 ກວ່າຫົວ"[1].

3). ການສະໜອງດ້ານເຕັກນິກການຜະລິດ ແລະກົນຈັກກະສິກຳ. ໄດ້ສະໜອງເຄື່ອງມືດ້ານເຕັກນິກການຜະລິດ ແລະເຄື່ອງມືກົນຈັກກະສິກຳໃຫ້ແກ່ສະຫະກອນກະສິກຳສາມາດຜະລິດໄດ້ປະສິດທິພາບຂອງຜົນຜະລິດສູງ ໄດ້ຫັນປ່ຽນການຜະລິດໄປສູ່ການຜະລິດທີ່ນຳໃຊ້ເຕັກນິກວິທະຍາສາດ, ຮັບປະກັນບໍ່ໃຫ້ເກີດຜົນເສຍຫາຍ ໂດຍສະເພາະແມ່ນການເລືອກແນວພັນທີ່ເໝາະສົມ, ໄດ້ມີການກະກຽມດິນທີ່ຖືກຕ້ອງ, ໄດ້ສົ່ງເສີມຂະບວນການປູກ ແລະບົວລະບັດຮັກສາ ພ້ອມທັງການໃສ່ຝຸ່ນ, ໃສ່ປຸ໋ຍທີ່ມີຄຸນນະພາບເໝາະສົມ ແລະຖືກຕ້ອງຕາມເງື່ອນໄຂຄຸນນະພາບຂອງດິນ ແລະຄວາມຕ້ອງການຂອງພືດ, ໄດ້ມີການຈັດເຝິກອົບຮົມເຕັກນິກການຜະລິດໃຫ້ຊາວກະສິກອນເປັນຕົ້ນແມ່ນເຝິກອົບຮົບການປູກພືດຜັກ (ການປູກພືດຜັກໃນເຮືອນຮົ່ມ); ການປູກເຂົ້າ (ແບບຢອດຕົມ, ຫວ່ານຕົມ, ຢອດແຫ້ງ, ຫວ່ານແຫ້ງ) ແລະເຝິກອົບຮົມເຕັກນິກການນຳໃຊ້ກົນຈັກກະສິກຳເຂົ້າໃນການຜະລິດເຂົ້າໄດ້ທັງໝົດ 15 ຄັ້ງ, ມີຜູ້ເຂົ້າຮ່ວມທັງໝົດ 459 ເທື່ອ

[1] ບົດລາຍງານຕໍ່ກອງປະຊຸມວຽກງານສົ່ງເສີມກະສິກຳ ແລະສະຫະກອນ ທົ່ວປະເທດປະຈຳປີ 2023, ໜ້າ 2 (ກົມສົ່ງເສີມກະສິກຳ ແລະສະຫະກອນ, ກະຊວງກະສິກຳ ແລະປ່າໄມ້).

ຄົນ, ຍິງ 184 ເທື່ອຄົນ; ພ້ອມດຽວກັນນັ້ນ, ກໍໄດ້ດຳເນີນຢູ່ສາມວຽກຕົ້ນຄື: ໜຶ່ງ, ເຝິກອົບຮົມສ້າງຄວາມເຂັ້ມແຂງທາງດ້ານເຕັກນິກການປູກ ແລະການລ້ຽງສັດໃຫ້ພະນັກງານສູນກາງໄດ້ 5 ຄັ້ງ, ມີຜູ້ເຂົ້າຮ່ວມທັງໝົດ 125 ເທື່ອຄົນ, ຍິງ 75 ເທື່ອຄົນ, ແຕ່ງຕັ້ງພະນັກງານຂອງກົມສົ່ງເສີມກະສິກຳ ແລະສະຫະກອນລົງຊຸກຍູ້ຕິດຕາມ ແລະຊ່ວຍບັນດາສູນໃນ 18 ແຂວງທົ່ວປະເທດໃຫ້ສາມາດເຄື່ອນໄຫວວຽກງານໄດ້ຕາມພາລະບົດບາດຂອງຕົນເອງ; ສອງ, ສະໜອງອຸປະກອນ ແລະງົບປະມານຈຳນວນໜຶ່ງໃຫ້ 7 ສູນສົ່ງເສີມຢູ່ 7 ແຂວງເຊັ່ນ: ສູນພັດທະນາກະສິກຳຢູ່ແຂວງໄຊຍະບູລີ ຈຳນວນ 30 ເຮັກຕາ, ສູນພັດທະນາກະສິກຳປາກແຈ້ງແຂວງວຽງຈັນ, ສູນພັດທະນາກະສິກຳນ້ຳປາຈາດແຂວງໄຊສົມບູນ, ສູນພັດທະນາກະສິກຳເຊບັ້ງໄຟແຂວງຄຳມ່ວນ, ສູນພັດທະນາກະສິກຳຫຼັກ 35 ແຂວງສະຫວັນນະເຂດ.

- ວຽກງານຖ່າຍທອດເຕັກນິກວິຊາການກັບທີ່: ໃນວຽກງານດັ່ງກ່າວ, ອັນພົ້ນເດັ່ນແມ່ນກຸ່ມນຳໃຊ້ນ້ຳ ຢູ່ແຂວງສາລະວັນ ໂດຍສະເພາະແມ່ນໂຄງການການເຝິກອົບຮົບການບໍລິຫານຊົນລະປະທານໃຫ້ຊາວກະສິກອນ (FIAT: Farmer Irrigation Administration Training) ໄດ້ໃຫ້ການສະໜັບສະໜູນສ້າງຄູເຝິກ ໃນ 3 ຫົວຂໍ້ ກ່ອນຈະມອບຊົນລະປະທານແຕ່ລະແຫ່ງໄດ້ມີຫົວຂໍ້ຄື: ໜຶ່ງ, ເຕັກນິກການຄຸ້ມຄອງປົກປັກຮັກສາ ແລະນຳໃຊ້ຊົນລະປະທານ; ສອງ, ການຄຸ້ມຄອງບໍລິຫານກຸ່ມໃຊ້ນ້ຳ ແລະກອງທຶນ; ສາມ, ເຕັກນິກກະສິກຳ. ຜ່ານການເຝິກອົບຮົມກໍເຫັນຢ່າງຈະແຈ້ງວ່າ: "ກຸ່ມໃຊ້ນ້ຳແມ່ນອີງໃສ່ລະບົບຊົນລະປະທານເປັນໃຈກາງ ເພື່ອເຕົ້າໂຮມຊາວກະສິກອນເຂົ້າໃນການຈັດຕັ້ງເປັນກຸ່ມ; ແລ້ວອີງໃສ່ເງິນຄ່ານ້ຳ, ເງິນຄ່າສ້າງຊົນລະປະທານ ແລະທຶນທີ່ລັດມອບໃຫ້ໃນເບື້ອງຕົ້ນ ເພື່ອສ້າງເປັນກອງທຶນຕາມຮູບແບບຂອງການເງິນຈຸລະພາກປ່ອຍສິນເຊື່ອໃຫ້ສະມາຊິກເອົາໄປຂະຫຍາຍການຜະລິດ; ກຸ່ມໄດ້ເຕີບໃຫຍ່ຂຶ້ນພາຍໃຕ້ຄະນະກຳມະການຮັບຜິດຊອບ, ມີເງິນທຶນ, ມີການປັນຜົນ ແລະຫັກເຂົ້າຄັງລວມ ເພື່ອເປັນວຽກບໍລິຫານ ແລະຊື້ອຸປະກອນພາຫະນະສິ່ງອຳນວຍຄວາມສະດວກໃຫ້ບ້ານ"(1).

ພ້ອມກັນນັ້ນ, ກໍໄດ້ສົ່ງເສີມການນຳໃຊ້ກົນຈັກເຂົ້າສູ່ການຜະລິດກະສິກຳ ເຫັນວ່າຕົ້ນທຶນການຜະລິດ ຂອງຄອບຄົວທີ່ເຮັດນາແບບຢອດແຫ້ງ-ຢອດປຽກ ແລະແບບຫວ່ານແຫ້ງ-ຫວ່ານປຽກຫຼຸດລົງປະມານ 10%, ຖ້າທຽບໃສ່ການເຮັດນາແບບປັກດຳ; ສຳລັບການນຳໃຊ້ກົນຈັກກະສິກຳເຂົ້າໃນການທຳການຜະລິດ "ບັນດາສະຫະກອນກະສິກຳຢູ່ປະເທດເຮົາໄດ້ຫັນໄປນຳໃຊ້ກົນຈັກເຂົ້າໃນການກະກຽມດິນ ກວມເຖິງ 85%; ນຳໃຊ້ກົນຈັກເຂົ້າໃນການດຳນາ ກວມ 3%, ນຳໃຊ້ກົນຈັກເຂົ້າໃນການຢອດເມັດ ແລະຫວ່ານເມັດ ກວມ 10%; ນຳໃຊ້ກົນຈັກເຂົ້າໃນການເກັບກ່ຽວເຂົ້າ ກວມ 53% ຂອງຄອບຄົວຜູ້ທີ່ໄດ້ຮັບການເຝິກອົບຮົມ"(2).

4). ສ້າງເງື່ອນໄຂການເຂົ້າເຖິງແຫຼ່ງທຶນ

(1) ກະຊວງກະສິກຳ ແລະປ່າໄມ້, ນະໂຍບາຍສະໜັບສະໜູນການພັດທະນາສະຫະກອນກະສິກຳ ຢູ່ຊົນນະບົດ ສປປ ລາວ, ປີ 2021, ໜ້າ 77.

(2) ກົມສົ່ງເສີມກະສິກຳ ແລະສະຫະກອນ, ກະຊວງກະສິກຳ ແລະປ່າໄມ້, ບົດລາຍງານຕໍ່ກອງປະຊຸມວຽກງານສົ່ງເສີມກະສິກຳ ແລະສະຫະກອນທົ່ວປະເທດ ປະຈຳປີ 2023, ໜ້າ 2.

ຂອງສະຫະກອນກະສິກຳ. ການຜະລິດຈຳເປັນຕ້ອງໄດ້ໃຊ້ທຶນຮອນ; ດັ່ງນັ້ນ, ການເຂົ້າເຖິງແຫຼ່ງທຶນທີ່ສົມເຫດສົມຜົນ, ມີລັກສະນະສົ່ງເສີມ, ເຂົ້າເຖິງໄດ້ງ່າຍ ແລະດອກເບ້ຍຕ່ຳນັ້ນມີຄວາມສຳຄັນໃນການຂະຫຍາຍການຜະລິດ ໃນໄລຍະຜ່ານມາມີຫຼາຍທ້ອງຖິ່ນໄດ້ຈັດຕັ້ງປະຕິບັດການໃຫ້ນະໂຍບາຍສິນເຊື່ອ ເພື່ອຊຸກຍູ້ການຜະລິດກະສິກຳທີ່ສົມເຫດສົມຜົນ ເຊິ່ງການສົ່ງເສີມການເຂົ້າເຖິງສິນເຊື່ອ ແລະສະໜອງສິນເຊື່ອເຂົ້າໃນການຜະລິດຂອງສະຫະກອນກຸ່ມຜະລິດໄດ້ຮັບການສະໜັບສະໜູນຈາກບັນດາໂຄງການປົ່ນອ້ອມ ແລະທຶນບໍລິການກົນຈັກກະສິກຳ ສະແດງອອກຄື: ມີການສະໜອງທຶນໃຫ້ກຸ່ມຕ່າງໆໄດ້ທັງໝົດ ເພີ່ມອີກ 200 ລ້ານ ລວມເປັນ 25,8 ຕື້ກີບໃນປີ 2022; ຄຽງຄູ່ກັນນັ້ນ, ໄດ້ຂຽນແຜນທຸລະກິດຂອງຕົນເພື່ອເຂົ້າເຖິງແຫຼ່ງທຶນຂອງໂຄງການກະສິກຳເພື່ອໂພສະນາການໄດ້ 26 ຕື້ກີບ. ນອກນັ້ນ, ບັນດາກຸ່ມ ແລະສະຫະກອນ ຍັງສາມາດເຂົ້າເຖິງແຫຼ່ງທຶນອື່ນໆ ຈາກສະຖາບັນການເງິນ ແລະການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນໂດຍກົງຕື່ມອີກ.

5). ປັບປຸງພື້ນຖານໂຄງລ່າງພັດທະນາສູນ ແລະສະຖານີບໍລິການເຕັກນິກອຳນວຍຄວາມສະດວກ ໃຫ້ສະຫະກອນກະສິກຳ: ພື້ນຖານໂຄງລ່າງຮັບໃຊ້ໃນການຜະລິດກະສິກຳເປັນປັດໄຈຕັດສິນການຜະລິດກະສິກຳຂອງຊາວກະສິກອນ ໃນໄລຍະຜ່ານມາລັດຖະບານໄດ້ສຸມທຶນຮອນເຂົ້າໃນການພັດທະນາ ໂດຍໄດ້ກໍ່ສ້າງພື້ນຖານໂຄງລ່າງວັດຖຸເຕັກນິກຂອງຂະແໜງກະສິກຳເຊັ່ນ:

- "ໄດ້ລົງທຶນພັດທະນາລະບົບຊົນລະປະທານຂະໜາດນ້ອຍ, ຂະໜາດກາງ ແລະຂະໜາດໃຫຍ່ ດ້ວຍລະບົບຈັກສູບນ້ຳ, ອ່າງເກັບນ້ຳ, ຝາຍນ້ຳລົ້ນທັງແບບຖາວອນ ແລະເຄິ່ງຖາວອນມີໂຄງການຊົນລະປະທານທັງໝົດ 15.116 ໂຄງການ; ໃນນີ້, ລະບົບອ່າງເກັບນ້ຳ ຈຳນວນ 542 ໂຄງການ, ຝາຍນ້ຳລົ້ນ ຈຳນວນ 2.236 ໂຄງການ, ຝາຍກວຍຫີນ ຈຳນວນ 350 ໂຄງການ, ປະຕູນ້ຳ ຈຳນວນ 517 ໂຄງການ, ຝາຍປະຖົມປະຖານ ຈຳນວນ 9.745 ໂຄງການ; ໄດ້ສ້າງຊົນລະປະທານຈັກສູບນ້ຳຂະໜາດກາງ ແລະຂະໜາດໃຫຍ່ ຈຳນວນ 419 ໂຄງການ ແລະຈັກສູບນ້ຳຂະໜາດນ້ອຍຈຳນວນ 1.307 ໂຄງການ ເຊິ່ງທັງໝົດສາມາດສະໜອງນ້ຳຊົນລະປະທານທັງໝົດ 435.000 ເຮັກຕາ ຖ້າທຽບໃສ່ປີ 2015 ເຫັນວ່າເນື້ອທີ່ທຳການຜະລິດໄດ້ຮັບການສະໜອງນ້ຳຊົນລະປະທານ ເພີ່ມຂຶ້ນ 3,8%.

- ສ້າງ ແລະປັບປຸງສູນຄົ້ນຄວ້າທົດລອງ, ສູນສະຖານີບໍລິການດ້ານເຕັກນິກ: ໃນທົ່ວປະເທດມີສູນບໍລິການດ້ານເຕັກນິກກະສິກຳ ແລະປ່າໄມ້, ສູນຄົ້ນຄວ້າທົດລອງ ແລະສະຖານີທັງໝົດ 217 ແຫ່ງ; ໃນນັ້ນ, ສູນທີ່ຂຶ້ນກັບຂັ້ນສູນກາງ ຈຳນວນ 36 ແຫ່ງ, ສູນທີ່ຂຶ້ນກັບຂັ້ນແຂວງຈຳນວນ 36 ແຫ່ງ ແລະສະຖານີຂຶ້ນກັບເມືອງຈຳນວນ 145 ແຫ່ງ"(1).

- ການປັບປຸງພື້ນຖານໂຄງລ່າງສະຫະກອນກະສິກຳ: "ໄດ້ປັບປຸງພື້ນຖານໂຄງລ່າງເພື່ອອຳນວຍຄວາມສະດວກໃຫ້ແກ່ການສົ່ງ

(1) ບົດສະຫຼຸບການຈັດຕັ້ງປະຕິບັດແຜນປີ 2023 ແລະຄາດຄະເນແຜນການ ປີ 2024, ກົມສົ່ງເສີມກະສິກຳ ແລະສະຫະກອນ, ກະຊວງກະສິກຳ ແລະປ່າໄມ້.

ເສີມສະຫະກອນ ເປັນຕົ້ນແມ່ນປັບປຸງໂຮງອົບ ໄດ້ທັງໝົດ 895 ແຫ່ງ, ສ້າງໂຮງຄັດເມັດເຂົ້າ ເພີ່ມຂຶ້ນ 37 ແຫ່ງ ລວມທັງໝົດ 52 ແຫ່ງ, ສ້າງ ສາງເກັບມ້ຽນເພີ່ມຂຶ້ນ 287 ແຫ່ງ ລວມທັງໝົດ 1.435 ແຫ່ງ ແລະອື່ນໆ. ລັດຖະບານໄດ້ລົງທຶນ ກໍ່ສ້າງພື້ນຖານໂຄງລ່າງຮັບໃຊ້ການຜະລິດ ກະສິກຳເຊັ່ນ: ຮົ້ວ, ໂຮງເຮືອນຄັດ, ສາງເຢັນ, ລົດໄຖ, ລົດກ່ຽວ, ອຸປະກອນເຄື່ອງຄັດເມັດພັນ ແລະອື່ນໆ) ລວມເປັນມູນຄ່າທັງໝົດ 269,25 ຕື້ກີບ"[1]

6). ວຽກງານການສົ່ງເສີມຂໍ້ມູນຂ່າວສານ ແລະເຊື່ອມໂຍງກັບຕະຫຼາດ. ການສະໜອງຂໍ້ ມູນຂ່າວສານ ແລະສົ່ງເສີມຂີດຄວາມສາມາດ ໃນການເຊື່ອມໂຍງກັບຕະຫຼາດແມ່ນມີຄວາມ ສຳຄັນຕໍ່ຄະນະບໍລິຫານສະຫະກອນ ແລະ ສະມາຊິກສະຫະກອນໃນການວາງແຜນການ ຜະລິດ ເພື່ອຮັບປະກັນໃຫ້ສອດຄ່ອງກັບຄວາມ ຕ້ອງການຂອງຕະຫຼາດ ເຊິ່ງໃນໄລຍະຜ່ານມາ ສາມາດ "ຜະລິດຂໍ້ມູນຂ່າວສານດ້ານການສົ່ງ ເສີມສະຫະກອນໃນຮູບແບບຕ່າງໆ ເພື່ອໂຄ ສະນາ ແລະແຈກຢາຍໃຫ້ຊາວກະສິກອນ ແລະ ຜູ້ທີ່ສົນໃຈເຊັ່ນ: ສ້າງເປັນ QR Code ຈຳນວນ 36 ໝວດເອກະສານ ແລະອັບໂຫຼດລົງໃນເວັບ ໄຊຂອງກົມສົ່ງເສີມກະສິກຳ ແລະສະຫະກອນ ປະກອບມີ: ໝວດນິຕິກຳລຸ່ມກົດໝາຍທັງໝົດ 35 ເລື່ອງ; ໃນນັ້ນ, ໝວດເຕັກນິກດ້ານການຜະ ລິດ 6 ເລື່ອງ; ນອກນັ້ນ, ຍັງໄດ້ຈັດພິມປະເພດ ເອກະສານປຶດແນະນຳ ແລະຄູ່ມືທາງດ້ານເຕັກ ນິກການຜະລິດ, ການປຸງແຕ່ງ ແລະການຕະ ຫຼາດທັງໝົດ 10.400 ສະບັບ"[2].

ຄຽງຄູ່ກັບຜົນສຳເລັດທີ່ກ່າວມາຂ້າງ ເທິງນັ້ນ, ຍັງມີບັນຫາທີ່ຕັ້ງຂຶ້ນຈຳນວນໜຶ່ງໃນ ການສົ່ງເສີມສະຫະກອນກະສິກຳຢູ່ປະເທດ ເຮົາ ເປັນຕົ້ນແມ່ນ:

ໜຶ່ງ, ການສ້າງ ແລະປັບປຸງບັນດານິຕິກຳ ຮັບໃຊ້ວຽກງານສົ່ງເສີມສະຫະກອນກະສິກຳ ຍັງຈຳກັດ ເປັນຕົ້ນແມ່ນກົດໝາຍ, ດຳລັດ ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດບັນ ດານິຕິກຳ ຍັງບໍ່ທັນຈະແຈ້ງ ແລະເປັນເອກະ ພາບເທົ່າທີ່ຄວນ; ກົດໝາຍ ແລະລະບຽບການ ທີ່ມີຈຳນວນໜຶ່ງບໍ່ທັນມີລັກສະນະສົ່ງເສີມ ເປັນອັນສະເພາະກ່ຽວກັບສະຫະກອນ ແລະ ປະເທດເຮົາ ກໍຍັງບໍ່ທັນມີກົດໝາຍທີ່ກ່ຽວຂ້ອງ ກັບສະຫະກອນກະສິກຳເປັນອັນສະເພາະ ເທື່ອ.

ສອງ, ກົນໄກ, ການປະສານງານໃນການ ສົ່ງເສີມ ຍັງບໍ່ທັນໂລ່ງລ່ຽນກົງຈັກລັດທີ່ຮັບຜິດ ຊອບຄຸ້ມຄອງ ແລະສົ່ງເສີມຍັງບໍ່ທັນຈະແຈ້ງ ໂດຍສະເພາະແມ່ນໃນຂັ້ນທ້ອງຖິ່ນຮາກຖານ ຍັງຂາດນະໂຍບາຍສົ່ງເສີມທີ່ເປັນບູລິມະສິດ ພິເສດ, ພະນັກງານຂັ້ນທ້ອງຖິ່ນຍັງຈຳກັດທາງ ດ້ານປະລິມານ ແລະຄຸນນະພາບ.

ສາມ, ການນຳໃຊ້ວິທະຍາສາດ-ເຕັກ ໂນໂລຊີ, ນະວັດຕະກຳໃໝ່ເຂົ້າໃນການສົ່ງເສີມ ສະຫະກອນກະສິກຳ ຍັງບໍ່ທັນພຽງພໍ ເຖິງແມ່ນ ວ່າຂະແໜງການກ່ຽວຂ້ອງໄດ້ບຸກບືນໃນການ

---

[1] ບົດສະຫຼຸບການຈັດຕັ້ງປະຕິບັດແຜນປີ 2023 ແລະຄາດຄະເນແຜນການ ປີ 2024, ໜ້າ 3, 2-3; ກົມສົ່ງເສີມ ກະສິກຳ ແລະສະຫະກອນ, ກະຊວງກະສິກຳ ແລະປ່າໄມ້.

[2] ບົດສະຫຼຸບການຈັດຕັ້ງປະຕິບັດແຜນປີ 2023 ແລະຄາດຄະເນແຜນການ ປີ 2024, ໜ້າ 3, 2-3; ກົມສົ່ງເສີມກະ ສິກຳ ແລະສະຫະກອນ, ກະຊວງກະສິກຳ ແລະປ່າໄມ້.

ສົ່ງເສີມການນຳໃຊ້ວິທະຍາສາດ-ເຕັກນິກໃໝ່ເຂົ້າໃນການຜະລິດຂອງສະຫະກອນກະສິກຳ ກໍຄືຊາວກະສິກອນທົ່ວປະເທດ, ແຕ່ກໍຍັງມີຢູ່ຢ່າງຈຳກັດ, ປະຕິບັດໄດ້ຢູ່ສ່ວນໃດໜຶ່ງ ຫຼື ກຸ່ມໃດກຸ່ມໜຶ່ງເທົ່ານັ້ນ, ຂະບວນການປຸກລະດົມຂົນຂວາຍ, ການສ້າງຕົວແບບໃນການນຳໃຊ້ເຕັກນິກການຜະລິດແບບໃໝ່ ຍັງບໍ່ທັນກວ້າງຂວາງ ເນື່ອງຈາກວ່າບຸກຄະລາກອນທີ່ເຮັດວຽກງານສົ່ງເສີມຍັງຂາດບົດຮຽນ ແລະປະສົບການຕົວຈິງ; ການຄຸ້ມຄອງບໍລິຫານສູນພັດທະນາກະສິກຳ ແລະບໍລິການເຕັກນິກຈຳນວນໜຶ່ງຍັງບໍ່ທັນເຂັ້ມແຂງ, ຂາດບຸກຄະລາກອນທີ່ຊຳນານງານ, ເຄື່ອງມືອຸປະກອນບໍ່ພຽງພໍເທົ່າທີ່ຄວນ.

ສີ່, ດ້ານນະໂຍບາຍເຂົ້າເຖິງແຫຼ່ງທຶນຍັງປະຕິບັດບໍ່ທັນໄດ້ ສະແດງອອກໃນໄລຍະຜ່ານມາ, ການເຂົ້າເຖິງສິນເຊື່ອ ແມ່ນຍັງພົບຄວາມຫຍຸ້ງຍາກສຳລັບບັນດາຫົວໜ່ວຍສະຫະກອນອີງການຂອງລັດ ຍັງບໍ່ທັນໄດ້ຕັ້ງໜ້າແກ້ໄຂເຊັ່ນ: ທະນາຄານສົ່ງເສີມກະສິກຳແມ່ນມີດອກເບ້ຍສູງ; ທະນາຄານນະໂຍບາຍແມ່ນບໍ່ມີນະໂຍບາຍໃຫ້ເມືອງທຸກຍາກນອນຢູ່ໃນບູລິມະສິດການປ່ອຍກູ້ຂອງຕົນ. ດັ່ງນັ້ນ, ໄລຍະປ່ອຍກູ້ ແລະອັດຕາດອກເບ້ຍຂອງບັນດາທະນາຄານທຸລະກິດແມ່ນບໍ່ເໝາະສົມກັບການສົ່ງເສີມເສດຖະກິດຮ່ວມມືປະຊາຊົນ ກໍຄືສະຫະກອນ; ຫຼາຍສະຖາບັນການເງິນຕ້ອງການຫຼັກຊັບຄ້ຳປະກັນ ແລະຕ້ອງການບົດວິພາກເສດຖະກິດທີ່ໜ້າເຊື່ອຖື ເຮັດໃຫ້ຊາວກະສິກອນທີ່ຢູ່ຫ່າງໄກສອກຫຼີກມີຄວາມຫຍຸ້ງຍາກທີ່ຈະກະກຽມໃຫ້ໄດ້ຕາມເງື່ອນໄຂຂອງສະຖາບັນການເງິນກຳນົດໄວ້.

ຫ້າ, ຄວາມເປັນເຈົ້າການຂອງສະມາຊິກ ກໍຄືຄະນະບໍລິຫານສະຫະກອນ ຍັງບໍ່ທັນເຂົ້າໃຈຕໍ່ບົດບາດ ແລະໜ້າທີ່ຂອງເສດຖະກິດຮ່ວມມືປະຊາຊົນ ກໍຄືສະຫະກອນເທົ່າທີ່ຄວນ; ພ້ອມນັ້ນ, ຄວາມສົນໃຈຕໍ່ວຽກງານສ້າງກຸ່ມສະຫະກອນກະສິກຳຍັງມີໜ້ອຍ; ອີກດ້ານໜຶ່ງ, ພະນັກງານລັດຜູ້ເຮັດໜ້າທີ່ສົ່ງເສີມຈຳນວນໜຶ່ງມີຄວາມຄິດລະແວງສົງໄສຕໍ່ຂະບວນການສະຫະກອນກະສິກຳ ໃນຂະນະດຽວກັນ, ສະມາຊິກຂອງສະຫະກອນ ແລະຄະນະຜູ້ບໍລິຫານສະຫະກອນບາງບ່ອນຍັງສວຍໃຊ້ພື້ນທີ່ຂອງສະຫະກອນ ເພື່ອແອບອ້າງໃນການເຂົ້າເຖິງບັນດາປັດໄຈການຜະລິດ, ຕະຫຼາດ ແລະການສະໜັບສະໜູນຈາກພາກລັດ.

ເພື່ອສົ່ງເສີມສະຫະກອນກະສິກຳຢູ່ປະເທດເຮົາໄດ້ຮັບໝາກຜົນດີ ແລະມີຄຸນນະພາບສູງນັ້ນ, ຄວນເອົາໃຈໃສ່ບາງວິທີການໃນຕໍ່ໜ້າດັ່ງນີ້:

1). ສົ່ງເສີມສະຫະກອນກະສິກຳຕ້ອງມີແຜນງານລະອຽດ ເພື່ອສົ່ງເສີມການຜະລິດ ແລະຕ້ອງຕິດພັນກັບຄວາມຮຽກຮ້ອງຕ້ອງການຂອງຕະຫຼາດ, ອີງໃສ່ຕະຫຼາດເພື່ອວາງນະໂຍບາຍເຊັ່ນ: ມີການຄົ້ນຄວ້າ, ສ້າງແຜນຍຸດທະສາດ, ພ້ອມທັງປັບປຸງບັນດານິຕິກຳທີ່ກ່ຽວຂ້ອງກັບການພັດທະນາສະຫະກອນກະສິກຳໃຫ້ສອດຄ່ອງກັບສະພາບ ແລະເງື່ອນໄຂຕົວຈິງຂອງແຕ່ລະໄລຍະເພື່ອເປັນບ່ອນອີງໃຫ້ແກ່ບັນດາຂະແໜງການ, ອົງການຂັ້ນສູນກາງ ແລະອົງການປົກຄອງທ້ອງຖິ່ນນຳໄປຜັນຂະຫຍາຍເປັນເນື້ອໃນແຜນການ, ໂຄງການຈັດຕັ້ງປະຕິບັດໃນແຕ່ລະໄລຍະ ທັງເປັນພື້ນຖານໃຫ້ແກ່ການປະເມີນຜົນຢ່າງເປັນເອກະພາບກັນ.

2). ຄະນະພັກ, ຄະນະນຳແຕ່ລະຂັ້ນ

ໂດຍສະເພາະແມ່ນຄະນະພັກ, ອົງການປົກຄອງທ້ອງຖິ່ນ ຕ້ອງຮີບຮ້ອນປັບປຸງລະບົບການຈັດຕັ້ງ ແລະບຸກຄະລາກອນ ລວມທັງກົນໄກປະສານງານ ແລະລະບອບແບບແຜນພັດທະນາສະຫະກອນກະສິກຳຂອງບັນດາຂະແໜງການໃຫ້ເປັນລະບົບກົມກຽວ, ມີປະສິດທິຜົນ ແລະມີການທັນປ່ຽນຢ່າງຕັ້ງໜ້າ, ກຳນົດພາລະບົດບາດໃຫ້ຂະແໜງ ແລະໜ່ວຍງານທີ່ຮັບຜິດຊອບວຽກງານດັ່ງກ່າວ ກໍຄືການກໍ່ສ້າງຮາກຖານການເມືອງຢູ່ຂັ້ນແຂວງ ແລະເມືອງ ເພື່ອເປັນເສນາທິການໃຫ້ແກ່ຄະນະພັກ, ອົງການປົກຄອງຂັ້ນຂອງຕົນ.

3). ເພີ່ມທະວີການຈັດຕັ້ງ ແລະຜັນຂະຫຍາຍບັນດານິຕິກຳ ກໍຄືກົດໝາຍ ແລະລະບຽບທີ່ປະກາດໃຊ້ແລ້ວເຂົ້າໃນການສົ່ງເສີມຢ່າງເຂັ້ມງວດ, ຄະນະພັກທຸກຂັ້ນຕ້ອງຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນເນື້ອໃນມະຕິຄຳສັ່ງຂອງກົມການເມືອງສູນກາງພັກ ແລະມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກແຕ່ລະຄັ້ງ ແລະນະໂຍບາຍຂອງລັດອື່ນໆທີ່ຕິດພັນກັບການສົ່ງເສີມເສດຖະກິດຮ່ວມມືປະຊາຊົນ ເປັນຕົ້ນແມ່ນການພັດທະນາການຈັດຕັ້ງກຳລັງການຜະລິດຂອງຊາວກະສິກອນໃຫ້ເລິກເຊິ່ງ; ຜັນຂະຫຍາຍເນື້ອໃນຈິດໃຈຂອງບັນດາທິດນຳຂອງພັກມາເປັນແຜນຍຸດທະສາດ, ແຜນງານ ແລະໂຄງການຂອງຕົນ ເພື່ອກຳນົດບັນດາກິດຈະກຳຈັດຕັ້ງປະຕິບັດໃຫ້ຈະແຈ້ງ.

4). ສ້າງກົນໄກການປະຕິບັດນຳໃຊ້ແຫຼ່ງທຶນເຂົ້າໃນການຜະລິດ ແລະຂະຫຍາຍກິດຈະການໃຫ້ມີປະສິດທິພາບໃນດ້ານກົນໄກການປະສານງານໃນການຄຸ້ມຄອງ ແລະສະໜອງສິນເຊື່ອ ລະຫວ່າງສູນກາງ ແລະທ້ອງຖິ່ນ ຄວນມີຄວາມເປັນເອກະພາບ ແລະເປັນໄປໃນທິດທາງດຽວກັນ, ມີການແບ່ງຄວາມຮັບຜິດຊອບຈະແຈ້ງ, ເກາະທ້ອຍ ແລະເຊື່ອມໂຍງສະໜັບສະໜູນເປັນຢ່າງເປັນລະບົບສະຫະກອນສິນເຊື່ອ, ຄວນລົງເລິກໃນການລະດົມທຶນ ແລະປ່ອຍກູ້ໃຫ້ກັບບັນດາສະມາຊິກຂອງຕົນ, ມີລະບົບຄັດກອງ, ວິເຄາະວິໄຈ, ຕີລາຄາຢ່າງພາວະວິໄສ ແລະມີນະໂຍບາຍດອກເບ້ຍໃຫ້ແກ່ສະມາຊິກໃນການນຳໃຊ້ທຶນ. ຄວນມີກຳມະການສະເພາະປະກອບດ້ວຍຫຼາຍຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນແມ່ນການເງິນ, ການຄ້າ, ທະນາຄານ ແລະອື່ນໆເປັນຄະນະເພື່ອຮັບປະກັນການບໍລິຫານທີ່ມີປະສິດທິພາບ.

5). ສ້າງຄວາມເຂັ້ມແຂງໃຫ້ອົງການ, ຫົວໜ່ວຍວິຊາການທີ່ສະໜອງບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ ໂດຍເອົາໃຈໃສ່ປັບປຸງສະພາອຸດສາຫະກຳ ແລະການຄ້າຂອງແຂວງ, ຂອງເມືອງໃນຂອບເຂດທົ່ວປະເທດໃຫ້ມີຄວາມເຂັ້ມແຂງ, ກຳນົດແຈ້ງກ່ຽວກັບພາລະບົດບາດ, ສິດ ແລະໜ້າທີ່, ປະກອບບຸກຄະລາກອນທີ່ມີຄວາມຮູ້, ຄວາມສາມາດໃຫ້ພຽງພໍກັບຄວາມຕ້ອງການຂອງໜ້າທີ່ວຽກງານ, ພ້ອມທັງເຊື່ອມຊຶມໃຫ້ເຂົ້າໃຈເລິກເຊິ່ງ ຕໍ່ພາລະບົດບາດຂອງຕົນ ເພື່ອໃຫ້ສາມາດເປັນໃຈກາງໃນການປະສານສົມທົບກັບຂະແໜງການຕ່າງໆຂອງແຂວງ, ຂອງເມືອງໃນການສະໜັບສະໜູນຊ່ວຍເຫຼືອແກ່ຜູ້ປະກອບການທຸລະກິດຂະໜາດນ້ອຍ ແລະກາງ (SME) ຂອງຫົວໜ່ວຍທຸລະກິດກະສິກຳ ຫຼື ສະຫະກອນກະສິກຳ.

6). ສ້າງຊາວກະສິກອນໃຫ້ມີຄວາມຮູ້, ຄວາມສາມາດ ແລະມີຄວາມຄິດນຳໃຊ້ພູມປັນຍາຂອງທ້ອງຖິ່ນ ແລະເອກະລັກສະເພາະຂອງປະເທດ ເພື່ອສ້າງມູນຄ່າເພີ່ມໃຫ້ແກ່ຜະລິດຕະ

ພັນກະສິກຳ ແລະເພີ່ມທະວີການແຂ່ງຂັນໃຫ້ທຽບເທົ່າກັບພາກພື້ນ; ສ້າງແຮງງານໃນຂົງເຂດກະສິກຳໃຫ້ກາຍເປັນຜູ້ມີຫົວຄິດປະດິດສ້າງແລະເປັນເຈົ້າການໃນການນຳໃຊ້ນະວັດຕະກຳໃໝ່ເຂົ້າສູ່ການດຳເນີນທຸລະກິດຕາມກະແສການປ່ຽນແປງຂອງໂລກຢ່າງມີຫຼັກການ. ປະຕິບັດບາດກ້າວ ແລະຂັ້ນຕອນສົ່ງເສີມຄື: ໜຶ່ງ, ສ້າງເປັນກຸ່ມຮຽນຮູ້ ເພື່ອຖອດຖອນບົດຮຽນ ໂດຍໃຫ້ມີວິຊາການນຳພາປະຕິບັດປະຈຳ; ສອງ, ພາຍຫຼັງກຸ່ມມີບົດຮຽນແລ້ວວິຊາການປະຈຳແມ່ນເຮັດໜ້າທີ່ເປັນທີ່ປຶກສາ ໂດຍການວ່າຈ້າງຂອງກຸ່ມ ແລະສະຫະກອນ; ສາມ, ລັດ ເຮັດໜ້າທີ່ກວດສອບກຸ່ມ, ສະຫະກອນໃນການຈັດຕັ້ງປະຕິບັດຕາມບັນດານິຕິກຳຂອງລັດວາງອອກ.

ສະຫຼຸບລວມ, ສົ່ງເສີມສະຫະກອນກະສິກຳຢູ່ປະເທດເຮົາໃຫ້ມີຄວາມເຂັ້ມແຂງຢ່າງມີປະສິດທິພາບສູງ ແລະຍືນຍົງໃນການຜະລິດກະສິກຳນັ້ນ, ເພື່ອຄ້ຳປະກັນຄວາມໝັ້ນຄົງດ້ານສະບຽງອາຫານ ແລະໂພຊະນາການ, ການຜະລິດກະສິກຳເປັນສິນຄ້າຕາມທິດຫັນເປັນອຸດສາຫະກຳ, ທັນສະໄໝ, ສະອາດ, ສີຂຽວ ແລະຍືນຍົງ, ຄວນສືບຕໍ່ຄົ້ນຄວ້າ ແລະສ້າງນິຕິກຳ ແລະນະໂຍບາຍສົ່ງເສີມສະຫະກອນກະສິກຳໃຫ້ເຂົ້າສູ່ລວງເລິກ; ສ້າງກົນໄກສົ່ງ ເສີມສະຫະກອນສິນເຊື່ອໃຫ້ມີຄວາມເປັນເອກະພາບ; ສົ່ງເສີມສະຫະກອນກະສິກຳໃຫ້ຕິດພັນກັບຕະຫຼາດຈຳໜ່າຍສິນຄ້າ; ປັບປຸງການເຂົ້າເຖິງການໃຫ້ຄຳປຶກສາ ແລະພັດທະນາທຸລະກິດ. ສ້າງເງື່ອນໄຂສະດວກແກ່ການເຂົ້າຫາແຫຼ່ງທຶນໃຫ້ຫຼາຍຂຶ້ນ, ພ້ອມທັງສ້າງສະພາບແວດລ້ອມເອື້ອອຳນວຍໃຫ້ແກ່ການສ້າງຕັ້ງ ແລະດຳເນີນທຸລະກິດກະສິກຳທີ່ດີ ທັງນີ້, ກໍເພື່ອສົ່ງເສີມສະຫະກອນກະສິກຳໃຫ້ຂະຫຍາຍຕົວໄດ້ຢ່າງກວ້າງຂວາງ ແລະມີຄຸນນະພາບດີ, ຖ້າພວກເຮົາຮູ້ສົ່ງເສີມສະຫະກອນກະສິກຳໄດ້ດີມັນຈະກາຍເປັນການພັດທະນາກຳລັງການຜະລິດຂອງຊາດໃຫ້ຂະຫຍາຍຕົວ, ເຮັດໃຫ້ປະເທດຊາດໄດ້ຮັບການພັດທະນາ, ປະຊາຊົນບັນດາເຜົ່າມີຊີວິດການເປັນຢູ່ດີຂຶ້ນ.



ກອງປະຊຸມແລກປ່ຽນບົດຮຽນເພື່ອທົບທວນຄືນໃນການຈັດຕັ້ງປະຕິບັດໂຄງການສົ່ງເສີມລະບົບຕ່ອງໂສ້ການຜະລິດກະສິກຳເປັນສິນຄ້າທີ່ເປັນມິດກັບສິ່ງແວດລ້ອມ ຫຼື (ຄສກສ) ໃນ 3 ແຂວງທີ່ພະແນກກະສິກຳ ແລະປ່າໄມ້ແຂວງຄື: ແຂວງເຊກອງ, ແຂວງຈຳປາສັກ ແລະນະຄອນຫຼວງເຊິ່ງໄດ້ຈັດຂຶ້ນໃນລະຫວ່າງວັນທີ 6-10 ມັງກອນ 2025 ທີ່ແຂວງສະຫວັນນະເຂດ

# ເພີ່ມທະວີການນຳພາຂອງພັກຕໍ່ການກໍ່ສ້າງຖັນແຖວສະມາຊິກພັກ ຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ

ຂຽນໂດຍ: ນ. ເພັດສະດີ ຄັນທະວົງ

ເພີ່ມທະວີການນຳພາຂອງພັກຕໍ່ການກໍ່ສ້າງຖັນແຖວສະມາຊິກພັກແມ່ນມີຄວາມສຳຄັນທີ່ສຸດໃນໄລຍະທີ່ປະເທດຊາດຂອງພວກເຮົາພວມສ້າງບັນດາປະຖົມປັດໄຈໃຫ້ແກ່ການຫັນເປັນອຸດສາຫະກຳ ແລະທັນສະໄໝເທື່ອລະກ້າວ ເພື່ອບັນລຸຈຸດໝາຍດັ່ງກ່າວນັ້ນ, ການຂະຫຍາຍພັກ, ການສຶກສາອົບຮົມການເມືອງ-ແນວຄິດ, ການກວດກາ, ການຄຸ້ມຄອງ, ການເລືອກເຟັ້ນ, ຈັດວາງ, ສັບຊ້ອນ, ບຳລຸງສ້າງຍົກລະດັບຄວາມຮູ້ຂອງຖັນແຖວສະມາຊິກພັກເປັນປັດໄຈສຳຄັນທີ່ຮັບປະກັນຕໍ່ຜົນສຳເລັດໃນທຸກໜ້າທີ່ວຽກງານທີ່ພັກ-ລັດວາງອອກໃນແຕ່ລະໄລຍະ. ສະນັ້ນ, ຈຶ່ງຮຽກຮ້ອງໃຫ້ຄະນະພັກແຕ່ລະຂັ້ນເພີ່ມທະວີການນຳພາຂອງຂອງຕົນຕໍ່ການກໍ່ສ້າງຖັນແຖວສະມາຊິກພັກໃຫ້ສົມຄູ່ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນແຕ່ລະໄລຍະ. ທ່ານ ເລນິນ ເວົ້າວ່າ: "ການປັບປຸງຍົກສູງຄຸນນະພາບຂອງສະມາຊິກພັກ ບົນພື້ນຖານແມ່ນປັບປຸງ 3 ລັກສະນະໃຫ້ດີຄື: ລັກສະນະນຳໜ້າ, ລັກສະນະຕໍ່ສູ້ ແລະລັກສະນະສຶກສາອົບຮົມ"[1]. ເພີ່ມທະວີການນຳຂອງພັກຕໍ່ການກໍ່ສ້າງຖັນແຖວສະມາຊິກພັກແມ່ນການເຝິກຝົນຫຼໍ່ຫຼອມຄຸນສົມບັດ, ທັດສະນະທາດແທ້ແນວຄິດຫຼັກໝັ້ນປະຕິວັດຂອງຊົນຊັ້ນກຳມະກອນ-ຊາວຜູ້ອອກແຮງງານລາວບັນດາເຜົ່າທີ່ຮັກຊາດ, ຮ່ຳຮຽນຍົກລະດັບຄວາມຮູ້ວິທະຍາສາດທຳມະຊາດ ແລະວິທະຍາສາດສັງຄົມໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ ເປັນຕົ້ນແມ່ນການຍົກລະດັບຄວາມຮູ້ທາງດ້ານແນວຄິດທິດສະດີທີ່ເປັນວິທະຍາສາດຂອງລັດທິມາກ-ເລນິນ ແລະແນວທາງ, ແຜນນະໂຍບາຍຂອງພັກ, ນະໂຍບາຍ, ກົດໝາຍ ແລະລະບຽບຂອງລັດ ເພື່ອຜັນຂະຫຍາຍເຂົ້າໃນການນຳພາ-ຊີ້ນຳເຂົ້າສູ່ຊີວິດຕົວຈິງໃນແຕ່ລະຂົງເຂດວຽກງານໃຫ້ປາກົດຜົນເປັນຈິງ.

ໃນໄລຍະຜ່ານມາ ຄະນະພັກ-ຄະນະອຳນວຍການສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ໄດ້ເອົາໃຈໃສ່ຕໍ່ການກໍ່ສ້າງຖັນແຖວສະມາຊິກພັກ ດ້ວຍການພັດທະນາ ແລະຍົກສູງຢ່າງຮອບດ້ານ, ຮັກສາໄດ້ຄວາມສາມັກຄີເປັນເອກະພາບພາຍໃນພັກ ແລະມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງຂອງຕົນ ທັງເປັນແບບຢ່າງໜ້ານຳໃນການເຄົາລົບ ແລະປະຕິບັດຕາມຂໍ້ກຳນົດກົດລະບຽບຂອງພັກ ແລະກົດໝາຍຂອງລັດ. ພ້ອມກັນນັ້ນ, ກໍໄດ້ແກ້ໄຂປາກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນຖັນແຖວສະມາຊິກພັກຈຳນວນໜຶ່ງ ແລະຕີຖອຍໄດ້ສະພາບແນວຄິດ-ການກະທຳທີ່ບໍ່ຖືກຕ້ອງ; ສ້າງໃຫ້ມີຄວາມສາມັກຄີປອງດອງເປັນປຶກແຜ່ນ, ຊີວິດການເປັນຢູ່ທາງດ້ານວັດຖຸ ແລະຈິດໃຈໄດ້ຮັບການປັບປຸງຍົກສູງຂຶ້ນເປັນກ້າວໆ; ຖັນແຖວສະມາຊິກພັກ ໄດ້ຮັບການກໍ່ສ້າງ-ບຳລຸງ

---

[1] ວະລາດີເມຍ ອີລິດ ເລນິນ ນິພົນເລືອກເຟັ້ນ, ເຫຼັ້ມ I ໂຮງພິມຈຳໜ່າຍແຫ່ງຊາດ, ຮ່າໂນ້ຍ (ພາສາລາວ), ປີ 2010, ໜ້າ 285.

ໃນຂະບວນການວຽກງານຕົວຈິງ ສະແດງໃຫ້ເຫັນເຖິງຄຸນນະພາບແຫ່ງການກໍ່ສ້າງຖັນແຖວສະມາຊິກພັກຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດໄດ້ເປັນຢ່າງດີ. ຄຽງຄູ່ກັບຜົນສຳເລັດ, ກໍຍັງມີຂໍ້ຄົງຄ້າງຈຳນວນໜຶ່ງທີ່ຍັງບໍ່ທັນສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການໜ້າທີ່ການເມືອງຂອງພັກໃນໄລຍະໃໝ່ເຊັ່ນ: ການເຊື່ອມຊຶມນິຕິກຳຂອງຂັ້ນເທິງ ກ່ຽວກັບການຍົກສູງຄຸນນະພາບຖັນແຖວສະມາຊິກພັກບໍ່ທັນເລິກເຊິ່ງ-ທົ່ວເຖິງ; ບາງສະຫາຍໃນຄະນະພັກ ຍັງບໍ່ທັນໄດ້ເອົາໃຈໃສ່ນຳພາ-ຊີ້ນຳຍົກສູງຄຸນນະພາບຖັນແຖວສະມາຊິກພັກຢ່າງເປັນປະຈຳ; ການສ້າງແຜນກຳນົດ ເພື່ອສົ່ງສະມາຊິກພັກໄປຍົກລະດັບບໍ່ທັນຕໍ່ເນື່ອງ, ການປະຕິບັດບາງຄັ້ງບໍ່ເຂັ້ມງວດ, ຍັງມີປາກົດການສົ່ງສະມາຊິກພັກໄປຍົກລະດັບບໍ່ຢູ່ໃນແຜນ; ການປະຕິບັດເນື້ອໃນ, ຮູບການ, ວິທີການຍົກສູງຄຸນນະພາບຖັນແຖວສະມາຊິກພັກບໍ່ທັນໄດ້ດີ. ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນ ແລະຮີບດ່ວນຕ້ອງໄດ້ເອົາໃຈໃສ່ຄົ້ນຄວ້າຊອກຫາເນື້ອໃນທິດສະດີໃຫ້ສອດຄ່ອງກັບທິດທາງ ແລະວິທີການແກ້ໄຂໃນຕໍ່ໜ້າ ແລະໝູນໃຊ້ເຂົ້າໃນການຈັດຕັ້ງປະຕິບັດໃນທຸກຂັ້ນທຸກຂະແໜງການ ແນໃສ່ເຮັດໃຫ້ການກໍ່ສ້າງຖັນແຖວສະມາຊິກພັກຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດມີປະສິດທິພາບ ແລະມີປະສິດທິຜົນສູງຂຶ້ນ.

ຄະນະພັກ, ຄະນະອຳນວຍການສະຖາບັນການເມືອງ ແລະການປົກຄອງແຫ່ງຊາດໄດ້ເອົາໃຈໃສ່ກໍ່ສ້າງຖັນແຖວສະມາຊິກພັກຢ່າງເປັນປົກກະຕິ ແລະຕໍ່ເນື່ອງ ໂດຍການຈັດຕັ້ງປະຕິບັດດ້ວຍຫຼາຍຮູບ ເຊິ່ງມີຜົນສຳເລັດໃນຫຼາຍດ້ານຄື:

- ນຳພາກໍ່ສ້າງທາງດ້ານການເມືອງ-ແນວຄິດ: ໃນໄລຍະຜ່ານມາ, ຄະນະພັກ-ຄະນະອຳນວຍການສະຖາບັນການເມືອງ ແລະການປົກຄອງແຫ່ງຊາດໄດ້ເອົາໃຈໃສ່ນຳພາປະຕິບັດບັນດາທິດທາງ, ຄາດໝາຍລວມ ແລະທິດທາງຄາດໝາຍກ່ຽວກັບວຽກງານການເມືອງ-ແນວຄິດທີ່ກອງປະຊຸມໃຫຍ່ສະມາຊິກພັກ ສະໄໝທີ V ອົງຄະນະພັກສະຖາບັນການເມືອງ ແລະການປົກຄອງແຫ່ງຊາດກຳນົດໄວ້ດ້ວຍການເຜີຍແຜ່ເຊື່ອມຊຶມແນວທາງ. ແຜນນະໂຍບາຍ, ມະຕິ, ຄຳສັ່ງ, ກົດລະບຽບພັກ, ກົດໝາຍຂອງລັດ ແລະນິຕິກຳຕ່າງໆຂອງສູນກາງພັກວາງອອກໃນແຕ່ລະໄລຍະ ເປັນຕົ້ນແມ່ນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX, ມະຕິກອງປະຊຸມວຽກງານຈັດຕັ້ງທົ່ວປະເທດຄັ້ງທີ XI, ສອງວາລະແຫ່ງຊາດ ແລະເອກະສານທີ່ສຳຄັນອື່ນໆຂອງຂັ້ນເທິງວາງອອກ ເຊິ່ງສາມາດຈັດຕັ້ງເຊື່ອມຊຶມເອກະສານຕ່າງໆທີ່ສຳຄັນຂອງພັກ-ລັດ "ໄດ້ທັງໝົດ 22 ຄັ້ງ, ມີ 40 ເອກະສານ, ມີຜູ້ເຂົ້າຮ່ວມທັງໝົດ 6.737 ເທື່ອຄົນ, ຍິງ 2.472 ເທື່ອຄົນ; ໃນນັ້ນ, ມີສະມາຊິກພັກທີ່ເປັນພະນັກງານ, ຄູ-ອາຈານ ຈຳນວນ 3.042 ເທື່ອຄົນ, ຍິງ 1.528 ເທື່ອຄົນ ແລະສະມາຊິກພັກນັກສຶກສາ ຈຳນວນ 3.695 ເທື່ອຄົນ, ຍິງ 944 ເທື່ອຄົນ"[1]; ພ້ອມທັງຊຸກຍູ້ໃຫ້ບັນດາໜ່ວຍພັກນັກສຶກສາ, ບັນດາກົມ, ຄະນະ ແລະສູນເອົາໃຈໃສ່ກຳແໜ້ນ ແລະສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກ

[1] ບົດສະຫຼຸບຕີລາຄາຜົນຂອງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ກາງສະໄໝ ຄັ້ງທີ V ຂອງອົງຄະນະພັກສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ (8/2020-2/2023), ໜ້າ 2.

ພັກ, ພະນັກງານ-ລັດຖະກອນ ແລະນັກສຶກສາທີ່ຂຶ້ນກັບຄວາມຮັບຜິດຊອບຢ່າງໃກ້ຊິດ ໂດຍຕິດພັນກັບການຮ່ວມຊີວິດພັກຂອງບັນດາໜ່ວຍພັກຢ່າງເປັນປົກກະຕິ.

- ນຳພາກໍ່ສ້າງທາງດ້ານຄຸນສົມບັດສິນທຳປະຕິວັດ: ຄະນະພັກ-ຄະນະອຳນວຍການສະຖາບັນ ຍາມໃດກໍຖືສຳຄັນການກຳແໜ້ນສະພາບແນວຄິດ ແລະດຳເນີນການອົບຮົມ, ນຳພາແນວຄິດໃຫ້ສະມາຊິກພັກ, ພະນັກງານຢ່າງເປັນປົກກະຕິ, ຕໍ່ເນື່ອງຜ່ານການສຶກສາອົບຮົມເຫັນວ່າສະມາຊິກພັກ, ພະນັກງານ-ລັດຖະກອນສ່ວນຫຼາຍມີຄວາມຮັບຮູ້-ເຂົ້າໃຈເປັນເອກະພາບສູງຕໍ່ແນວທາງ, ນະໂຍບາຍຂອງພັກ, ກົດໝາຍ ແລະລະບຽບຂອງລັດ, ສ້າງການເຫັນປ່ຽນດ້ານແນວຄິດ-ຈິນຕະນາການ, ມີຄວາມສະດຸ້ງໄວ ແລະຮູ້ປັບຕົວເຂົ້າໃນເງື່ອນໄຂສະພາບແວດລ້ອມໃໝ່, ຮູ້ປະຢັດມັດທະຍັດ, ຮັກສາໄດ້ຄຸນທາດການເມືອງອັນໜັກແໜ້ນ, ມີຄຸນສົມບັດສິນ ທຳປະຕິວັດ ສະແດງອອກໃນປັດຈຸບັນພົບຄວາມຫຍຸ້ງຍາກທາງດ້ານສະພາບເສດຖະກິດ ກໍຄືໄພເງິນເຟີ້, ຄ່າຄອງຊີບທີ່ມີລາຄາແພງ, ແຕ່ສະມາຊິກພັກ-ພະນັກງານ ຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ກໍຍັງມີຄວາມອຸ່ນອຽນທຸ່ນທ່ຽງ, ມີສະຕິຕໍ່ການຈັດຕັ້ງ, ຕັ້ງໜ້າເຝິກຝົນຫຼໍ່ຫຼອມຕົນເອງ, ເຊື່ອໝັ້ນຕໍ່ການນຳພາ-ຊີ້ນຳຂອງຄະນະພັກ, ມີສະຕິລະວັງຕໍ່ກົນອຸບາຍມ້າງເພຂອງກຸ່ມຄົນບໍ່ຫວັງດີ, ເປັນເຈົ້າການຊ່ວຍເຈົ້າໜ້າທີ່ໃນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ, ເຄົາລົບ ແລະປະຕິບັດກົດລະບຽບພັກ, ຮັກສາໄດ້ຄວາມສາມັກຄີພາຍໃນຢ່າງໜັກແໜ້ນ, ເປັນເຈົ້າການໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງທີ່ໄດ້ຮັບການມອບໝາຍດ້ວຍຄວາມຮັບຜິດຊອບສູງ. ຜ່ານການປະຕິບັດວຽກງານໄດ້ຮັບຜົນສຳເລັດ ຈຶ່ງໄດ້ມີການປະເມີນຜົນຕີລາຄາ, ຍ້ອງຍໍຜູ້ທີ່ມີຜົນງານດີເດັ່ນດັ່ງນີ້: “ເປັນຄູ-ອາຈານດີເດັ່ນ ປະເພດ I ຈຳນວນ 109 ທ່ານ, ຍິງ 42 ທ່ານ, ປະເພດ II ຈຳນວນ 21 ທ່ານ, ຍິງ 8 ທ່ານ ແລະປະເພດ III ຈຳນວນ 3 ທ່ານ, ຍິງ 1 ທ່ານ; ພະນັກງານດີເດັ່ນປະເພດ I ຈຳນວນ 216 ທ່ານ, ຍິງ 82 ທ່ານ, ປະເພດ II ຈຳນວນ 133 ທ່ານ, ຍິງ 67 ທ່ານ ແລະປະເພດ III ຈຳນວນ 51 ທ່ານ, ຍິງ 30 ທ່ານ; ກົມກອງດີເດັ່ນປະເພດ I ຈຳນວນ 17 ກົມກອງ, ປະເພດ II ຈຳນວນ 17 ກົມກອງ ແລະປະເພດ III ຈຳນວນ 01 ກົມກອງ”(1).

- ນຳພາກໍ່ສ້າງທາງດ້ານຄວາມຮູ້-ຄວາມສາມາດ: ຄະນະພັກ-ຄະນະອຳນວຍການສະຖາບັນການເມືອງ ແລະການປົກຄອງແຫ່ງຊາດໄດ້ຖືສຳຄັນ ແລະເອົາໃຈໃສ່ໃນການນຳພາ-ຊີ້ນຳຕໍ່ກັບການກໍ່ສ້າງ, ບຳລຸງຍົກລະດັບໃຫ້ແກ່ສະມາຊິກພັກ, ພະນັກງານ-ລັດຖະກອນພາຍໃນສະຖາບັນ ດ້ວຍຮູບການຕ່າງໆ “ໃນໄລຍະ 5 (2021-2023) ໄດ້ສົ່ງພະນັກງານໄປກໍ່ສ້າງຢູ່ພາຍໃນປະເທດທັງໝົດ 7 ຄົນ, ຍິງ 5 ຄົນຄື: ລະບົບປະລິນຍາໂທ ຈຳນວນ 6 ຄົນ, ຍິງ 4 ຄົນ, ລະບົບປະລິນຍາຕີ ຈຳນວນ 1 ຄົນເປັນຍິງ; ສົ່ງໄປກໍ່ສ້າງຢູ່ຕ່າງປະເທດທັງໝົດ 11 ຄົນ, ຍິງ 6 ຄົນຄື: ລະບົບປະລິນຍາເອກ ຈຳນວນ 6 ຄົນ, ຍິງ 3 ຄົນ, ລະບົບປະລິນຍາໂທ ຈຳນວນ 5 ຄົນ, ຍິງ 4 ຄົນ; ສົ່ງພະນັກງານເຂົ້າບຳລຸງຕາມຫົວຂໍ້ຕ່າງໆຢູ່ພາຍໃນ ແລະ

(1) ບົດສະຫຼຸບຕີລາຄາຜົນຂອງການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ກາງສະໄໝ ຄັ້ງທີ V ຂອງອົງຄະນະພັກສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ (8/2020-2/2023), ໜ້າ 7.

ຕ່າງປະເທດຄື: ຢູ່ພາຍໃນປະເທດ ຈຳນວນ 2.689 ເທື່ອຄົນ, ຍິງ 245 ເທື່ອຄົນ; ຢູ່ຕ່າງປະເທດທັງໝົດ 118 ເທື່ອຄົນ, ຍິງ 45 ເທື່ອຄົນ. ພິເສດໄດ້ເອົາໃຈໃສ່ຢ່າງຕັ້ງໜ້າໃນການກໍ່ສ້າງ-ບຳລຸງຖັນແຖວຄູ-ອາຈານໜຸ່ມ ເພື່ອໃຫ້ມີປະສົບການ ແລະຄຸນນະພາບສູງຂຶ້ນກວ່າເກົ່າ. ປັດຈຸບັນເຫັນວ່າຄູ-ອາຈານໜຸ່ມສາມາດສິດສອນໄດ້ໃນທຸກລະບົບຮຽນ, ຈັດຕັ້ງການປະເມີນຜົນການສິດສອນຂອງຄູ-ອາຈານດ້ວຍການເຂົ້າຮ່ວມຊົ່ວໂມງສອນແລະມີການຖອດຖອນບົດຮຽນ ລະຫວ່າງອາຈານທີ່ມີຄວາມຊຳນານງານກັບອາຈານໜຸ່ມເປັນປົກກະຕິ.

- ນຳພາກໍ່ສ້າງທາງດ້ານແບບແຜນວິທີນຳພາ ແລະວິທີເຮັດວຽກ: ຄະນະພັກ, ຄະນະອຳນວຍການສະຖາບັນການເມືອງ ແລະການປົກຄອງໄດ້ເອົາໃຈໃສ່ນຳພາປັບປຸງການຈັດຕັ້ງພັກ ແລະແຜນວິທີເຮັດວຽກຂອງຄະນະພັກ, ຄະນະໜ່ວຍພັກ ຕາມຫຼັກການລວມສູນປະຊາທິປະໄຕຂອງພັກຢ່າງເຂັ້ມງວດ, ທຸກການເຄື່ອນໄຫວຂອງພັກໄດ້ຫັນເປັນແຜນງານ, ແຜນການຢ່າງລະອຽດໃນແຕ່ລະໄລຍະ, ໄດ້ກຳນົດວຽກໃຈກາງ, ຈຸດສຸມ ແລະວິທີການຈັດຕັ້ງປະຕິບັດແຕ່ລະວຽກຈະແຈ້ງ; ຄະນະປະຈຳພັກໄດ້ຖືສຳຄັນຕໍ່ການປັບປຸງຍົກສູງຄຸນນະພາບຂອງບັນດາໜ່ວຍພັກດ້ວຍການຈັດຕັ້ງ, ຊີ້ນຳຊຸກຍູ້ການກໍ່ສ້າງໜ່ວຍພັກປອດໃສ ເຂັ້ມແຂງໜັກແໜ້ນ ຕາມແຜນການຂອງແຕ່ລະໜ່ວຍພັກ; ມີການປະເມີນ ແລະຄັດເລືອກເປົ້າໝາຍຢ່າງລວມສູນເປັນເອກະພາບ ສະແດງອອກໃນປີ 2020 ມີໜ່ວຍພັກຮາກຖານທັງໝົດ 19 ໜ່ວຍພັກ, ຮັບຮອງເອົາແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໄດ້ 15 ໜ່ວຍພັກ. ຜ່ານກວດກາປະເມີນຜົນສາມາດຮັບຮອງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໄດ້ 14 ໜ່ວຍພັກ, ບໍ່ໄດ້ປະເມີນ ຈຳນວນ 1 ໜ່ວຍພັກ (ໜ່ວຍພັກນັກສຶກສາປະລິນຍາໂທ ຮຸ່ນທີ XIV) ຜົນຂອງການກວດກາປະເມີນຜົນຈັດປະເພດຄື: ປະເພດແຂງ ຈຳນວນ 6 ໜ່ວຍພັກ, ປະເພດກາງ ຈຳນວນ 8 ໜ່ວຍພັກ ແລະມີສະມາຊິກພັກແຂງ ຈຳນວນ 547 ສະຫາຍ, ຍິງ 158 ສະຫາຍ, ສະມາຊິກພັກກາງ ຈຳນວນ 6 ສະຫາຍ, ຍິງ 2 ສະຫາຍ. ປີ 2021 ໜ່ວຍພັກຮາກຖານທັງໝົດ 19 ໜ່ວຍພັກ, ຮັບຮອງເອົາແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໄດ້ 15 ໜ່ວຍພັກ. ຜ່ານກວດກາປະເມີນຜົນສາມາດຮັບຮອງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໄດ້ 15 ໜ່ວຍພັກ ເຊິ່ງຜົນຂອງການກວດກາຕີລາຄາຈັດແບ່ງປະເພດຄື: ປະເພດແຂງ ຈຳນວນ 6 ໜ່ວຍພັກ, ປະເພດກາງ ຈຳນວນ 7 ໜ່ວຍພັກ, ບໍ່ໄດ້ຈັດປະເພດ ຈຳນວນ 2 ໜ່ວຍພັກ (ໜ່ວຍພັກຮາກຖານຄະນະເສດຖະສາດການເມືອງ-ຄຸ້ມຄອງເສດຖະກິດ ແລະຄະນະລັດທິສັງຄົມນິຍົມວິທະຍາ; ໜ່ວຍພັກຮາກຖານປັດຊະຍາ ແລະກໍ່ສ້າງພັກ ແລະປະຫວັດສາດພັກ) ແລະມີສະມາຊິກພັກແຂງ ຈຳນວນ 593 ສະຫາຍ, ຍິງ 158 ສະຫາຍ, ສະມາຊິກພັກກາງ ຈຳນວນ 23 ສະຫາຍ, ຍິງ 6 ສະຫາຍ. ຜ່ານການຕິດຕາມ, ກວດກາເຫັນວ່າມີພະນັກງານຈຳນວນໜຶ່ງສວຍໃຊ້ໜ້າທີ່ວຽກງານໄປໃນທາງບໍ່ຖືກຕ້ອງຕາມລະບຽບຫຼັກການ, ໃນນັ້ນມີພະນັກງານ ຈຳນວນ 2 ຄົນ ຖືກເອົາອອກຈາກການເປັນລັດຖະກອນແຫ່ງ ສປປ ລາວ. ປີ 2022 ມີໜ່ວຍພັກຮາກຖານທັງໝົດ 16 ໜ່ວຍພັກ, ຮັບຮອງເອົາແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໄດ້ 13 ໜ່ວຍພັກ ຜ່ານກວດກາປະເມີນຜົນສາມາດຮັບຮອງໜ່ວຍພັກປອດໃສ, ເຂັ້ມ

ແຂງ, ໜັກແໜ້ນໄດ້ 13 ໜ່ວຍ ແລະຜົນຂອງການກວດກາປະເມີນຈັດປະເພດຄື: ປະເພດແຂງ ຈຳນວນ 4 ໜ່ວຍພັກ, ປະເພດກາງ ຈຳນວນ 9 ໜ່ວຍພັກ ແລະມີສະມາຊິກພັກແຂງ ຈຳນວນ 470 ສະຫາຍ, ຍິງ 146 ສະຫາຍ, ສະມາຊິກພັກກາງ ຈຳນວນ 12 ສະຫາຍ, ຍິງ 4 ສະຫາຍ, ບໍ່ໄດ້ປະເມີນ ຈຳນວນ 30 ສະຫາຍ, ຍິງ 19 ສະຫາຍ (ເນື່ອງຈາກເປັນສະມາຊິກພັກສຳຮອງ ແລະບໍ່ຄົບເງື່ອນໄຂ). ປີ 2023 ມີໜ່ວຍພັກຮາກຖານທັງໝົດ 17 ໜ່ວຍພັກ, ຮັບຮອງເອົາແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໄດ້ 13 ໜ່ວຍ ຜ່ານກວດກາປະເມີນຜົນສາມາດຮັບຮອງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໄດ້ 13 ໜ່ວຍພັກ ເຊິ່ງຜົນຂອງການກວດກາປະເມີນຜົນສາມາດຈັດປະເພດຄື: ປະເພດແຂງ ຈຳນວນ 8 ໜ່ວຍ, ປະເພດກາງ ຈຳນວນ 5 ໜ່ວຍ ແລະມີສະມາຊິກພັກແຂງ ຈຳນວນ 386 ສະຫາຍ, ຍິງ 128 ສະຫາຍ, ສະມາຊິກພັກກາງ ຈຳນວນ 4 ສະຫາຍ, ຍິງ 1 ສະຫາຍ; ບໍ່ໄດ້ສ້າງແຜນການ ຈຳນວນ 4 ໜ່ວຍ, ສະມາຊິກພັກບໍ່ໄດ້ປະເມີນ ຈຳນວນ 383 ສະຫາຍ, ຍິງ 121 ສະຫາຍ (ໜ່ວຍພັກ ແລະສະມາຊິກພັກບຳນານ, ນັກສຶກສາຮຽນໄລຍະສັ້ນ ແລະສະມາຊິກພັກສຳຮອງ).

ຄະນະພັກໄດ້ຊີ້ນຳ ແລະມອບໃຫ້ອົງການຈັດຕັ້ງມະຫາຊົນເປັນຜູ້ກໍ່ສ້າງ, ຕິດຕາມ, ເລືອກເຟັ້ນເອົາພະນັກງານ-ລັດຖະກອນທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເພື່ອນຳສະເໜີໃຫ້ການຈັດຕັ້ງພັກພິຈາ ລະນາຮັບເຂົ້າເປັນສະມາຊິກພັກ ຕາມລະບຽບການ ແລະຂັ້ນຕອນປັດຈຸບັນທົ່ວສະຖາບັນ ມີໜ່ວຍຊາວໜຸ່ມທັງໝົດ 13 ຮາກຖານ, ມີສະມາຊິກຊາວໜຸ່ມທັງໝົດ 382 ສະຫາຍ, ຍິງ 149 ສະຫາຍ; ມີ ສະຫະພັນແມ່ຍິງຮາກຖານທັງໝົດ 14 ຮາກຖານ (ລວມທັງຮາກຖານເສດຖະກິດຄອບຄົວ), ມີສະມາຊິກທັງໝົດ 231 ສະຫາຍ; ກຳມະບານຮາກຖານທັງໝົດ 14 ຮາກຖານ, ມີສະມາຊິກທັງໝົດ 538 ສະຫາຍ, ຍິງ 190 ສະຫາຍ; ໃນນັ້ນ, ມີສະມາຊິກກຳມະບານທີ່ເປັນຄູ-ອາຈານ ຈຳນວນ 197 ສະຫາຍ, ຍິງ 87 ສະຫາຍ ເຊິ່ງໃນໄລຍະ 2 ປີເຄິ່ງຜ່ານມາສາມາດຂະຫຍາຍສະມາຊິກຂອງ 3 ອົງການຈັດຕັ້ງມະຫາຊົນເຂົ້າເປັນສະມາຊິກພັກໄດ້ຄື: ຂະຫຍາຍສະມາຊິກຊາວໜຸ່ມເຂົ້າເປັນສະມາຊິກພັກໄດ້ 49 ສະຫາຍ, ຍິງ 25 ສະຫາຍ; ຂະຫຍາຍສະມາຊິກແມ່ຍິງເຂົ້າເປັນສະມາຊິກພັກໄດ້ 25 ສະຫາຍ ແລະ ຂະຫຍາຍສະມາຊິກກຳມະບານເຂົ້າເປັນສະມາຊິກພັກ ໄດ້ 49 ສະຫາຍ, ຍິງ 25 ສະຫາຍທັງໝົດນັ້ນກໍຍ້ອນອົງຄະນະພັກສະຖາບັນມີການນຳພາທີ່ແທດເຖິງຈຶ່ງເຮັດໃຫ້ບັນດາອົງການຈັດຕັ້ງມະຫາຊົນໄດ້ມີການສ້າງຂະບວນການຢ່າງຕັ້ງໜ້າຫ້າວຫັນສາມາດຂົນຂວາຍມະຫາຊົນເຂົ້າຮ່ວມຂະບວນການຕ່າງໆຂອງອົງການຈັດຕັ້ງມະຫາຊົນ ແລະຈັດຕັ້ງປະຕິບັດໜ້າທີ່ການເມືອງມີຜົນສຳເລັດຢ່າງຕໍ່ເນື່ອງ ສະແດງອອກປີ 2021-2022 ສາມາດປະກາດຮາກຖານແມ່ຍິງ 3 ດີໄດ້ 12 ຮາກຖານໃນ ຈຳນວນ 14 ຮາກຖານ, ຮາກຖານຊາວໜຸ່ມ 4 ບຸກໄດ້ 11 ຮາກຖານ ແລະກຳມະບານຮາກຖານ 5 ເປັນເຈົ້າໄດ້ 14 ຮາກຖານ. ໄດ້ຄົ້ນຄວ້າ, ສະເໜີແຕ່ງຕັ້ງຮອງຫົວໜ້າສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ ຈຳນວນ 2 ທ່ານ, ຍິງ 1 ທ່ານ; ຄົ້ນຄວ້າສະເໜີແຕ່ງຕັ້ງຫົວໜ້າກົມ ຈຳນວນ 6 ທ່ານ, ຍິງ 2 ທ່ານ; ຮອງຫົວໜ້າກົມ ຈຳນວນ 5 ທ່ານ, ຍິງ 1 ທ່ານ; ຫົວໜ້າພະແນກ ຈຳນວນ 8 ທ່ານ, ຍິງ 2 ທ່ານ; ຮອງຫົວໜ້າພະ

ແນກ ຈຳນວນ 10 ທ່ານ, ຍິງ 6 ທ່ານ. ບົນພື້ນຖານປັບປຸງກົງຈັກການຈັດຕັ້ງຈຶ່ງໄດ້ເຮັດໃຫ້ກົງຈັກການຈັດຕັ້ງຂອງສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດນັບມື້ເຂັ້ມແຂງ, ໜັກແໜ້ນ, ເຄື່ອນໄຫວເປັນລະບົບ ແລະມີແບບແຜນວິທີເຮັດວຽກທີ່ມີວິທະຍາສາດດີຂຶ້ນເປັນກ້າວໆ ແລະພະນັກງານ-ລັດຖະກອນກໍລ້ວນແລ້ວ ແຕ່ເປັນຜູ້ທີ່ມີຄວາມຮູ້, ຄວາມສາມາດ, ຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ວຽກງານທີ່ການຈັດຕັ້ງມອບໝາຍໃຫ້ໄດ້ດີສົມຄວນ.

ຄຽງຄູ່ກັບຈຸດດີ, ຜົນງານ ແລະດ້ານຕັ້ງໜ້າໃນການນຳພາຂອງພັກຕໍ່ການກໍ່ສ້າງຖັນແຖວສະມາຊິກພັກຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດກໍຍັງມີຂໍ້ຄົງຄ້າງຈຳນວນໜຶ່ງດັ່ງນີ້:

1). ຄະນະພັກ, ສະມາຊິກພັກ, ພະນັກງານ-ລັດຖະກອນຈຳນວນໜຶ່ງບໍ່ທັນເປັນເຈົ້າການຄົ້ນຄວ້າກຳແໜ້ນແນວທາງ, ນະໂຍບາຍ, ມະຕິ, ຄຳສັ່ງ, ຄຳແນະນຳຂອງພັກ, ຂອງຂັ້ນເທິງ; ບໍ່ຄິດຫງຳ, ບໍ່ສະແຫວງຫາຄວາມຮູ້ ແລະບົດຮຽນອັນໃໝ່ລໍຖ້າແຕ່ຄຳສັ່ງ.

2). ການຫັນປ່ຽນໃໝ່ດ້ານຈິນຕະນາການຂອງສະມາຊິກພັກ, ພະນັກງານ-ລັດຖະກອນຈຳນວນໜຶ່ງຍັງບໍ່ທັນແຂງແຮງ ແລະເລິກເຊິ່ງ ຍັງມີແນວຄິດອະນຸລັກສາເດີມ, ແບບແຜນວິທີເຮັດວຽກຍັງຄືເກົ່າ, ຄວາມເປັນເຈົ້າການໃນການຄົ້ນຄວ້າສະເໜີຄວາມຄິດຄວາມເຫັນ, ການປະຕິບັດພາລະບົດບາດເປັນເສນາທິການໃຫ້ຂັ້ນເທິງກ່ຽວກັບວຽກພັກ-ພະນັກງານບາງດ້ານຍັງບໍ່ທັນດີ ແລະເລິກເຊິ່ງເທົ່າທີ່ຄວນ.

3). ການຫັນແນວທາງ, ນະໂຍບາຍຂອງພັກ-ລັດມາເປັນແຜນການ, ໂຄງການເຖິງວ່າເຮັດຫຼາຍສົມຄວນ ແຕ່ການຕິດຕາມ, ສະຫຼຸບສັງລວມບັນດາໂຄງການທີ່ສຳເລັດຍັງເຮັດບໍ່ທັນໄດ້ດີ; ກໍ່ສ້າງ-ບຳລຸງພະນັກງານເຖິງວ່າໄດ້ອົບຮົມຫຼາຍ ແຕ່ຄຸນນະພາບຍັງຈຳກັດ.

4). ການກະຕຸກຊຸກຍູ້ດ້ານການປະຕິບັດນະໂຍບາຍຕໍ່ການສ້າງຖັນແຖວສະມາຊິກພັກເຖິງວ່າໄດ້ເຮັດຫຼາຍ ແຕ່ໂດຍລວມເມື່ອທຽບໃສ່ເງື່ອນໄຂ ແລະສະພາບແວດລ້ອມປັດຈຸບັນເຫັນວ່າການແກ້ໄຂນະໂຍບາຍທາງດ້ານວັດຖຸຍັງພົບຄວາມຫຍຸ້ງຍາກ, ການປະຕິບັດນະໂຍບາຍທາງດ້ານຈິດໃຈບາງຄັ້ງຍັງບໍ່ທັນແທດເຖິງ ແລະເປັນປົກກະຕິ.

ເພື່ອແກ້ໄຂບັນຫາຕັ້ງຂຶ້ນຂ້າງເທິງນັ້ນ ຜູ້ຂຽນຂໍສະເໜີບາງວິທີໃນການເພີ່ມທະວີການນຳພາຂອງພັກຕໍ່ການກໍ່ສ້າງຖັນແຖວສະມາຊິກພັກ ຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດໃນຕໍ່ໜ້າດັ່ງນີ້:

ໜຶ່ງ, ເພີ່ມທະວີການນຳພາຂອງພັກດ້ານການສຶກສາອົບຮົມການເມືອງ-ແນວຄິດດ້ວຍການຈັດຕັ້ງເຊື່ອມຊຶມມະຕິ, ຄຳສັ່ງຂອງພັກ, ກົດໝາຍ ແລະລະບຽບຂອງລັດໃຫ້ສະມາຊິກພັກ, ພະນັກງານ-ລັດຖະ ກອນຢ່າງເລິກເຊິ່ງ ແລະເປັນປົກກະຕິ ທັງນຳພາຜັນຂະຫຍາຍໃຫ້ແທດເໝາະກັບຈຸດພິເສດ ແລະໜ້າທີ່ການເມືອງຂອງສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ; ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນຄະນະພັກແຕ່ລະຂັ້ນ; ປະຕິບັດການນຳພາຕາມຫຼັກການລວມສູນປະຊາທິປະໄຕ, ຍຶດໝັ້ນການກໍ່ສ້າງພັກ ຕາມ 5 ຫຼັກການ 3 ທິດນຳ; ໃນນັ້ນ, ຖືເອົາການຕິດຕາມ, ກວດກາ ແລະປະເມີນຜົນການປະຕິບັດເປັນວຽກງານໜຶ່ງທີ່ຕ້ອງເຮັດຢ່າງເປັນປົກກະຕິຂອງຄະນະພັກ.

ສອງ, ຕັ້ງໜ້າປັບປຸງກໍ່ສ້າງພັກ, ພະນັກ

ງານ ຕິດພັນກັບການສົ່ງເສີມດ້ານດີ, ແກ້ໄຂຈຸດອ່ອນ-ຂໍ້ຂາດຕົກບົກພ່ອງທີ່ເກີດຂຶ້ນໃນໄລຍະຜ່ານມາຢ່າງຕັ້ງໜ້າ, ໃນນັ້ນຕ້ອງຖືເອົາການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນເປັນວຽກງານຕົ້ນຕໍທີ່ຕ້ອງເຮັດ ໃຫ້ມີຄຸນນະພາບ, ເປັນປົກກະຕິ ແລະຕໍ່ເນື່ອງ.

ສາມ, ຄະນະພັກ, ຄະນະໜ່ວຍພັກ ຕ້ອງມີວິໄສທັດຍຸດທະສາດ ແລະມາດຕະການລະອຽດໃນການນຳພາ-ຊີ້ນຳວຽກງານທີ່ຕົນຮັບຜິດຊອບ, ຕ້ອງລົງເລິກກຳນົດແຈ້ງວຽກຈຸດສຸມ, ໂຄງການບູລິມະສິດ ເພື່ອສຸມໃສ່ຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ.

ສີ່, ຄະນະພັກ, ຄະນະໜ່ວຍພັກ ຕ້ອງຖືສຳຄັນການປະຕິບັດນະໂຍບາຍຕໍ່ການກໍ່ສ້າງຖັນແຖວພະນັກງານ, ສະມາຊິກພັກ; ຕ້ອງໄດ້ເອົາໃຈໃສ່ນຳພາ-ຊີ້ນຳການຈັດຕັ້ງປະຕິບັດຢ່າງສອດຄ່ອງ, ເປັນເອກະພາບ ແລະຖືກຕ້ອງຊັດເຈນ. ສ້າງນະໂຍບາຍທີ່ເປັນການກະຕຸ້ນໃຫ້ສະມາຊິກພັກຫ້າວຫັນ ໂດຍສະເພາະແມ່ນມີນະໂຍບາຍກະຕຸກຊຸກຍູ້ທາງດ້ານວັດຖຸ ແລະຈິດໃຈ ເພື່ອສ້າງເງື່ອນໄຂໃຫ້ສະມາຊິກພັກ, ພະນັກງານສາມາດຜ່ານຜ່າຄວາມຫຍຸ້ງຍາກ ແລະຊ່ວຍໃຫ້ການພັດທະນາຖັນແຖວກຳລັງແຮງຂອງພັກເຂັ້ມແຂງ.

ຫ້າ, ຖືສຳຄັນໃນການສ້າງ ແລະຮັບປະກັນໃຫ້ສະມາຊິກພັກ, ພະນັກງານມີຄວາມສາມັກຄີເປັນປຶກແຜ່ນ, ມີຄວາມເປັນເອກະພາບຕໍ່ແນວທາງ ແລະການນຳພາຂອງຄະນະພັກ; ເອົາໃຈໃສ່ເສີມຂະຫຍາຍມູນເຊື້ອອັນດີງາມຂອງຄະນະພັກ ແລະຈັນຍາບັນຂອງສະມາຊິກພັກ, ພະນັກງານປັນຜູ້ຊື່ສັດ, ຈົງຮັກພັກດີສະເໝີຕົ້ນສະເໝີປາຍຕໍ່ພັກ, ພົບຄວາມຫຍຸ້ງຍາກ, ລຳບາກ ບໍ່ຈົ່ມວ່າ, ບໍ່ທໍ້ຖອຍ.

ສັງລວມແລ້ວ, ເພີ່ມທະວີການນຳພາຂອງພັກຕໍ່ການກໍ່ສ້າງຖັນແຖວສະມາຊິກພັກຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດແມ່ນຄວາມຈຳເປັນພາວະວິໄສ ແລະສຳຄັນທີ່ສຸດ ໂດຍສະເພາະແມ່ນເງື່ອນໄຂທີ່ປະເທດເຮົາສືບຕໍ່ຈັດຕັ້ງປະຕິບັດສອງໜ້າທີ່ຍຸດທະສາດຄື: ປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດເວົ້າລວມ, ເວົ້າສະເພາະແມ່ນແນໃສ່ກໍ່ສ້າງຖັນແຖວສະມາຊິກພັກຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດໃຫ້ມີຄວາມເຊື່ອໝັ້ນຕໍ່ອຸດົມການສັງຄົມນິຍົມຢ່າງໜັກແໜ້ນ, ມີຫຼັກໝັ້ນມິດ-ສັດຕູຢ່າງຈະແຈ້ງ, ມີຄວາມຮູ້ອັນເລິກເຊິ່ງກ່ຽວກັບທິດສະດີມາກ-ເລນິນ, ແນວຄິດໄກສອນ ພົມວິຫານ ແລະແນວທາງ, ແຜນນະໂຍບາຍຂອງພັກ; ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ; ເຄົາລົບ ແລະປະຕິບັດກົດລະບຽບຂອງພັກ, ກົດໝາຍ ແລະລະບຽບການຕ່າງໆຂອງລັດຢ່າງເຂັ້ມງວດ, ມີນ້ຳໃຈເສຍສະລະເພື່ອຊາດ ເພື່ອປະຊາຊົນຢ່າງແທ້ຈິງ, ມີຄວາມດຸໝັ່ນພາກພຽນ, ຊື່ສັດ, ປະຢັດ ແລະປອດໃສ, ມີລະບຽບວິໄນ ແລະເຄົາລົບກົດໝາຍ, ມີຄວາມສາມັກຄີເອື້ອຍເຟື້ອເພື່ອແຜ່, ມີນ້ຳໃຈຮັກຊາດອັນດູດດື່ມ, ມີຄວາມສຸພາບຮຽບຮ້ອຍ ແລະເຮັດແທ້ທຳຈິງ, ມີຄວາມບຸກບືນຄົ້ນຄວ້າຮ່ຳຮຽນ ແລະພັດທະນາຕົນເອງຢູ່ເລື້ອຍໆ. ພ້ອມດຽວກັນນັ້ນ, ຍັງເປັນການສ່ອງແສງໃຫ້ເຫັນຄວາມຮັບຜິດຊອບ ແລະການປະຕິບັດສິດ, ໜ້າທີ່ການເມືອງຂອງສະມາຊິກພັກ ໂດຍສະເພາະສະມາຊິກພັກຜູ້ເປັນຫຼັກແຫຼ່ງແກ່ນສານ, ມີຄວາມສຳຄັນເຮັດໃຫ້ມີບຸກຄະລາກອນຜູ້ທີ່ມີຄວາມຮູ້, ຄວາມສາມາດທີ່ປອດ ໃສ, ເຂັ້ມແຂງ, ໜັກແໜ້ນ.

# ການໝູນໃຊ້ກົດເກນປະລິມານ ແລະຄຸນນະພາບ ເຂົ້າໃນການກໍ່ສ້າງ-ບຳລຸງພະນັກງານ ຢູ່ສະພາແຫ່ງຊາດ

ຂຽນໂດຍ: ນ. ສຸກກະເສີມ ຄຳວິໄຊ

ການດຳເນີນພາລະກິດປ່ຽນແປງໃໝ່ຮອບດ້ານ ແລະມີຫຼັກການຂອງພັກພວກເຮົາໄດ້ຖືເອົາການພັດທະນາຊັບພະຍາກອນມະນຸດ ເປັນບັນຫາສຳຄັນຕໍ່ການຈັດຕັ້ງປະຕິບັດແນວທາງການເມືອງຂອງພັກ ແລະແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໂດຍສະເພາະແມ່ນປັດໄຈຄວາມຮູ້, ຄວາມສາມາດ, ຄຸນທາດການເມືອງ, ຄຸນສົມສົມບັດສິນທຳປະຕິບັດ ໄດ້ຖືເປັນບັນຫາສຳຄັນ ແລະຈຳເປັນຂອງພະນັກງານ, ປະທານ ໄກສອນ ພົມວິຫານ ໄດ້ກ່າວໄວ້ວ່າ: "ແນວທາງແຜນນະໂຍບາຍ ແລະນະໂຍບາຍຂອງພັກ ຈະຖືກຕ້ອງປານໃດກໍດີ ຖ້າພະນັກງານ-ສະມາຊິກພັກຫາກຂາດຄວາມຮູ້, ຄວາມສາມາດໃນດ້ານຕ່າງໆ ເພື່ອນຳພາ ແລະຈັດຕັ້ງປະຕິບັດແລ້ວແນວທາງ, ນະໂຍບາຍ ດັ່ງກ່າວກໍຈະດີພຽງແຕ່ຢູ່ໜ້າເຈ້ຍເທົ່ານັ້ນ"[1]. ໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ ກໍໄດ້ກຳນົດຢ່າງຈະແຈ້ງວ່າ: "ພັດທະນາຊັບພະຍາກອນມະນຸດມີຄຸນນະພາບສູງຂຶ້ນທີ່ສາມາດຕອບສະໜອງຄວາມຕ້ອງການຂອງການພັດທະນາ, ມີຄວາມສາມາດຄົ້ນຄວ້າ ແລະນຳໃຊ້ວິທະຍາສາດ-ເຕັກໂນໂລຊີ ເພື່ອຍົກສູງປະສິດທິພາບ ແລະສ້າງມູນຄ່າເພີ່ມການຜະລິດ ແລະການບໍລິການ"[2]. ສະນັ້ນ, ການກໍ່ສ້າງ-ບຳລຸງພະນັກງານ ດ້ວຍໝູນໃຊ້ກົດເກນປະລິມານ ແລະຄຸນນະພາບຂອງວິທີສັດຈະວິພາກວັດຖຸນິຍົມຈະຊ່ວຍໃຫ້ພວກເຮົາຮູ້ຈັກໄຈ້ແຍກເຖິງສາຍພົວພັນສັດຈະວິພາກ ລະຫວ່າງປະລິມານ ແລະຄຸນນະພາບຂອງການກໍ່ສ້າງ-ບຳລຸງຖັນແຖວພະນັກງານໃຫ້ມີຄວາມສົມດຸນ, ເໝາະສົມ ແລະສອດຄ່ອງກັບຄວາມຕ້ອງການໃນການພັດທະນາປະເທດຊາດ ແລະສັງຄົມ, ສ້າງໃຫ້ໄດ້ຖັນແຖວພະນັກງານມີຄວາມສົມດຸນກັນລະຫວ່າງແຕ່ລະປະເພດ, ແຕ່ລະຮຸ່ນຂອງພະນັກງານ ແລະມີຄວາມຮູ້ທີ່ເປັນລະບົບຄົບຊຸດນັບທັງຄວາມຮູ້, ຄວາມສາມາດທາງດ້ານທິດສະດີການເມືອງ, ວິຊາສະເພາະ ແລະພາສາຕ່າງປະເທດ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃຫ້ເຕີບໃຫຍ່ເຂັ້ມແຂງ ແລະໝັ້ນທ່ຽງ ພ້ອມທັງປະກອບສ່ວນສຳຄັນເຂົ້າໃນການສ້າງບັນດາປະຖົມປັດໄຈກ້າວຂຶ້ນສັງຄົມນິຍົມຕາມແນວທາງຂອງພັກ, ນະໂຍບາຍຂອງລັດວາງອອກ.

ກົດເກນປະລິມານ ແລະຄຸນນະພາບແມ່ນພາກສ່ວນໜຶ່ງຂອງວິທີສັດຈະວິພາກວັດຖຸນິຍົມ. ປະລິມານແມ່ນມາດຕະເກນໜຶ່ງຂອງ

[1] ໄກສອນ ພົມວິຫານ ນິພົນເລືອກເຟັ້ນ III, ປີ 1997, ໜ້າ 359.

[2] ເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນ ປະຕິບັດລາວ, ປີ 2021, ໜ້າ 193.

ປັດຊະຍາຊີ້ບອກເຖິງລັກສະນະຈຳເພາະທີ່ມີມາແຕ່ດັ້ງເດີມຂອງສິ່ງວັດຖຸ ແລະປາກົດການທີ່ໄດ້ສະແດງອອກເປັນຈຳນວນ, ຂະໜາດ, ລະດັບ, ຈັງຫວະຂອງການເຄື່ອນເໜັງ ແລະການຂະຫຍາຍຕົວຂອງສິ່ງວັດຖຸ ແລະປາກົດການ; ຄຸນນະພາບແມ່ນໃຊ້ຊີ້ບອກບັນດາລັກສະນະພິເສດພາວະວິໄສທີ່ມີມາແຕ່ເດີມຂອງວັດຖຸ ແລະສັງລວມບັນດາລັກສະນະຈຳເພາະ ເພື່ອຈຳແນກສິ່ງວັດຖຸນີ້ກັບສິ່ງວັດຖຸອື່ນ, ມັນຊີ້ບອກລັກສະນະດີເລີດ ຫຼື ດີເດັ່ນຂອງວັດຖຸ ແລະວຽກງານໃດໜຶ່ງ.

ໂດຍເຫັນໄດ້ຄວາມສຳຄັນ ແລະຄວາມຈຳເປັນຂອງການໝູນໃຊ້ກົດເກນປະລິມານ ແລະຄຸນນະພາບເຂົ້າໃນການກໍ່ສ້າງ-ບຳລຸງພະນັກງານ ໃນໄລຍະຜ່ານມາ, ຄະນະພັກ, ຄະນະນຳສະພາແຫ່ງຊາດ ໄດ້ເອົາໃຈໃສ່ໝູນໃຊ້ກົດເກນປະລິມານ ແລະຄຸນນະພາບເຂົ້າໃນການກໍ່ສ້າງ-ບຳລຸງພະນັກງານສາມາດຕອບສະໜອງຄວາມຕ້ອງການຂອງໜ້າທີ່ການເມືອງໄດ້ດີສົມຄວນ ເປັນຕົ້ນແມ່ນໄດ້ກໍ່ສ້າງ-ບຳລຸງພະນັກງານທາງດ້ານທິດສະດີ ແລະວິຊາສະເພາະໄລຍະສັ້ນ ແລະໄລຍະຍາວ, ທັງເອົາພະນັກງານລົງກໍ່ສ້າງ ຢູ່ຂັ້ນຮາກຖານ ແລະສ້າງຢູ່ໃນຂະບວນການວຽກງານຕົວຈິງ ເຊິ່ງເຫັນໄດ້ວ່າມີຖັນແຖວພະນັກງານປະກອບສ່ວນເຂົ້າໃນໜ້າທີ່ວຽກງານການເມືອງໃນທຸກຂົງເຂດທີ່ວສະພາແຫ່ງຊາດ ເຊິ່ງຮັບປະກັນທາງດ້ານປະລິມານ ແລະຄຸນນະພາບ ເຮັດໃຫ້ພະນັກງານ-ລັດຖະກອນມີຄວາມຮູ້, ຄວາມສາມາດ ແລະຄຸນທາດການເມືອງໜັກແໜ້ນ, ມີຄວາມຊື່ສັດບໍລິສຸດ, ມີຄວາມບຸກບືນສູ້ຊົນເຝິກຝົນຫຼໍ່ຫຼອມຕົນເອງໃຫ້ກາຍເປັນຜູ້ທີ່ມີຄວາມຮູ້, ຄວາມສາມາດ ແລະປະຕິບັດໜ້າທີ່ແບບມືອາຊີບຕາມທິດທັນເປັນຄຸນນະພາບ, ມີຈຸດສຸມ, ເສີມຂະຫຍາຍປັດໄຈ, ທ່າແຮງບົ່ມຊ້ອນຂອງສະພາແຫ່ງຊາດ ເຮັດໃຫ້ການພັດທະນາເສດຖະກິດ, ການເມືອງ, ວັດທະນະທຳສັງຄົມໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ຕາມພາລະບົດບາດຂອງສະພາແຫ່ງຊາດຖືວ່າ: "ແມ່ນອົງການຕົວແທນແຫ່ງສິດ ແລະຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ, ເປັນອົງການສູງສຸດແຫ່ງອຳນາດລັດ ແລະເປັນອົງການນິຕິບັນຍັດ, ມີພາລະບົດບາດຮັບຮອງເອົາລັດຖະທຳມະນູນ ແລະກົດໝາຍ, ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະຕິດຕາມ, ກວດກາການເຄົາລົບປະຕິບັດລັດຖະທຳມະນູນ, ກົດໝາຍຂອງບັນດາອົງການລັດ"(1). ສະພາແຫ່ງຊາດ "ປະກອບມີກົງຈັກຄື: 9 ກຳມາທິການ, 1 ຄະນະເລຂາທິການສະພາແຫ່ງຊາດ, 1 ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, 25 ກົມ, 2 ສູນ ແລະ 1 ຫ້ອງການຫຼຸບເທົ່າກົມ, 67 ພະແນກ; ມີພະນັກງານ-ລັດຖະກອນທັງໝົດ 445 ທ່ານ, ຍິງ 174 ທ່ານ; ໃນນັ້ນ, ມີພະນັກງານຂັ້ນການນຳ ຈຳນວນ 38 ທ່ານ, ຍິງ 6 ທ່ານ, ຫົວໜ້າກົມ ຈຳນວນ 26 ທ່ານ, ຍິງ 5 ທ່ານ, ຮອງຫົວໜ້າກົມ ຈຳນວນ 41 ທ່ານ, ຍິງ 17 ທ່ານ, ຫົວໜ້າພະແນກ ຈຳນວນ 67 ທ່ານ, ຍິງ 30 ທ່ານ, ວ່າການຫົວໜ້າພະແນກ ຈຳນວນ 2 ທ່ານ, ຮອງຫົວໜ້າພະແນກ ຈຳນວນ 76 ທ່ານ, ຍິງ 45 ທ່ານ, ລັດຖະກອນວິຊາການ ຈຳນວນ

(1) ລັດຖະທຳມະນູນແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊາຊົນລາວ ມາດຕາ 52 ສະບັບປັບປຸງ ປີ 2015 ເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015.

195 ທ່ານ, ຍິງ 71 ທ່ານ”[1].

ໃນໄລຍະ 1 ປີທີ່ຜ່ານມາ, ຄະນະບໍລິຫານງານພັກສະພາແຫ່ງຊາດໄດ້ເອົາໃຈໃສ່ນຳພາ-ຊີ້ນຳ ບັນດາຮາກຖານພັກ, ສະມາຊິກພັກ, ພະນັກງານພາຍໃນສະພາແຫ່ງຊາດສຸມໃສ່ຈັດຕັ້ງປະຕິບັດກໍ່ສ້າງ ແລະບຳລຸງພະນັກງານຢູ່ສະພາແຫ່ງຊາດໄດ້ຮັບຜົນສຳເລັດດັ່ງນີ້:

ວຽກງານກໍ່ສ້າງ-ບຳລຸງພະນັກງານ: ສະພາແຫ່ງຊາດໄດ້ປະສານສົມທົບກັບພາກສ່ວນກ່ຽວຂ້ອງຄົ້ນຄວ້າ ແລະກໍ່ສ້າງພະນັກງານຫຼັກແຫຼ່ງທາງດ້ານທິດສະດີວິຊາສະເພາະຢູ່ພາຍໃນ ແລະຕ່າງປະເທດຄື:

- “ການກໍ່ສ້າງ-ບຳລຸງຍົກລະດັບພະນັກງານທາງດ້ານວິຊາສະເພາະ ແລະດ້ານທິດສະດີຢູ່ພາຍໃນປະເທດ: ສົ່ງໄປຍົກລະດັບດ້ານວິຊາສະເພາະທັງໝົດ 8 ທ່ານ, ຍິງ 2 ທ່ານ; ໃນນີ້, ລະບົບປະລິນຍາໂທ ຈຳນວນ 2 ທ່ານ, ຍິງ 1 ທ່ານ, ປະລິນຍາຕີ ຈຳນວນ 6 ທ່ານ, ຍິງ 1 ທ່ານ; ນອກນັ້ນ, ກໍສົ່ງໄປບຳລຸງພາສາອັງກິດ ຈຳນວນ 2 ທ່ານ, ຍິງ 1 ທ່ານ. ສົ່ງໄປຍົກລະດັບດ້ານທິດສະດີການເມືອງຄື: ຂັ້ນສູງ ລະບົບ 9 ເດືອນ 4 ທ່ານ, ຍິງ 2 ທ່ານ, ລະບົບຂັ້ນກາງ ລະບົບ 6 ເດືອນ ຈຳນວນ 2 ທ່ານ, ຍິງ 1 ທ່ານ, ເປີດຮຽນ-ເປີດສອນຂັ້ນຕົ້ນລະບົບ 3 ເດືອນໃຫ້ສະມາຊິກພັກ, ພະນັກງານຫຼັກແຫຼ່ງຂອງສະພາແຫ່ງຊາດໄດ້ 1 ຊຸດ ຈຳນວນ 45 ທ່ານ, ຍິງ 23 ທ່ານ.

- ການກໍ່ສ້າງ-ບຳລຸງຍົກລະດັບພະນັກງານທາງດ້ານວິຊາສະເພາະ ແລະດ້ານທິດສະດີຢູ່ຕ່າງປະເທດ: ສົ່ງໄປຍົກລະດັບດ້ານວິຊາສະເພາະທັງໝົດ 4 ທ່ານ, ຍິງ 2 ທ່ານ; ໃນນັ້ນ, ລະບົບປະລິນຍາເອກ ຈຳນວນ 1 ທ່ານ, ປະລິນຍາໂທ ຈຳນວນ 3 ທ່ານ, ຍິງ 2 ທ່ານ; ສົ່ງພະນັກງານໄປເຝິກອົບຮົມພາສາຫວຽດນາມ ລະບົບ 6 ເດືອນ ຈຳນວນ 12 ທ່ານ, ຍິງ 6 ທ່ານ; ສົ່ງໄປຍົກລະດັບທິດສະດີການເມືອງຢູ່ ສປ. ຈີນຂັ້ນສູງ ລະບົບ 4 ເດືອນ 2 ທ່ານ, ຍິງ 1 ທ່ານ. ນອກຈາກນີ້, ກໍຍັງມີລັດຖະກອນທີ່ສຳເລັດການສຶກສາຈາກຕ່າງປະເທດ 30 ທ່ານ, ຍິງ 2 ທ່ານ”[2]

ຈາກຜົນສຳເລັດຂອງການໝູນໃຊ້ກົດເກນປະລິມານ ແລະຄຸນນະພາບເຂົ້າໃນການກໍ່ສ້າງ-ບຳລຸງພະນັກງານຢູ່ສະພາແຫ່ງຊາດທີ່ໄດ້ສະເໜີມາຂ້າງເທິງນັ້ນ, ຊີ້ໃຫ້ເຫັນເຖິງບາດກ້າວສຳຄັນໃນການເຕີບໃຫຍ່ຂະຫຍາຍຕົວທາງດ້ານປະລິມານ ແລະຄຸນນະພາບຢ່າງຈະແຈ້ງ ເຊິ່ງເຫັນໄດ້ຈາກຈຳນວນພະນັກງານໄປຍົກລະດັບພາຍໃນໜຶ່ງປີແມ່ນມີລະດັບວຸດທິການສຶກສາກໍສູງຂຶ້ນຕາມລຳດັບ, ສ້າງໄດ້ພະນັກງານດີເດັ່ນ, ດຸໝັ່ນຫ້າວຫັນ, ກຳແໜ້ນທິດສະດີ-ພຶດຕິກຳ ແລະວິຊາສະເພາະ, ມີຫົວຄິດປະດິດສ້າງ, ມີຄວາມເສຍສະລະ ແລະອຸທິດຕົນເຂົ້າໃນການປະຕິບັດໜ້າທີ່ວຽກງານທີ່ການຈັດຕັ້ງມອບໝາຍໃຫ້ໄດ້ເປັນຢ່າງດີ ແລະມີທ່າອ່ຽງທ່າຂະຫຍາຍຕົວຕໍ່ເນື່ອງ; ໃນດ້ານຄຸນນະພາບໄດ້ສະແດງອອກໃຫ້ເຫັນວ່າພະນັກງານທີ່ຖືກນຳສົ່ງໄປກໍ່ສ້າງ-ບຳລຸງ ກໍລ້ວນແລ້ວ

[1] ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ-ພະນັກງານ ແລະວຽກງານປັບປຸງກົງຈັກການຈັດຕັ້ງພາຍໃນສະພາແຫ່ງຊາດໃນປີ 2023 ແລະທິດທາງແຜນການໃນປີ 2024 ສະບັບເລກທີ 01/ຄພ.ສພຊ, ລົງວັນທີ 04/01/2024.

[2] ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ-ພະນັກງານ ແລະວຽກງານປັບປຸງກົງຈັກການຈັດຕັ້ງພາຍໃນສະພາແຫ່ງຊາດໃນປີ 2023 ແລະທິດທາງແຜນການໃນປີ 2024 ສະບັບເລກທີ 01/ຄພ.ສພຊ, ລົງວັນທີ 04/01/2024.

ແຕ່ຖືກມອບໝາຍໃຫ້ໄປປະຕິບັດໜ້າທີ່ຢ່າງມີຜົນສຳເລັດເປັນຢ່າງດີ.

ການໝູນໃຊ້ກົດເກນປະລິມານ ແລະຄຸນນະພາບເຂົ້າໃນການກໍ່ສ້າງ ແລະບຳລຸງພະນັກງານຢູ່ສະພາແຫ່ງຊາດ ໃນໄລຍະຜ່ານມາກໍຍັງມີຂໍ້ຄົງຄ້າງຈຳນວນໜຶ່ງທີ່ຈະໄດ້ເອົາໃຈໃສ່ແກ້ໄຂດັ່ງນີ້:

1). ໝູນໃຊ້ກົດເກນປະລິມານ ແລະຄຸນນະພາບເຂົ້າໃນການກໍ່ສ້າງ-ບຳລຸງພະນັກງານຕິດພັນກັບການຂຶ້ນແຜນກຳນົດພະນັກງານ ເພື່ອກໍ່ສ້າງບຳລຸງຍັງບໍ່ທັນເປັນລະບົບ ແລະສອດຄ່ອງກັບສະພາບຄວາມເປັນຈິງເທົ່າທີ່ຄວນ ເປັນຕົ້ນແມ່ນການຂຶ້ນແຜນກຳນົດພະນັກງານເພື່ອກໍ່ສ້າງ-ບຳລຸງຍັງຊັກຊ້າບໍ່ທັນທັນເປັນແຜນອັນລະອຽດ ແລະຕິດແທດຕົວຈິງ; ສະນັ້ນ, ການຂຶ້ນແຜນກຳນົດພະນັກງານ ຍັງບໍ່ທັນໄປຕາມທິດນຳການທັນເປັນໜຸ່ມ ເພື່ອຮັບປະກັນໃຫ້ມີຖັນແຖວພະນັກງານທີ່ໜຸ່ມແໜ້ນໄວ້ຮອງຮັບພາ ລະກິດປະຕິວັດ ກໍຄືແບກຫາບວຽກງານຂອງການຈັດຕັ້ງໃນອະນາຄົດ.

2). ໝູນໃຊ້ກົດເກນປະລິມານ ແລະຄຸນນະພາບເຂົ້າໃນການນຳພາ-ຊີ້ນຳຂອງຄະນະພັກ, ອົງການປົກຄອງຂັ້ນຕ່າງໆຂອງສະພາແຫ່ງຊາດ ຍັງບໍ່ທັນໄດ້ເທົ່າທີ່ຄວນ ໂດຍສະເພາະແມ່ນການໝູນໃຊ້ກົດເກນປະລິມານ ແລະຄຸນນະພາບເຂົ້າໃນການກໍ່ສ້າງ-ບຳລຸງພະນັກງານ ເພື່ອສືບທອດປ່ຽນແທນ, ສັບຊ້ອນ ແລະຈັດວາງໃສ່ຕຳແໜ່ງງານຕ່າງໆ ຍັງບໍ່ໄດ້ຕາມໂຄງປະກອບຂອງການຈັດຕັ້ງ ແລະຮັບປະກັນໄດ້ພະນັກງານ 3 ຮຸ່ນຄື: ຮຸ່ນອາວຸໂສ, ຮຸ່ນກາງ ແລະຮຸ່ນໜຸ່ມຢ່າງສົມສ່ວນ.

3). ການໝູນໃຊ້ກົດເກນປະລິມານ ແລະຄຸນນະພາບເຂົ້າໃນການກໍ່ສ້າງ-ບຳລຸງພະນັກງານບໍ່ສອດຄ່ອງກັບຄວາມຕ້ອງການຂອງກົງຈັກການຈັດຕັ້ງ ແລະຕຳແໜ່ງງານຕົວຈິງ ເຖິງວ່າກົງຈັກການຈັດຕັ້ງໄດ້ຮັບການປັບປຸງຢ່າງເປັນລະບົບຕໍ່ເນື່ອງ ແຕ່ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການແລ້ວແມ່ນການປັບປຸງດ້ານປະລິມານ ແລະຄຸນນະພາບຂອງພະນັກງານ ໂດຍສະເພາະແມ່ນການຈັດວາງ-ສັບຊ້ອນໃສ່ບັນດາຕຳແໜ່ງງານບາງຂະແໜງການ-ອົງການຍັງບໍ່ສອດຄ່ອງເໝາະສົມ ແລະບໍ່ມີຄວາມເປັນເອກະພາບດີ ເປັນຕົ້ນແມ່ນລະດັບຄວາມຮູ້, ຄວາມສາມາດຕົວຈິງທາງດ້ານວິຊາສະເພາະທີ່ເຂົາເຈົ້າຮຽນມາ. ພ້ອມດຽວກັນນັ້ນ, ການປະຕິບັດນິຕິກຳກ່ຽວກັບວຽກພະນັກງານກໍບໍ່ທັນເປັນລະບົບຕາມລະບຽບລັດຖະກອນ.

4). ການໝູນໃຊ້ກົດເກນປະລິມານ ແລະຄຸນນະພາບເຂົ້າໃນການກໍ່ສ້າງ-ບຳລຸງພະນັກງານ ຕິດພັນກັບວຽກງານຕິດຕາມສັງເກດຕີລາຄາ ແລະຈັດແບ່ງປະເພດພະນັກງານຍັງເຮັດບໍ່ທັນໄດ້ດີ ເປັນຕົ້ນແມ່ນຄວາມເອົາໃຈໃສ່ຕິດຕາມ, ກວດກາ ແລະປະເມີນຜົນວຽກງານກໍ່ສ້າງ-ບຳລຸງພະນັກງານຍັງບໍ່ທັນເປັນປົກກະຕິ ແລະຕໍ່ເນື່ອງ.

5). ການໝູນໃຊ້ກົດເກນປະລິມານ ແລະຄຸນນະພາບເຂົ້າໃນການກໍ່ສ້າງ-ບຳລຸງພະນັກງານ ຕິດພັນກັບການປະຕິບັດນະໂຍບາຍໃນການກໍ່ສ້າງ-ບຳລຸງພະນັກງານ ຍັງບໍ່ທັນເປັນລະບົບເອກະພາບ ແລະຕໍ່ເນື່ອງ, ມີບາງດ້ານບໍ່ທັນແທດເໝາະກັບເງື່ອນໄຂເສດຖະກິດ-ສັງຄົມຂອງປະເທດ.

ເພື່ອເຮັດໃຫ້ການໝູນໃຊ້ກົດເກນປະລິມານ ແລະຄຸນນະພາບເຂົ້າໃນການກໍ່ສ້າງ ແລະບຳລຸງພະນັກງານຢູ່ສະພາແຫ່ງຊາດໄດ້ຮັບການຈັດຕັ້ງປະຕິບັດເຂົ້າສູ່ວຽກງານຕົວຈິງ

ຢ່າງມີປະສິດທິຜົນ ຄວນໄດ້ກຳນົດວິທີການຈັດຕັ້ງປະຕິບັດ ແລະວິທີແກ້ໄຂດັ່ງນີ້:

ໜຶ່ງ, ຄະນະພັກ, ຄະນະນຳແຕ່ລະຂັ້ນຕ້ອງຖືເອົາວຽກງານກໍ່ສ້າງ-ບຳລຸງພະນັກງານເປັນຄວາມຮັບຜິດຊອບໂດຍກົງຂອງຕົນ ໂດຍອີງໃສ່ແຜນກຳນົດພະນັກງານ, ແຜນພັດທະນາວຽກງານພະນັກງານ ແລະຖືເອົາຄຸນນະພາບເປັນກົກ, ເອົາໃຈໃສ່ການສ້າງພະນັກງານກັບທີ່ເປັນຕົ້ນຕໍ. ເອົາໃຈໃສ່ກໍ່ສ້າງ-ບຳລຸງທັງ 3 ປະເພດ ແລະ 3 ຮຸ່ນພະນັກງານໄປພ້ອມໆກັນ ແຕ່ບັນຫາສຳຄັນຕ້ອງເອົາພະນັກງານຜູ້ ທີ່ມີຄວາມຫ້າວຫັນໃນການປະຕິບັດໜ້າທີ່ວຽກງານ, ຜູ້ທີ່ມີຄວາມຈົງຮັກພັກດີຕໍ່ພັກ, ຕໍ່ປະເທດຊາດຕໍ່ປະຊາຊົນ, ເຫັນຜົນປະໂຫຍດສ່ວນລວມສູງກວ່າຜົນປະໂຫຍດສ່ວນຕົວ ແລະເປັນແບບຢ່າງນຳໜ້າໃນທຸກດ້ານ.

ສອງ, ການກໍ່ສ້າງ-ບຳລຸງພະນັກງານຕ້ອງເລີ່ມຈາກຄວາມຮຽກຮ້ອງຕ້ອງການທາງດ້ານຈຳນວນ ແລະຄຸນນະພາບຂອງແຕ່ລະປະເພດພະນັກງານ ເພື່ອຮັບປະກັນໃຫ້ແກ່ການປະຕິບັດວຽກງານໃນແຕ່ລະໄລຍະ; ການຂຶ້ນແຜນກຳນົດພະນັກງານຕ້ອງຮັບປະກັນທາງດ້ານໂຄງປະກອບເພດ, ໄວ, ເຜົ່າ, ຮຸ່ນ ເພື່ອສ້າງໃຫ້ໄດ້ພະນັກງານສືບທອດປ່ຽນແທນ; ການສ້າງແຜນກຳນົດພະນັກງານຕ້ອງສ້າງໃຫ້ໄດ້ທັງສອງປະເພດຄື: ແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແລະແຜນກຳນົດພະນັກງານວິຊາການຢ່າງຖືກຕ້ອງ.

ສາມ, ການບັນຈຸ, ສັບຊ້ອນ, ຈັດວາງພະນັກງານຕ້ອງເບິ່ງຄວາມຕ້ອງການ, ຄວາມເປັນຈິງຂອງກົງຈັກການຈັດຕັ້ງຢ່າງສົມເຫດສົມຜົນ, ຮັບປະກັນໃຫ້ໄດ້ມາດຕະຖານຄຸນທາດການເມືອງ, ຕ້ອງອີງໃສ່ແຜນກຳນົດພະນັກງານ, ຄວາມຮູ້ ແລະຄວາມສາມາດທີ່ສົມຄູ່ກັບມາດຕະຖານຕຳແໜ່ງງານ, ຮັບປະກັນທາງດ້ານຄວາມສາມັກຄີພາຍໃນຢ່າງໜັກແໜ້ນ, ຕ້ອງມີການປະສານສົມທົບຢ່າງຖືກຕ້ອງ ລະຫວ່າງພະນັກງານເກົ່າກັບພະນັກງານໃໝ່, ພະນັກງານອາວຸໂສກັບພະນັກງານໜຸ່ມນ້ອຍ ເພື່ອຮັບປະກັນທາງດ້ານການຖ່າຍທອດບົດຮຽນ ແລະຄວາມເປັນແບບຢ່າງ.

ສີ່, ເພີ່ມທະວີການຄຸ້ມຄອງພະນັກງານໃຫ້ເຂົ້າສູ່ລະບົບເອກະພາບ, ທັນສະໄໝເພື່ອລະກ້າວສອດຄ່ອງກັບກົດໝາຍ, ລະບຽບ ເປັນຕົ້ນແມ່ນຄຸ້ມຄອງທາງດ້ານປະຫວັດຕົ້ນກຳເນີດຂອງພະນັກງານ, ປະຫວັດການເຄື່ອນໄຫວ, ສາຍພົວພັນຍາດພີ່ນ້ອງ; ພ້ອມທັງເອົາໃຈໃສ່ປັບປຸງລະບຽບການຄຸ້ມຄອງພະນັກງານໃຫ້ສອດຄ່ອງກັບການຂະຫຍາຍຕົວຂອງວຽກງານພະນັກງານໃນແຕ່ລະໄລຍະ.

ຫ້າ, ດ້ານຄຸນທາດການເມືອງ, ຄຸນສົມບັດສົມທຳປະຕິວັດ, ໝາກຜົນໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ ເພື່ອຮັບປະກັນການເສີມຂະຫຍາຍລັກສະນະຕັ້ງໜ້າ ແລະຄຸນນະພາບຂອງຖັນແຖວພະນັກງານ; ການຕີລາຄາພະນັກງານຕ້ອງປະຕິບັດຕາມ 5 ລະດັບຄື: ດີເດັ່ນ, ດີ, ກາງ, ອ່ອນແລະ ໃຊ້ການບໍ່ໄດ້.

ຫົກ, ຄະນະພັກ, ຄະນະນຳແຕ່ລະຂັ້ນຄວນເອົາໃຈໃສ່ປະຕິບັດນະໂຍບາຍທາງດ້ານວັດຖຸ ກໍຄືຈິດໃຈຢ່າງເໝາະສົມຕໍ່ພະນັກງານຜູ້ທີ່ມີຄວາມຫ້າວຫັນປະຕິບັດວຽກງານຢ່າງມີຜົນສຳເລັດ ເພື່ອກະຕຸກຊຸກຍູ້ຄວາມຫ້າວຫັນ, ໃຫ້ກຳລັງໃຈຕໍ່ພະນັກງານໃນການປະຕິບັດວຽກງານວິຊາສະເພາະ; ຕ້ອງຮັບປະກັນບໍ່ໃຫ້ມີການປະຕິບັດນະໂຍບາຍທີ່ມີລັກສະນະເກືອກູນ; ຕ້ອງສ້າງບັນດາຂໍ້ກຳນົດ, ລະບຽບຫຼັກ

ການສະເພາະໃນການປະຕິບັດນະໂຍບາຍຕ່າງໆຢ່າງເໝາະສົມ ແລະສອດຄ່ອງກັບນະໂຍບາຍອັນລວມ.

ສັງລວມແລ້ວ, ການແກ້ໄຂສາຍພົວພັນທີ່ເປັນເອກະພາບ ລະຫວ່າງປະລິມານ ແລະ ຄຸນນະພາບ ເພື່ອໃຫ້ມັນກົມກຽວກັນ, ເຮັດໃຫ້ມີການສະສົມ ຫຼື ການຂະຫຍາຍຕົວທາງດ້ານປະລິມານປ່ຽນແປງໄປສູ່ຄຸນນະພາບໃໝ່ ແລະກົງກັນຂ້າມ ເຊິ່ງເນື້ອແທ້ກໍແມ່ນການໝູນໃຊ້ສາຍພົວພັນສັດຈະວິພາກ ລະຫວ່າງປະລິມານ ແລະ ຄຸນນະພາບ ຕາມວິທີສັດຈະວິພາກວັດຖຸນິຍົມຂອງທິດສະດີມາກ-ເລນິນ ດ້ວຍການຄົ້ນຄວ້າຢ່າງມີຫຼັກການຕໍ່ກັບການບຳລຸງສ້າງຖັນແຖວພະນັກງານສືບທອດປ່ຽນແທນທາງດ້ານປະລິມານ ແລະມີຄຸນນະພາບໃຫ້ສອດຄ່ອງກັບໜ້າທີ່ວຽກງານຕົວຈິງຂອງການຈັດຕັ້ງໃນແຕ່ລະໄລຍະເວົ້າລວມ, ເວົ້າສະເພາະແມ່ນຢູ່ສະພາແຫ່ງຊາດແມ່ນຄວາມຈຳເປັນທີ່ຕ້ອງໄດ້ປັບປຸງໄປຄຽງຄູ່ກັບການພັດທະນາລະບົບການຈັດຕັ້ງ ເພື່ອນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດຕົວຈິງໃຫ້ແທດເໝາະ ແລະຜັນຂະຫຍາຍໃຫ້ຖືກຈຸດ, ເປົ້າໝາຍ ແລະເງື່ອນໄຂສະພາບແວດລ້ອມໃຫ້ທັນກັບຍຸກສະໄໝ, ພ້ອມທັງຮັບປະກັນການກໍ່ສ້າງ-ບຳລຸງພະນັກງານຢູ່ສະພາແຫ່ງຊາດໃຫ້ມີຄຸນນະພາບສູງຂຶ້ນເລື່ອຍໆ.




ກອງປະຊຸມເຝິກອົບຮົມວຽກງານຄຸ້ມຄອງແຜນການລົງທຶນຂອງລັດຂອງສະພາແຫ່ງຊາດ ສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະນຳຂອງສະພາປະຊາຊົນຂັ້ນແຂວງ 8 ແຂວງພາກເໜືອ ລະຫວ່າງ ວັນທີ 20-21 ທັນວາ 2024 ຢູ່ແຂວງ ອຸດົມໄຊ

# ຄຸ້ມຄອງລາຍຈ່າຍງົບປະມານຂອງລັດ ຢູ່ຫ້ອງວ່າການສູນກາງພັກ

ຂຽນໂດຍ: ນ. ໂສພາ ໄຊວົງສາ

ເພີ່ມທະວີການຄຸ້ມຄອງງົບປະມານແມ່ນການຍົກສູງຂີດຄວາມສາມາດໃນການຊຸກຍູ້, ປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ ແລະນຳໃຊ້ມາດຕະການທີ່ເໝາະສົມ ເພື່ອຂຸດຄົ້ນແຫຼ່ງລາຍຮັບໄດ້ເພີ່ມສູງຂຶ້ນ ພ້ອມທັງມີປະສິດທິຜົນ, ຫຼີກລ່ຽງການຈັດເກັບລາຍຮັບບໍ່ໝົດ, ເກັບບໍ່ຄົບຖ້ວນ, ເກັບບໍ່ໄດ້ຕາມແຜນ, ຊຸກຍູ້ມາດຕະການໃຫ້ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງທຸກພາກສ່ວນຂອງລັດ, ເອກະຊົນ ແລະສັງຄົມຕ້ອງປະຕິບັດພັນທະເສຍພາສີ-ອາກອນ ແລະຄ່າທຳນຽມຕ່າງໆເຂົ້າງົບປະມານຂອງລັດໃຫ້ເຂັ້ມງວດກວ່າເກົ່າ.

ການຄຸ້ມຄອງລາຍຈ່າຍງົບປະມານຂອງລັດແມ່ນມີຄວາມຈຳເປັນທີ່ສຸດໃນການຂັບເຄື່ອນພື້ນຖານເສດຖະກິດແຫ່ງຊາດ ເພາະງົບປະມານປຽບເໝືອນສາຍເລືອດທີ່ສຳຄັນອັນໜຶ່ງຂອງລະບົບເສດຖະກິດ. ການຄຸ້ມຄອງລາຍຈ່າຍງົບປະມານແຫ່ງຊາດແມ່ນການຄຸ້ມຄອງຊັບສິນທຶນຮອນຂອງລັດ ໂດຍຜ່ານຄົນເປັນຜູ້ຈັດຕັ້ງປະຕິບັດການຄຸ້ມຄອງຕົວຈິງ ແນໃສ່ບັນລຸຈຸດປະສົງທີ່ວາງໄວ້ນັ້ນ ໝາຍເຖິງການຄຸ້ມຄອງ ທາງດ້ານລາຍຮັບ-ລາຍຈ່າຍ ແລະຄຸ້ມຄອງເງິນທັງໝົດ, ຮັບປະກັນການເບີກຈ່າຍໃຫ້ມີປະສິດທິຜົນ. ການຄຸ້ມຄອງແມ່ນການກະທົບຈາກບັນດາອົງການຈັດຕັ້ງລັດທີ່ມີພາລະບົດບາດ ແລະສິດອຳນາດທາງດ້ານບໍລິຫານກະທົບໃສ່ບັນດາຂະບວນວິວັດດ້ານເສດຖະກິດ-ສັງຄົມ ດ້ວຍລະບົບເຄື່ອງມືຂອງລັດ ແນໃສ່ບັນລຸຈຸດໝາຍທີ່ໄດ້ກຳນົດໄວ້ເພື່ອສະກັດກັ້ນ ແລະຕ້ານກັບກະແສສັງຄົມທີ່ວ່າປາກົດການຫຍໍ້ທໍ້ໃນຂົງເຂດການເງິນ ເຮັດໃຫ້ຂະແໜງການເງິນຢູ່ຂັ້ນຕ່າງໆເຄັ່ງຄັດໃນການປະຕິບັດລະບອບ, ລະບຽບທີ່ມີລັກສະນະເປັນເອກະພາບໃນທົ່ວປະເທດ; ເພື່ອຫຼີກລ່ຽງການໃຊ້ຈ່າຍຟຸມເຟືອຍ, ບໍ່ຖືກກັບເປົ້າໝາຍ, ບໍ່ມີປະສິດທິພາບ ແລະປະສິດທິຜົນ, ໃຊ້ຈ່າຍເກີນລາຍຮັບ ແລະສ້າງໜີ້ສິນຄຸມເຄືອ. ໃນກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ ໄດ້ກຳນົດໄວ້ວ່າ: “ສ້າງລະບົບຄຸ້ມຄອງລາຍຮັບ-ລາຍຈ່າຍງົບປະມານຂອງລັດໃຫ້ເຂັ້ມແຂງ ດ້ວຍການປະຕິບັດເຂັ້ມງວດຫຼັກການແຜນລາຍຈ່າຍ ຕ້ອງບົນພື້ນຖານຄວາມສາມາດຂອງລາຍຮັບງົບປະມານຕົວຈິງ ແລະບໍ່ສ້າງໂຄງການລົງທຶນໃໝ່ຈາກງົບປະມານລັດທີ່ບໍ່ມີແຫຼ່ງຊຳລະສະສາງອັນຈະແຈ້ງ”(1).

ພ້ອມກັນນັ້ນ, ເພື່ອຄຸ້ມຄອງລາຍຈ່າຍງົບປະມານຂອງລັດໃຫ້ມີປະສິດທິພາບສູງ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນອອກຄຳແນະນຳວ່າດ້ວຍການກວດກາຫຼັກການຈ່າຍງົບປະມານຂອງລັດ ສະບັບເລກທີ 1672/ກງ, ລົງວັນທີ 3 ມິຖຸນາ 2019; ເພື່ອຮັບປະກັນຫຼັກການລວມສູນເປັນເອກະພາບ

(1) ເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ພັກປະຊາຊົນ ປະຕິວັດລາວ, ປີ 2021, ໜ້າ 58.

ທຸກສາຍພົວພັນລາຍຮັບ-ລາຍຈ່າຍງົບປະມານຕ້ອງໄດ້ຮັບການກວດກາຕາມແຕ່ລະຂັ້ນຕອນຕາມລະບຽບການທີ່ໄດ້ກຳນົດໄວ້, ກວດກາຕ້ອງໄດ້ຮັບປະກັນ ແລະຢັ້ງຢືນຄວາມຖືກຕ້ອງເລັ່ງໃສ່ແຜນງົບປະມານປະຈຳປີທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວນັ້ນ ແລະເອົາໃຈໃສ່ຄຸ້ມຄອງດ້ວຍກົດໝາຍ, ດຳລັດ ກໍຄືບັນດາຄຳສັ່ງແນະນຳ, ຂໍ້ກຳນົດ ແລະລະບຽບກ່ຽວກັບການເງິນ-ງົບປະມານ, ຄຸ້ມຄອງຕາມຂອບເຂດສິດໜ້າທີ່ພາລະບົດບາດຂອງຂັ້ນງົບປະມານ, ໜ່ວຍຄັງເງິນ ແລະພາກສ່ວນກ່ຽວຂ້ອງ, ປະຕິບັດລາຍຮັບ-ລາຍຈ່າຍງົບປະມານໃຫ້ຖືກຕ້ອງ, ສອດຄ່ອງກັບຂໍ້ກຳນົດກົດໝາຍງົບປະມານ, ສືບຕໍ່ຂຸດຄົ້ນລາຍຮັບເຂົ້າງົບປະມານເພື່ອຮັບປະກັນໃຫ້ການໃຊ້ຈ່າຍດ້ານຕ່າງໆຂອງລັດ ແລະມີສ່ວນແຮໄວ້.

"ຫ້ອງວ່າການສູນກາງພັກເປັນອົງການຈັດຕັ້ງໜຶ່ງຂອງສູນກາງພັກ, ມີຖານະທຽບເທົ່າກັບອົງການຕ່າງໆຂອງພັກ-ລັດ ຂັ້ນສູນກາງ; ມີພາລະບົດບາດເປັນເສນາທິການດ້ານເນື້ອໃນ, ເປັນໃຈກາງປະສານງານ ແລະບໍລິການຮັບໃຊ້ຄະນະບໍລິຫານງານສູນກາງພັກ, ກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ, ເລຂາທິການໃຫຍ່, ຜູ້ປະຈຳການຄະນະເລຂາທິການສູນກາງພັກ (ເອີ້ນຫຍໍ້ວ່າ: ສູນກາງພັກ)"(1).

ໃນໄລຍະຜ່ານມາຄະນະພັກ, ຄະນະນຳຫ້ອງວ່າການສູນກາງພັກໄດ້ເອົາໃຈໃສ່ນຳພາ-ຊີ້ນຳໃນການຄຸ້ມຄອງ ແລະນຳໃຊ້ງົບປະມານ ທັນເອົາການໃຊ້ຈ່າຍງົບປະມານເຂົ້າສູ່ລະບົບໂດຍການປະຕິບັດຫຼັກການເບີກຈ່າຍແລະການຄຸ້ມຄອງງົບປະມານແຕ່ລະຮ່ວງຢ່າງເຂັ້ມງວດ ແລະສອດຄ່ອງກັບສະພາບຄວາມເປັນຈິງຂອງວຽກງານແຕ່ລະດ້ານ ທັງຮັບປະກັນການໃຊ້ຈ່າຍໃຫ້ຖືກຕ້ອງເຮັດໃຫ້ການຄຸ້ມຄອງລາຍຈ່າຍງົບປະມານມີຄວາມຄ່ອງຕົວ, ຖືກຕ້ອງ, ຄົບຖ້ວນ, ປະຕິບັດລາຍຈ່າຍງົບປະມານມີຄວາມໂປ່ງໃສ, ປະຢັດມັດທະຍັດ ແລະມີປະສິດທິຜົນ ສະແດງອອກໃນໄລຍະ 1 ປີ (ປີ 2023) ຜ່ານມາຈັດຕັ້ງປະຕິບັດມີຜົນສຳເລັດດັ່ງນີ້:

- "ສຳເລັດການຈ່າຍເງິນເດືອນ ແລະເງິນອຸດໜູນຂອງພະນັກງານ-ລັດຖະກອນ ໃນແຜນການປີແມ່ນ ຈຳນວນ 13.012.000.000 ກີບ, ສາມາດຈັດຕັ້ງປະຕິບັດໄດ້ທັງໝົດ 12.219.540.073 ກີບ; ໃນນີ້, ຈ່າຍເງິນເດືອນພະນັກງານສົມບູນ ຈຳນວນ 8.673.455.709 ກີບ, ເງິນເດືອນພະນັກງານຝຶກງານ 66.277.890 ກີບ, ເງິນເດືອນພະນັກງານໄປຍົກລະດັບຢູ່ພາຍໃນປະເທດ ຈຳນວນ 103.630.590 ກີບ, ເງິນເດືອນພະນັກງານໄປຍົກລະດັບຢູ່ຕ່າງປະເທດ 213.836.490 ກີບ, ເງິນອຸດໜູນຕຳແໜ່ງງານ ຈຳນວນ 505.386.000 ກີບ, ອຸດໜູນວິຊາຊີບ ຈຳນວນ 36.000.000 ກີບ, ເງິນອຸດໜູນອາຍຸການ ຈຳນວນ 387.952.500 ກີບ, ອຸດໜູນທາດເບື່ອ ຈຳນວນ 9.652.608 ກີບ, ເງິນອຸດໜູນຄ່າຄອງຊີບ ຈຳນວນ 2.223.348.286 ກີບ. ທຽບໃສ່ແຜນປີແມ່ນປະຕິບັດໄດ້ 94%.

- ສຳເລັດການຈ່າຍເງິນອຸດໜູນ ແລະເງິນນະໂຍບາຍເບ້ຍລ້ຽງ ໃນແຜນການປີ ຈຳນວນ 13.034.000.000 ກີບ, ສາມາດຈັດຕັ້ງປະຕິບັດໄດ້ທັງໝົດ 12.846.584.902 ກີບ;

---

(1) ສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານ (ລາຍຈ່າຍປົກກະຕິ+ວິຊາການ) ລາຍຈ່າຍງົບປະມານຂອງຫ້ອງວ່າການສູນກາງພັກ ປະຈຳປີ 2023 (ການຈັດຕັ້ງປະຕິບັດແຕ່ວັນທີ 1/1-31/12/2023).

ໃນນີ້, ເງິນນະໂຍບາຍຕ່າງໆ ຈຳນວນ 50.000.000 ກີບ, ເງິນນະໂຍບາຍຄອບຄົວ ຈຳນວນ 153.056.400 ກີບ, ເງິນອຸດໜູນນະໂຍບາຍກ່ອນຮັບບຳນານ ຈຳນວນ 252.705.502 ກີບ, ເງິນອຸດໜູນພະນັກງານເຮັດວຽກເພີ່ມ ຈຳນວນ 670.273.000 ກີບ, ປິ່ນປົວພະນັກງານການນຳ ຈຳນວນ 11.297.000.000 ກີບ, ເງິນຊ່ວຍໜູນດ້ານສັງຄົມ ຈຳນວນ 423.550.000 ກີບ. ທຽບໃສ່ແຜນການປີແມ່ນປະຕິບັດໄດ້ 99%.

- ລາຍຈ່າຍບໍລິຫານປົກກະຕິ ໃນແຜນການປີ ຈຳນວນ 12.011.000.000 ກີບ, ສາມາດຈັດຕັ້ງປະຕິບັດໄດ້ທັງໝົດ 11.977.718.776 ກີບ; ໃນນີ້, ການຊື້ ແລະການຊົມໃຊ້ ຈຳນວນ 3.569.723.167 ກີບ, ການບໍລິການທາງນອກ ຈຳນວນ 5.081.264.884 ກີບ, ລາຍຈ່າຍໄປວຽກທາງການ ຈຳນວນ 399.732.725 ກີບ, ລາຍຈ່າຍກອງປະຊຸມສຳມະນາ ແລະເຝິກອົບຮົມ ຈຳນວນ 2.262.000.000 ກີບ, ລາຍຈ່າຍຮັບແຂກ ຈຳນວນ 297.000.000 ກີບ, ຊື້ຂອງຂວັນ ແລະຂອງຕ້ອນ ຈຳນວນ 267.998.000 ກີບ, ລາຍຈ່າຍວັນບຸນລະດັບຊາດ ຈຳນວນ 100.000.000 ກີບ. ທຽບໃສ່ແຜນການປີປະຕິບັດໄດ້ 100%.

- ລາຍຈ່າຍດັດສົມ, ສິ່ງເສີມ, ຊ່ວຍໜູນ ແລະບຳລຸງວິຊາການໃນແຜນການປີ ຈຳນວນ 17.123.000.000 ກີບ, ສາມາດຈັດຕັ້ງປະຕິບັດໄດ້ທັງໝົດ 17.122.397.000 ກີບ; ໃນນັ້ນ, ຈ່າຍດັດສົມສິ່ງເສີມດ້ານການເມືອງ ຈຳນວນ 15.658.438.000 ກີບ, ດັດສົມສິ່ງເສີມດ້ານວັດທະນະທຳ-ສັງຄົມ ຈຳນວນ 66.924.000 ກີບ, ດັດສົມສິ່ງເສີມດ້ານວຽກງານອື່ນໆ ຈຳນວນ 1.142.770.000 ກີບ, ເງິນຊ່ວຍໜູນ ຈຳນວນ 254.265.000 ກີບ. ທຽບໃສ່ແຜນການປີແມ່ນປະຕິບັດໄດ້ 100%.

- ຈັດຊື້ໃໝ່, ຊື້ເຄື່ອງຈັກ ແລະວັດຖຸອຸປະກອນຕ່າງໆ ໃນແຜນການປີ ຈຳນວນ 1.700.000.000 ກີບ, ສາມາດຈັດຕັ້ງປະຕິບັດໄດ້ທັງໝົດ 1.700.000.000 ກີບ; ໃນນີ້, ຊື້ເຄື່ອງຈັກ ແລະວັດຖຸອຸປະກອນ ຈຳນວນ 360.000.000 ກີບ, ຊື້ຊັບສົມບັດຄົງທີ່ (ຊື້ໂຕະ, ຕັ່ງ ແລະຄອມພິວເຕີ) ຈຳນວນ 1.340.000.000 ກີບ. ທຽບໃສ່ແຜນການປີເທົ່າກັບ 100%.

- ເງິນລົງທຶນຂອງລັດ ໃນແຜນການປີ ຈຳນວນ 9.671.470.000 ກີບ, ສາມາດຈັດຕັ້ງປະຕິບັດໄດ້ທັງໝົດ 9.669.464.222 ກີບ; ໃນນີ້, ໃຊ້ຈ່າຍສຳຫຼວດພື້ນຖານ ແລະສິ່ງເສີມວິຊາການ ຈຳນວນ 548.025.222 ກີບ, ການກໍ່ສ້າງພື້ນຖານໂຄງລ່າງ ຈຳນວນ 8.221.439.000 ກີບ, ການຊື້ຊັບສົມບັດຄົງທີ່ ແລະອື່ນໆ (ການສ້ອມແປງໃຫຍ່) ຈຳນວນ 900.000.000 ກີບ. ທຽບໃສ່ແຜນການປີແມ່ນປະຕິບັດໄດ້ 100%"[(1)].

ຄຽງຄູ່ກັບຜົນສຳເລັດທີ່ໄດ້ກ່າວມາຂ້າງເທິງນັ້ນ, ການຄຸ້ມຄອງລາຍຈ່າຍງົບປະມານຂອງລັດຢູ່ຫ້ອງວ່າການສູນກາງພັກ ກໍຍັງມີບາງດ້ານທີ່ຈັດຕັ້ງປະຕິບັດບໍ່ທັນຖືກຕ້ອງຕາມຈຸດປະສົງ ແລະເປົ້າໝາຍ ຂອງການຄຸ້ມຄອງລາຍຈ່າຍງົບປະມານເປັນຕົ້ນແມ່ນ:

1). ການກຳແໜ້ນ ແລະຄວາມເຂົ້າໃຈຂອງໜ່ວຍງານຕ່າງໆ ພາຍໃນຫ້ອງວ່າການສູນກາງພັກຕໍ່ກັບບັນດານິຕິກຳ ແລະກົນໄກທີ່ເປັນບ່ອນອີງໃຫ້ແກ່ການຄຸ້ມຄອງການນຳໃຊ້ງົບປະມານ ຍັງບໍ່ທັນເລິກເຊິ່ງ, ນິຕິກຳຈຳ

(1) ສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານ (ລາຍຈ່າຍປົກກະຕິ+ວິຊາການ) ລາຍຈ່າຍງົບປະມານຂອງຫ້ອງວ່າການສູນກາງພັກ ປະຈຳປີ 2023 (ການຈັດຕັ້ງປະຕິບັດແຕ່ວັນທີ 1/1-31/12/2023).

ນວນໜຶ່ງຍັງສ້າງຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດຕົວຈິງ ຕ້ອງໄດ້ຜ່ານຫຼາຍຂັ້ນຕອນເຮັດໃຫ້ການເບີກຈ່າຍເງິນສົດ ຫຼື ການໂອນເງິນຊຳລະສະສາງໜີ້ສິນຕ່າງໆມີຄວາມຊັກຊ້າ ທັງເປັນການສ້າງຄວາມລະແວງສົງໄສ ແລະເກີດຄວາມບໍ່ເຂົ້າໃຈກັນ ລະຫວ່າງຫ້ອງການກັບພາກສ່ວນຕ່າງໆທີ່ຕ້ອງການນຳໃຊ້ງົບປະມານ.

2). ການສ້າງແຜນລາຍຈ່າຍງົບປະມານໃນໄລຍະຜ່ານມາແມ່ນຍັງບໍ່ທັນມີຂໍ້ມູນຢ່າງຄົບຖ້ວນ ເພື່ອເປັນບ່ອນອີງໃນການຄິດໄລ່, ມີລັກສະນະຂຶ້ນແຜນລາຍຈ່າຍສູງເກີນຄວາມເປັນຈິງ ຍ້ອນຄວາມເຂົ້າໃຈດ້ານກົດໝາຍ ແລະລະບຽບຂອງພະນັກງານຜູ້ທີ່ເຮັດໜ້າທີ່ສ້າງແຜນລາຍຈ່າຍຍັງມີຈຳກັດ ແລະບໍ່ທັນກຳແໜ້ນບັນດາລະບຽບຫຼັກການ. ພ້ອມນັ້ນ, ຄວາມຊຳນານງານດ້ານການນຳໃຊ້ເຄື່ອງມືທີ່ທັນສະໄໝເຂົ້າໃນການຄຸ້ມຄອງ, ການຕິດຕາມ-ກວດກາວຽກງານການເງິນກໍຍັງມີຂອບເຂດຈຳກັດ.

3). ຂອດການຈັດຕັ້ງເຜີຍແຜ່, ເຊື່ອມຊຶມບັນດາຂໍ້ກຳນົດ, ກົດໝາຍ, ລະບຽບ ແລະນິຕິກຳຕ່າງໆທີ່ພົວພັນກັບການຄຸ້ມຄອງການນຳໃຊ້ງົບປະມານແຫ່ງລັດ ຍັງມີລັກສະນະຊັກຊ້າ, ບໍ່ທັນເລິກເຊິ່ງ, ກວ້າງຂວາງ ແລະທົ່ວເຖິງ ຈຶ່ງເຮັດໃຫ້ການດຳເນີນວຽກງານມີບາງວຽກຈັດຕັ້ງປະຕິບັດໄປກ່ອນແລ້ວ ພັດໄດ້ກັບໄປປັບປຸງຄືນໃໝ່ເພື່ອໃຫ້ຖືກຕາມລະບຽບຫຼັກການ ຫຼືຍິ່ງໄປກວ່ານັ້ນ ມີບາງວຽກຈັດຕັ້ງປະຕິບັດໄປແລ້ວ ກໍບໍ່ສາມາດຖອນເງິນທົດແທນຄືນໄດ້.

4). ການສະໜອງງົບປະມານໃຫ້ແກ່ຄວາມຮຽກຮ້ອງຕ້ອງການຂອງການພັດທະນາຍັງຈຳກັດ ໂດຍສະເພາະແມ່ນຮ່ວງລາຍຈ່າຍຮັບໃຊ້ບໍລິຫານປົກກະຕິ ຍັງບໍ່ທັນສາມາດຕອບສະໜອງໄດ້ພຽງພໍກັບຄວາມຕ້ອງການໃນການບຳລຸງຮັກສາ, ການກໍ່ສ້າງ-ສ້ອມແປງບັນດາພື້ນຖານເຕັກນິກ, ອຸປະກອນເຄື່ອງຈັກ, ຍານພາຫະນະ ແລະວັດຖຸອຸປະກອນຮັບໃຊ້ອື່ນໆທີ່ນັບມື້ເພີ່ມຂຶ້ນ.

ເພື່ອເຮັດໃຫ້ການຄຸ້ມຄອງງົບປະມານຢູ່ຫ້ອງວ່າການສູນກາງພັກ ໄດ້ຮັບການປັບປຸງຢ່າງຖືກຕ້ອງ ແລະໄປຕາມຈຸດປະສົງເປົ້າໝາຍຂອງລາຍຈ່າຍງົບປະມານ ແລະສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານຕົວຈິງ ຄວນໄດ້ເອົາໃຈໃສ່ບາງວິທີການດັ່ງນີ້:

ໜຶ່ງ, ຄະນະພັກ, ຄະນະນຳຄວນເພີ່ມທະວີການເຜີຍແຜ່ເຊື່ອມຊຶມແນວທາງ, ນະໂຍບາຍຂອງພັກ, ກົດໝາຍ ແລະລະບຽບການຂອງລັດໃຫ້ພະນັກງານຂອງຂະແໜງການເງິນທຸກຄົນຮັບຮູ້, ເຂົ້າໃຈ ຢ່າງເລິກເຊິ່ງເພື່ອໃຫ້ພະນັກງານກຳແໜ້ນກົດໝາຍ ແລະລະບຽບການຕ່າງໆກ່ຽວກັບວຽກງານການເງິນ ເພື່ອຮັບປະກັນໃນການຄຸ້ມຄອງລາຍຈ່າຍງົບປະມານແຫ່ງລັດເຂົ້າໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຕົວຈິງຢ່າງເໝາະສົມ ແລະມີປະສິດທິຜົນສູງ.

ສອງ, ຈັດຕັ້ງການສຳຫຼວດ ແລະເກັບກຳຂໍ້ມູນຄວາມຕ້ອງການໃຊ້ຈ່າຍງົບປະມານ ແຕ່ລະຮ່ວງໃຫ້ລະອຽດກ່ອນການຂຶ້ນແຜນລາຍຈ່າຍງົບປະມານປະຈຳງວດ, ປະຈຳສົກປີ; ສ້າງຄວາມເປັນເອກະພາບກັບທຸກພາກສ່ວນທີ່ກ່ຽວຂ້ອງໃນການນຳໃຊ້ງົບປະມານແຕ່ລະຮ່ວງໃຫ້ເຂັ້ມງວດ, ພ້ອມທັງຄຸ້ມຄອງການເບີກຈ່າຍນຳໃຊ້ງົບປະມານໃຫ້ໄປຕາມຈຸດປະສົງ, ເປົ້າໝາຍ ແລະຖືກກັບຮ່ວງລາຍຈ່າຍງົບປະມານກຳນົດໄວ້ ເພື່ອເຮັດໃຫ້ສາມາດຕິດຕາມ-

ກວດກາໄດ້ງ່າຍຂຶ້ນ.

ສາມ, ເອົາໃຈໃສ່ປັບປຸງແບບແຜນການພົວພັນປະສານງານ, ແບບແຜນວິທີເຮັດວຽກໃຫ້ມີວິທະຍາສາດຫຼາຍຂຶ້ນ, ຍົກສູງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດແຜນງົບປະມານແຕ່ລະໄລຍະພາຍຫຼັງຈັດຕັ້ງປະຕິບັດໜ້າວຽກສຳເລັດຕ້ອງໄດ້ມີການສະຫຼຸບ, ປະເມີນຜົນໃຫ້ຄະນະພັກ, ຄະນະນຳຢ່າງເປັນປະຈຳເພື່ອຂໍທິດຊີ້ນຳໃນການເຄື່ອນໄຫວວຽກງານໃຫ້ສຳເລັດຕາມແຜນການວາງໄວ້.

ສີ່, ສູ້ຊົນຍາດແຍ່ງຕົວເລກອະນຸມັດຈາກງົບປະມານແຫ່ງລັດ ແລະແຫຼ່ງທຶນຊ່ວຍເຫຼືອອື່ນໆ ເພື່ອສະໜອງດ້ານການເງິນໃຫ້ແກ່ການເຄື່ອນໄຫວວຽກງານຂອງຫ້ອງວ່າການສູນກາງພັກ ໂດຍສະເພາະແມ່ນຮ່ວງລາຍຈ່າຍຮັບໃຊ້ບໍລິຫານປົກກະຕິໃນການບຳລຸງຮັກສາ, ການກໍ່ສ້າງ-ສ້ອມແປງບັນດາພື້ນຖານເຕັກນິກ, ອຸປະກອນເຄື່ອງຈັກ, ຍານພາຫະນະ ແລະວັດຖຸອຸປະກອນຮັບໃຊ້ອື່ນໆ.

ສັງລວມແລ້ວ, ຄຸ້ມຄອງລາຍຈ່າຍງົບປະມານຂອງລັດ ແມ່ນເປັນໜຶ່ງໃນເຄື່ອງມືນະໂຍບາຍດ້ານການເງິນ ດັດສົມເສດຖະກິດມະຫາພາກຂອງລັດຖະບານ ມີຄວາມສຳຄັນໃນວຽກງານພັດທະນາເສດຖະກິດ-ສັງຄົມ, ປະຕິບັດນະໂຍບາຍເສດຖະກິດມະຫາພາກຂອງລັດ, ການພັດທະນາຊັບພະຍາກອນມະນຸດ, ການບໍລິຫານກິງຈັກ, ການກໍ່ສ້າງພື້ນຖານໂຄງລ່າງ, ການນຳໃຊ້ ແລະພັດທະນາເຕັກໂນໂລຊີ, ອຸປະກອນເຄື່ອງມືຕ່າງໆ ໃນໄລຍະຜ່ານມາຫ້ອງວ່າການສູນກາງພັກໄດ້ນຳໃຊ້ລາຍຈ່າຍງົບປະມານແຫ່ງລັດເຂົ້າໃນວຽກງານບໍລິຫານເປັນຕົ້ນແມ່ນເງິນເດືອນ, ເງິນອຸດໜູນ, ຊື້ອຸປະກອນ ເງິນດັດສົມ, ການກໍ່ສ້າງ ແລະລາຍຈ່າຍອື່ນໆ ສິ່ງສຳຄັນເພື່ອຮັບປະກັນໃຫ້ວຽກລາຍຈ່າຍໃຫ້ຖືກເປົ້າໝາຍ, ປະຢັດ, ນຳໃຊ້ຊັບສົມບັດ, ທຶນຮອນຂອງລັດໃຫ້ມີປະສິດທິພາບ ແລະເກີດປະໂຫຍດສູງສຸດ, ຖືກຕ້ອງ ແລະສອດຄ່ອງຕາມແນວທາງ, ນະໂຍບາຍຂອງພັກນັ້ນແມ່ນຈຳເປັນຕ້ອງໄດ້ຍົກສູງວຽກງານການຄຸ້ມຄອງ ແລະກວດກາງົບປະມານຂອງລັດ, ຮັບປະກັນການຄຸ້ມຄອງງົບປະມານແຫ່ງລັດຕາມກົດໝາຍ ແລະລະບຽບການຢ່າງເຂັ້ມງວດ ແລະອີກປັດໄຈໜຶ່ງທີ່ສຳຄັນຕັດສິນແມ່ນພະນັກງານທີ່ເຮັດວຽກງານການຄຸ້ມຄອງລາຍຈ່າຍງົບປະມານຕ້ອງເປັນຜູ້ທີ່ມີແນວຄິດໜັກແໜ້ນ, ມີຄຸນສົມບັດ, ມີຄຸນທາດການເມືອງໜັກແໜ້ນ, ມີຄວາມຮູ້ທາງດ້ານວິຊາການ, ມີແບບແຜນວິທີເຮັດທີ່ດີ, ມີຄວາມສາມາດໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານດ້ວຍຄວາມຮັບຜິດຊອບສູງຈຶ່ງຈະເຮັດການຄຸ້ມຄອງລາຍຈ່າຍງົບປະມານມີປະສິດທິພາບສູງ.

# ຍົກສູງຄຸນນະພາບວຽກງານກໍ່ສ້າງ ແລະບຳລຸງພະນັກງານ ຢູ່ກະຊວງການຕ່າງປະເທດ

ຂຽນໂດຍ: ບຸນກັນ ໄຊຍະວົງ

ວຽກງານກໍ່ສ້າງ ແລະບຳລຸງພະນັກງານ ເປັນວຽກງານໜຶ່ງທີ່ມີຄວາມສຳຄັນທີ່ສຸດເພາະ ພະນັກງານເປັນທຶນຮອນອັນປະເສີດຂອງພັກ, ເປັນຜູ້ນຳພາປະຊາຊົນ, ເປັນຂົວຕໍ່ລະຫວ່າງພັກກັບປະຊາຊົນ ແລະຮັບໃຊ້ປະຊາຊົນ. ທຸກວຽກງານຂອງພັກຈະດີ ຫຼື ຮ້າຍ, ຈະໄດ້ຮັບໄຊຊະນະ ຫຼື ປະລາໄຊ ກໍລ້ວນແຕ່ແມ່ນພະນັກງານເປັນຜູ້ຕັດສິນ. ສະນັ້ນ, ພັກເຮົາຍາມໃດກໍໄດ້ຖືວຽກງານພະນັກງານເປັນວິທະຍາສາດໜຶ່ງທີ່ມີຊີວິດຊີວາ ແລະໄດ້ເອົາໃຈໃສ່ຕໍ່ການກໍ່ສ້າງ-ບຳລຸງພະນັກງານ, ຍົກລະດັບຄວາມຮູ້, ຄວາມສາມາດ, ເຮັດໃຫ້ພະນັກງານມີຄວາມໜັກແໜ້ນທາງດ້ານການເມືອງ, ຄຸນສົມບັດສິນທຳປະຕິວັດ, ກຳແໜ້ນບັນດາຫຼັກມູນທາງດ້ານທິດສະດີມາກ-ເລນິນ, ແນວຄິດໄກສອນ ພົມວິຫານ ແລະແນວທາງ, ນະໂຍບາຍຂອງພັກຢ່າງເປັນລະບົບ, ມີຄວາມຮູ້, ຄວາມສາມາດທາງດ້ານວິຊາສະເພາະ ແລະຄວາມຮູ້ດ້ານວິທະຍາສາດເຕັກນິກເພື່ອຍົກສູງປະສິດທິພາບ ແລະປະສິດທິຜົນຂອງວຽກງານ, ພ້ອມທັງຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນແຕ່ລະໄລຍະ, ມີແຕ່ຜ່ານການກໍ່ສ້າງ-ບຳລຸງເທົ່ານັ້ນຈຶ່ງຈະເຮັດໃຫ້ພະນັກງານມີການຫັນປ່ຽນໃໝ່ທາງດ້ານຈິນຕະນາການ ໂດຍສະເພາະແມ່ນໃນສະພາບການປ່ຽນແປງໄວຄືປັດຈຸບັນຍິ່ງມີຄວາມຈຳເປັນ.

ປະທານ ໄກສອນ ພົມວິຫານ ໄດ້ກ່າວໄວ້ວ່າ: "ແນວທາງ, ແຜນນະໂຍບາຍ ແລະນະໂຍບາຍຂອງພັກ ຈະຖືກຕ້ອງປານໃດກໍດີ ຖ້າພະນັກງານ-ສະມາຊິກພັກ ຫາກຂາດຄວາມຮູ້, ຄວາມສາມາດໃນດ້ານຕ່າງໆເພື່ອນຳພາ ແລະຈັດຕັ້ງປະຕິບັດແລ້ວແນວທາງ, ນະໂຍບາຍດັ່ງກ່າວກໍຈະດີພຽງແຕ່ຢູ່ໜ້າເຈ້ຍເທົ່ານັ້ນ"(1)

ໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ ໄດ້ກຳນົດຢ່າງແຈ້ງວ່າ: "ພັດທະນາຊັບພະຍາກອນມະນຸດມີຄຸນນະພາບສູງຂຶ້ນທີ່ສາມາດຕອບສະໜອງຄວາມຕ້ອງການຂອງການພັດທະນາ, ມີຄວາມສາມາດຄົ້ນຄວ້າ ແລະນຳໃຊ້ວິທະຍາສາດ-ເຕັກໂນໂລຊີ ເພື່ອຍົກສູງປະສິດທິພາບ ແລະສ້າງມູນຄ່າເພີ່ມການຜະລິດ ແລະການບໍລິການ"(2).

ກະຊວງການຕ່າງປະເທດ ຂຽນເປັນຕົວອັກສອນຫຍໍ້ວ່າ: "ຕປທ" ແມ່ນກົງຈັກການຈັດຕັ້ງໜຶ່ງ ຂອງລັດຖະບານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານໃນການຄຸ້ມຄອງມະຫາພາກກ່ຽວກັບວຽກງານການຕ່າງປະເທດຢ່າງລວມສູນເປັນເອກະພາບ

---

(1) ໄກສອນ ພົມວິຫານ ນິພົນເລືອກເຟັ້ນ III, ປີ 1997, ໜ້າ 359.

(2) ເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ, ປີ 2021, ໜ້າ 193.

ທັງຢູ່ພາຍໃນ ແລະຕ່າງປະເທດ “ໃນປີ 2023 ກະຊວງການຕ່າງປະເທດ ມີກົງຈັກຊ່ວຍວຽກຢູ່ພາຍໃນປະເທດ 17 ກົມ ແລະມີສຳນັກງານຕາງໜ້າການທູດລາວຢູ່ຕ່າງປະເທດ 58 ແຫ່ງ, ມີພະນັກງານທັງໝົດ 988 ທ່ານ, ຍິງ 291 ທ່ານ; ໃນນີ້, ປະຈຳການຢູ່ຕ່າງປະເທດ ຈຳນວນ 430 ທ່ານ, ຍິງ 100 ທ່ານ; ສະມາຊິກພັກທັງໝົດ 788 ທ່ານ, ຍິງ 258 ທ່ານ (ລວມທັງສະມາຊິກພັກບຳນານ ຈຳນວນ 45 ທ່ານ; ໃນນີ້, ສະມາຊິກພັກສຳຮອງ ຈຳນວນ 77 ທ່ານ, ຍິງ 37 ທ່ານ”[(1)].

ໃນໄລຍະຜ່ານມາຄະນະພັກ, ຄະນະນຳກະຊວງການຕ່າງປະເທດໄດ້ເອົາໃຈໃສ່ຢ່າງຕັ້ງໜ້າໃນການປັບປຸງວຽກງານຈັດຕັ້ງ-ພະນັກງານເຊັ່ນ: ໄດ້ຄົ້ນຄວ້າກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່ ແລະຂອບເຂດສິດຂອງບັນດາກົງຈັກການຈັດຕັ້ງ; ກຳນົດໂຄງປະກອບການຈັດຕັ້ງ-ບຸກຄະລາກອນ ແລະແບບແຜນວິທີເຮັດວຽກຂອງບັນດາກົມກອງພາຍໃນກະຊວງ ແລະສຳນັກງານຕາງໜ້າການທູດລາວຢູ່ຕ່າງປະເທດ; ບັນຈຸສັບຊ້ອນ, ຈັດວາງພະນັກງານເຂົ້າໃສ່ແຕ່ລະຕຳແໜ່ງງານໄດ້ຢ່າງຖືກຕ້ອງສອດຄ່ອງກັບຄວາມຮູ້, ຄວາມສາມາດດ້ານວິຊາສະເພາະ ແລະພອນສະຫວັນຂອງພະນັກງານໄດ້ດີສົມຄວນ ທັງເອົາໃຈໃສ່ຢ່າງເປັນເຈົ້າການໃນຍາດແຍ່ງທຶນຈາກແຫຼ່ງຕ່າງໆ ເພື່ອສ້າງເງື່ອນໄຂ ແລະຊຸກຍູ້ໃຫ້ພະນັກງານໄດ້ໄປຍົກລະດັບ ສະແດງອອກທຸກໆການຮ່ວມມືປະຕິບັດໂຄງການກັບພາກສ່ວນພາຍໃນ ແລະຕ່າງປະເທດລ້ວນແຕ່ຕິດພັນກັບການກໍ່ສ້າງ-ບຳລຸງພະນັກງານໃນຂະແໜງການນັ້ນ ເຊິ່ງເຮັດໃຫ້ການກໍ່ສ້າງ ແລະບຳລຸງພະນັກງານໃນໄລຍະ 5 ປີ (2019-2023) ມີຜົນສຳເລັດເປັນທີ່ເພິ່ງພໍໃຈ ເປັນຕົ້ນແມ່ນໄດ້ສົ່ງໄປຍົກລະດັບດ້ານວິຊາສະເພາະຢູ່ພາຍໃນປະເທດຄື: ລະບົບຊັ້ນກາງ ຈຳນວນ 1 ທ່ານເປັນຍິງ, ລະບົບປະລິນຍາຕີ ຈຳນວນ 17 ທ່ານ, ຍິງ 9 ທ່ານ, ລະບົບປະລິນຍາໂທ ຈຳນວນ 16 ທ່ານ, ຍິງ 7 ທ່ານ; ໄດ້ສົ່ງພະນັກງານເຂົ້າຮ່ວມການເຝິກອົບຮົມໄລຍະສັ້ນ-ໄລຍະຍາວ ຈຳນວນ 837 ທ່ານ, ຍິງ 321 ທ່ານ. ສົ່ງພະນັກງານໄປກໍ່ສ້າງ-ບຳລຸງຢູ່ຕ່າງປະເທດຄື: ລະບົບປະລິນຍາຕີ ຈຳນວນ 20 ທ່ານ, ຍິງ ຈຳນວນ 3 ທ່ານ, ປະລິນຍາໂທ ຈຳນວນ 31 ທ່ານ, ຍິງ 14 ທ່ານ, ປະລິນຍາເອກ ຈຳນວນ 1 ທ່ານ; ໄດ້ສົ່ງພະນັກງານເຂົ້າຮ່ວມເຝິກອົບຮົມໄລຍະສັ້ນ-ໄລຍະຍາວ ຈຳນວນ 245 ທ່ານ, ຍິງ 97 ທ່ານ. ໄດ້ສົ່ງພະນັກງານໄປກໍ່ສ້າງ ແລະບຳລຸງດ້ານທິດສະດີການເມືອງຢູ່ພາຍໃນປະເທດ ເປັນຕົ້ນແມ່ນຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດຄື: ລະບົບຂັ້ນກາງ ຈຳນວນ 2 ສະຫາຍ, ຍິງ 1 ສະຫາຍ, ລະບົບຂັ້ນສູງ ຈຳນວນ 3 ສະຫາຍ, ຍິງ 1 ສະຫາຍ; ສົ່ງໄປຍົກລະດັບດ້ານທິດສະດີການເມືອງຢູ່ຕ່າງປະເທດເຊັ່ນ: ຢູ່ ສປ ຈີນ ຈຳນວນ 6 ສະຫາຍ, ຍິງ 1 ສະຫາຍ ແລະຢູ່ ສສ ຫວຽດນາມ ຈຳນວນ 22 ສະຫາຍ, ຍິງ 10 ສະຫາຍ”[(2)].

ຄຽງຄູ່ກັບຜົນສຳເລັດທີ່ກ່າວມານັ້ນ ຖ້າອີງໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານໃນໄລຍະໃໝ່ແລ້ວເຫັນວ່າຍັງມີ

---

(1) ບົດສະຫຼຸບການຈັດຕັ້ງປະຕິບັດຂອງກະຊວງການຕ່າງປະເທດ ປະຈຳສົກປີ 2023, ໜ້າ 5.

(2) ບົດສະຫຼຸບການຈັດຕັ້ງປະຕິບັດຂອງກະຊວງການຕ່າງປະເທດ ແຕ່ປີ 2019-2023.

ບາງດ້ານທີ່ຈະຕ້ອງໄດ້ເອົາໃຈໃສ່ປັບປຸງແກ້ໄຂໃຫ້ດີຂຶ້ນກວ່າເກົ່າດັ່ງນີ້:

1). ການສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ພະນັກງານຢູ່ກະຊວງການຕ່າງປະເທດ ໂດຍສະເພາະແມ່ນການເຜີຍແຜ່ເຊື່ອມຊຶມແນວທາງປ່ຽນແປງໃໝ່ຂອງພັກ, ກົດໝາຍ ແລະລະບຽບຕ່າງໆຂອງລັດຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ ສະແດງອອກໃນໄລຍະຜ່ານມາມີພະນັກງານ-ລັດຖະກອນ ຈຳນວນໜຶ່ງເກີດມີແນວຄິດຄອນແຄນ, ລັ່ງເລທໍ້ຖອຍຢາກຍົກຍ້າຍໜ້າທີ່, ລາອອກ ເພື່ອໄປສ້າງເສດຖະກິດຄອບຄົວ.

2). ການຂຶ້ນແຜນກຳນົດກໍ່ສ້າງ ແລະບຳລຸງພະນັກງານຢູ່ກະຊວງການຕ່າງປະເທດໃນໄລຍະຜ່ານມາຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ, ບໍ່ທັນທັນເປັນແຜນການລະອຽດ ແລະແທດເໝາະກັບແຕ່ລະໄລຍະ, ແຕ່ລະປະເພດຂອງຈຳນວນພະນັກງານຢູ່ແຕ່ລະພາກສ່ວນວ່າຄວນກໍ່ສ້າງແນວໃດ, ຈຳນວນເທົ່າໃດ, ກໍ່ສ້າງດ້ານວິຊາສະເພາະ, ດ້ານວິຊາການອື່ນໆມີຄວາມຈຳເປັນ ແລະຕ້ອງການເທົ່າໃດໃນແຕ່ລະປີຈຶ່ງເຮັດໃຫ້ການກໍ່ສ້າງ-ບຳລຸງພະນັກງານ ຍັງບໍ່ທັນສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຕົວຈິງຂອງແຕ່ລະຂະແໜງການ.

3). ການກໍ່ສ້າງ ແລະບຳລຸງພະນັກງານຍັງບໍ່ທັນສອດຄ່ອງກັບໜ້າທີ່ວຽກງານໃນໄລຍະໃໝ່ສະແດງອອກຍັງບໍ່ທັນມີແຜນກໍ່ສ້າງ ແລະບຳລຸງຢ່າງເປັນລະບົບຄົບຊຸດສ່ວນຫຼາຍແມ່ນເລັ່ງໃສ່ການກໍ່ສ້າງ ແລະບຳລຸງບາງດ້ານຕ້ອງໂດຍໄດ້ເອົາໃຈໃສ່ປັບປຸງແກ້ໄຂ, ສ່ວນການກໍ່ສ້າງພະນັກງານດ້ານວິຊາສະເພາະຍັງບໍ່ທັນໄດ້ດີເທົ່າທີ່ຄວນ ໂດຍສະເພາະແມ່ນການຂຶ້ນແຜນກໍ່ສ້າງ ແລະບຳລຸງຍົກລະດັບທາງດ້ານທິດສະດີ-ການເມືອງໃຫ້ແກ່ພະນັກງານແມ່ນມີຈຳນວນໜ້ອຍ.

4). ການສະໜອງງົບປະມານໃນການຈັດເຝິກອົບຮົມໃນຫົວຂໍ້ທີ່ຈຳເປັນຕ່າງໆໃຫ້ແກ່ການກໍ່ສ້າງ ແລະບຳລຸງພະນັກງານຢູ່ບັນດາກົມຍັງມີຈຳນວນຈຳກັດຈຶ່ງເຮັດໃຫ້ການກໍ່ສ້າງ ແລະບຳລຸງພະນັກງານບໍ່ທັນຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານຕ່າງໆ.

5). ການສັບຊ້ອນພະນັກງານບໍ່ແທດເໝາະກັບຄວາມຮູ້, ຄວາມສາມາດ ແລະພອນສະຫວັນຂອງພະນັກງານຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຕົວຈິງຍັງບໍ່ທັນໄດ້ດີເທົ່າທີ່ຄວນ ຈຶ່ງພາໃຫ້ເກີດມີພະນັກງານລັກສະນະເຫຼືອບໍ່ພໍ; ການຄັດເລືອກເອົາພະນັກງານໄປຍົກລະດັບດ້ານວິຊາສະເພາະ ຍັງບໍ່ທັນຖືກຕາມມາດຕະຖານທີ່ກຳນົດໄວ້ ແລະການປະເມີນຜົນພະນັກງານຍັງບໍ່ທັນຈັດຕັ້ງປະຕິບັດເປັນປົກກະຕິເທົ່າທີ່ຄວນ.

ດ້ວຍເຫດຜົນດັ່ງທີ່ກ່າວມານັ້ນ, ເພື່ອຍົກສູງຄຸນນະພາບໃນການການກໍ່ສ້າງ ແລະບຳລຸງພະນັກງານຢູ່ກະຊວງການຕ່າງປະເທດໃຫ້ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ ແລະຮັບປະກັນໃຫ້ຖືກຕ້ອງຕາມແນວທາງ, ນະໂຍບາຍຂອງພັກ, ກົດໝາຍ ແລະລະບຽບຕ່າງໆຂອງລັດ, ຕາມທັດສະນະຂອງຜູ້ຂຽນແລ້ວເຫັນວ່າຄວນເອົາໃຈໃສ່ປະຕິບັດບາງວຽກງານດັ່ງນີ້:

ໜຶ່ງ, ຄະນະພັກ-ຄະນະນຳກະຊວງການຕ່າງປະເທດ ຄວນເພີ່ມທະວີການຕິດຕາມ, ກວດກາວຽກງານດ້ານຄວາມຮູ້, ຄວາມສາມາດ, ຄຸນສົມບັດສິນທຳປະຕິວັດ ແລະແບບແຜນວິທີເຮັດວຽກຕ່າງໆຂອງພະນັກງານໃນ

ທຸກຂະແໜງການ ພ້ອມທັງສ້າງເປັນແຜນການລະອຽດຄົບຖ້ວນແລ້ວສ່ອງແສງລາຍງານໃຫ້ຄະນະພັກຂັ້ນເທິງຮັບຮູ້ ເພື່ອຊອກຫາທິດທາງ, ວິທີປັບປຸງ, ແກ້ໄຂໃນການກໍ່ສ້າງ ແລະບຳລຸງພະນັກງານແຕ່ລະລະບົບ, ແຕ່ລະປະເພດທີ່ເຫັນວ່າມີຄວາມຈຳເປັນຕົວຈິງຂອງໜ້າທີ່ວຽກງານ.

ສອງ, ຄະນະພັກ-ຄະນະນຳ ກະຊວງການຕ່າງປະເທດ ຄວນເພີ່ມທະວີຄວາມເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດພະນັກງານໃຫ້ມີຄວາມອຸ່ນອ່ຽນທຸ່ນທ່ຽງໃນການປະຕິບັດໜ້າທີ່ວຽກງານ; ຄຽງຄູ່ກັບເອົາໃຈໃສ່ບຸກທະລຸທາງດ້ານການພັດທະນາຊັບພະຍາກອນມະນຸດຢ່າງຕັ້ງໜ້າ ໂດຍເອົາໃຈໃສ່ການກໍ່ສ້າງ ແລະບຳລຸງພະນັກງານທຸກປະເພດ, ທຸກລະດັບທັງຢູ່ພາຍໃນ ແລະຕ່າງປະເທດ ເພື່ອເຮັດໃຫ້ພະນັກງານຮຸ່ນສືບທອດໃນແຕ່ລະຂັ້ນ, ແຕ່ລະຂະແໜງການມີຄວາມຮູ້, ຄວາມສາມາດຮັບປະກັນໜ້າທີ່ວຽກງານໃຫ້ມີຜົນສຳເລັດຢ່າງມີຄຸນນະພາບ.

ສາມ, ການກໍ່ສ້າງພະນັກງານຕ້ອງໃຫ້ສອດຄ່ອງກັບຕຳແໜ່ງງານ ແລະແຜນຍຸດທະສາດຂອງການພັດທະນາຊັບພະຍາກອນມະນຸດ, ຮັບປະກັນໃຫ້ໄດ້ 3 ຮຸ່ນຄື: ພະນັກງານຮຸ່ນອາວຸໂສ, ພະນັກງານຮຸ່ນກາງ ແລະພະນັກງານຮຸ່ນໜຸ່ມ ແລະທັງຮັບປະກັນ 3 ປະເພດຄື: ພະນັກງານນຳພາ, ພະນັກງານຄຸ້ມຄອງ ແລະພະນັກງານວິຊາການ.

ສີ່, ເພີ່ມທະວີການສະໜອງງົບປະມານໃນການຈັດເຝິກອົບຮົມໄລຍະສັ້ນ-ໄລຍະຍາວຢ່າງເໝາະສົມ ເພື່ອຍົກລະດັບຄວາມຮູ້, ຄວາມສາມາດຂອງພະນັກງານເຂົ້າໃນວຽກງານຕົວຈິງ ພ້ອມນັ້ນ, ກໍ່ຄວນອີງໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງຂອງພັກ, ສ້າງພະນັກງານຮຸ່ນໜຸ່ມຜູ້ທີ່ຈະສືບທອດ ເວົ້າລວມ, ພະນັກງານຜູ້ມີຕຳແໜ່ງບໍລິຫານຕ້ອງເລືອກເຟັ້ນເອົາຜູ້ທີ່ດີເດັ່ນໃນໜ້າທີ່ວຽກງານ, ຜູ້ເປັນແບບເປັນຢ່າງນຳໜ້າ ເພື່ອຍົກລະດັບທິດສະດີການເມືອງໃຫ້ມີຄວາມເຂົ້າໃຈແຈ້ງກ່ຽວກັບລັດທິມາກ-ເລນິນ, ແນວຄິດໄກສອນ ພົມວິຫານ ທັງເປັນການເສີມຂະຫຍາຍຈຸດດີ ແລະແກ້ໄຂບັນຫາທີ່ຄົງຄ້າງຕ່າງໆ.

ຫ້າ, ຊຸກຍູ້ສົ່ງເສີມພະນັກງານໄປສຶກສາ, ຄົ້ນຄວ້າຕາມສະຖາບັນການສຶກສາແຫ່ງຕ່າງໆ ແລະພິຈາລະນາຄວາມເໝາະສົມ ເພື່ອສ້າງໃຫ້ພະນັກງານມີລະດັບການສຶກສາທຽບທັນກັບສາກົນ ແລະສອດຄ່ອງກັບສະພາບຄວາມເປັນຈິງບົນພື້ນຖານຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ, ໄປຄຽງຄູ່ກັບການປະຕິບັດນະໂຍບາຍຢ່າງເໝາະສົມ ເພື່ອກະຕຸກຊຸກຍູ້ ແລະເປັນແຮງຈູງໃຈໃນການສຶກສາຄົ້ນຄວ້າ ເພື່ອດຶງດູດເອົາເຂົາເຈົ້າກັບຄືນມາຢູ່ກົມກອງຂອງຕົນພາຍຫຼັງທີ່ຮຽນຈົບ.

ຫົກ, ຄະນະພັກ, ຄະນະນຳຄວນຊຸກຍູ້ພາກສ່ວນກ່ຽວຂ້ອງຄົ້ນຄວ້າງົບປະມານທີ່ຈຳເປັນຕ້ອງປະຕິບັດນະໂຍບາຍຕາມຄວາມເໝາະສົມຕໍ່ພະນັກງານທີ່ນອນໃນແຜນກໍ່ສ້າງ ແລະບຳລຸງທີ່ໄປຍົກລະດັບຄວາມຮູ້, ຄວາມສາມາດ ເພື່ອນຳໃຊ້ໃຫ້ຖືກຕາມເປົ້າໝາຍໜ້າທີ່ວຽກງານ.

ສັງລວມແລ້ວ, ການກໍ່ສ້າງ ແລະບຳລຸງພະນັກງານຢູ່ກະຊວງການຕ່າງປະເທດເປັນວຽກງານທີ່ສຳຄັນທີ່ສຸດ ເພາະມັນໄດ້ສົ່ງຜົນກະທົບໂດຍກົງຕໍ່ການປະຕິບັດໜ້າທີ່ວຽກງານ, ຍ້ອນພະນັກງານແມ່ນກົກເຫງົ້າຂອງທຸກໆວຽກງານ, ເປັນຜູ້ປະຕິບັດໜ້າທີ່ຮັບໃຊ້

ພັກ-ລັດ ແລະປະຊາຊົນ, ການສຶກສາຄົ້ນຄວ້າ, ຍົກສູງຄຸນນະພາບວຽກງານກໍ່ສ້າງ ແລະບຳລຸງພະນັກງານ, ການຄຸ້ມຄອງປ້ອງກັນພະນັກງານ ແນໃສ່ສ້າງໃຫ້ພະນັກງານກາຍເປັນຜູ້ທີ່ຈົງຮັກພັກດີ, ບໍລິສຸດຕໍ່ຜົນປະໂຫຍດລວມຂອງຊາດ ແລະຂອງການປະຕິວັດ, ໃຫ້ມີຄວາມຮັບຜິດຊອບຕໍ່ໜ້າທີ່ທີ່ໄດ້ຮັບມອບໝາຍ, ມີຄວາມຮູ້ກ່ຽວກັບວຽກງານທີ່ຕົນເຮັດ ແລະຮູ້ນຳໃຊ້ຄວາມຮູ້ນັ້ນເຂົ້າໃສ່ເງື່ອນໄຂຕົວຈິງຢ່າງມີປະສິດທິຜົນ. ສະນັ້ນ, ພະນັກງານເອງກໍຕ້ອງເພີ່ມທະວີການຊອກຮູ້ຮໍ່າຮຽນ ເພື່ອຍົກລະດັບຄວາມຮູ້, ຄວາມສາມາດ, ມີຄວາມເປັນແບບຢ່າງທີ່ດີໃຫ້ແກ່ພະນັກງານໃຫ້ນັບມື້ສູງຂຶ້ນ.



ກະຊວງການຕ່າງປະເທດ ຈັດພິທີປະກາດການຈັດຕັ້ງ, ປາຖະກະຖາ ວັນສຳຄັນຂອງພັກຂອງຊາດ ແລະສະຫຼຸບຜົນງານການເຄື່ອນໄຫວວຽກງານປະຈຳປີ 2024 ແລະທິດທາງແຜນການສຳລັບປີ 2025, ຄັ້ງວັນທີ 23 ທັນວາ 2024, ທີ່ສູນການ ຮ່ວມມືສາກົນ ແລະ ການເຝິກອົບຮົມ (ICTC), ກະຊວງການຕ່າງປະເທດ



# ຄຸ້ມຄອງແຮງງານລາວ ແລະແຮງງານຕ່າງປະເທດ ຢູ່ແຂວງຫຼວງນ້ຳທາ

ຂຽນໂດຍ: ບຸນຈັນ ວັນວິໄຊ

ແຮງງານເປັນປັດໄຈໜຶ່ງທີ່ສຳຄັນຂອງກຳລັງການຜະລິດຂອງສັງຄົມ, ການຜະລິດວັດຖຸກ້າວໜ້າເທົ່າໃດປັດໄຈຂອງຄົນໃນການເຄື່ອນໄຫວ ແລະການຂະຫຍາຍການຜະລິດຍິ່ງມີຄວາມສຳຄັນເທົ່ານັ້ນ, ການປະຕິວັດວິທະຍາສາດ-ເຕັກໂນໂລຊີບໍ່ຫຼຸດຜ່ອນບົດບາດຂອງຄົນເຮົາຫາກເຮັດໃຫ້ພາລະບົດບາດປະດິດສ້າງຂອງຄົນເຮົາຍິ່ງເພີ່ມຂຶ້ນກໍ່ໃຫ້ເກີດຄວາມຕ້ອງການໃໝ່ສູງກວ່າເກົ່າຕໍ່ກັບການອອກແຮງງານ ໂດຍມີຈຸດພິເສດ ແລະລັກສະນະຫຼາຍຮູບຫຼາຍສີ ແລະວິທະຍາສາດຕາມການແບ່ງງານໃນສັງຄົມ "ແຮງງານ ແມ່ນພະລັງງານທັງທາງດ້ານຮ່າງກາຍ ແລະມັນສະໝອງ ຂອງມະນຸດທີ່ນຳໃຊ້ເຂົ້າໃນການເຮັດວຽກທີ່ກໍ່ ໃຫ້ເກີດຜົນທາງດ້ານເສດຖະກິດ, ວັດທະນະທຳ-ສັງຄົມ"[1]. ດັ່ງນັ້ນ, ແຮງງານຈຶ່ງຖືກແຍກເປັນຫຼາຍສາຍງານຕື່ມອີກ ເຊັ່ນ: ສາຍງານຂົງເຂດກະສິກຳ, ຂົງເຂດອຸດສາຫະກຳ, ຂົງເຂດບໍລິການ ແລະສາຍງານຝ່າຍບໍລິຫານປົກຄອງ. ນອກນັ້ນ, ໃນແຕ່ລະສາຍງານຍັງຖືກແຍກເປັນຫຼາຍຂະແໜງການຍ່ອຍໄປຕື່ມອີກ.

ປັດຈຸບັນ, ພັກ ແລະລັດຖະບານລາວຖືສຳຄັນການຄຸ້ມຄອງແຮງງານລາວ ແລະແຮງງານຕ່າງປະເທດ ໂດຍໄດ້ກຳນົດຫຼັກການ, ລະບຽບການ ແລະມາດຕະການກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາ, ການພັດທະນາສີມືແຮງງານ, ການຈັດຫາງານ, ການປົກປ້ອງແຮງງານ ເພື່ອຍົກສູງຄຸນນະພາບ, ຜະລິດຕະພາບຂອງງານໃນສັງຄົມຮອງຮັບການຫັນເປັນອຸດສາຫະກຳ ແລະທັນສະໄໝ ແນໃສ່ເຮັດໃຫ້ຜູ້ອອກແຮງງານ ແລະຜູ້ໃຊ້ແຮງງານຂອງຄົນລາວ ແລະຄົນຕ່າງປະເທດທີ່ເຂົ້າມາເຮັດວຽກຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວທີ່ເປັນຜູ້ຈັດການ, ວິຊາການ, ນັກວິສາວະກອນ, ນາຍຊ່າງ, ກຳມະກອນ, ຄູ-ອາຈານຄົນຕ່າງປະເທດທີ່ເຂົ້າເຮັດວຽກຕາມໂຄງການ, ກິດຈະການ, ຫົວໜ່ວຍທຸລະກິດ ແລະຕາມໂຮງຈັກໂຮງງານການຜະລິດຕ່າງໆໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວໄດ້ຮັບການປົກປ້ອງສິດ, ຜົນປະໂຫຍດອັນຊອບທຳ ແລະມີຊີວິດການເປັນຢູ່ນັບມື້ດີຂຶ້ນ ທັງເປັນການຄຸ້ມຄອງບັນດາແຮງງານໃຫ້ຖືກຕ້ອງຕາມລະບຽບການ ແລະກົດໝາຍກຳນົດໄວ້, ປະກອບສ່ວນເຂົ້າໃນການສົ່ງເສີມການລົງທຶນ, ພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະເຊື່ອມໂຍງກັບພາກພື້ນ ແລະສາກົນ.

ການຄຸ້ມຄອງແຮງງານລາວ ແລະແຮງງານຕ່າງປະເທດແມ່ນມີບົດບາດຫຼາຍເພາະໄດ້ຊ່ວຍເຮັດໃຫ້ຜູ້ໃຊ້ແຮງງານ ແລະຜູ້ອອກແຮງງານລາວບັນດາເຜົ່າ ແລະແຮງງານຕ່າງປະເທດ ສາມາດອອກແຮງງານ, ດຳເນີນທຸລະ

[1] ກົດໝາຍວ່າດ້ວຍແຮງງານ (ສະບັບປັບປຸງ) ເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013, ໜ້າທີ 1.

ກິດໃຫ້ຖືກຕ້ອງຕາມແນວທາງການເມືອງຂອງພັກ, ກົດໝາຍ ແລະລະບຽບຂອງລັດໂດຍສະເພາະແມ່ນການຄຸ້ມຄອງແຮງງານລາວ ພັກໄດ້ໃຫ້ທັດສະນະວ່າ: "ຮັບປະກັນໃຫ້ຄົນລາວມີລະດັບການສຶກສາຂັ້ນພື້ນຖານທີ່ມີຄຸນນະພາບ, ພັດທະນາດ້ານອາຊີບ ແລະມີສີມືການອອກແຮງງານຢ່າງບໍ່ຢຸດຢັ້ງ, ສາມາດຄົ້ນຄວ້າປະດິດສ້າງ ແລະເປັນເຈົ້າການນຳໃຊ້ວິທະຍາສາດ-ເຕັກໂນໂລຊີທີ່ທັນສະໄໝ ໂດຍສະເພາະແມ່ນໃນດ້ານເຕັກໂນໂລຊີຂ່າວສານ ແລະການສື່ສານໃຫ້ທຽມທັນກັບຄຸນນະພາບຂອງແຮງງານ ແລະບຸກຄະລາກອນຂອງບັນດາປະເທດໃນອານຸພາກພື້ນ"[(1)].

ສະນັ້ນ, ເພື່ອເຮັດໃຫ້ບັນດາມະຕິຂອງພັກປະກົດຜົນເປັນຈິງ ລັດໄດ້ຫັນມາເປັນນະໂຍບາຍການຄຸ້ມຄອງ ແລະນຳໃຊ້ແຮງງານລາວ ແລະແຮງງານຕ່າງປະເທດຢ່າງຖືກຕ້ອງມີປະສິດທິພາບ ແລະປະສິດທິຜົນຄື: ລັດສົ່ງເສີມການຄົ້ນຄວ້າ, ການນຳໃຊ້ວິທະຍາສາດ-ເຕັກນິກ, ການພັດທະນາສີມືແຮງງານ, ການປະດິດສ້າງການແຂ່ງຂັນສີມືແຮງງານ, ການສະໜອງຂໍ້ມູນ-ຂ່າວສານດ້ານແຮງງານ ເພື່ອຍົກສູງຄຸນນະພາບຂອງຜູ້ອອກແຮງງານ ແນໃສ່ສົ່ງເສີມການມີວຽກເຮັດງານທຳໃຫ້ຜູ້ອອກແຮງງານ, ຕອບສະໜອງແຮງງານໃຫ້ຕະຫຼາດແຮງງານພາຍໃນ ແລະຕ່າງປະເທດ ລວມທັງຍົກສູງການຄຸ້ມຄອງ, ປົກປ້ອງສິດ ແລະຜົນປະໂຫຍດອັນຊອບທຳຂອງຜູ້ອອກແຮງງານ ແລະຜູ້ໃຊ້ແຮງງານເວົ້າລວມ, ເວົ້າສະເພາະແມ່ນຄະນະພັກ, ຄະນະນຳ ແລະອົງການທີ່ກ່ຽວຂ້ອງຂອງແຂວງຫຼວງນ້ຳທາໄດ້ສຸມໃສ່ເຄື່ອນໄຫວຄຸ້ມຄອງແຮງງານລາວ ແລະແຮງງານຕ່າງປະເທດຢູ່ພາຍໃນແຂວງຢ່າງຕັ້ງໜ້າເນື່ອງຈາກ "ແຂວງຫຼວງນ້ຳທາເປັນແຂວງທີ່ມີຊາຍແດນຕິດກັບບັນດາປະເທດອ້ອມຂ້າງຄື: ສປຈີນ, ມຽນມາ ແລະມີປະຕູດ່ານ 5 ດ່ານຄື: ດ່ານສາກົນຈຳນວນ 2 ດ່ານ, ດ່ານທ້ອງຖິ່ນ ຈຳນວນ 2 ດ່ານ, ດ່ານປະເພນີ ຈຳນວນ 1 ດ່ານ; ມີ 1 ເຂດເສດຖະກິດພິເສດ, ມີເສັ້ນທາງລົດໄຟຜ່ານ ແລະເສັ້ນທາງ A3 ເຊື່ອມຈອດກັບປະເທດຣາຊາອານາຈັກໄທ"[(2)]. ໂດຍອີງໃສ່ຈຸດພິເສດຂອງແຂວງຈຶ່ງມີນັກລົງທຶນ, ຜູ້ອອກແຮງງານລາວອອກໄປເຮັດວຽກຢູ່ຕ່າງປະເທດ ແລະແຮງງານຕ່າງປະເທດເຂົ້າມາແຂວງຫຼວງນ້ຳທາ ທັງຖືກຕ້ອງຕາມກົດໝາຍ, ລະບຽບ ແລະມີຈຳນວນໜຶ່ງກໍລັກລອບເຂົ້າມາອອກແຮງງານຢູ່ແຂວງຫຼວງນ້ຳທາ. ອີກບັນຫາໜຶ່ງການນຳໃຊ້ເຕັກໂນໂລຊີທັນສະໄໝ, ໃຊ້ວິຊາການ, ຊ່ຽວຊານລະດັບສາກົນ ແລະໃຊ້ນັກວິຊາວະກອນຈຳນວນຫຼາຍ, ແຕ່ສະພາບແຮງງານລາວ ກໍຄືແຮງງານແຂວງຫຼວງນ້ຳທາໃນຄວາມເປັນຈິງບໍ່ສາມາດຕອບສະໜອງໄດ້ກັບຄວາມຕ້ອງການຂອງຕະຫຼາດແຮງງານ ຈຶ່ງມີການນຳເຂົ້າແຮງງານຕ່າງປະເທດ; ການນຳເຂົ້າແຮງງານຕ່າງປະເທດລັດໃຫ້ບູລິມະສິດບໍລິສັດທີ່ປະມູນໄດ້ໂຄງການເປັນຜູ້ຈັດຫາແຮງງານຕ່າງປະເທດຈຶ່ງນຳມາຂໍອະນຸຍາດນຳເຂົ້າຈາກອົງການຄຸ້ມຄອງແຮງງານ.

ດັ່ງນັ້ນ, ພະແນກແຮງງານ ແລະສະຫວັດດີການສັງຄົມແຂວງຫຼວງນ້ຳທາໃນນາມເຮັດ

---

(1) ເອກະສານການຈັດຕັ້ງເຊື່ອມຊຶມ ແລະຜັນຂະຫາຍາຍມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ, ໜ້າ 11.

(2) ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານຮອບດ້ານຂອງແຂວງ ປະຈຳປີ 2023, ໜ້າ 1.

ວຽກເສນາທິການດ້ານດັ່ງກ່າວ ພ້ອມທັງເປັນຈຸດສູນກາງປະສານກັບພາກສ່ວນກ່ຽວຂ້ອງໃນການຄຸ້ມຄອງແຮງງານ ກໍໄດ້ເອົາໃຈໃສ່ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຄຸ້ມຄອງແຮງງານລາວ ແລະແຮງງານຕ່າງ ປະເທດຢູ່ແຂວງຫຼວງນໍ້າທາ ດ້ວຍການຜັນຂະຫຍາຍຍຸດທະສາດ ແລະແຜນພັດທະນາວຽກງານກ່ຽວກັບແຮງງານດ້ວຍການເຜີຍແຜ່, ຕິດຕາມ, ຊີ້ນຳ ແລະກວດກາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍແຮງງານ, ລະບຽບການຕ່າງໆໃນການສ້າງ ແລະພັດທະນາສີມືແຮງງານ, ການຈັດຫາວຽກເຮັດງານທຳ ແລະການຄຸ້ມຄອງແຮງງານ: ຄຸ້ມຄອງແຮງງານລາວທີ່ເຮັດວຽກຢູ່ພາຍໃນ ແລະຕ່າງປະເທດ, ແຮງງານຕ່າງປະເທດທີ່ເຮັດວຽກຢູ່ ສປປ ລາວ; ດຳເນີນການໄກ່ເກ່ຍຂໍ້ຂັດແຍ່ງກ່ຽວກັບແຮງງານຕາມພາລະບົດບາດຂອງຕົນ; ຄົ້ນຄວ້າຄຳຮ້ອງຂໍສ້າງຕັ້ງ ຫຼື ລົບລ້າງວິສາຫະກິດ, ສະມາຄົມ, ມູນນິທິຕ່າງໆກ່ຽວກັບແຮງງານແລ້ວນຳສະເໜີກະຊວງແຮງງານ ແລະສະຫວັດດີການສັງຄົມ ເພື່ອພິຈາລະນາຕົກລົງ; ຊີ້ນຳ, ຕິດຕາມ ແລະຄຸ້ມຄອງການເຄື່ອນໄຫວຂອງບັນດາວິສາຫະກິດ, ສະມາຄົມ ແລະມູນນິທິຕ່າງໆກ່ຽວກັບແຮງງານທີ່ໄດ້ຮັບການສ້າງຕັ້ງຂຶ້ນໃນຂອບເຂດຄວາມຮັບຜິດຊອບຂອງຕົນ, ຕິດຕາມ, ເກັບກຳຂໍ້ມູນ-ຂ່າວ ສານກ່ຽວກັບແຮງງານ ແລະຕະຫຼາດແຮງງານ, ສະຫຼຸບວຽກງານກ່ຽວກັບແຮງງານແລ້ວລາຍງານໃຫ້ຂັ້ນເທິງຂອງຕົນຊາບ. ການຄຸ້ມຄອງແຮງງານລາວ ແລະແຮງງານຕ່າງປະເທດແມ່ນອີງໃສ່ຂໍ້ຕົກລົງສະບັບເລກທີ 4277/ຮສສ, ລົງວັນທີ 5/12/2016 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງເຈົ້າໜ້າທີ່ກວດກາແຮງງານ ແລະບັນດານິຕິກຳອື່ນໆທີ່ກ່ຽວຂ້ອງກັບການຄຸ້ມຄອງແຮງງານ, ສ່ວນແຮງງານລາວທີ່ໄປເຮັດວຽກຢູ່ຕ່າງປະເທດຍັງພົວພັນເຖິງຫຼາຍຂະແໜງການເຊັ່ນ: ກອງບັນຊາການປ້ອງກັນຄວາມສະຫງົບ, ພະແນກການຕ່າງປະເທດ, ພະແນກອຸດສາຫະກຳ ແລະການຄ້າແຂວງ, ພະແນກການເງິນແຂວງ, ພະແນກແຜນການ ແລະການລົງທຶນແຂວງ, 3 ອົງການຈັດຕັ້ງມະຫາຊົນ ແລະອົງການອື່ນທີ່ເປັນວຽກງານ ລະຫວ່າງຂະແໜງການຕ້ອງໄດ້ຮ່ວມມືກັນເຮັດ.

“ປັດຈຸບັນທົ່ວແຂວງຫຼວງນໍ້າທາມີຫົວໜ່ວຍທຸລະກິດທີ່ນຳໃຊ້ຜູ້ອອກແຮງງານທັງໝົດ 624 ຫົວໜ່ວຍ; ມີແຮງງານທັງໝົດ 4.046 ຄົນ, ຍິງ 1.556 ຄົນ; ໃນນີ້, ແຮງງານລາວ ຈຳນວນ 2.714 ຄົນ, ຍິງ 1.092 ຄົນ, ແຮງງານຈີນ ຈຳນວນ 1.091 ຄົນ ຍິງ 411 ຄົນ, ແຮງງານຫວຽດນາມ ຈຳນວນ 218 ຄົນ, ຍິງ 53 ຄົນ, ແຮງງານໄທ ຈຳນວນ 16 ຄົນ ແລະປະເທດອື່ນໆ ຈຳນວນ 7 ຄົນ. ລົງໂຄສະນາເຜີຍແຜ່ນິຕິກຳ ແລະກວດກາແຮງງານໄດ້ 246 ຄັ້ງ, ມີ 246 ຫົວໜ່ວຍ ທຽບໃສ່ແຜນການສາມາດປະຕິບັດໄດ້ 43,16%, ມີແຮງງານທີ່ໄດ້ຮັບການກວດກາທັງໝົດ 4.404 ຄົນ, ຍິງ 1.402 ຄົນ ; ໃນນີ້, ແມ່ນແຮງງານຕ່າງປະເທດ ຈຳນວນ 255 ຄົນ, ຍິງ 40 ຄົນ; ສ້າງກົດລະບຽບພາຍໃນຫົວໜ່ວຍແຮງງານໄດ້ 5 ຫົວໜ່ວຍ, ສ້າງສັນຍາແຮງງານຢູ່ຫົວໜ່ວຍແຮງງານໄດ້ 5 ຫົວໜ່ວຍ, ຮັບຄຳຮ້ອງທຸກເພື່ອແກ້ໄຂຂໍ້ຂັດແຍ່ງທາງດ້ານແຮງງານ ຈຳນວນ 7 ກໍລະນີ ເຊິ່ງສາມາດແກ້ໄຂສຳເລັດ 6 ກໍລະນີ ແລະອີກໜຶ່ງກໍລະນີແມ່ນຢູ່ໃນຂັ້ນຕອນເກັບກຳຂໍ້ມູນ ຜ່ານການແກ້ໄຂຂໍ້ຂັດແຍ່ງທາງດ້ານແຮງງານສາມາດທວງເງິນຄືນມາໃຫ້ແກ່ຜູ້ອອກແຮງງານ

ທັງໝົດ 835.208.580 ກີບ ທຽບໃສ່ແຜນການປະຕິບັດໄດ້ 98%”[1].

ແນະນຳໃຫ້ບັນດາບໍລິສັດ, ໂຮງຈັກໂຮງງານເອົາໃຈໃສ່ຮັກສາສະພາບແວດລ້ອມໃນສະຖານທີ່ເຮັດວຽກ, ຕິດຕັ້ງປ້າຍເຕືອນໄພ; ແນະນຳໃຫ້ຜູ້ອອກແຮງງານສວມໝວກກັນກະທົບ ແລະອຸປະກອນປ້ອງກັນຕົວ ແລະອື່ນໆ ເພື່ອປ້ອງກັນບໍ່ໃຫ້ເກີດອຸປະຕິເຫດແຮງງານ ພ້ອມແນະນຳໃຫ້ແຕ່ງຕັ້ງເຈົ້າໜ້າທີ່ຮັກສາຄວາມປອດໄພປະຈຳຢູ່ພາຍໃນບໍລິສັດ; ເບິ່ງແຍງສຸຂະພາບຜູ້ອອກແຮງງານໃຫ້ເປັນປົກກະຕິ ເປັນຕົ້ນແມ່ນການເຊັກສຸຂະພາບປະຈຳ 3 ເດືອນ, 6 ເດືອນ ແລະ 1 ປີ ໃຫ້ແກ່ຜູ້ອອກແຮງງານຢູ່ພາຍໃນບໍລິ ສັດຂອງຕົນ; “ສຳເລັດການແຕ່ງຕັ້ງຄະນະກຳມະການຄວາມປອດໄພ ແລະສຸຂະພາບແຮງງານຂັ້ນແຂວງ. ອອກບັດອະນຸຍາດເຮັດວຽກໃຫ້ແຮງງານຕ່າງປະເທດໄດ້ທັງໝົດ 2.219 ເທື່ອຄົນ, ຍິງ 500 ເທື່ອຄົນ ທຽບໃສ່ແຜນການປະຕິບັດໄດ້ 50% ສາມາດຂຶ້ນທະບຽນ ແລະອອກໃບອະນຸຍາດເຮັດວຽກໃຫ້ແຮງງານຕ່າງປະເທດໄດ້ 1.280 ຄົນ, ຍິງ 265 ຄົນ ທຽບໃສ່ແຜນ 679 ຄົນ ສາມາດປະຕິບັດໄດ້ 188,36%; ໃນນີ້, ແຮງງານຈີນ ຈຳນວນ 1.189 ຄົນ, ຍິງ 264 ຄົນ, ຫວຽດນາມ ຈຳນວນ 76 ຄົນ, ຍິງ 21 ຄົນ, ໄທ ຈຳນວນ 3 ຄົນ, ກຳປູເຈຍ ຈຳນວນ 2 ຄົນ, ໄນຈີເລຍ ຈຳນວນ 2 ຄົນ, ອຸກັນດາ ຈຳນວນ 1 ຄົນ, ມາເລເຊຍ ຈຳນວນ 1 ຄົນ, ຍີ່ປຸ່ນ ຈຳນວນ 1 ຄົນ, ເກົາຫຼີ ຈຳນວນ 5 ຄົນ, ຍິງ 1 ຄົນ.

ໄດ້ລົງເຜີຍແຜ່ກົດໝາຍ, ນິຕິກຳທີ່ກ່ຽວຂ້ອງ ແລະກວດກາແຮງງານໄດ້ທັງໝົດ 101 ຄັ້ງ, ມີ 101 ຫົວໜ່ວຍປະຕິບັດໄດ້ 112% ທຽບກັບແຜນການ (90 ຫົວໜ່ວຍ), ມີຜູ້ເຂົ້າຮ່ວມທັງໝົດ 4.573 ເທື່ອຄົນ, ຍິງ 1.577 ເທື່ອຄົນ; ໃນນີ້, ແຮງງານຕ່າງປະເທດ ຈຳນວນ 565 ເທື່ອຄົນ, ຍິງ 73 ເທື່ອຄົນ, ບໍ່ມີບັດອອກແຮງງານ ຈຳນວນ 6 ຄົນ (ເຮັດບົດບັນທຶກເພື່ອໃຫ້ຜູ້ກ່ຽວໄປເຮັດບັດອອກແຮງງານ). ສ້າງກົດລະບຽບພາຍໃນຫົວໜ່ວຍແຮງງານໄດ້ 2 ຫົວໜ່ວຍປະຕິບັດໄດ້ 40%; ສາມາດສ້າງຫົວໜ່ວຍມາດຕະຖານແຮງງານແຫ່ງຊາດໄດ້ 1 ຫົວໜ່ວຍປະຕິບັດໄດ້ 100%; ສຳເລັດການເກັບກຳຂໍ້ມູນຢູ່ຫົວໜ່ວຍແຮງງານຂະແໜງກະສິກຳ-ອາຫານໄດ້ 5 ຫົວໜ່ວຍ; ໄດ້ຮັບຄຳຮ້ອງທຸກເພື່ອໃຫ້ແກ້ໄຂຂໍ້ຂັດແຍງດ້ານແຮງງານ 1 ກໍລະນີ, ເປັນເງິນ ຈຳນວນ 12.320.000 ກີບ ສາມາດທວງເອົາເງິນຄ່າແຮງງານມາໃຫ້ແຮງງານຄົບຖ້ວນທຽບໃສ່ແຜນການປີປະຕິບັດໄດ້ 100%”[2].

ຄຽງຄູ່ກັບຜົນສຳເລັດທີ່ກ່າວມາຂ້າງເທິງນັ້ນການຄຸ້ມຄອງແຮງງານລາວ ແລະແຮງງານຕ່າງປະເທດຢູ່ແຂວງຫຼວງນ້ຳທາກໍຍັງມີບາງບັນຫາທີ່ຕັ້ງຂຶ້ນຈຳນວນໜຶ່ງທີ່ຈະຕ້ອງໄດ້ສຸມໃສ່ແກ້ໄຂຄື:

ໜຶ່ງ, ດ້ານກົງຈັກ ແລະບຸກຄະລາກອນ ໂດຍສະເພາະແມ່ນການຈັດຕັ້ງທີ່ຮັບຜິດຊອບ

[1] ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາວຽກງານແຮງງານ ແລະສະຫວັດດີການສັງຄົມ ກາງສະໄໝປີ (2021-2023) ແລະທິດທາງແຜນການພັດທະນາວຽກງານແຮງງານ ແລະສະຫວັດດີການສັງຄົມ ທ້າຍສະໄໝປີ (2023-2025) ໜ້າ 6.

[2] ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາວຽກງານແຮງງານ ແລະສະຫວັດດີການສັງຄົມ ກາງສະໄໝປີ (2021-2023) ແລະທິດທາງແຜນການພັດທະນາວຽກງານແຮງງານ ແລະສະຫວັດດີການສັງຄົມ ທ້າຍສະໄໝປີ (2023-2025) ໜ້າ 6.

ວຽກງານຄຸ້ມຄອງແຮງງານລາວ ແລະແຮງງານຕ່າງປະເທດ ຍັງບໍ່ທັນເຂັ້ມແຂງບວກກັບບົດຮຽນ ແລະປະສົບການ ຂອງພະນັກງານຮັບຜິດຊອບວຽກງານຄຸ້ມຄອງແຮງງານ ຍັງບໍ່ທັນຫຼາຍ, ພະນັກງານຈຳນວນໜຶ່ງຄວາມຮູ້ຄວາມສາມາດຍັງຕ່ຳ, ການຄຸ້ມຄອງຍັງມີຊ່ອງຫວ່າງເຊິ່ງເຮັດໃຫ້ກຸ່ມຄົນບໍ່ດີຈຳນວນໜຶ່ງສວຍໂອກາດລັກລອບນຳເຂົ້າແຮງງານຕ່າງປະເທດແບບຜິດກົດໝາຍ.

ສອງ, ນິຕິກຳທີ່ນຳໃຊ້ຄຸ້ມຄອງແຮງງານລາວ ແລະແຮງງານຕ່າງປະເທດຍັງບໍ່ທັນຄົບຊຸດ ແລະບໍ່ທັນຮັດກຸມເທົ່າທີ່ຄວນ, ດ້ານຍຸດທະສາດ ແລະວິທີຈັດຕັ້ງປະຕິບັດຍັງບໍ່ທັນເປັນເອກະພາບ, ບໍ່ເປັນໄປຕາມການກຳນົດ ຍັງເຮັດແບບໃຜແບບລາວ, ສ່ວນຫຼາຍເອື້ອຍອີງໃສ່ກະຊວງທີ່ເປັນໃຈກາງ, ກົນໄກກໍບໍ່ທັນສອດຄ່ອງກັບຄວາມຕ້ອງການ ຂອງວຽກງານຄຸ້ມຄອງແຮງງານຕ່າງປະເທດໃນໄລຍະໃໝ່, ບໍ່ທັນກັບສະພາບການຫັນປ່ຽນ ແລະການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ.

ສາມ, ການຈັດຕັ້ງເຜີຍແຜ່ບັນດາກົດໝາຍ, ນິຕິກຳ, ຄຳສັ່ງແນະນຳ, ແຈ້ງການຕ່າງໆຍັງບໍ່ທັນກວ້າງຂວາງ, ການຄົ້ນຄ້ວາ, ເຊື່ອມຊຶມບັນດານິຕິກຳ ແລະກົດໝາຍທີ່ກ່ຽວຂ້ອງຂອງບັນດາຫົວໜ່ວຍແຮງງານຍັງບໍ່ທັນສູງ,

ສີ່, ບັນດາຫົວໜ່ວຍທຸລະກິດຍັງບໍ່ທັນເປັນເຈົ້າການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການປະຕິບັດພັນທະຕາມກົດໝາຍແຮງງານກຳນົດໄວ້.

ເພື່ອເຮັດໃຫ້ການຄຸ້ມຄອງແຮງງານລາວ ແລະແຮງງານຕ່າງປະເທດຢູ່ແຂວງຫຼວງນ້ຳທາຖືກຕ້ອງ, ສອດຄ່ອງ, ມີປະສິດທິພາບ ແລະປະສິດທິຜົນສູງກວ່າເກົ່າ ອົງການປົກຄອງແຕ່ລະຂັ້ນຕ້ອງໄດ້ເອົາໃຈໃສ່ດັ່ງນີ້:

1). ຄະນະພັກ, ອົງການປົກຄອງແຕ່ລະຂັ້ນຕ້ອງປັບປຸງກົງຈັກ ແລະບຸກຄະລາກອນໃນຂະແໜງການທີ່ຮັບຜິດຊອບວຽກງານຄຸ້ມຄອງແຮງງານລາວ ແລະແຮງງານຕ່າງປະເທດໃຫ້ມີຄວາມເຂັ້ມແຂງ, ສອດຄ່ອງ, ເໝາະສົມກັບສາຍວິຊາສະເພາະທີ່ຈົບມາ ແລະປະສົບການຂອງພະນັກງານຮັບຜິດຊອບວຽກງານຄຸ້ມຄອງແຮງງານ, ຮັບປະກັນທາງດ້ານຄວາມຮູ້-ຄວາມສາມາດໃຫ້ສູງ, ອັດຕັນການຄຸ້ມຄອງທີ່ມີຊ່ອງຫວ່າງເພື່ອເຮັດໃຫ້ການປະຕິບັດວຽກມີປະສິດທິພາບ ແລະປະສິດທິຜົນສູງ.

2). ລັດຕ້ອງປັບປຸງ ແລະສ້າງນິຕິກຳໃໝ່ເພື່ອໃຫ້ສອດຄ່ອງ, ພຽງພໍກັບການຄຸ້ມຄອງແຮງງານໃນໄລຍະໃໝ່ດ້ວຍການສ້າງລະບົບຄຸ້ມຄອງລັດໃຫ້ມີຄວາມທັນສະໄໝ, ການປະຕິບັດກົດໝາຍຕ້ອງສັກສິດ ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງແຮງງານ, ເສດຖະກິດ-ສັງຄົມໃຫ້ເຂົ້າສູ່ລະບຽບການ; ຄຽງຄູ່ກັບການວາງຍຸດທະສາດການຄຸ້ມຄອງໃນແຕ່ລະໄລຍະ, ກຳນົດວິທີຄຸ້ມຄອງແຮງງານລາວ ແລະແຮງງານຕ່າງປະເທດໃຫ້ມີຄວາມເປັນເອກະພາບກັນໃນຂັ້ນມະຫາພາກ ແລະສອດຄ່ອງກັບສະພາບຄວາມເປັນຈິງ ຂອງທ້ອງຖິ່ນ

3). ຈັດຕັ້ງເຜີຍແຜ່ເຊື່ອມຊຶມລະບຽບກົດໝາຍຂອງລັດ, ແຈ້ງການຕ່າງໆຂອງພັກໃນແຕ່ລະໄລຍະ, ມະຕິຕ່າງໆຂອງສູນກາງພັກໃຫ້ພະນັກງານແຕ່ລະຂັ້ນ ແລະກຸ່ມເປົ້າໝາຍໄດ້ກຳແໜ້ນ, ເຊື່ອມຊຶມຢ່າງເປັນລະບົບຄົບຊຸດເພື່ອຮັບຮູ້, ເຂົ້າໃຈຖືກຕ້ອງເລິກເຊິ່ງ, ມີຄວາມເຊື່ອໝັ້ນຕໍ່ອຸດົມການ ກໍຄືບົດບາດການນຳພາຂອງພັກ, ອຸ່ນອ່ຽງທຸ່ນທ່ຽງ, ມີສະຕິເຄົາລົບລັດ

ຖະທຳມະນູນ, ກົດໝາຍ ຂອງລັດຢູ່ໃນຫົວໜ່ວຍແຮງງານ.

4). ຈັດຕັ້ງໂຄສະນາປຸກລະດົມບັນດາຫົວໜ່ວຍແຮງງານໃຫ້ມີສ່ວນຮ່ວມໃນການປະກອບສ່ວນຄຸ້ມ ຄອງແຮງງານລາວ ແລະຕ່າງປະເທດ ຕາມກົດໝາຍ ຂອງ ສປປ ລາວ ເປັນຕົ້ນແມ່ນແນະນຳໃຫ້ແຮງງານຕ່າງປະເທດໃຫ້ປະຕິບັດຕາມກົດໝາຍ, ລະບຽບ ແລະເຄົາລົບຮີດຄອງປະເພນີ; ສ້າງແຜນເພື່ອສ້າງແຮງງານລາວທົດແທນຢ່າງເໝາະສົມ ແລະຕ້ອງສະເໜີແຜນດັ່ງກ່າວຕໍ່ອົງການຄຸ້ມຄອງວຽກງານແຮງງານ; ນຳສົ່ງແຮງງານຕ່າງປະເທດອອກຈາກ ສປປ ລາວ ເມື່ອໝົດກຳນົດສັນຍາແຮງງານ ແລະສົ່ງບັດອະນຸຍາດເຮັດວຽກຄືນໃຫ້ອົງການຄຸ້ມຄອງວຽກງານແຮງງານ.

ສັງລວມແລ້ວ, ຄຸ້ມຄອງແຮງງານລາວ ແລະແຮງງານຕ່າງປະເທດແມ່ນມີຄວາມຈຳເປັນຢ່າງພາວະວິໄສຕໍ່ກັບການປະຕິບັດສອງໜ້າທີ່ຍຸດທະສາດຄື: ການປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດ ໂດຍສະເພາະແມ່ນເພື່ອເຮັດໃຫ້ ແຂວງຫຼວງນ້ຳທາມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນທີ່ສຸດຈະຕ້ອງໄດ້ຄຸ້ມຄອງແຮງງານລາວ ແລະແຮງງານຕ່າງປະເທດຢູ່ແຂວງຫຼວງນ້ຳທາ ທັງເປັນການວາງແຜນນະໂຍບາຍ ແລະເພື່ອປົກປ້ອງສິດຜົນປະໂຫຍດຂອງຜູ້ອອກແຮງງານ ແລະຜູ້ໃຊ້ແຮງງານໃຫ້ມີຄວາມເປັນທຳຕາມລະບຽບ, ກົດໝາຍຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.





ທ່ານ ວຽງສະຫວັດ ສີພັນດອນ ເຈົ້າແຂວງໆ ຫຼວງນ້ຳທາ ພ້ອມຄະນະລົງຕິດຕາມແຮງງານເກັບກູ້ໝາກຖົ່ວເຫຼືອງ ແລະໂຄງການທົດລອງປູກໝາກເຜັດຢູ່ເມືອງຫຼວງນ້ຳທາ ເຂດບ້ານພຽງງາມ,ບ້ານນ້ຳແງ້ນ, ບ້ານທົ່ງໃຈ້ໃຕ້ - ທົ່ງໃຈ້ເໜືອ ຕັ້ງວັນທີ ວັນທີ 5 ເມສາ 2024

# ເພີ່ມທະວີຕໍ່ວຽກງານກໍ່ສ້າງ-ບຳລຸງພະນັກງານ ຢູ່ແຂວງຫຼວງພະບາງ

ຂຽນໂດຍ: ບຸນຕີ ຊົ່ງຢ່າງຈື່

ພັກເຮົາເວລາໃດກໍເອົາໃຈໃສ່ຕໍ່ວຽກງານພະນັກງານ, ຖືວ່າວຽກງານພະນັກງານມີບົດບາດສຳຄັນ ທັງເປັນຍຸດທະສາດຂອງການປະຕິວັດ ເພາະວ່າ: "ພະນັກງານແມ່ນປັດໄຈຕັດສິນຜົນໄດ້ຜົນເສຍຂອງການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ ແລະວຽກງານພະນັກງານແມ່ນກຸນແຈສຳຄັນໃນຂະບວນວິວັດການຈັດຕັ້ງປະຕິບັດບົດບາດນຳພາຂອງພັກ ເພື່ອຮັບປະກັນບົດບາດຄວາມສຳຄັນດັ່ງກ່າວ, ໃນຊຸມປີຕໍ່ໜ້າມີຄວາມຈຳເປັນຕ້ອງສ້າງການຫັນປ່ຽນຢ່າງແຂງແຮງ ແລະເລິກເຊິ່ງ ໃນທຸກຂອດຂອງວຽກງານພະນັກງານ"[1]. ໃນພຶດຕິກຳໄດ້ພິສູດໃຫ້ເຫັນແລ້ວວ່າຖ້າບໍ່ມີຖັນແຖວພະນັກງານທີ່ມີຄວາມຈົງຮັກພັກດີ, ເປັນແບບຢ່າງນຳໜ້າ ແລະມີຄວາມໜັກແໜ້ນທາງດ້ານອຸດົມການກໍບໍ່ສາມາດເຮັດສຳເລັດການປະຕິວັດຊາດປະຊາທິປະໄຕໄດ້. ສະນັ້ນ, ຈິ່ງເວົ້າໄດ້ວ່າວຽກງານກໍ່ສ້າງ-ບຳລຸງພະນັກງານແມ່ນມີຄວາມສຳຄັນ ແລະຈຳເປັນຢ່າງພາວະວິໄສຕໍ່ການພັດທະນາເສດຖະກິດ-ສັງຄົມ. ໃນເງື່ອນໄຂເສດຖະກິດຕະຫຼາດ, ການກໍ່ສ້າງ-ບຳລຸງພະນັກງານເປັນປັດໄຈຕັດສິນກວ່າໝູ່ ເຊິ່ງຮຽກຮ້ອງໃຫ້ພະນັກງານມີທັດສະນະ, ຫຼັກໝັ້ນການເມືອງໜັກແໜ້ນ, ມີຄວາມຮູ້, ຄວາມສາມາດໃນການຄຸ້ມຄອງເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະດ້ານອື່ນໆ. ປະທານ ໄກສອນ ພົມວິຫານ ໄດ້ເວົ້າວ່າ: "ບັນຫາສຳຄັນທີ່ໜຶ່ງໃນວຽກກໍ່ສ້າງພັກແມ່ນວຽກງານກໍ່ສ້າງພະນັກງານ, ຢາກປະຕິບັດແນວທາງ, ນະໂຍບາຍຂອງພັກໄດ້ດີຕ້ອງມີພະນັກງານເຂັ້ມແຂງ, ພະນັກງານເປັນແຫຼ່ງທຶນຮອນອັນປະເສີດທີ່ສຸດຂອງພັກ, ເປັນຜູ້ນຳພາປະຊາຊົນ, ເປັນຜູ້ຮັບໃຊ້ປະຊາຊົນ, ເປັນຂົວຕໍ່ລະຫວ່າງພັກກັບມະຫາຊົນຫຼັງຈາກພັກມີນະໂຍບາຍອັນຖືກຕ້ອງແລ້ວ, ທຸກວຽກງານປະຕິວັດຂອງພັກຈະດີ ຫຼື ຮ້າຍ ຈະມີໄຊ ຫຼື ປະລາໄຊ ກໍລ້ວນແຕ່ແມ່ນພະນັກງານຂອງພັກເປັນຜູ້ຕັດສິນ"[2]. ດັ່ງນັ້ນ, ພັກເຮົາຈຶ່ງໄດ້ເນັ້ນໜັກວ່າ: "ພັດທະນາຊັບພະຍາກອນມະນຸດມີຄຸນນະພາບສູງຂຶ້ນທີ່ສາມາດຕອບສະໜອງຄວາມຕ້ອງການຂອງການພັດທະນາ, ມີຄວາມສາມາດຄົ້ນຄວ້າ ແລະນຳໃຊ້ວິທະຍາສາດ-ເຕັກໂນໂລຊີ ເພື່ອຍົກສູງປະສິດທິພາບ ແລະສ້າງມູນຄ່າເພີ່ມການຜະລິດ ແລະການບໍລິການ"[3].

ເພື່ອເຮັດໃຫ້ແນວທາງຂອງພັກກ່ຽວກັບການສ້າງ ແລະປະຕິບັດແຜນກຳນົດພະນັກງານເປັນລະບົບ ກໍຄືກໍ່ສ້າງ ແລະບຳລຸງໃຫ້ມີຄວາມຮູ້-ຄວາມສາມາດນັ້ນ, ລັດກໍໄດ້ເອົາໃຈໃສ່ຊຸກຍູ້ສົ່ງເສີມແນວທາງດັ່ງກ່າວດ້ວຍການ

---

[1] ເອກະສານກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ, ປີ 2021, ໜ້າ 90.

[2] ໄກສອນພົມວິຫານ, ນິພົນເລືອກເຟັ້ນ ເຫຼັ້ມ I, ປີ 1985, ໜ້າ 68.

[3] ເອກະສານກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ, ປີ 2021, ໜ້າ 193.

ວາງນະໂຍບາຍຕ່າງໆເຊັ່ນ: ໄດ້ອອກດຳລັດວ່າດ້ວຍລະບຽບຄຸ້ມຄອງລັດຖະກອນແຫ່ງ ສປປ ລາວ ສະບັບເລກທີ 82/ນຍ, ລົງວັນທີ 19 ພຶດສະພາ 2003 ມາດຕາ 26 ໄດ້ລະບຸວ່າ: ລັດຖະກອນມີສິດໄດ້ຮັບການບຳລຸງຍົກລະດັບຄວາມຮູ້-ຄວາມສາມາດ, ຄົ້ນຄວ້າ ແລະນຳໃຊ້ຜົນສຳເລັດທາງດ້ານວິທະຍາສາດເຂົ້າໃນວຽກງານຂອງຕົນຕາມຄວາມເໝາະສົມ; ກົດໝາຍ ວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015 ມາດຕາ 4 ລະບຸວ່າ: ສ້າງທຸກເງື່ອນໄຂໃຫ້ພະນັກງານ-ລັດຖະກອນທຸກເພດເຜົ່າຕາມຄວາມສາມາດຕົວຈິງໄດ້ຮັບການພັດທະນາທາງດ້ານການເມືອງ, ແນວຄິດ, ຈັນຍາບັນ, ຍົກລະດັບດ້ານວິຊາສະເພາະ, ຄວາມຮູ້, ຄວາມສາມາດເພື່ອເປັນກຳລັງແຮງໃນການປະຕິບັດໜ້າທີ່ໃນການປົກປັກຮັກສາ, ສ້າງສາພັດທະນາປະເທດຊາດ ແລະຮັບໃຊ້ປະຊາຊົນຢ່າງສຸດກົດສຸດປາຍດ້ວຍຄວາມບໍລິສຸດໃຈ ແລະມາດຕາ 28 ລະບຸວ່າ: ການລາພັກໄປຍົກວິຊາສະເພາະຕາມຂໍ້ຕົກລົງຂອງຈັດຕັ້ງ. ນອກຈາກນັ້ນ, ກໍຍັງມີນະໂຍບາຍຂອງລັດຕໍ່ກັບການປັບປຸງ, ເບິ່ງແຍງ ແລະແກ້ໄຂຊີວິດການເປັນຢູ່ໃຫ້ແກ່ພະນັກງານ ເພື່ອໃຫ້ສອດຄ່ອງກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ.

"ທົ່ວແຂວງຫຼວງພະບາງມີພະນັກງານ-ລັດຖະກອນທັງໝົດ 10.921 ສະຫາຍ, ຍິງ 4.875 ສະຫາຍ; ໃນນີ້, ຂັ້ນແຂວງ ຈຳນວນ 7.909 ສະຫາຍ, ຍິງ 3.610 ສະຫາຍ, ຂັ້ນເມືອງ ຈຳນວນ 3.012 ສະຫາຍ, ຍິງ 1.265 ສະຫາຍ. ດ້ານລະດັບວິຊາສະເພາະປະກອບມີປະລິນຍາເອກ ຈຳນວນ 42 ຄົນ, ຍິງ 8 ຄົນ, ປະລິນຍາໂທ ຈຳນວນ 667 ຄົນ, ຍິງ 161 ຄົນ, ປະລິນຍາຕີ ຈຳນວນ 3.141 ຄົນ, ຍິງ 1.117 ຄົນ, ຊັ້ນສູງ ຈຳນວນ 4.110 ຄົນ, ຍິງ 2.008 ຄົນ, ຊັ້ນກາງ ຈຳນວນ 2.742 ຄົນ, ຍິງ 1.465 ຄົນ, ຊັ້ນຕົ້ນ ຈຳນວນ 208 ຄົນ, ຍິງ 111 ຄົນ ແລະບໍ່ມີຊັ້ນ ຈຳນວນ 11 ຄົນ, ຍິງ 5 ຄົນ"(1).

ການກໍ່ສ້າງ-ບຳລຸງພະນັກງານແມ່ນຕິດພັນກັບແຜນກຳນົດສ້າງພະນັກງານນຳພາ-ຄຸ້ມຄອງໃນແຕ່ລະໄລຍະ, ຕິດພັນກັບຂະບວນການຕົວຈິງຢູ່ຮາກຖານ, ການຂຶ້ນແຜນກໍ່ສ້າງພະນັກງານແມ່ນສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງວຽກງານ ແລະສອດຄ່ອງກັບສະພາບຈຸດພິເສດຂອງພະນັກງານ ເປັນຕົ້ນແມ່ນດ້ານຄວາມຮູ້, ຄວາມສາມາດ ແລະພອນສະຫວັນຂອງແຕ່ລະບຸກຄົນ ເພື່ອສົ່ງເສີມທ່າແຮງບົ່ມຊ້ອນ, ສ້າງເງື່ອນໄຂໃຫ້ພະນັກງານໄດ້ຮັບການບຳລຸງຍົກລະດັບດ້ານຕ່າງໆ. ສະນັ້ນ, ເພື່ອໃຫ້ພະນັກງານຢູ່ແຂວງຫຼວງພະບາງໄດ້ຍົກລະດັບດ້ານວິຊາສະເພາະ ແລະດ້ານທິດສະດີ ໂດຍສະເພາະແມ່ນຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະຄວາມຮູ້-ຄວາມສາມາດນັ້ນ, ຕະຫຼອດໄລຍະທີ່ຜ່ານມາ ຄະນະພັກ, ຄະນະນຳແຂວງຫຼວງພະບາງກໍໄດ້ພະຍາຍາມຊອກທຸກເງື່ອນໄຂເພື່ອສ້າງພະນັກງານໃຫ້ມີຄຸນນະພາບດີຂຶ້ນເທື່ອລະກ້າວ ໂດຍໄດ້ຖືເອົາວຽກງານການເມືອງ-ແນວຄິດເປັນກົກ, ເປັນວຽກບູລິມະສິດສຳຄັນອັນດັບທຳອິດໃນການເຄື່ອນໄຫວນຳພາ-ຊີ້ນຳ ແລະສອດທ້ອຍໄປກັບວຽກງານ ເປັນຕົ້ນແມ່ນຈັດຕັ້ງເຊື່ອມຊຶມມະຕິ, ຄຳສັ່ງ, ນິຕິກຳ

(1) ບົດສະຫຼຸບວຽກງານກໍ່ສ້າງພັກ-ພະນັກງານ ແລະວຽກງານປັບປຸງກົງຈັກການຈັດຕັ້ງ ແຂວງຫຼວງພະບາງ ປະຈຳປີ 2023.

ແລະເອກະສານຕ່າງໆທີ່ສຳຄັນຂອງພັກ, ຂອງລັດເປັນປົກກະຕິ ແລະຕໍ່ເນື່ອງເຮັດໃຫ້ພະນັກງານ-ລັດຖະກອນມີສະຕິຕໍ່ການຈັດຕັ້ງສູງຂຶ້ນ; ການກໍ່ສ້າງ-ບຳລຸງພະນັກງານແມ່ນອີງໃສ່ມະຕິ ວ່າດ້ວຍວຽກງານສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ສະບັບເລກທີ 032/ກມສພ, ລົງວັນທີ 03/01/2018 ແລະຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍມາດຕະຖານພະນັກງານນຳພາ-ຄຸ້ມຄອງ, ວຽກງານຄຸ້ມຄອງພະນັກງານ ແລະວຽກງານສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ສະບັບເລກທີ 292/ຄຈສພ, ລົງວັນທີ 26/04/2018 ແລະຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານຕົວຈິງ ດ້ວຍການຄັດເລືອກເອົາພະນັກງານຜູ້ທີ່ພົ້ນເດັ່ນໃນຂະບວນການຈິງ ແລະຄົບຖ້ວນຕາມມາດຕະຖານເງື່ອນໄຂໄປກໍ່ສ້າງ-ບຳລຸງ ໂດຍສະເພາະແມ່ນພະນັກງານຜູ້ທີ່ມີຄຸນທາດການເມືອງທີ່ໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ຫ້າວຫັນຕໍ່ໜ້າທີ່ວຽກງານໄປຍົກລະດັບດ້ານວິຊາສະເພາະ ແລະດ້ານທິດສະດີທັງຢູ່ພາຍໃນ ແລະຕ່າງປະເທດ ໃນໄລຍະປີ 2021-2023 ດັ່ງນີ້:

- "ປີ 2021 ສົ່ງພະນັກງານໄປຍົກລະດັບຢູ່ພາຍໃນປະເທດ ແລະຕ່າງປະເທດທັງໝົດ 75 ຄົນ, ຍິງ 12 ຄົນຄື: ໄປຍົກລະດັບຢູ່ພາຍໃນປະເທດທັງໝົດ 70 ຄົນ, ຍິງ 12 ຄົນ; ໃນນັ້ນ, ລະບົບປະລິນຍາໂທ ຈຳນວນ 4 ຄົນ, ຊັ້ນກາງ ຈຳນວນ 65 ຄົນ, ຍິງ 12 ຄົນ; ບຳລຸງທິດສະດີຊັ້ນສູງລະບົບ 5 ເດືອນ ຈຳນວນ 1 ຄົນ; ໄປຍົກລະດັບຢູ່ຕ່າງປະເທດທັງໝົດ 5 ຄົນ; ໃນນີ້, ຢູ່ ສສ ຫວຽດນາມຄື: ລະບົບປະລິນ ຍາເອກຈຳນວນ 1 ຄົນ, ປະລິນຍາໂທ ຈຳນວນ 1 ຄົນ, ປະລິນຍາຕີ ຈຳນວນ 3 ຄົນ"[(1)].

- "ປີ 2022 ສົ່ງພະນັກງານໄປຍົກລະດັບຢູ່ພາຍໃນປະເທດ ແລະຕ່າງປະເທດທັງໝົດ 199 ຄົນ, ຍິງ 23 ຄົນຄື: ໄປຍົກລະດັບຢູ່ພາຍໃນປະເທດທັງໝົດ 197 ຄົນ, ຍິງ 21 ຄົນ; ໃນນັ້ນ, ລະບົບປະລິນຍາໂທ ຈຳນວນ 5 ຄົນ, ຍິງ 1 ຄົນ; ບຳລຸງທິດສະດີຊັ້ນສູງລະບົບ 5 ເດືອນ ຈຳນວນ 1 ຄົນ; ເລຂາພັກເມືອງໄປເຝິກອົບຮົມຫົວຂໍ້ສະເພາະລະບົບ 15 ວັນ ຈຳນວນ 6 ສະຫາຍ ແລະເລຂາພັກບ້ານ-ນາຍບ້ານໄປເຝິກອົບຮົມທິດສະດີການເມືອງ-ການປົກຄອງ ລະບົບ 10 ວັນ ຈຳນວນ 185 ສະຫາຍ, ຍິງ 20 ສະຫາຍ; ໄປຍົກລະດັບຢູ່ຕ່າງປະເທດທັງໝົດ 2 ຄົນເປັນຍິງ; ໃນນີ້; ຢູ່ ສສ ຫວຽດນາມຄື: ບຳລຸງທິດສະດີຊັ້ນສູງລະບົບ 5 ເດືອນ ຈຳນວນ 1 ຄົນເປັນຍິງ, ເຝິກອົບຮົມວຽກງານແມ່ຍິງ ລະບົບ 5 ເດືອນຈຳນວນ 1 ຄົນເປັນຍິງ"[(2)].

- "ໃນປີ 2023 ສົ່ງພະນັກງານໄປຍົກລະດັບຢູ່ພາຍໃນປະເທດ ແລະຕ່າງປະເທດທັງໝົດ 28 ຄົນ, ຍິງ 4 ຄົນຄື: ໄປຍົກລະດັບຢູ່ພາຍໃນປະເທດທັງໝົດ 9 ຄົນ, ຍິງ 3 ຄົນ; ໃນນັ້ນ, ລະບົບປະລິນຍາໂທ ຈຳນວນ 4 ຄົນ; ບຳລຸງທິດສະດີຊັ້ນສູງລະບົບ 9 ເດືອນ ຈຳນວນ 5 ຄົນ, ຍິງ 3 ຄົນ; ໄປຍົກລະດັບຢູ່ຕ່າງປະເທດທັງໝົດ 19 ຄົນ, ຍິງ 1 ຄົນ; ໃນນີ້; ຢູ່ ສສ ຫວຽດນາມຄື:

---

[(1)] ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ-ພະນັກງານ,ວຽກງານປັບປຸງກົງຈັກການຈັດຕັ້ງ ປີ 2021 ແລະທິດທາງແຜນການປີ 2022, ໜ້າ 4.

[(2)] ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ-ພະນັກງານ ແລະປັບປຸງກົງຈັກການຈັດຕັ້ງ ໃນທີ່ວອີງຄະນະພັກແຂວງຫຼວງພະບາງ ປະຈຳປີ 2022 ແລະທິດທາງໜ້າທີ່ໃນ ປີ 2023, ໜ້າ 6.

ປະລິນຍາເອກ ຈຳນວນ 1 ຄົນ, ປະລິນຍາໂທ ຈຳນວນ 5 ຄົນ, ປະລິນຍາຕີ ຈຳນວນ 4 ຄົນ; ບຳລຸງທິດສະດີຂັ້ນກາງ ຈຳນວນ 5 ຄົນ, ຍິງ 1 ຄົນ, ເຝິກອົບຮົມຫົວຂໍ້ສະເພາະໄລຍະສັ້ນ ຈຳນວນ 1 ຄົນ; ໄປເຝິກອົບຮົບທາງດ້ານທິດສະດີ ແລະ ພຶດຕິກຳຕົວຈິງຢູ່ ສປ ຈີນ ໄລຍະ 12 ວັນ ຈຳນວນ 2 ຄົນ ແລະໄປເຝິກອົບຮົມຫົວຂໍ້ສະເພາະລະບົບ 15 ວັນ ຢູ່ປະເທດຍີ່ປຸ່ນ ຈຳນວນ 1 ສະຄົນ”[1]. ນອກຈາກ, ກໍ່ສ້າງຢ່າງເປັນລະບົບແລ້ວທາງຄະນະພັກ, ຄະນະນຳແຂວງ ກໍຍັງໄດ້ເອົາໃຈໃສ່ສ້າງເງື່ອນໄຂໃຫ້ພະນັກງານໄດ້ເຂົ້າຮ່ວມເຝິກອົບຮົມໄລຍະສັ້ນ ເພື່ອຍົກລະດັບຄວາມຮູ້, ຄວາມສາມາດໃນຫຼາຍດ້ານໄປພ້ອມກັບການປັບປຸງດ້ານອື່ນໆ ແນໃສ່ສ້າງໃຫ້ພະນັກງານມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນທາງດ້ານການເມືອງ, ແນວຄິດ, ການຈັດຕັ້ງ, ແບບແຜນວິທີເຮັດວຽກ, ວິຊາສະເພາະທີ່ແນ່ນອນ. ຜ່ານການກໍ່ສ້າງ-ບຳລຸງຍົກລະດັບເຫັນໄດ້ວ່າພະນັກງານຢູ່ໃນຂອບເຂດແຂວງມີການເຕີບໃຫຍ່ຂະຫຍາຍຕົວທາງດ້ານປະລິມານ ແລະຄຸນນະພາບນັບມື້ສູງຂຶ້ນເລື້ອຍໆ ສະແດງອອກຖັນແຖວສະມາຊິກພັກ-ພະນັກງານມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສົມທຳປະຕິວັດ, ເປັນແບບຢ່າງໃນການຈັດຕັ້ງປະຕິບັດກົດລະບຽບຂອງພັກ, ກົດໝາຍຂອງລັດ, ມີຄວາມສັດຊື່ບໍລິສຸດ, ມີຈັນຍາບັນ, ຈັນຍາທຳທີ່ໜັກແໜ້ນ, ເປັນແບບຢ່າງທີ່ດີໃຫ້ແກ່ຖັນແຖວພະນັກງານ ກໍຄືມະຫາຊົນ ທັງໝົດນີ້ກໍຍ້ອນຄວາມເອົາໃຈໃສ່ນຳພາ-ຊີ້ນຳຂອງຄະນະພັກຂັ້ນຕ່າງໆ ແລະຍ້ອນຄວາມບຸກບືນຫ້າວຫັນ, ຕັ້ງໜ້າເຝິກ ຝົນຫຼໍ່ຫຼອມຕົນເອງຂອງພະນັກງານແຕ່ລະຂັ້ນ.

ຄຽງຄູ່ກັບຜົນສຳເລັດທີ່ຍາດມາໄດ້ ເມື່ອທຽບໃສ່ວຽກງານຕົວຈິງໃນປັດຈຸບັນເຫັນວ່າຍັງບໍ່ທັນຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນເງື່ອນໄຂໃໝ່ ກໍຄືການພັດທະນາຊັບພະຍາກອນມະນຸດພາຍໃນແຂວງໃນຕໍ່ໜ້າໄດ້ຢ່າງພຽງພໍ ແລະຍັງມີບາງດ້ານທີ່ຄວນສືບຕໍ່ປັບປຸງແກ້ໄຂເຊັ່ນ:

1). ການຂຶ້ນແຜນກໍ່ສ້າງ-ບຳລຸງພະນັກງານບໍ່ທັນໄດ້ເອົາໃຈໃສ່ຄົ້ນຄວ້າ, ວິໄຈຢ່າງເລິກເຊິ່ງທາງດ້ານຄຸນທາດການເມືອງ, ຄຸນສົມບັດສົມທຳປະຕິວັດ; ການບຳລຸງສ້າງພະນັກງານຈຳນວນໜຶ່ງບໍ່ທັນຕິດພັນກັບແຜນກຳນົດ.

2). ການສ້າງເງື່ອນໄຂ, ອຳນວຍຄວາມສະດວກໃຫ້ພະນັກງານໄດ້ຍົກລະດັບໃນລະບົບຕ່າງໆເຫັນວ່າຍັງບໍ່ທົ່ວເຖິງ ເປັນຕົ້ນແມ່ນພະນັກງານເພດຍິງ, ຊົນເຜົ່າ, ເຂດຫ່າງໄກສອກຫຼີກ, ທຸລະກັນດານ ແລະລູກຫຼານຜູ້ທີ່ມີຕົ້ນກຳເນີດຈາກຖັນແຖວກຳມະກອນ, ກະສິກອນ ແລະຜູ້ທີ່ພົ້ນເດັ່ນຈາກຂະບວນການຕົວຈິງບໍ່ທັນໄດ້ດີເທົ່າທີ່ຄວນ.

3). ການຄຸ້ມຄອງ, ກຳນົດ ແລະປະຕິບັດລະບອບ, ລະບຽບການຕ່າງໆກ່ຽວກັບພະນັກງານ ເປັນຕົ້ນແມ່ນລະບອບການເລືອກເຟັ້ນ, ນຳໃຊ້, ການຄຸ້ມຄອງ, ການສັບປ່ຽນໜ້າທີ່, ການປົດຕຳແໜ່ງ ແລະການປະຕິບັດນະໂຍບາຍອັນຈຳເປັນຕໍ່ພະນັກງານຍັງບໍ່ທັນເຂັ້ມງວດຕາມຂໍ້ກຳນົດ, ລະບຽບການຕ່າງໆ; ບໍ່ທັນກ້າຫານໃນການແກ້ໄຂພະນັກງານທີ່ເສຍທາດຂາດຄຸນ, ຂາດຄວາມຮັບຜິດຊອບຕໍ່ໜ້າທີ່,

[1] ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ, ພະນັກງານ ແລະປັບປຸງກົງຈັກການຈັດຕັ້ງ ປະຈຳປີ 2023 ແລະທິດທາງໜ້າທີ່ ປີ 2024, ໜ້າ 5.

ສວຍໂອກາດຫາຜົນປະໂຫຍດສ່ວນຕົວ, ສໍ້ລາດບັງຫຼວງ ແລະສ້າງຄວາມເສື່ອມເສຍຕໍ່ບົດບາດຂອງພັກ-ລັດຢ່າງເຂັ້ມງວດ.

4). ການເລືອກເຟັ້ນ ແລະຫັນເອົາພະນັກງານຂອງແຂວງລົງເມືອງ, ຫັນເອົາພະນັກງານຂັ້ນເມືອງລົງສູ່ຮາກຖານບ້ານ, ກຸ່ມບ້ານຍັງບໍ່ເຮັດເປັນລະບົບຄົບຊຸດຕາມກົດໝາຍວ່າດ້ວຍລັດຖະກອນ ແລະການບຳລຸງຍົກລະດັບລະບົບຕ່າງໆໃຫ້ພະນັກງານຢູ່ຮາກຖານຍັງເຮັດໄດ້ໜ້ອຍ.

ເພື່ອກໍ່ສ້າງ-ບຳລຸງພະນັກງານຢູ່ແຂວງຫຼວງພະບາງໃຫ້ເພີ່ມຂຶ້ນທາງດ້ານປະລິມານ ແລະຄຸນນະພາບຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາໃນໄລຍະໃໝ່ຄະນະພັກ, ຄະນະນຳ ແລະອົງການປົກຄອງແຕ່ລະຂັ້ນຂອງແຂວງຫຼວງພະບາງຄວນສຸມໃສ່ບາງວິທີການ ດັ່ງນີ້:

ໜຶ່ງ, ເອົາໃຈໃສ່ເລືອກເຟັ້ນພະນັກງານໄປຍົກລະດັບທາງດ້ານທິດສະດີການເມືອງ ແລະວິຊາສະເພາະຢູ່ພາຍໃນ ແລະຕ່າງປະເທດໃຫ້ຫຼາຍຂຶ້ນກວ່າເກົ່າໃຫ້ຖືກຕ້ອງຕາມມາດຕະຖານ, ແຜນທີ່ກຳນົດໄວ້ ແລະເຂົ້າສູ່ລະບົບເທື່ອລະກ້າວ; ສ້າງການຫັນປ່ຽນຢ່າງແຂງແຮງ ແລະເລີກເຊື່ອງທຸກຂອດໃນວຽກພະນັກງານ ດ້ວຍການຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນນິຕິກຳກ່ຽວກັບວຽກພະນັກງານ; ສູ້ຊົນສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງໃຫ້ເປັນລະບົບຄົບຊຸດຮັບໃຊ້ໜ້າທີ່ການເມືອງໃນສະເພາະໜ້າ ແລະຍາວນານ ເພື່ອເປັນພື້ນຖານໃນການກໍ່ສ້າງ-ບຳລຸງ ແລະສັບຊ້ອນ-ຈັດວາງພະນັກງານໃຫ້ຕອບສະໜອງຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ ແລະໜ້າທີ່ການເມືອງຂອງທຸກຂະແໜງການ ໂດຍປະຕິບັດຕາມທິດ ມີຂຶ້ນ-ມີລົງ, ມີເຂົ້າ-ມີອອກ ແນໃສ່ເຮັດໃຫ້ກົງຈັກການຈັດຕັ້ງມີຄວາມສະຫງົບ, ໜັກແໜ້ນ, ເຂັ້ມແຂງ ແລະເຄື່ອນໄຫວຢ່າງມີປະສິດທິຜົນ.

ສອງ, ເພີ່ມທະວີເອົາໃຈໃສ່ສ້າງເງື່ອນໄຂ, ອຳນວຍຄວາມສະດວກໃຫ້ພະນັກງານແຕ່ລະປະເພດ, ແຕ່ລະຮຸ່ນໄດ້ຍົກລະດັບໃນລະບົບຕ່າງໆ ເພື່ອສ້າງໃຫ້ພະນັກງານທົ່ວແຂວງຫຼວງພະບາງມີຄວາມຮູ້, ຄວາມສາມາດດ້ານວິຊາສະເພາະ ແລະດ້ານທິດສະດີໃນລະດັບທີ່ແນ່ນອນ ຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະແມ່ນເລັ່ງໃສ່ພະນັກງານເພດຍິງ, ຊົນເຜົ່າ, ເຂດຫ່າງໄກສອກຫຼີກ, ທຸລະກັນດານ ແລະລູກຫຼານຜູ້ທີ່ມີຕົ້ນກຳເນີດຈາກຖັນແຖວກຳມະກອນ, ກະສິກອນ ແລະຜູ້ທີ່ພົ້ນເດັ່ນຈາກຂະບວນການຕົວຈິງໃນແຕ່ລະຂົງເຂດວຽກງານຕ່າງໆໃຫ້ມີຈຳນວນເພີ່ມຂຶ້ນ.

ສາມ, ເອົາໃຈໃສ່ປັບປຸງ, ຄຸ້ມຄອງ, ກຳນົດ ແລະປະຕິບັດລະບອບການຕ່າງໆກ່ຽວກັບພະນັກງານໃຫ້ຖືກຕ້ອງ ແລະເຂັ້ມງວດຕາມຂໍ້ກຳນົດ, ລະບຽບການຕ່າງໆ ເປັນຕົ້ນແມ່ນລະບອບການເລືອກເຟັ້ນ, ນຳໃຊ້, ການຄຸ້ມຄອງ, ການສັບປ່ຽນໜ້າທີ່, ການປົດຕຳແໜ່ງ ແລະການປະຕິບັດນະໂຍບາຍອັນຈຳເປັນຕໍ່ພະນັກງານ; ເອົາໃຈໃສ່ປະຕິບັດນະໂຍບາຍຕໍ່ພະນັກງານທີ່ມີຄຸນສົມບັດດີ, ມີຄວາມຮູ້-ສາມາດສົມຄູ່ກັບໜ້າທີ່ ແລະມີຜົນງານຕົວຈິງທີ່ໄດ້ຜ່ານຂະບວນການທົດສອບມາແລ້ວເຊັ່ນ: ເລື່ອນຊັ້ນ, ຍ້ອງຍໍຊົມເຊີຍ; ພ້ອມດຽວກັນນັ້ນ, ກໍຕ້ອງຕີຖອຍທ່າອ່ຽງເລືອກເຟັ້ນ, ນຳໃຊ້ພະນັກງານຈຸ້ມເຈື້ອເຊື້ອສາຍ, ທ້ອງຖິ່ນ ແລະຮັກແພງແບບກຸ່ມກ້ອນ. ເອົາໃຈໃສ່ແກ້ໄຂພະນັກງານທີ່ເສຍ

ທາດຂາດຄຸນ, ຂາດຄວາມຮັບຜິດຊອບຕໍ່ໜ້າທີ່, ສວຍໂອກາດຫາຜົນປະໂຫຍດສ່ວນຕົວ, ສໍ້ລາດບັງຫຼວງ ແລະສ້າງຄວາມເສື່ອມເສຍຕໍ່ພາລະບົດບາດຂອງພັກ-ລັດ ຕ້ອງມີມາດຕະການແກ້ໄຂເຂັ້ມງວດ.

ສີ່, ເອົາໃຈໃສ່ເລືອກເຟັ້ນ ແລະທັບເອົາພະນັກງານຂອງແຂວງລົງເມືອງ, ທັບເອົາພະນັກງານຂັ້ນເມືອງລົງສູ່ຮາກຖານບ້ານ, ກຸ່ມບ້ານນັບມື້ເພີ່ມຂຶ້ນກວ່າເກົ່າ, ພ້ອມກັນນັ້ນກໍ່ເລືອກເຟັ້ນເອົານັກສຶກສາທີ່ຮຽນຈົບວິຊາສະເພາະແລ້ວລົງປະຈຳຮາກຖານ ແຕ່ເປັນລັດຖະກອນຢູ່ຂັ້ນເມືອງ ເພື່ອສ້າງເປັນພະນັກງານຫຼັກແຫຼ່ງຢູ່ບ້ານໃນອະນາຄົດ ແລະເອົາໃຈໃສ່ຕັ້ງໜ້າບຳລຸງຍົກລະດັບລະບົບຕ່າງໆ ໃຫ້ພະນັກງານຢູ່ຮາກຖານບ້ານໃຫ້ກາຍເປັນປົກກະຕິຕໍ່ເນື່ອງ ແລະມີຈຳນວນເພີ່ມຂຶ້ນ.

ສັງລວມແລ້ວ, ການກໍ່ສ້າງ-ບຳລຸງພະນັກງານແມ່ນຂະບວນວິວັດແຫ່ງການກະທົບໃສ່ພະນັກງານ ແຕ່ລະຮຸ່ນ ແນໃສ່ກໍ່ສ້າງ-ບຳລຸງພະນັກງານໃຫ້ຖືກຕ້ອງ ແລະສອດຄ່ອງກັບສະພາບຄວາມເປັນຈິງ ເພາະວ່າທຸກຂະບວນການວິວັດລ້ວນແຕ່ມີຄວາມຕ້ອງການບຸກຄະລາກອນທີ່ມີຄວາມຮູ້, ຄວາມສາມາດ; ສະນັ້ນ, ວຽກງານກໍ່ສ້າງ-ບຳລຸງພະນັກງານແມ່ນມີຄວາມສຳຄັນ ແລະຈຳເປັນຮີບດ່ວນໃນພາລະກິດປະຕິວັດຊາດ, ເພາະການສ້າງສາ ແລະພັດທະນາປະເທດຊາດກ້າວໄປສູ່ຈຸດໝາຍທີ່ພັກ-ລັດໄດ້ກຳນົດໄວ້ ມັນຮຽກຮ້ອງໃຫ້ທຸກຂັ້ນ, ທຸກຂະແໜງການຕ້ອງປະກອບດ້ວຍພະນັກງານທີ່ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດສິນທຳປະຕິວັດ ເປັນຕົ້ນແມ່ນຄວາມຮູ້ທາງດ້ານທິດສະດີການເມືອງ, ຄວາມຮູ້ທາງດ້ານວິຊາສະເພາະ, ຄວາມຮູ້ທາງດ້ານວິທະຍາສາດ, ເຕັກໂນໂລຊີທີ່ທັນສະໄໝ ໃນລະດັບທີ່ແນ່ນອນ ເພື່ອປະຕິບັດໜ້າທີ່ການເມືອງທີ່ພັກ-ລັດມອບໝາຍໃຫ້ມີປະສິດທິຜົນສູງຂຶ້ນເລື້ອຍໆ ເຊິ່ງຕະຫຼອດໄລຍະຜ່ານມາ, ຄະນະພັກ, ຄະນະບຳແຂວງຫຼວງພະບາງໄດ້ເອົາໃຈໃສ່ເພີ່ມທະວີຕໍ່ວຽກງານກໍ່ສ້າງ-ບຳລຸງພະນັກງານຢູ່ແຂວງຫຼວງພະບາງໂດຍໄດ້ຈັດຕັ້ງປະຕິບັດຢ່າງເນື່ອງນິດລຽນຕິດ, ເຮັດຢ່າງມີແຜນການ, ມີຈຸດປະສົງ ແລະເປົ້າໝາຍຢ່າງຈະແຈ້ງ, ກໍ່ສ້າງ-ບຳລຸງພະນັກງານຕິດພັນກັບແຜນກຳນົດພະນັກງານຢ່າງເປັນລະບົບຄົບຊຸດ ແລະຕໍ່ເນື່ອງ ເພື່ອຮັບປະກັນໃຫ້ພະນັກງານມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດສິນທຳປະຕິວັດ ແລະມີຄວາມຊື່ສັດບໍລິສຸດຕໍ່ພັກ, ຕໍ່ລັດ, ຕໍ່ປະຊາຊົນບັນດາເຜົ່າ, ມີຄວາມດຸໝັ່ນຂະຫຍັນພຽນ, ອົດທົນປະຢັດມັດທະຍັດ, ມີແຜນດຳລົງຊີວິດທີ່ປອດໃສຂາວສະອາດ ເພື່ອປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດໃຫ້ໄປເຖິງຈຸດໝາຍປາຍທາງທີ່ກຳນົດໄວ້.

# ເພີ່ມທະວີການນຳພາຂອງຄະນະພັກກະຊວງກັບວຽກງານກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຢູ່ກະຊວງສາທາລະນະສຸກ

ຂຽນໂດຍ: ພອນໄຊ ຫຼວງວິໄລ

ພັກປະຊາຊົນ ປະຕິວັດລາວ ແມ່ນພັກກຳອຳນາດ, ນຳພາທົ່ວປວງຊົນປົກປັກຮັກສາ ແລະສ້າງ ສາພັດທະນາປະເທດ; ແມ່ນກອງນຳໜ້າທີ່ມີການຈັດຕັ້ງໜາແໜ້ນ, ແມ່ນການຈັດຕັ້ງການເມືອງສູງສຸດຂອງຊົນຊັ້ນກຳມະກອນ ເປັນຕົວແທນທີ່ຈິງຮັກພັກດີຢ່າງສະເໝີຕົ້ນສະເໝີປາຍຕໍ່ສິດ ແລະຜົນປະ ໂຫຍດຂອງຊົນຊັ້ນກຳມະກອນລາວຊາວຜູ້ອອກແຮງງານ ແລະຂອງຊາດລາວ. ແນວຄິດໄກສອນ ພົມ ວິຫານ ແລະມູນເຊື້ອອັນດີງາມຂອງພັກເປັນພື້ນຖານທາງດ້ານແນວຄິດ, ທິດສະດີຂອງພັກ, ເປັນເຂັມຊີ້ທິດໃຫ້ແກ່ການຈັດຕັ້ງ ແລະການເຄື່ອນໄຫວຂອງພັກ "ພັກຕ້ອງມີແຜນນະໂຍບາຍ, ຍຸດໂທບາຍ ແລະວິທີອັນຖືກຕ້ອງ ເພື່ອປະຕິບັດໜ້າທີ່ການເມືອງຂອງຕົນເອງໃຫ້ໄດ້ດີ"[1]. ພັກໄດ້ອອກແຮງປັບປຸງປົວແປງພັກເພື່ອໃຫ້ພັກມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນຢູ່ສະເໝີ. ພັກຍາມໃດກໍຖືສຳຄັນການເສີມຂະຫຍາຍປະຊາທິປະໄຕພາຍໃນການຈັດຕັ້ງພັກແຕ່ລະຂັ້ນໄປພ້ອມກັບການປະຕິບັດຫຼັກການລວມສູນປະຊາທິປະໄຕຢ່າງເຂັ້ມງວດ ແນໃສ່ເສີມຂະຫຍາຍສະຕິປັນຍາ, ຫົວຄິດປະດິດສ້າງ ແລະຄວາມຮັບຜິດຊອບຂອງຄະນະພັກ ແລະສະມາຊິກພັກຕໍ່ການຄົ້ນຄວ້າພິຈາລະນາບັນຫາຕ່າງໆໃນການນຳພາ-ຊີ້ນຳໃຫ້ຖືກຕ້ອງແທດເໝາະກັບຕົວຈິງພ້ອມທັງຕ້ານພະຍາດອາດຍາສິດ, ຜະເດັດການອ້າຍດຽວ, ລ່ວງລະເມີດກົດລະບຽບພັກ, ລະເມີດປະຊາທິປະໄຕ, ບໍ່ເຄົາລົບລັດຖະທຳມະນູນ ແລະກົດໝາຍ; ຕ້ານການແບ່ງແຍກພາຍໃນພັກ, ການສ້າງກຸ່ມກ້ອນ, ຈຸ້ມເຈື້ອເຊື້ອສາຍ, ພັກພວກ ແລະທ້ອງຖິ່ນ. ໃນກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໄດ້ກ່າວວ່າ: "ເພື່ອຮັບປະກັນການຈັດຕັ້ງປະຕິບັດທິດທາງ ແລະບັນດາຄາດໝາຍຕົ້ນຕໍທີ່ພັກວາງອອກສຳລັບໃນຊຸມປີຕໍ່ໜ້າທີ່ຕ້ອງສືບຕໍ່ປັບປຸງການຈັດຕັ້ງພັກແຕ່ລະຂັ້ນໃຫ້ມີຄວາມເຂັ້ມແຂງ, ເດັດດ່ຽວແກ້ໄຂບັນຫາຄົງຄ້າງພາຍໃນພັກ ແລະເຮັດໃຫ້ການຈັດຕັ້ງຮາກຖານພັກມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ເປັນແກນນຳໃນລະບົບການເມືອງ"[2]; ຄຽງຄູ່ກັນນັ້ນ, ເພື່ອຮັບປະກັນເຮັດໃຫ້ການນຳພາຂອງພັກສາມາດເຮັດສຳເລັດພາລະກິດປະຕິວັດໃນເງື່ອນໄຂ ແລະສະພາບແວດລ້ອມໃໝ່, ກົມການເມືອງສູນກາງພັກໄດ້ອອກ ຄຳສັ່ງ ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ສະບັບເລກທີ 01/ກມສພ, ລົງວັນທີ 03 ມັງກອນ 2018.

ປັດຈຸບັນ "ອົງຄະພັກກະຊວງສາທາລະ

[1] ໄກສອນ ພົມວິຫານ, ນິພົນເລືອກເຟັ້ນ, ເຫຼັ້ມ II, ປີ 1987, ໜ້າ 16.

[2] ເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ, ປີ 2021, ໜ້າ 85.

ນະສຸກມີ 74 ຮາກຖານພັກ; ໃນນັ້ນ, ມີ 5 ຄະນະພັກຮາກຖານ, ມີ 29 ໜ່ວຍພັກຮາກຖານ ແລະມີ 40 ໜ່ວຍພັກຂຶ້ນກັບຄະນະພັກຮາກຖານ; ຄະນະບໍລິຫານງານພັກກະຊວງສາທາລະນະສຸກປະກອບມີ 17 ສະຫາຍ, ຍິງ 3 ສະຫາຍ, ຄະນະປະຈຳພັກ ຈຳນວນ 5 ສະຫາຍ, ຍິງ 1 ສະຫາຍ; ຄະນະພັກຮາກຖານ ຈຳນວນ 29 ສະຫາຍ, ຍິງ 7 ສະຫາຍ; ຄະນະໜ່ວຍພັກຮາກຖານ ຈຳນວນ 81 ສະຫາຍ, ຍິງ 33 ສະຫາຍ; ຄະນະໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ ຈຳນວນ 100 ສະຫາຍ, ຍິງ 52 ສະຫາຍ; ມີສະມາຊິກພັກທັງໝົດ 2.041 ສະຫາຍ , ຍິງ 1.125 ສະຫາຍ; ໃນນັ້ນ, ສະມາຊິກພັກສົມບູນ ຈຳນວນ 1.811 ສະຫາຍ, ຍິງ 979 ສະຫາຍແລະສຳຮອງ 230 ສະຫາຍ, ຍິງ 146 ສະຫາຍ. ນອກນັ້ນ, ຍັງມີສະມາຊິກພັກບຳນານ ຈຳນວນ 214 ສະຫາຍ, ຍິງ 95 ສະຫາຍ ແລະສະມາຊິກພັກທີ່ເປັນນັກສຶກສາ ຈຳນວນ 211 ສະຫາຍ, ຍິງ 97 ສະຫາຍ. ຜ່ານການຈັດຕັ້ງປະຕິບັດແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ທົ່ວອົງຄະນະພັກກະຊວງສາທາລະນະສຸກ ປະຈຳປີ 2023 ສາມາດຍາດໄດ້ຜົນສຳເລັດດັ່ງນີ້:

ໜຶ່ງ, ດ້ານການເມືອງ-ແນວຄິດ: ອົງຄະນະພັກກະຊວງໄດ້ຈັດຕັ້ງເຜີຍແຜ່, ເຊື່ອມຊຶມບັນດາເອກະສານຕ່າງໆຂອງພັກ-ຂອງຊາດຢູ່ຂັ້ນກະຊວງ ຈຳນວນ 9 ຄັ້ງ ປະກອບມີ 63 ເອກະສານ, ມີຜູ້ເຂົ້າຮ່ວມທັງໝົດ 11.394 ເທື່ອຄົນ, ຍິງ 7.055 ເທື່ອຄົນ; ຄຽງຄູ່ກັນນັ້ນ, ໄດ້ມອບໃຫ້ເລຂາໜ່ວຍພັກນຳໄປເຜີຍແຜ່ຕໍ່ພະນັກງານ, ສະມາຊິກພັກຢູ່ຂັ້ນຂອງຕົນ; ຜ່ານການສຶກສາອົບຮົມດ້ານແນວຄິດ ສາມາດຕີລາຄາໄດ້ວ່າສະມາຊິກພັກ-ພະນັກງານຕະຫຼອດຮອດນັກສຶກສາແພດມີທັດສະນະຫຼັກໝັ້ນຊຶນຊັ້ນ, ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດທີ່ຖືກຕ້ອງ, ມີຄວາມຈົງຮັກພັກດີຕໍ່ພັກ, ຕໍ່ລະບອບໃໝ່, ມີນ້ຳໃຈເສຍສະລະຮັບໃຊ້ຊາດ, ຮັບໃຊ້ປະຊາຊົນດີຂຶ້ນ; ສາມາດຕອບຕ້ານປາກົດການຫຍໍ້ທໍ້ທີ່ເກີດຂຶ້ນພາຍໃນພັກ, ເດັດດ່ຽວຕໍ່ສູ້ຕ້ານການໂຄສະນາບິດເບືອນ, ມີສະຕິໃນການບໍລິໂພກຂໍ້ມູນຂ່າວສານຕ່າງໆ, ຕ້ານແນວຄິດຫຼາຍເຄົ້າ, ຫຼາຍພັກ, ຈຸ້ມເຈື້ອ, ພັກພວກ-ກຸ່ມກ້ອນ; ຕ້ານແນວຄິດ ອາດຍາສິດ, ເອກະຊົນ, ສໍ້ລາດບັງຫຼວງ, ແນວຄິດສວຍໂອກາດໃນທຸກຮູບແບບ.

ສອງ, ດ້ານການຈັດຕັ້ງ: ຍຶດໝັ້ນຢ່າງເຂັ້ມງວດຕາມ 5 ຫຼັກການ, 3 ທິດນຳໃນການກໍ່ສ້າງ ແລະປັບປຸງພັກ. ເອົາໃຈໃສ່ກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຕິດພັນກັບການຮັກສາລະບອບດຳເນີນຊີວິດການເມືອງຢູ່ໜ່ວຍພັກປະຈຳເດືອນເປັນປົກກະຕິ, ເຮັດໃຫ້ສະມາຊິກພັກມີສະຕິເຄົາລົບການຈັດຕັ້ງ ແລະປະຕິບັດລະບຽບວິໄນຢ່າງເຂັ້ມງວດ; ເອົາໃຈໃສ່ເຮັດໜ້າທີ່ຂະຫຍາຍພັກ ໂດຍຖືເອົາຄຸນນະພາບເປັນກົກເລືອກເຟັ້ນເອົາຜູ້ທີ່ດີເດັ່ນ, ມີມາດຕະຖານ ແລະເງື່ອນໄຂຄົບຖ້ວນເຊິ່ງສາມາດຂະຫຍາຍພັກໄດ້ທັງໝົດ 830 ສະຫາຍ, ຍິງ 417 ສະຫາຍ; ໃນນັ້ນ, ເລື່ອນສະມາຊິກພັກສຳຮອງເຂົ້າເປັນສະມາຊິກພັກສົມບູນ ຈຳນວນ 305 ສະຫາຍ, ຍິງ 136 ສະຫາຍ, ມະຫາຊົນກ້າວໜ້າເຂົ້າເປັນສະມາຊິກພັກສຳຮອງ ຈຳນວນ 274 ສະຫາຍ, ຍິງ 111 ສະຫາຍ, ຮຽນກົດລະບຽບ 138 ສະຫາຍ, ຍິງ 90 ສະຫາຍ, ຮຽນສະໜັບສະໜູນ ຈຳນວນ 113 ສະຫາຍ, ຍິງ 80 ສະຫາຍ; ພ້ອມຈັດຕັ້ງພິທີຮຽນກົດລະບຽບ ແລະຮຽນສະໜັບສະໜູນໄດ້ 6 ຄັ້ງ

(ເຫັນວ່າລື່ນຄາດໝາຍເກືອບ 4 ເທົ່າ); ໄດ້ບົ່ງຕົວແຕ່ງຕັ້ງທົດແທນຄະນະໜ່ວຍພັກ 10 ຮາກຖານພັກ, ມີ 21 ສະຫາຍ, ຍິງ 10 ສະຫາຍ; ຈັດຊຸດອົບຮົມທາງສຽງສັງຄົມໄດ້ 1 ຄັ້ງ, ຈັດຊຸດອົບຮົມພາວະການເປັນຜູ້ນຳໃຫ້ຜູ້ບໍລິຫານລະດັບສູງໄດ້ 1 ຄັ້ງ, ຈັດຊຸດອົບຮົມວຽກງານກໍ່ສ້າງພັກໄດ້ 1 ຄັ້ງ. ນອກຈາກນັ້ນ, ກໍໄດ້ຄົ້ນຄວ້າ 6 ຫົວຂໍ້ແນວຄິດຊີ້ນຳຂອງປະທານ ໄກສອນ ພົມວິຫານ ກ່ຽວກັບວຽກງານສາທາລະນະສຸກ.

ສາມ, ດ້ານແບບແຜນການນຳພາ: ຄະນະພັກຮາກຖານ, ຄະນະໜ່ວຍພັກຮາກຖານສ່ວນຫຼາຍປະຕິບັດຕາມພາລະບົດບາດ, ສິດ, ໜ້າທີ່ທີ່ໄດ້ກຳນົດໄວ້ໃນກົດລະບຽບພັກ ໂດຍຍຶດໝັ້ນ ແລະປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ; ໄດ້ຄົ້ນຄວ້າ, ປຶກສາຫາລື ແລະຕົກລົງບັນຫາສຳຄັນເປັນໝູ່ຄະນະ; ໜ່ວຍພັກສ່ວນຫຼາຍເຄື່ອນໄຫວມີແຜນການ, ມີຈຸດສຸມ, ປະຕິບັດລະບອບແບ່ງງານ, ແບ່ງຄວາມຮັບຜິດຊອບຊີ້ນຳພາຍໃນຄະນະໜ່ວຍພັກ ແລະແບ່ງງານໃຫ້ສະມາຊິກພັກແຕ່ລະສະຫາຍຈະແຈ້ງ, ມີການຕິດຕາມ, ກວດກາຄວາມຮັບຜິດ ຊອບຂອງສະມາຊິກພັກ, ມີການສະຫຼຸບຕີລາຄາ, ຖອດຖອນບົດຮຽນການປະຕິບັດວຽກງານເປັນແຕ່ລະໄລຍະ; ປະຕິບັດລະບອບປະຊຸມ, ສ່ອງແສງລາຍງານວຽກງານພາຍໃນໜ່ວຍພັກ ແລະຮັກສາລະບອບລາຍງານ ເພື່ອຂໍທິດຊີ້ນຳຈາກຄະນະພັກຂັ້ນເທິງເປັນປົກກະຕິ.

ສີ່, ການນຳພາປະຕິບັດໜ້າທີ່ການເມືອງ: ໄດ້ສຸມໃສ່ປະເມີນການຈັດຕັ້ງປະຕິບັດແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2023 ຢ່າງເປັນຂະບວນຟົດຟື້ນ, ນຳພາສ້າງແຜນກໍ່ສ້າງ-ບຳລຸງພະນັກງານຕາມແຜນກຳນົດພະນັກງານນຳພາ-ຄຸ້ມຄອງຂັ້ນກະຊວງຄຸ້ມຄອງ; ເອົາໃຈໃສ່ປະຕິບັດນະໂຍບາຍຕໍ່ພະນັກງານ ດ້ວຍຫຼາຍຮູບການເຊັ່ນ: ຍ້ອງຍໍຜົນງານວຽກດີຄົນເດັ່ນ, ຂະບວນການແຂ່ງຂັນຮັກຊາດ ແລະພັດທະນາ; ເອົາໃຈໃສ່ຊີ້ນຳປັບປຸງນິຕິກຳຕ່າງໆເຊັ່ນ: ສຳເລັດການສ້າງກົດໝາຍ ຈຳນວນ 3 ສະບັບ, ປັບປຸງຈຳນວນ 6 ສະບັບ, ສຳເລັດຍຸດສະສາດແຫ່ງຊາດກ່ຽວກັບການກັນ ແລະຄວບຄຸມການຕິດເຊື້ອໃນສະຖານທີ່ບໍລິການປິ່ນປົວທຸກຂັ້ນ, ສຳເລັດຍຸດທະສາດການປະຕິຮູບສາທາລະນະສຸກ ໄລຍະ III (2021-2025) ແລະໄລຍະ IV (2026-2030), ສຳເລັດການສ້າງປຶ້ມຄູ່ມືພື້ນຖານການຜະລິດຢາພື້ນເມືອງ ແລະການປິ່ນປົວດ້ວຍການແພດພື້ນເມືອງ; ອັນພົ້ນເດັ່ນແມ່ນໄດ້ຮັບການຢັ້ງຢືນຈາກອົງການອະນາໄມໂລກກ່ຽວກັບການລົບລ້າງພະຍາດຂາຊ້າງອອກຈາກ ສປປ ລາວ; ນຳພາຕິດຕາມການເຝົ້າລະວັງ ແລະສະກັດກັ້ນການລະບາດຂອງພະຍາດຕາມລະດູການ ແລະອື່ນໆ... ຮາກຖານພັກສ່ວນຫຼາຍຮູ້ນຳພາ-ຊີ້ນຳພະນັກງານ-ລັດຖະກອນແພດ ແລະຮູ້ນຳພາໃນການປະຕິບັດໜ້າທີ່ວິຊາສະເພາະດ້ວຍການປຸກລະດົມ, ຊຸກຍູ້ສະມາຊິກພັກ-ພະນັກງານເອົາໃຈໃສ່ຍົກສູງຄວາມສາມາດ ແລະຄວາມຮັບຜິດຊອບທີ່ໄດ້ຮັບມອບໝາຍ; ຮູ້ນຳພາອົງການຈັດຕັ້ງມະຫາຊົນເຄື່ອນໄຫວຕາມພາລະບົດບາດ, ເປັນໃຈກາງເຕົ້າໂຮມຄວາມສາມັກຄີ ແລະປະຕິບັດຂໍ້ແຂ່ງຂັນຂອງແຕ່ລະອົງການຈັດຕັ້ງ ເພື່ອເປັນກຳລັງແຮງໃຫ້ແກ່ໜ່ວຍພັກໃນການປະຕິບັດໜ້າທີ່ວິຊາສະເພາະ ມີຜົນສຳເລັດ; ຮູ້ນຳພາວຽກງານປ້ອງກັນພາຍໃນ; ມີຄວາມຮັບຜິດ

ຊອບສຶກສາອົບຮົມສະມາຊິກພັກທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ປົກປັກຮັກສາຄວາມສະຫງົບປອດໄພຂອງສຳນັກງານ-ອົງການ ແລະບ້ານທີ່ຕົນດຳລົງຊີວິດ; ປະກອບສ່ວນປະຕິບັດພັນທະປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ຕາມນະໂຍບາຍຂອງພັກໄດ້ກຳນົດໄວ້.

ຜ່ານການປະເມີນຄືນການຈັດຕັ້ງປະຕິບັດຕາມມາດຕະຖານ, ເງື່ອນໄຂທີ່ໄດ້ກຳນົດໄວ້ ສະມາຊິກພັກສົມບູນທີ່ມີມາດຖານເງື່ອນໄຂສາມາດຕີລາຄາແບ່ງປະເພດທັງໝົດ 1.596 ສະຫາຍ, ຍິງ 934 ສະຫາຍ); ໃນນັ້ນ, ສະມາຊິກພັກແຂງ ຈຳນວນ 1.546 ສະຫາຍ, ຍິງ 909 ສະຫາຍ ເທົ່າກັບ 96,7%, ສະມາຊິກພັກກາງ ຈຳນວນ 50 ສະຫາຍ, ຍິງ 25 ສະຫາຍ ເທົ່າກັບ 3,1%, ສະມາຊິກພັກອ່ອນ ແລະເສຍທາດບໍ່ມີ; ຈັດປະເພດໜ່ວຍພັກໄດ້ 69 ໜ່ວຍ; ໃນນັ້ນໜ່ວຍພັກແຂງຈຳນວນ 59 ໜ່ວຍພັກ ເທົ່າກັບ 85.5%, ໜ່ວຍພັກກາງ ຈຳນວນ 10 ໜ່ວຍພັກ ເທົ່າກັບ 14.5%; ສ່ວນໜ່ວຍພັກອ່ອນ ບໍ່ມີ”[(1)].

ຜ່ານການປັບປຸງ ແລະກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຢູ່ອົງຄະນະພັກກະຊວງສາທາລະນະສຸກ ເຫັນວ່າມີຫຼາຍດ້ານໄດ້ຮັບການປັບປຸງດີຂຶ້ນການນຳພາ-ຊີ້ນຳຖືກຕ້ອງສອດຄ່ອງກັບສະພາບຄວາມເປັນຈິງ, ແຕ່ຄຽງຄູ່ກັບຜົນສຳເລັດທີ່ຍາດມາໄດ້ ກໍຍັງມີບາງດ້ານທີ່ຕ້ອງໄດ້ເອົາໃຈໃສ່ ປັບປຸງຕື່ມດັ່ງນີ້:

1). ມີບາງຮາກຖານພັກບໍ່ທັນເອົາໃຈໃສ່ສຶກສາອົບຮົມ, ກໍ່ສ້າງສະມາຊິກພັກໃຫ້ມີຄວາມໜັກແໜ້ນທາງດ້ານອຸດົມການຂອງພັກ; ຄຸນທາດການເມືອງ, ຄວາມເປັນແບບຢ່າງນຳໜ້າ, ນ້ຳໃຈຮັບໃຊ້ຊາດ, ຮັບໃຊ້ປະຊາຊົນຂອງສະມາຊິກພັກຈຳນວນໜຶ່ງຫຼຸດລົງ.

2). ເຖິງວ່າຄະນະໜ່ວຍພັກໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກຫຼາຍສົມຄວນ, ແຕ່ຄວາມຮັບຮູ້, ກຳແໜ້ນແນວທາງ, ມະຕິ, ຄຳສັ່ງ, ກົດລະບຽບຂອງພັກ ແລະກົດໝາຍຂອງລັດຂອງສະມາຊິກພັກ-ພະນັກງານຈຳນວນໜຶ່ງບໍ່ທັນຕອບສະໜອງກັບການເລັ່ງທວງຂອງໜ້າທີ່ການເມືອງຂອງພັກໃນໄລຍະໃໝ່, ແນວຄິດເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງຍັງບໍ່ສູງ; ມີສະມາຊິກພັກຈຳນວນໜຶ່ງເກີດມີແນວຄິດເອກະຊົນ, ປຽບທຽບຊັ່ງຊາເອື່ອຍອີງລໍຖ້າແຕ່ຄຳສັ່ງ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອສະແຫວງຫາຜົນປະໂຫຍດສ່ວນຕົວ, ເກີດມີແນວຄິດສໍ້ລາດບັງຫຼວງ, ສວຍໂອກາດ ແລະປາກົດການຫຍໍ້ທໍ້ອື່ນໆ.

3). ຄະນະໜ່ວຍພັກຈຳນວນໜຶ່ງ ຍັງກຳພາລະບົດບາດ, ໜ້າທີ່, ສິດຂອງຕົນບໍ່ແໜ້ນ; ມີໜ່ວຍພັກຈຳນວນໜຶ່ງດຳເນີນຊີວິດໜ່ວຍພັກປະຈຳເດືອນບໍ່ປົກກະຕິ, ເນື້ອໃນບໍ່ເລິກເຊິ່ງ; ການຂະຫຍາຍພັກ ຢູ່ບາງໜ່ວຍພັກມະຫາຊົນບໍ່ທັນຮັບຮູ້, ບໍ່ເຂົ້າໃຈຄວາມໝາຍ, ຄວາມສຳຄັນຂອງການເຂົ້າພັກ, ມີແຕ່ຄວາມກະຕືລືລົ້ນຢາກເຂົ້າພັກ ແຕ່ຂາດການສຶກສາອົບຮົມບໍ່ທັນເລິກເຊິ່ງ. ດັ່ງນັ້ນ, ຈຶ່ງເຮັດໃຫ້ຄວາມຮັບຮູ້, ເຂົ້າໃຈກ່ຽວກັບວັດຖຸປະສົງ, ສິ່ງຊຸກຍູ້ເຂົ້າພັກຂອງມະຫາຊົນຈຳນວນໜຶ່ງບໍ່ຖືກຕ້ອງ; ການຂະຫຍາຍພັກຂອງໜ່ວຍພັກ ຈຳນວນໜຶ່ງບໍ່ທັນຖືກຕ້ອງຕາມບາດກ້າວ, ຂັ້ນຕອນຂອງການຂະຫຍາຍພັກທີ່ໄດ້ກຳນົດໄວ້ໃນກົດລະ

---

(1) ບົດສະຫຼຸບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2023 ແລະທິດທາງແຜນການ 2024 ຂອງອົງຄະນະພັກກະຊວງສາທາລະນະສຸກ ໜ້າ 3.

ບຽບຂອງພັກຈຶ່ງເຮັດໃຫ້ຈຳນວນສະມາຊິກພັກເພີ່ມຂຶ້ນໄວ ແຕ່ບໍ່ຮັບປະກັນຄຸນນະພາບ.

4). ຄະນະໜ່ວຍພັກຈຳນວນໜຶ່ງການປະຕິບັດຫຼັກການລວມສູນປະຊາທິປະໄຕ ຍັງບໍ່ທັນດີ ເປັນຕົ້ນແມ່ນການຕົກລົງບັນຫາສຳຄັນມີບາງກໍລະນີຍັງບໍ່ໄດ້ປຶກສາຫາລືຕົກລົງເປັນໝູ່ຄະນະ ຕາມສຽງສ່ວນຫຼາຍ, ການປະຕິບັດປະຊາທິປະໄຕ ຍັງມີລັກສະນະແບບຮູບການ, ການເຄື່ອນໄຫວຂອງບັນດາໜ່ວຍພັກ ຈຳນວນໜຶ່ງ ຍັງບໍ່ມີແຜນການ, ບໍ່ມີຈຸດສຸມໃນການນຳພາ; ບໍ່ທັນຮູ້ວາງແຜນການ, ວິທີການ, ບາດກ້າວ, ຂັ້ນຕອນ ເພື່ອນຳພາແກ້ໄຂບັນຫາຕົວຈິງຂອງຮາກຖານ, ການຕິດຕາມ, ກວດກາ, ສະຫຼຸບຖອດຖອນບົດຮຽນ ແລະການປະຕິບັດລະບອບປະຊຸມຫຼາຍຮາກຖານພັກ ເຮັດບໍ່ທັນໄດ້ດີ.

5). ການກໍ່ສ້າງໜ່ວຍພັກ ນຳພາປະຕິບັດໜ້າທີ່ການເມືອງ ເຫັນວ່າ ໜ່ວຍພັກສ່ວນຫຼາຍໄດ້ນຳພາເຮັດສຳເລັດໜ້າທີ່ການເມືອງຂອງຕົນ ແຕ່ຜົນສຳເລັດບາງດ້ານຍັງບໍ່ທັນພົ້ນເດັ່ນເທົ່າທີ່ຄວນ ສະມາຊິກພັກຈຳນວນໜຶ່ງຄວາມຫ້າວຫັນ, ຄວາມກະຕືລືລົ້ນຕໍ່ໜ້າທີ່ວຽກງານບໍ່ທັນສູງ, ການນຳພາເຕົ້າໂຮມຄວາມສາມັກຄີພາຍໃນ, ການເອົາໃຈໃສ່ແກ້ໄຂປາກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນຮາກຖານພັກ ຫຼື ກົມກອງຂອງຕົນຍັງເຮັດບໍ່ທັນໄດ້ດີ.

ເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ເປັນວຽກງານໜຶ່ງທີ່ມີຄວາມໝາຍຄວາມສຳຄັນ, ພັກເວລາໃດກໍຕັ້ງໜ້າປັບປຸງປົວແປງຕົນເອງໃນທຸກດ້ານເພື່ອເຊີດຊູບົດບາດການນຳພາຂອງພັກໃຫ້ສົມກັບເປັນແກນນຳໃນລະບົບການເມືອງ ເພື່ອເປັນການແກ້ໄຂບັນຫາທີ່ຕັ້ງຂຶ້ນມານັ້ນ ຕາມທັດສະນະຂອງຜູ້ຂຽນແລ້ວ ມີບາງທັດສະນະປະກອບຕື່ມດັ່ງນີ້:

ໜຶ່ງ, ຄະນະພັກແຕ່ລະຂັ້ນຄວນເພີ່ມທະວີການຄົ້ນຄວ້າ, ກຳແໜ້ນທິດສະດີມາກ-ເລນິນ, ແນວຄິດໄກສອນ ພົມວິຫານ, ມູນເຊື້ອອັນດີງາມຂອງພັກ-ຂອງຊາດຢ່າງເປັນລະບົບ, ເຊື່ອມຊຶມແນວທາງປ່ຽນແປງໃໝ່ຮອບດ້ານທີ່ມີຫລັກການຂອງພັກ, ເດັດດ່ຽວປົກປ້ອງຄວາມຖືກຕ້ອງ, ຕ້ານທຸກຮູບການມ້າງເພທຳລາຍຂອງພວກອິດທິກຳລັງປໍລະປັກຕໍ່ແນວທາງປ່ຽນແປງໃໝ່ຢ່າງຮອບດ້ານ; ຍົກລະດັບ ທາງດ້ານທິດສະດີການເມືອງໃຫ້ສະມາຊິກພັກ ແລະມະຫາຊົນກ້າວໜ້າໃຫ້ໄດ້ຕາມແຜນທີ່ວາງໄວ້.

ສອງ, ຄະນະພັກແຕ່ລະຂັ້ນຕ້ອງເອົາໃຈໃສ່ສຶກສາອົບຮົມແນວທາງ, ນະໂຍບາຍຂອງພັກ, ກົດໝາຍຂອງລັດ, ນິຕິກຳຕ່າງໆ, ມູນເຊື້ອຂອງພັກ-ຂອງຊາດ, ຂອງບັນພະບູລຸດໃຫ້ແກ່ສະມາຊິກພັກ, ພະນັກງານ-ລັດຖະກອນໃຫ້ມີຄວາມຮັບຮູ້ ແລະເຂົ້າໃຈເລິກເຊິ່ງ, ມີຄວາມເປັນເອກະພາບສູງທາງດ້ານແນວຄິດຕໍ່ອຸດົມການສັງຄົມນິຍົມທີ່ພັກເຮົາໄດ້ກຳນົດໄວ້ ແນໃສ່ສ້າງທັດສະນະຫລັກໝັ້ນໃຫ້ຖືກຕ້ອງ, ມີຄວາມເຊື່ອໝັ້ນ ແລະຕື່ນຕົວປະຕິບັດແນວທາງ, ນະໂຍບາຍຂອງພັກ, ກົດໝາຍຂອງລັດດ້ວຍຄວາມເປັນເຈົ້າການ, ຕັ້ງໜ້າສະກັດກັ້ນ ແລະຕ້ານແນວຄິດທັດສະນະເອກະຊົນ, ຫຼາຍພັກຫຼາຍເຄົ້າ ແລະປະກົດການຫຍໍ້ທໍ້ອື່ນໆ.

ສາມ, ຄະນະພັກ, ສະມາຊິກພັກຄວນເອົາໃຈໃສ່ເປັນພິເສດຕໍ່ການປັບປຸງການຈັດຕັ້ງຮາກຖານພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ໂດຍສຸມໃສ່ປັບປຸງພາລະບົດບາດ, ແບບແຜນວິທີເຮັດວຽກຂອງການຈັດຕັ້ງຮາກຖານພັກ, ໜ່ວຍພັກດ້ວຍການປະກອບບຸກຄະລາ

ກອນທີ່ມີຄວາມຮູ້, ຄວາມສາມາດໃນການຜັນຂະຫຍາຍແນວທາງ, ແຜນນະໂຍບາຍເປັນແຜນການ, ໂຄງການລະອຽດສອດຄ່ອງກັບສະພາບຄວາມເປັນຈິງຂອງຮາກຖານພັກຕົນ, ເດັດດ່ຽວສະກັດກັ້ນ ແລະຕ້ານການແຊກຊືມເຂົ້າການຈັດຕັ້ງພັກ-ລັດຂອງພວກກຸ່ມຄົນບໍ່ດີ.

ສີ່, ຕ້ອງຍຶດໝັ້ນຫຼັກການລວມສູນປະຊາທິປະໄຕ, ນໍາພາເປັນໝູ່ຄະນະ, ມີການແບ່ງງານ, ແບ່ງຄວາມຮັບຜິດຊອບໃຫ້ແກ່ບຸກຄົນໃນຄະນະພັກ, ຄະນະປະຈໍາພັກຢ່າງຈະແຈ້ງ, ເວົ້າ ແລະປະຕິບັດຕາມມະຕິ, ເສີມຂະຫຍາຍແບບແຜນນໍາພາ ແລະວິທີເຮັດວຽກຂອງຄະນະພັກແຕ່ລະຂັ້ນເຄື່ອນໄຫວນໍາພາຕາມກົດລະບຽບຂອງພັກ, ຕາມແນວທາງ ແລະການຈັດຕັ້ງພັກ, ປະຕິບັດລະບອບພັກເປັນປົກກະຕິດ້ວຍເນື້ອໃນເລິກເຊິ່ງ, ແທດຕົວຈິງເພື່ອເສີມຂະຫຍາຍປະຊາທິປະໄຕ, ຫົວຄິດປະດິດສ້າງ, ກ້າຄິດ, ກ້າປະຕິບັດ ແລະກ້າຮັບຜິດຊອບເພື່ອໃຫ້ການນໍາພາ-ຊີ້ນໍາຂອງຄະນະພັກໃຫ້ມີການປ່ຽນແປງຢ່າງແຂງແຮງ, ເລິກເຊິ່ງ ແລະຮອບດ້ານ, ສົ່ງເສີມແບບແຜນການນໍາພາໂດຍຜ່ານຄວາມເປັນແບບຢ່າງນໍາໜ້າ, ເດັດດ່ຽວຕ້ານແບບແຜນນໍາພາ ແລະວິທີເຮັດວຽກແບບອາດຍາສິດ, ອ້າຍດຽວ, ກຸ່ມກ້ອນ, ພັກພວກ ແລະທ້ອງຖິ່ນຄັບແຄບ ຫຼື ຮັກສາຄອງເດີມ ແລະອື່ນໆ

ຫ້າ, ຄະນະພັກແຕ່ລະຂັ້ນ, ສະມາຊິກພັກທຸກສະຫາຍຕ້ອງໄດ້ເອົາໃຈໃສ່ຍົກສູງຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ການເມືອງຂອງຕົນໃຫ້ມີປະສິດທິພາບສູງໃນການນໍາພາດ້ານການເມືອງ, ແນວຄິດການຈັດຕັ້ງ, ວິຊາສະເພາະ, ການນໍາພາປັບປຸງບູລະນະການຈັດຕັ້ງລັດ, ອົງການຈັດຕັ້ງມະຫາຊົນ ແລະວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບກົມ, ກອງຂອງຕົນ ແລະວິຊາສະເພາະຢ່າງເປັນປົກກະຕິແທດກັບຕົວຈິງ.

ສັງລວມແລ້ວ, ການເພີ່ມທະວີການນໍາພາຂອງພັກກ່ຽວກັບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຢູ່ອົງຄະນະພັກກະຊວງສາທາລະນະສຸກແມ່ນຄວາມຈໍາເປັນພາວະວິໄສໃນເງື່ອນໄຂປັດຈຸບັນຖືເປັນວຽກທີ່ສໍາຄັນ ແນໃສ່ເຮັດໃຫ້ການຈັດຕັ້ງພັກກາຍເປັນກໍາລັງແຮງ ແລະເປັນປັດໄຈຕັດສິນໃນການປະຕິບັດແນວທາງ, ນະໂຍບາຍຂອງພັກເພື່ອເສີມສ້າງຄວາມເຊື່ອໝັ້ນໃຫ້ແກ່ມະຫາຊົນຕໍ່ກັບພັກ-ລັດ ເພາະວ່າຮາກຖານພັກ, ສະມາຊິກພັກແມ່ນຈຸລັງຂອງພັກ ຖ້າວ່າຮາກຖານພັກມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ຄົບຖ້ວນທາງດ້ານການເມືອງ, ແນວຄິດ, ການຈັດຕັ້ງ, ແບບແຜນວິທີເຮັດວຽກ ແລະຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງ ຈະເຮັດໃຫ້ຮາກຖານພັກມີຄວາມເຂັ້ມແຂງ ກາຍເປັນແກນນໍາໃນລະບົບການເມືອງທີ່ໜັກແໜ້ນປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງ ກໍຄືແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດເວົ້າລວມ, ເວົ້າສະເພາະ ກໍຄືແຜນພັດທະນາສາທາລະນະສຸກ ບັນລຸຕາມຈຸດໝາຍທີ່ກໍານົດໄວ້ ແລະປາກົດຜົນເປັນຈິງ.

# ຄຸ້ມຄອງການເກັບລາຍຮັບພາສີ ຢູ່ແຂວງຊຽງຂວາງ

ຂຽນໂດຍ: ເອກທະນູ ພຸດສະດີ

ວຽກງານພາສີແມ່ນວຽກງານໜຶ່ງທີ່ເປັນໄມ້ງັດ ແລະເປັນເຄື່ອງມືສຳຄັນຕົ້ນຕໍ ແລະຈຳເປັນຂອງລັດຕໍ່ວຽກງານງົບປະມານຂອງຊາດ, ມັນແມ່ນຂະບວນວິວັດແຫ່ງການຄົງຕົວ ແລະຂະຫຍາຍຕົວງົບປະມານແຫ່ງລັດ; ດັ່ງນັ້ນ, ການຄຸ້ມຄອງການເກັບລາຍຮັບພາສີແມ່ນການເຄື່ອນໄຫວປະຕິບັດພາລະບົດບາດ, ສິດ, ໜ້າທີ່ຂອງວຽກງານພາສີບົນພື້ນຖານກົດໝາຍວ່າດ້ວຍພາສີແມ່ນການເຄື່ອນໄຫວວຽກງານຕາມຫຼັກການ, ລະບຽບການ ແລະມາດຕະການກ່ຽວກັບການຄຸ້ມຄອງການນຳເຂົ້າ-ສົ່ງອອກ, ການຜ່ານແດນ, ການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ, ຍານພາຫະນະ, ຜູ້ໂດຍສານຜ່ານດ່ານຊາຍແດນ ເພື່ອອຳນວຍຄວາມສະດວກທາງດ້ານພາສີ ແລະການຄ້າ, ເປັນການສົ່ງເສີມການລົງທຶນ, ການເຊື່ອມໂຍງເຂົ້າກັບສາກົນແນໃສ່ການເກັບລາຍຮັບເຂົ້າງົບປະມານແຫ່ງລັດຢ່າງຖືກຕ້ອງ, ຄົບຖ້ວນ, ທັນເວລາ, ສາມາດກວດສອບໄດ້, ສອດຄ່ອງກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມແຕ່ລະໄລຍະ ແລະເປັນການປະກອບສ່ວນສິ້ນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ; ໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກກ່າວໄວ້ວ່າ: "ປະຕິບັດມາດຕະການເພີ່ມລາຍຮັບງົບປະມານຢ່າງເຂັ້ມແຂງຕິດພັນກັບການຫັນລະບົບຄຸ້ມຄອງເກັບລາຍຮັບໃຫ້ທັນສະໄໝ, ຮັບປະກັນໃຫ້ທຸກວິສາຫະກິດ ຫຼື ເປົ້າໝາຍເສຍພາ-ອາກອນປະຕິບັດພັນທະເສຍພາສີ-ອາກອນຢ່າງຖືກຕ້ອງ ແລະຄົບຖ້ວນຕາມກົດໝາຍ"[1] ແນໃສ່ສ້າງຄວາມເຂັ້ມແຂງໃນການດັດສົມຂອງລັດຕໍ່ການພັດທະນາເສດຖະກິດ-ສັງຄົມໃຫ້ມີຄວາມເຂັ້ມແຂງພັດທະນາໄປຕາມທິດສັງຄົມນິຍົມເທື່ອລະກ້າວ.

ການຄຸ້ມຄອງເກັບລາຍຮັບພາສີແມ່ນການກະທົບຂອງອົງການຈັດຕັ້ງທີ່ມີສິດອຳນາດລັດ (ພາສີ) ໃສ່ເປົ້າໝາຍຄຸ້ມຄອງ ເຊິ່ງປະກອບດ້ວຍໜ່ວຍງານ ແລະບຸກຄະລາກອນທີ່ໄດ້ຮັບມອບໝາຍໃຫ້ຮັບຜິດຊອບໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ, ການເກັບພາສີ ແລະພັນທະອື່ນໆທີ່ພົວພັນກັບການສົ່ງອອກ-ນຳເຂົ້າ, ການເຄື່ອນຍ້າຍ ແລະການເກັບມ້ຽນສິນຄ້າ, ເຄື່ອງຂອງເພື່ອຈັດຕັ້ງ ແລະປະສານສົມ ທົບການເຄື່ອນໄຫວຂອງເຂົາເຈົ້າໃນຂະບວນວິວັດການຈັດຕັ້ງປະຕິບັດຕົວເລກແຜນການໃຫ້ບັນລຸຄາດໝາຍສູງສຸດ ແນໃສ່ໃຫ້ບັນລຸຈຸດໝາຍລວມຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ. ມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກປະຊາຊົນ ປະຕິວັດລາວ ໄດ້ກຳນົດໄວ້ວ່າ: "ຫັນວຽກງານຂອງລະບົບການເງິນໄປສູ່ການຄຸ້ມຄອງແບບລວມສູນເປັນຕົ້ນແມ່ນວຽກງານພາສີ, ສ່ວຍສາອາກອນ ແລະວຽກງານຄັງເງິນອັນເປັນການຮັບປະກັນ

---

[1] ເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ, ປີ 2011, ໜ້າ 68-69.

ຄວາມເຂັ້ມແຂງຂອງງົບປະມານແຫ່ງລັດ”[1].

ປະທານ ໄກສອນ ພົມວິຫານ ໄດ້ມີຄຳເຫັນຊີ້ນຳວ່າ: “ບັນຫາສຳຄັນໂດຍຜ່ານການຄຸ້ມຄອງຂອງຕົນ ເປັນຕົ້ນແມ່ນການຄຸ້ມຄອງດ້ານການເງິນ ແລະແຜນການ, ລັດຕ້ອງຮັບປະກັນການປະຕິບັດບັນດາອັດຕາສ່ວນ ແລະຈັງຫວະການຂະຫຍາຍຕົວຂອງພື້ນຖານເສດຖະກິດແຫ່ງຊາດອັນແນໃສ່ຮັບປະກັນດັດແປງໂຄງປະກອບເກົ່າ, ສ້າງຕັ້ງໂຄງປະກອບໃໝ່ອັນສົມສ່ວນກວ່າເກົ່າຂອງສັງຄົມຕາມແນວທາງ, ຍຸດທະສາດທີ່ພັກໄດ້ກຳນົດເອົາໄວ້ໃນແຕ່ລະໄລຍະ”[2].

ລັດຖະບານ ໄດ້ເອົາໃຈໃສ່ປັບປຸງ ແລະດຳເນີນນະໂຍບາຍທາງດ້ານການເງິນ-ເງິນຕາທີ່ເໝາະສົມເພື່ອສ້າງສະພາບຄ່ອງທາງດ້ານການເງິນ-ເງິນຕາ ແລະຫຼຸດຜ່ອນການຂາດດູນການຄ້າລົງເທື່ອລະກ້າວ, ເຮັດໃຫ້ຄັງເງິນຕາຕ່າງປະເທດເພີ່ມຂຶ້ນ ແລະຮັບປະກັນການຊຳລະສະສາງກັບຕ່າງປະເທດ. ໃນສະພາບປັດຈຸບັນຂອງປະເທດເຮົາໄດ້ເລັ່ງທວງຢ່າງຮີບດ່ວນໃຫ້ພັກ-ລັດເຮົາ ຕ້ອງໄດ້ເພີ່ມທະວີການນຳພາ-ຊີ້ນຳເພື່ອແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໂດຍຍົກການແກ້ໄຂບັນຫາດັ່ງກ່າວເປັນ “ວາລະແຫ່ງຊາດ” ເຊິ່ງນາຍົກລັດຖະມົນຕີ ໄດ້ອອກຄຳສັ່ງ ວ່າດ້ວຍການເພີ່ມທະວີການຄຸ້ມຄອງ ແລະຕ້ານການຮົ່ວໄຫຼ ຂອງລາຍຮັບງົບປະມານແຫ່ງລັດ ສະບັບເລກທີ 18/ນຍ, ລົງວັນທີ 16/9/2021 ນັ້ນ, ແມ່ນນະໂຍບາຍສຳຄັນອັນຮີບດ່ວນໃນການເພີ່ມທະວີການຄຸ້ມຄອງ ແລະຕ້ານການຮົ່ວໄຫຼຂອງລາຍຮັບແຫ່ງຊາດໃນທົ່ວປະເທດ.

ພາສີປະຈຳແຂວງຊຽງຂວາງແມ່ນກົງຈັກການຈັດຕັ້ງໜຶ່ງຂອງລັດ; ສາຍຕັ້ງຂຶ້ນກັບກົມພາສີກະຊວງການເງິນ; ມີພາລະບົດບາດເປັນເສນາທິການໃຫ້ກົມພາສີ ກະຊວງການເງິນ ແລະອົງການປົກຄອງແຂວງກ່ຽວກັບວຽກງານຄຸ້ມຄອງພາສີ; ກະຊວງການເງິນເປັນຜູ້ອອກລະບຽບການກ່ຽວກັບການຈັດຕັ້ງ ແລະເຄື່ອນໄຫວຂອງລັດຖະການພາສີ; ພາສີປະຈຳແຂວງຊຽງຂວາງປະກອບມີບຸກຄະລາກອນທີ່ເປັນລັດຖະການພາສີທັງໝົດ 13 ທ່ານ, ຍິງ 3 ທ່ານ ແລະພະນັກງານຊ່ວຍວຽກ ຈຳນວນ 7 ທ່ານ, ຍິງ 2 ທ່ານ; ໃນນີ້, ຄະນະ ຈຳນວນ 2 ທ່ານ; ປະກອບມີ 1 ຂະແໜງຂຶ້ນກັບ ແລະດ່ານພາສີສາກົນ 1 ດ່ານ. ການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານຄຸ້ມຄອງການເກັບລາຍຮັບພາສີຢູ່ແຂວງຊຽງຂວາງ ໃນໄລຍະປີ 2021 ຫາຕົ້ນປີ 2024 ຜ່ານມາພາຍໃຕ້ການນຳພາ-ຊີ້ນຳຄະນະປະຈຳພັກແຂວງ, ອົງການປົກຄອງແຂວງ, ຄະນະພັກພະແນກການເງິນແຂວງ ກໍຄືກົມພາສີ ກະຊວງການເງິນໃນການປະຕິບັດບັນດາແນວທາງຂອງພັກ, ກົດໝາຍຂອງລັດກ່ຽວກັບວຽກງານພາສີ ເປັນຕົ້ນແມ່ນການຈັດຕັ້ງປະຕິບັດຫຼັກການ, ລະບຽບການ, ມາດຕະການກ່ຽວກັບການນຳເຂົ້າ-ສົ່ງອອກ, ການຜ່ານແດນ, ການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ, ຍານພາຫະນະ, ຜູ້ໂດຍສານຜ່ານດ່ານພາສີຊາຍແດນ ເພື່ອອຳນວຍຄວາມສະດວກທາງດ້ານພາສີ ແລະການຄ້າ, ເປັນການສົ່ງເສີມການລົງທຶນ ແລະການເຊື່ອມໂຍງ, ເຊື່ອມຈອດກັບສາກົນ, ສ້າງຄວາມເຂັ້ມແຂງໃຫ້ລັດຖະການພາສີ, ເກັບລາຍຮັບເຂົ້າງົບປະມານແຫ່ງລັດຢ່າງຖືກຕ້ອງ, ຄົບ

[1],[2] ເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ, ປີ 2011, ໜ້າ 67-68-69.

ຖ້ວນ, ທັນເວລາ ເຊິ່ງມີຜົນສຳເລັດສະແດງອອກຄື:

- ໄລຍະປີ 2021 ຜ່ານມາພາສີປະຈຳແຂວງຊຽງຂວາງສາມາດເກັບລາຍຮັບຈາກພາສີ "ໄດ້ທັງໝົດ 64.916.714.649 ກີບ ເທົ່າກັບ 69,06% ຂອງແຜນການປີ (94.000.000.000 ກີບ); ສົມທຽບໃສ່ໄລຍະດຽວກັນໃນປີ 2020 ແມ່ນ 78.090.173.580 ເທົ່າກັບ 83,13%; ການຄຸ້ມຄອງການເກັບລາຍຮັບພາສີຕາມໝວດສິນຄ້າຕົ້ນຕໍພາຍໃນຈາກຜົນການສັງລວມລາຍຮັບທັງໝົດໃນປີ 2021 ປະຕິບັດໄດ້ທັງໝົດ 64.916.714.649 ກີບ; ໃນນີ້, ຄ່າຊັກພິເສດ ຈຳນວນ 1.136.355.100 ກີບ, ພາຫະນະ ຈຳນວນ 4.864.042.800 ກີບ, ສິ້ນສ່ວນອາໄຫຼ່ ຈຳນວນ 75.798.400 ກີບ, ນ້ຳມັນເຊື້ອໄຟ ຈຳນວນ 40.828.328.200 ກີບ, ເຄື່ອງກໍ່ສ້າງ ຈຳນວນ 3.557.486.000 ກີບ, ເຄື່ອງອຸປະໂພກບໍລິໂພກ ຈຳນວນ 3.837.192.300 ກີບ, ເຄື່ອງໃຊ້ໄຟຟ້າ ຈຳນວນ 45.562.300 ກີບ, ຄ່າທຳນຽມຕ່າງໆ ຈຳນວນ 811.900.000 ກີບ, ຄ່າທຳນຽມຄັງແຮນ້ຳມັນເຊື້ອໄຟ ຈຳນວນ 9.743.831.849 ກີບ, ຄ່າປັບໃໝ ຫຼື ຂາຍເຄື່ອງຮິບ 16.217.700 ກີບ"[(1)].

- ໄລຍະປີ 2022 ສາມາດເກັບລາຍຮັບຈາກພາສີ "ໄດ້ທັງໝົດ 82.090.734.630 ກີບ ເທົ່າກັບ 91,21% ຂອງແຜນການປີ (90.000.000.000 ກີບ); ສົມທຽບໃສ່ໄລຍະດຽວກັນໃນປີ 2021 (64.916.714.649 ກີບ) ເທົ່າກັບ 126,45,% ເພີ່ມຂຶ້ນ 17.174.019.981 ກີບ ເທົ່າກັບ 26,45%; ການຄຸ້ມຄອງການເກັບລາຍຮັບພາສີຕາມໝວດສິນຄ້າຕົ້ນຕໍພາຍໃນຈາກຜົນການສັງລວມລາຍຮັບທັງໝົດ ໃນປີ 2022 ສາມາດປະຕິບັດໄດ້ທັງໝົດ 82.090.734.630 ກີບ; ຄ່າຊັກພິເສດ ຈຳນວນ 3.300.017.600 ກີບ, ພາຫະນະ ຈຳນວນ 5.405.325.100 ກີບ, ສິ້ນສ່ວນອາໄຫຼ່ ຈຳນວນ 8.483.000 ກີບ, ນ້ຳມັນເຊື້ອໄຟ ຈຳນວນ 60.606.618.900 ກີບ, ເຄື່ອງກໍ່ສ້າງ ຈຳນວນ 2.124.710.700 ກີບ, ເຄື່ອງອຸປະໂພກ-ບໍລິໂພກ ຈຳນວນ 2.974.350.600 ກີບ, ເຄື່ອງໃຊ້ໄຟຟ້າ ຈຳນວນ 30.971.000 ກີບ, ຄ່າທຳນຽມຕ່າງໆ ຈຳນວນ 2.153.160.000 ກີບ, ຄ່າທຳນຽມຄັງແຮນ້ຳມັນເຊື້ອໄຟ ຈຳນວນ 4.912.415.540 ກີບ, ຄ່າປັບໃໝ ຫຼື ຂາຍເຄື່ອງຮິບ ຈຳນວນ 574.682.190 ກີບ"[(2)].

- ໄລຍະປີ 2023 ເກັບລາຍຮັບຈາກພາສີ "ໄດ້ທັງໝົດ 95.124.320.360 ກີບ ເທົ່າກັບ 90,59% ຂອງແຜນການປີ (105.000.000.000 ກີບ); ສົມທຽບໃສ່ໄລຍະດຽວກັນໃນປີ 2022 (82.090.734.620 ກີບ) ເທົ່າກັບ 115,88,%, ເພີ່ມຂຶ້ນ 13.033.589.040 ກີບ; ການຄຸ້ມຄອງການເກັບລາຍຮັບພາສີຕາມໝວດສິນຄ້າຕົ້ນຕໍພາຍໃນຈາກຜົນການສັງລວມລາຍຮັບທັງໝົດ ໃນປີ 2023 ສາມາດປະຕິບັດໄດ້ທັງໝົດ 95.123.927.060 ກີບ; ໃນນີ້, ຄ່າຊັກພິເສດ ຈຳນວນ 3.319.938.300 ກີບ, ພາຫະນະ ຈຳນວນ 785.270.500 ກີບ, ສິ້ນສ່ວນອາໄຫຼ່ ຈຳນວນ 96.922.200 ກີບ, ນ້ຳມັນເຊື້ອໄຟ ຈຳນວນ 40.031.206.600 ກີບ, ນ້ຳມັນອື່ນໆ ຈຳນວນ 136.246.800 ກີບ, ນ້ຳມັນເຄິ່ງສຳເລັດຮູບ ຈຳນວນ 17.032.631.000 ກີບ, ເຄື່ອງກໍ່ສ້າງ ຈຳນວນ 1.558.846.000 ກີບ, ເຄື່ອງອຸ

(1) ເອກະສານກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກປະຊາຊົນ ປະຕິວັດລາວ, ປີ 2011, ໜ້າ 67.

(2) ໄກສອນ ພົມວິຫານ, ນິພົນເລືອກເຟັ້ນເຫຼັ້ມ IV, ປີ 2005, ໜ້າ 115.

ປະໂພກ-ບໍລິໂພກ ຈຳນວນ 4.183.629.900 ກີບ, ເຄື່ອງໃຊ້ໄຟຟ້າ ຈຳນວນ 64.383.600 ກີບ, ຄ່າທຳນຽມຕ່າງໆ ຈຳນວນ 7.245.300.000 ກີບ, ຄ່າທຳນຽມຄັງແຮນ້ຳມັນເຊື້ອໄຟ ຈຳນວນ 20.085.511.360 ກີບ, ຄ່າປັບໃໝ ຫຼື ຂາຍເຄື່ອງຮິບ ຈຳນວນ 584.440.800 ກີບ”(1).

- “ມາຮອດ 3 ເດືອນຕົ້ນປີ 2024 ພາສີປະຈຳແຂວງຊຽງຂວາງ ສາມາດເກັບລາຍຮັບຈາກພາສີ “ໄດ້ທັງໝົດ 35.901.769.560 ກີບ ເທົ່າກັບ 109,02% ຂອງແຜນການປະຈຳໄຕມາດ I ປີ 2024 (32.930.000.000 ກີບ), ເທົ່າກັບ 27,30% ຂອງແຜນການປີ (131.000.000.000 ກີບ); ສົມທຽບໃສ່ໄລຍະດຽວກັນໃນປີ 2023 ສາມາດເກັບລາຍຮັບໄດ້ 169,23%; ການຄຸ້ມຄອງການເກັບລາຍຮັບພາສີຕາມໝວດສິນຄ້າຕົ້ນຕໍພາຍໃນຈາກຜົນການສັງລວມລາຍຮັບທັງໝົດໃນໄລຍະ 3 ເດືອນຕົ້ນປີ 2024 ສາມາດປະຕິບັດໄດ້ທັງໝົດ 35.901.769.560 ກີບ ເທົ່າກັບ 110,59% ຂອງລາຍຮັບ; ໃນນີ້, ຄ່າຊັກພິເສດ ຈຳນວນ 472.928.300 ກີບ, ພາຫະນະຈຳນວນ 531.577.700 ກີບ, ສິ້ນສ່ວນອາໄຫຼ່ ຈຳນວນ 13.517.200 ກີບ, ນ້ຳມັນເຊື້ອໄຟ ຈຳນວນ 15.445.061.000 ກີບ, ນ້ຳມັນເຄິ່ງສຳເລັດຮູບ ຈຳນວນ 9.543.317.200 ກີບ, ເຄື່ອງກໍ່ສ້າງ ຈຳນວນ 283.920.100 ກີບ, ເຄື່ອງອຸປະໂພກ-ບໍລິໂພກ ຈຳນວນ 1.216.652.100 ກີບ, ເຄື່ອງໃຊ້ໄຟຟ້າ ຈຳນວນ 2.882.400 ກີບ, ຄ່າທຳນຽມຕ່າງໆ ຈຳນວນ 4.160.295.000 ກີບ, ຄ່າທຳນຽມຄັງແຮນ້ຳມັນເຊື້ອໄຟ ຈຳນວນ 3.860.160.160 ກີບ, ຄ່າປັບໃໝ ຫຼື ຂາຍເຄື່ອງຮິບ ຈຳນວນ 371.458.400 ກີບ”(2).

ໄລຍະປີ 2021-2023 “ສາມາດອອກໃບຢັ້ງຢືນການບັນທຶກຂໍ້ມູນເຂົ້າໃນລະບົບຄຸ້ມຄອງໄດ້ທັງໝົດ 30 ໂຄງການ ລວມມູນຄ່າທັງໝົດ 53.914.246,61 ໂດລາສະຫະລັດ”(3). ໄດ້ສ້າງຂໍ້ມູນແຫຼ່ງຂ່າວສານຕາມຈຸດຕ່າງໆ ແລະອອກເຄື່ອນໄຫວຕິດຕາມ, ກວດກາສິນຄ້າເຄື່ອງຂອງທີ່ມີການລັກລອບ ເຂົ້າມາຕາມແຫຼ່ງຂ່າວລາຍງານ; ສຸ່ມກວດກາຄືນເອກະສານການແຈ້ງພາສີຂອງບັນດາບໍລິສັດທີ່ນຳເຂົ້າຜ່ານດ່ານພາສີສາກົນນ້ຳກັ່ນ ແລະສະຫຼຸບລາຍງານສະພາບການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານໃນແຕ່ລະໄລຍະໃຫ້ຂັ້ນເທິງໄດ້ຢ່າງເປັນປົກກະຕິ ໃນໄລຍະປີ 2021-2024 “ສາມາດກວດກາພົບກໍລະນີລັກລອບນຳເຂົ້າໜີພາສີ ແລະສາມາດແກ້ໄຂຄະດີພາຫະນະລັກລອບນຳເຂົ້າໜີພາສີປະຕິບັດໄດ້ທັງໝົດ 423 ຄັນ; ໃນນັ້ນ, ມໍລົດຈັກ ຈຳນວນ 11 ຄັນ, ລົດກະບະ ຈຳນວນ 294 ຄັນ, ລົດຈິບ ຈຳນວນ 41 ຄັນ, ລົດເກງ ຈຳນວນ 25 ຄັນ ແລະລົດບັນທຸກ ຈຳນວນ 7 ຄັນ; ສາມາດເກັບລາຍຮັບເຂົ້າງົບປະມານໄດ້ທັງໝົດ 9.941.145.500 ກີບ”(4).

ຄຽງຄູ່ກັບຜົນສຳເລັດໃນການຈັດຕັ້ງປະ

(1) ບົດສະຫຼຸບສະພາບການເຄື່ອນໄຫວ ແລະຈັດຕັ້ງປະຕິບັດວຽກງານວິຊາສະເພາະຂອງພາສີປະຈຳແຂວງຊຽງຂວາງ ປະຈຳປີ 2023, ໜ້າ 2.

(2) ບົດສະຫຼຸບສະພາບການເຄື່ອນໄຫວ ແລະຈັດຕັ້ງປະຕິບັດວຽກງານວິຊາສະເພາະຂອງພາສີປະຈຳແຂວງຊຽງຂວາງ ປະຈຳໄຕມາດ I ປີ 2024, ໜ້າ 2.

(3), (4) ບົດສະຫຼຸບສະພາບການເຄື່ອນໄຫວປະຕິບັດວຽກງານວິຊາສະເພາະຂອງພາສີປະຈຳແຂວງຊຽງຂວາງ ໄລຍະ 3 ປີ 2021-2024, ໜ້າ 3.

ຕິບັດວຽກງານຄຸ້ມຄອງການເກັບລາຍຮັບພາສີ ຢູ່ແຂວງຊຽງຂວາງ ໃນໄລຍະຜ່ານມາ ກໍຍັງມີບາງບັນຫາທີ່ຄົງຄ້າງຈຳນວນໜຶ່ງທີ່ຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂໃນຕໍ່ໜ້າຄື:

1). ການໂຄສະນາ, ເຜີຍແຜ່ບັນດາແນວທາງ, ນະໂຍບາຍຂອງພັກ, ກົດໝາຍ, ລະບຽບຂອງລັດ ແລະນິຕິກຳຕ່າງໆທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງການເກັບລາຍຮັບພາສີ ຍັງບໍ່ທັນທົ່ວເຖິງ ແລະເລິກເຊິ່ງ ໃນທົ່ວສັງຄົມ ໂດຍສະເພາະແມ່ນຕໍ່ບັນດາຜູ້ປະກອບການ, ຫົວໜ່ວຍທຸລະກິດຕ່າງໆທີ່ເປັນທ່າແຮງບົ່ມຊ້ອນພາຍໃນແຂວງ ເຮັດໃຫ້ສະຕິຄວາມເປັນເຈົ້າການຕື່ນຕົວປະກອບສ່ວນເສຍພັນທະພາສີໃນທົ່ວສັງຄົມຍັງບໍ່ທັນໄດ້ຄົບຖ້ວນຕາມທ່າແຮງບົ່ມຊ້ອນຂອງແຂວງ.

2). ກົງຈັກການຈັດຕັ້ງຄຸ້ມຄອງວຽກງານພາສີຍັງບໍ່ທັນເຂັ້ມແຂງດ້ານປະລິມານ ແລະຄຸນນະພາບ; ວຽກງານປັບປຸງກົງຈັກການຈັດຕັ້ງມີຄວາມຊັກຊ້າ, ແກ່ຍາວ; ການບຳລຸງສ້າງພະນັກງານພາສີດ້ານວິຊາສະເພາະ ແລະທິດສະດີການເມືອງ ບໍ່ທັນຕອບສະໜອງໄດ້ຢ່າງພຽງພໍກັບຄວາມຮຽກຮ້ອງຕ້ອງການຕົວຈິງຂອງໜ້າທີ່ການເມືອງ.

3). ການປະສານງານກັບຂະແໜງການກ່ຽວຂ້ອງຍັງບໍ່ທັນເປັນລະບົບລະອຽດ, ຈະແຈ້ງ ແລະມີບາງດ້ານຍັງບໍ່ທັນຄ່ອງຕົວ; ການຫັນເປັນທັນສະໄໝໃນວຽກງານເກັບລາຍຮັບພາສີຍັງຊັກຊ້າບໍ່ທັນຕອບສະໜອງໄດ້ກັບການຂະຫຍາຍຕົວດ້ານເສດຖະກິດ-ສັງຄົມໃນປັດຈຸບັນ.

4). ວຽກງານດ້ານຈັດຕັ້ງປະຕິບັດຕິດຕາມ, ກວດກາຍັງບໍ່ທັນເຂັ້ມງວດເທົ່າທີ່ຄວນ; ການຊຸກຍູ້ສົ່ງເສີມຕິດຕາມ, ກວດກາການເກັບລາຍຮັບພາສີຍັງບໍ່ທັນທົ່ວເຖິງ, ເລິກເຊິ່ງ, ເປັນປົກກະຕິ ແລະຕໍ່ເນື່ອງ.

ເພື່ອເຮັດໃຫ້ວຽກງານຄຸ້ມຄອງການເກັບລາຍຮັບພາສີ ຢູ່ແຂວງຊຽງຂວາງ ໃນຕໍ່ໜ້າມີປະສິດທິຜົນດີຂຶ້ນກວ່າເກົ່າ ຄວນເພີ່ມທະວີຄວາມເອົາໃຈໃສ່ບາງບັນຫາຄື:

ໜຶ່ງ, ເພີ່ມທະວີການໂຄສະນາ, ເຜີຍແຜ່ບັນດາແນວທາງ, ນະໂຍບາຍຂອງພັກ, ກົດໝາຍ, ລະບຽບຂອງລັດ ແລະນິຕິກຳຕ່າງໆທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງການເກັບລາຍຮັບພາສີດ້ວຍຫຼາຍຮູບການໃຫ້ກວ້າງຂວາງ, ເລິກເຊິ່ງແລະທົ່ວເຖິງໃນທົ່ວສັງຄົມ ໂດຍສະເພາະແມ່ນໃຫ້ບັນດາຜູ້ປະກອບການ, ຫົວໜ່ວຍທຸລະກິດຕ່າງໆທີ່ເປັນທ່າແຮງບົ່ມຊ້ອນພາຍໃນແຂວງ ເພື່ອເຮັດໃຫ້ເຂົາເຈົ້າເປັນເຈົ້າການຕື່ນຕົວປະກອບສ່ວນເສຍພັນທະພາສີ ກໍຄືຮັບປະກັນການເກັບພາສີຄົບຖ້ວນ ຕາມທ່າແຮງຂອງແຂວງ.

ສອງ, ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງຕິດພັນກັບການກຳນົດຕຳແໜ່ງງານ, ການກໍ່ສ້າງ-ບຳລຸງຖັນແຖວລັດຖະການພາສີໃຫ້ພຽງພໍ, ສັບຊ້ອນ, ຈັດວາງໃຫ້ສອດຄ່ອງກັບຕຳແໜ່ງງານ ທັງຮັບປະກັນໃຫ້ໄດ້ຜູ້ທີ່ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້, ຄວາມສາ ມາດກາຍເປັນມືອາຊີບຢ່າງແທ້ຈິງ ແລະເປັນລັດຖະການພາສີທີ່ມີຈັນຍາບັນທີ່ດີ.

ສາມ, ສືບຕໍ່ປັບປຸງ ແລະພັດທະນາລະບອບການປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ແຕ່ສູນກາງຫາທ້ອງຖິ່ນໃຫ້ເປັນລະບົບລະອຽດ, ຈະແຈ້ງ ແລະຄ່ອງຕົວຂຶ້ນກວ່າເກົ່າ; ສືບຕໍ່ລົງທຶນພັດທະນາພື້ນຖານໂຄງລ່າງ ແລະວັດຖຸອຸປະກອນເຕັກນິກໃຫ້ມີຄວາມສະດວກ

ແລະທັນສະໄໝ ເພື່ອຮັບປະກັນຕໍ່ການຄຸ້ມຄອງຕາມທິດທັນເປັນທັນສະໄໝໂດຍໄວ; ຕອບສະໜອງທຶນ ແລະພາຫະນະອັນຈຳເປັນແກ່ການເຄື່ອນໄຫວວຽກງານພາສີ, ປະກອບ ແລະນຳໃຊ້ລະບົບເຄື່ອງມືທັນສະໄໝ ໂດຍສະເພາະແມ່ນລະບົບເຕັກໂນໂລຊີຂໍ້ມູນຂ່າວສານທີ່ທັນສະໄໝເຂົ້າໃນການບໍລິການແຈ້ງພາສີ, ປັບປຸງລະບົບບໍລິການຂອງດ່ານພາສີຊາຍແດນໃຫ້ມີຄວາມເປັນເອກະພາບ, ມີລະບົບທີ່ສະດວກວ່ອງໄວ, ໂປ່ງໃສ, ສາມາດກວດສອບຄືນໄດ້, ຕັດຂອດທີ່ບໍ່ຈຳເປັນອອກ, ເກັບຄ່າບໍລິການປະຕູດຽວ, ແກ້ໄຂສະພາບເກັບຊະຊາຍຫຼາຍຂັ້ນ, ຫຼາຍຂອດທີ່ສ້າງຄວາມລຳຄານໃຫ້ແກ່ຜູ້ປະກອບການ.

ສີ່, ຍົກສູງປະສິດທິຜົນຂອງການກວດກາປະເມີນຜົນໃນການຄຸ້ມຄອງການເກັບລາຍຮັບພາສີເຂົ້າສູ່ກົດໝາຍ, ລະບຽບຢ່າງເຂັ້ມງວດ; ເອົາໃຈໃສ່ຕິດຕາມ, ກວດກາພະນັກງານທຸກຄົນ ກ່ອນອື່ນໝົດແມ່ນພະນັກງານນຳພາຄຸ້ມຄອງຫຼັກແຫຼ່ງ ເຮັດໃຫ້ການກວດກາເປັນມາດຕະຖານສຳຄັນຕົ້ນຕໍ ແລະເປັນເຄື່ອງມືສັກສິດໃນການສຶກສາອົບຮົມ, ກະຕຸກຊຸກຍູ້ຄວາມຫ້າວຫັນ ແລະຄວາມເປັນເຈົ້າການຮັບຜິດຊອບຕໍ່ໜ້າທີ່ ຂອງພະນັກງານທຸກຂັ້ນ ທັງເປັນການຊ່ວຍເຕືອນ ແລະຊ່ວຍແກ້ໄຂຄວາມບົກພ່ອງຜິດພາດ; ເສີມຂະຫຍາຍບົດບາດກົນກວດກາພາຍໃນ, ເຮັດບົດບາດກວດກາຢ່າງຕັ້ງໜ້າ ແນໃສ່ເຮັດໃຫ້ທົ່ວລະບົບພາສີເຄື່ອນໄຫວສອດຄ່ອງກັບແນວທາງຂອງພັກ ກໍຄືລະບຽບການ, ກົດໝາຍຂອງລັດ ແລະປະຕິບັດວິໄນການເງິນຢ່າງເຂັ້ມງວດ, ຕີຖອຍປາກົດການຫຍໍ້ທໍ້ ແລະທາງສຽງຈົ່ມວ່າຂອງສັງຄົມໃຫ້ຫຼຸດລົງຢ່າງຈະແຈ້ງ.

ສັງລວມແລ້ວ, ຄຸ້ມຄອງການເກັບລາຍຮັບພາສີແມ່ນອີງການຈັດຕັ້ງພາສີຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍເຂົ້າໃນການຄຸ້ມຄອງ; ບວກກັບການນຳໃຊ້ຜົນສຳເລັດທາງດ້ານວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ, ເຄື່ອງມືທີ່ທັນສະໄໝ ພ້ອມທັງປັບປຸງວຽກງານພາສີ ກໍຄືລັດຖະການພາສີໃຫ້ມີຄວາມເຂັ້ມແຂງທາງດ້ານການຈັດຕັ້ງ, ມີລະບົບກົງຈັກທີ່ສອດຄ່ອງກັບພາລະບົດບາດ, ສິດ, ໜ້າທີ່ວຽກງານ, ສ້າງໃຫ້ມີກຳລັງບຸກຄະລາກອນທີ່ມີຄວາມຕື່ນຕົວທາງດ້ານການເມືອງສູງ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມສາມາດທາງດ້ານວິຊາສະເພາະ, ສາມາດນຳໃຊ້ເຄື່ອງມືທີ່ທັນສະໄໝເຂົ້າໃນການປະຕິບັດວຽກງານ, ມີວັດຖຸ ແລະພາຫະນະເຕັກນິກທີ່ເໝາະສົມ ເພື່ອຮັບປະກັນໃຫ້ແກ່ການປະຕິບັດໜ້າທີ່ວຽກງານ, ມີຄວາມເຂັ້ມແຂງທາງດ້ານແບບແຜນວິທີເຮັດວຽກ, ປະຕິບັດຫຼັກການລວມສູນປະຊາທິປະໄຕ ບົນພື້ນຖານຕາມແນວທາງ, ນະໂຍບາຍຂອງພັກ ກົດໝາຍ, ລະບຽບຂອງລັດຢ່າງເຂັ້ມງວດ.

# ບົດບາດສະຫະພັນແມ່ຍິງໃນການແກ້ໄຂຄວາມທຸກຍາກ ຂອງປະຊາຊົນ ຢູ່ແຂວງຄຳມ່ວນ

ຂຽນໂດຍ: ນ. ສີອຳພອນ ແກ້ວບົວໄຂ

ຄວາມທຸກຍາກ "ແມ່ນການຂາດເຂີນຄວາມຕ້ອງການຂັ້ນພື້ນຖານໃນການດຳລົງຊີວິດປະຈຳວັນຄື: ຂາດສະບຽງອາຫານທີ່ບໍ່ສາມາດຕອບສະໜອງພະລັງງານ 2.100 ກິໂລກະລໍລີຕໍ່ຄົນຕໍ່ມື້, ຂາດເຄື່ອງນຸ່ງຫົ່ມທີ່ຈຳເປັນ, ບໍ່ມີທີ່ຢູ່ອາໃສຖາວອນ, ບໍ່ສາມາດໃຊ້ຈ່າຍໃນການປິ່ນປົວເວລາເຈັບເປັນພື້ນຖານ, ບໍ່ສາມາດໃຊ້ຈ່າຍເຂົ້າໃນການສຶກສາຂັ້ນພື້ນຖານ, ບໍ່ມີເງື່ອນໄຂເຂົ້າເຖິງຕາໜ່າງການບໍລິການດ້ານພື້ນຖານໂຄງລ່າງທີ່ຈຳເປັນຂອງສັງຄົມ[1]"; ສະນັ້ນ, ຄວາມທຸກຍາກແມ່ນໜຶ່ງໃນບັນຫາສັງຄົມ ແລະມີລັກສະນະກວມລວມຂອງໂລກ; ມີຫຼາຍໆປະເທດພວມປະເຊີນໜ້າກັບບັນຫາຄວາມທຸກຍາກ ແລະຍັງມີປະຊາກອນຫຼາຍໆລ້ານຄົນທີ່ດຳລົງຊີວິດຢູ່ໃນຄວາມທຸກຍາກ ຫຼື ຕ່ຳກວ່າມາດຕະຖານຄວາມທຸກຍາກ, ບັນຫາເຫຼົ່ານີ້ໄດ້ກາຍເປັນສິ່ງທ້າທາຍຕໍ່ບົດບາດຂອງລັດຖະບານແຕ່ລະປະເທດຕ້ອງເອົາໃຈໃສ່ ແລະສູ້ຊົນແກ້ໄຂ, ເນື່ອງຈາກວ່າຄວາມທຸກຍາກເປັນປັດໄຈພື້ນຖານ ແລະເປັນສາເຫດໜຶ່ງທີ່ກະທົບເຖິງສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບ,ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ ແລະມີຜົນສະທ້ອນຄືນຕໍ່ພັກການເມືອງທີ່ກຳອຳນາດຢູ່ປະເທດນັ້ນໆ.

ການແກ້ໄຂຄວາມທຸກຍາກແມ່ນມີຄວາມສຳຄັນເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນມີການພັດທະນາ, ສາມາດຕອບສະໜອງຄວາມຕ້ອງການທີ່ຈຳເປັນໃນການດຳລົງຊີວິດໄປສູ່ຊີວິດການເປັນຢູ່ທີ່ດີຂຶ້ນ ສະແດງອອກດ້ວຍການມີລາຍຮັບທີ່ສາມາດຕອບສະໜອງກັບຄວາມຕ້ອງການຂັ້ນພື້ນຖານຂອງຄົນກ່ຽວກັບການບໍລິໂພກ ແລະອຸປະໂພກ ເຊັ່ນ: ມີສະບຽງອາຫານກິນ, ມີເຄື່ອງນຸ່ງຫົ່ມ, ມີເຮືອນຢູ່ອາໄສໝັ້ນຄົງ, ມີລາຍຮັບທີ່ແນ່ນອນ, ມີຊີວິດຢູ່ດີກິນດີ, ສະດວກສະບາຍດ້ານວັດຖຸ ແລະຈິດໃຈ, ມີຄວາມຍືນຍົງໝັ້ນຄົງ.

ກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວໄດ້ໃຫ້ທັດສະນະວ່າ: "ຕ້ອງບຸກທະລຸໃນດ້ານການແກ້ໄຂຄວາມທຸກຍາກຂອງປະຊາຊົນ, ຄວາມທຸກຍາກແມ່ນບັນຫາໃຫຍ່ທີ່ເປັນພື້ນຖານກວ່າໝູ່ຂອງປະເທດເຮົາ, ແກ້ໄຂຄວາມທຸກຍາກແມ່ນພາລະໜ້າທີ່ທີ່ສຳຄັນຂອງພັກຕ້ອງນຳພາແກ້ໄຂໃຫ້ໄດ້"[2]; ພ້ອມນັ້ນ, ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດແກ້ໄຂ

[1] ດຳລັດວ່າດ້ວຍມາດຕະຖານພົ້ນທຸກ ແລະມາດຕະຖານພັດທະນາ ສະບັບເລກທີ 348/ລບ, ລົງວັນທີ 16/11/2017, ໜ້າ 2

[2] ເອກະສານກອງປະຊຸມໃຫຍ່ ຄັ້ງທີ IX ພັກປະຊາຊົນ ປະຕິວັດລາວ ປີ 2011, ໜ້າ 70.

ຄວາມທຸກຍາກມີປະສິດທິຜົນ ລັດຖະບານ ກໍໄດ້ອອກນິຕິກຳຈຳນວນໜຶ່ງເຊັ່ນ: ດຳລັດວ່າດ້ວຍມາດຕະຖານຄວາມທຸກຍາກ ແລະການພັດທະນາ ສະບັບເລກທີ 285/ນຍ, ລົງວັນທີ 13 ຕຸລາ 2009; ດຳລັດວ່າດ້ວຍມາດຕະຖານຄວາມທຸກຍາກ ແລະມາດຕະຖານການພັດທະນາ ສະບັບເລກທີ 309/ນຍ, ລົງວັນທີ 14 ພະຈິກ 2013; ດຳລັດ ວ່າດ້ວຍມາດຕະຖານພົ້ນທຸກ ແລະມາດຕະຖານພັດທະນາ ສະບັບເລກທີ 348/ລບ, ລົງວັນທີ 16/11/2017 ແລະນິຕິກຳອື່ນໆ ເພື່ອເປັນບ່ອນອີງ ແລະເປັນມາດຕະຖານໃນການຈັດຕັ້ງປະຕິບັດແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າໃນຂອບເຂດທົ່ວປະເທດ ໂດຍສະເພາະແມ່ນປະຊາຊົນທີ່ຢູ່ເຂດຊົນນະບົດຫ່າງໄກສອກຫຼີກ.

ແຂວງຄຳມ່ວນ ເປັນແຂວງໜຶ່ງທີ່ມີທີ່ຕັ້ງພູມສັນຖານ ແລະມີແຫຼ່ງຊັບພະຍາກອນທຳມະຊາດອຸດົມສົມບູນເອື້ອອຳນວຍໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ, ທົ່ວແຂວງມີເນື້ອທີ່ທັງໝົດ 16.315 ກິໂລຕາແມັດ, ແບ່ງເປັນສອງເຂດນິເວດວິທະຍາຄື: ເຂດພູດອຍກວມ 54% ແລະເຂດທົ່ງພຽງກວມ 46%; ມີຊາຍແດນຕິດຈອດຄື: ທິດເໜືອຕິດຈອດກັບແຂວງບໍລິຄຳໄຊ 162 ກິໂລແມັດ, ທິດໃຕ້ຕິດກັບແຂວງສະຫວັນນະເຂດ ຍາວ 174 ກິໂລແມັດ, ທິດຕາເວັນອອກຕິດກັບແຂວງກວາງຝັ່ງ ແລະແຂວງຮ່າຕິ່ງ ສສ ຫວຽດນາມ ຍາວ 273 ກິໂລແມັດ, ທິດຕາເວັນຕົກຕິດກັບແຂວງນະຄອນພະນົມ ລາດຊະອານາຈັກໄທ ຍາວ 153 ກິໂລແມັດ.

ປັດຈຸບັນທົ່ວແຂວງຄຳມ່ວນປະກອບມີ 10 ເມືອງ, 570 ບ້ານ, 82.801 ຄອບຄົວ, ມີພົນລະເມືອງທັງໝົດ 425.574 ຄົນ, ຍິງ 216.721 ຄົນ, ປະກອບມີ 9 ເຜົ່າ; ມີບ້ານທຸກຍາກ ຈຳນວນ 204 ບ້ານ ເທົ່າກັບ 35,79%, ມີຄອບຄົວທຸກຍາກ ຈຳນວນ 23.082 ຄອບຄົວ ເທົ່າກັບ 27,88%, ມີຄອບຄົວພົ້ນທຸກທັງໝົດ 59.719 ຄອບຄົວ ເທົ່າກັບ 72,12% ຂອງຄອບຄົວທົ່ວແຂວງ. ດັ່ງນັ້ນ, ທາງອົງຄະນະພັກແຂວງຄຳມ່ວນຈຶ່ງໄດ້ວາງ: "ຄາດໝາຍສູ້ຊົນແຕ່ປີ 2021-2025 ແມ່ນເຮັດໃຫ້ອັດຕາຄວາມທຸກຍາກລຸດລົງ 0,5%, ຕົວຈິງຍັງເຫຼືອ 0,82% (ຂອງຈຳນວນ 684 ຄອບຄົວ) ຂອງຄອບຄົວທັງໝົດ, ສູ້ຊົນລົບລ້າງບ້ານທຸກຍາກໃຫ້ໄດ້ 100%, ຕົວຈິງຍັງເຫຼືອ 7 ບ້ານເທົ່າກັບ 1,23% ຂອງຈຳນວນບ້ານໃນທົ່ວແຂວງ, ສຳລັບເມືອງທຸກຍາກປະກາດລົບລ້າງໃຫ້ໄດ້ 100% (ປະເມີນຕາມ 309/ລບ)"[1].

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຄາດໝາຍດັ່ງທີ່ກ່າວມານັ້ນມີຜົນສຳເລັດ, ຜ່ານມາອົງຄະນະພັກແຂວງຄຳມ່ວນໄດ້ເອົາໃຈໃສ່ນຳພາ-ຊີ້ນຳດ້ວຍຄວາມຮັບຜິດຊອບສູງ ແລະກາຍເປັນໜ້າທີ່ຄວາມຮັບຜິດຊອບຂອງໝົດທຸກຄົນເວົ້າລວມ, ເວົ້າສະເພາະແມ່ນສະຫະພັນແມ່ຍິງແຂວງຄຳມ່ວນໄດ້ຊອກຫາວິທີທາງເພື່ອປະກອບສ່ວນເຂົ້າໃນການແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ຫຼຸດລົງເທື່ອລະກ້າວ ໂດຍອີງໃສ່ຈຸດພິເສດຂອງເອື້ອຍນ້ອງແມ່ຍິງຂອງແຂວງຄຳມ່ວນທີ່ມີມູນເຊື້ອດຸໝັ່ນຂະຫຍັນພຽນ, ມີຄວາມເອື້ອເຟື້ອເພື່ອແຜ່, ມີສີໄມ້ລາຍມືທາງດ້ານຫັດຖະກຳທີ່ເປັນເອກະລັກ ແລະມີວັດທະນະທຳ, ຮີດຄອງປະເພນີອັນດີ

[1] ກອງປະຊຸມໃຫຍ່ ຄັ້ງທີ X ອົງຄະນະພັກແຂວງຄຳມ່ວນ ປີ 2020, ໜ້າ 40.

ງານຂອງແຕ່ລະຊົນເຜົ່າ; ສະນັ້ນ, ສະຫະພັນແມ່ຍິງແຂວງຈຶ່ງໄດ້ໝູນໃຊ້ຈຸດພິເສດ, ທ່າແຮງດັ່ງກ່າວເຂົ້າໃນການພັດທະນາແມ່ຍິງຂອງແຂວງຄໍາມ່ວນ ບັນລຸຕາມເປົ້າໝາຍທີ່ພັກວາງອອກ ກໍຄືແຜນຍຸດທະສາດການພັດທະນາແມ່ຍິງທີ່ສູນກາງສະຫະພັນແມ່ຍິງລາວໄດ້ກໍານົດໄວ້. ສະຫະພັນແມ່ຍິງແຂວງຄໍາມ່ວນເປັນອົງການຈັດຕັ້ງມະຫາຊົນໜຶ່ງທີ່ມີພາລະບົດບາດເປັນເສນາທິການໃຫ້ຄະນະພັກ-ອົງການປົກຄອງແຂວງ ແລະສູນກາງສະພັນແມ່ຍິງລາວ ເປັນຕົວແທນໃນການພັດທະນາ, ປົກປ້ອງສິດ ແລະຜົນປະໂຫຍດອັນຊອບທໍາຂອງແມ່ຍິງ-ເດັກນ້ອຍ, ສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີ, ເສີມຂະຫຍາຍສິດເປັນເຈົ້າຂອງແມ່ຍິງ ແລະສົ່ງເສີມການປະຕິບັດສິດສະເໝີພາບ ລະຫວ່າງຍິງຊາຍ, ປຸກລະດົມສະມາຊິກສະຫະພັນແມ່ຍິງ, ແມ່ຍິງບັນດາເຜົ່າເຂົ້າຮ່ວມໃນພາລະກິດປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດ.

ປັດຈຸບັນ ສະຫະພັນແມ່ຍິງແຂວງຄໍາມ່ວນປະກອບມີ 176 ໜ່ວຍ, 147 ຮາກຖານ, ມີສະມາຊິກແມ່ຍິງທັງໝົດ 76.452 ຄົນ, ໂດຍປະຕິບັດນະໂຍບາຍຂອງພັກ-ລັດກ່ຽວກັບການແກ້ໄຂຄວາມທຸກຍາກ, ອົງການຈັດຕັ້ງສະຫະພັນແມ່ຍິງແຂວງໄດ້ເອົາໃຈໃສ່ເປັນພິເສດໂດຍຖືເອົາບັນຫາຄວາມທຸກຍາກແມ່ນບັນຫາທີ່ກີດຂວາງການພັດທະນາ. ສະນັ້ນ, ການລຶບລ້າງຄວາມທຸກຍາກຈຶ່ງໄດ້ກາຍເປັນກິດຈະກໍາໜຶ່ງທີ່ນອນໃນແຜນງານຍຸດທະສາດບຸລິມະສິດຂອງລັດຖະບານ, ການປະຕິບັດແຜນດັ່ງກ່າວຕິດພັນກັບວຽກງານກໍ່ສ້າງຮາກຖານການເມືອງຕິດພັນກັບການພັດທະນາຊົນນະບົດຮອບດ້ານຕາມທິດ 3 ສ້າງ ແລະ 4 ເນື້ອໃນ 4 ຄາດໝາຍ.

ໃນໄລຍະຜ່ານມາ, ອົງຄະນະພັກແຂວງ ແລະສະຫະພັນແມ່ຍິງແຂວງໄດ້ເອົາໃຈໃສ່ຄົ້ນຄວ້າສ້າງເອກະສານແລ້ວສັງລວມຫຍໍ້ກ່ຽວກັບການແກ້ໄຂຄວາມທຸກຍາກ ເຊິ່ງເນື້ອໃນເອກະສານໄດ້ຍົກໃຫ້ເຫັນຄວາມທຸກຍາກແມ່ນແນວໃດ? ມາຈາກໃສ? ຜົນຮ້າຍຂອງຄວາມທຸກຍາກມີຫຍັງແດ່? ຍ້ອນຫຍັງຈຶ່ງມີຄວາມຈໍາເປັນຕ້ອງແກ້ໄຂຄວາມທຸກຍາກ ແລະຊອກຫາທາງອອກທີ່ດີເພື່ອແກ້ໄຂຄວາມທຸກຍາກ, ແມ່ນອີງໃສ່ອັນໃດເພື່ອແກ້ໄຂ? ທ່າແຮງຂອງແຂວງຄໍາມ່ວນ ມີຂໍ້ສະດວກສິ່ງເອື້ອອໍານວຍຄວາມສະດວກຄືແນວໃດ? ອັນຫຍຸ້ງຍາກທີ່ເປັນສິ່ງກີດຂວາງໃນການແກ້ໄຂຄວາມທຸກຍາກແມ່ນຫຍັງ? ຈາກນັ້ນ, ຈຶ່ງໄດ້ກໍານົດມາດຕະຖານແກ້ໄຂຄວາມທຸກຍາກໂດຍອີງໃສ່ຈຸດພິເສດສະເພາະຂອງແຂວງຄໍາມ່ວນ.

ໂດຍຈັດຕັ້ງຜັນຂະຫຍາຍແຜນພັດທະນາແມ່ຍິງຂອງສູນກາງສະຫະພັນແມ່ຍິງລາວ ແລະແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ, ສະຫະພັນແມ່ຍິງແຕ່ລະຂັ້ນໄດ້ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ, ໄດ້ຈັດຕັ້ງແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງຕິດພັນກັບໂຄງການຕ່າງໆທີ່ແຂວງ ແລະສູນກາງສະຫະພັນແມ່ຍິງລາວມອບໝາຍໃຫ້. ໄດ້ສ້າງແຜນຫົວຂໍ້ "ເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ພະນັກງານສະຫະພັນແມ່ຍິງແຂວງ, ເຝິກອົບຮົມຫົວຂໍ້: ຍົກລະດັບຄວາມຮູ້, ຄວາມສາມາດດ້ານຕ່າງໆໃຫ້ແກ່ແມ່ຍິງ ເປັນຕົ້ນແມ່ນການພັດທະນາແມ່ຍິງ ແລະເດັກນ້ອຍ, ການສົ່ງເສີມບົດບາດຍິງ-ຊາຍໃນສຸຂະພາບຈະເລີນພັນ, ວຽກງານຊຸມຊົນດ້ານໂພຊະນາການ, ການລ້ຽງລູກດ້ວຍນົມ

ແມ່, ເຝິກອົບຮົມກ່ຽວກັບວຽກງານສິນເຊື່ອ, ກອງທຶນໝູນວຽນ; ຈັດຕັ້ງເຜີຍແຜ່, ປາຖະກະຖາເນື່ອງໃນໂອກາດວັນສຳຄັນຕ່າງໆຂອງພັກ-ຂອງຊາດມີຜູ້ເຂົ້າຮ່ວມທັງໝົດ 734 ຄັ້ງ, ຍິງ 616 ຄົນ”[1].

ຜ່ານມາສະຫະພັນແມ່ຍິງແຂວງຄຳມ່ວນຍັງໄດ້ສົ່ງເສີມການພັດທະນາວິຊາຊີບດ້ານຕ່າງໆຄື:

ເຝິກອົບຮົມວິຊາຊີບ: ຫົວຂໍ້“ ຕັດຫຍິບໄລຍະສັ້ນ 2 ເດືອນ ໃຫ້ແມ່ຍິງເຂດຊົນນະບົດໃນ 3 ເມືອງຄື: ວິຊາຕັດຫຍິບ ຈຳນວນ 10 ຄົນ, ເສີມສວຍ ຈຳນວນ 10 ຄົນ ພ້ອມທັງໄດ້ມອບຈັກຫຍິບ ແລະອຸປະກອນເສີມສວຍໃຫ້ໄປນຳໃຊ້ໃນການປະກອບອາຊີບ (ງົບປະມານແຜນງານພັດທະນາທ້ອງຖິ່ນລາວ 30); ໄດ້ເຝິກອົບຮົມຫົວຂໍ້: ແປຮູບອາຫານ, ຜະລິດຕະພັນເຂົ້າໜົມໃຫ້ແກ່ແມ່ຍິງບ້ານໄດ້ 6 ຄັ້ງ, 14 ບ້ານໃນ 4 ເມືອງ, ມີຜູ້ເຂົ້າຮ່ວມທັງໝົດ 281 ຄົນ, ຍິງ 129 ຄົນ, ການແປຮູບອາຫານ ແລະການຫຸ້ມຫໍ່ໃຫ້ແມ່ຍິງ ແລະໄວໜຸ່ມຢູ່ບ້ານກອງລໍ ເມືອງຄູນຄຳ, ມີຜູ້ເຂົ້າຮ່ວມທັງໝົດ 40 ຄົນ, ຍິງ 35 ຄົນ; ໄດ້ຈັດເຝິກອົບຮົມວິຊາຊີບໃຫ້ໄວໜຸ່ມຍິງ-ຊາຍໃນເກນອາຍຸ 15 ຫາ 35 ປີ (ໂຄງການວິເທສ) ທີ່ຈົບປະຖົມແຕ່ບໍ່ຈົບມັດທະຍົມຕົ້ນໄດ້ 2 ຊຸດ, ປະກອບມີ 9 ສາຂາຮຽນຄື: ຕັດຫຍິບ, ເສີມສວຍ, ປູກເຫັດ, ຕັດຜົມຊາຍ, ສ້ອມແປງລົດຈັກ, ປຸງແຕ່ງອາຫານ, ສ້ອມແປງລົດໃຫຍ່. ໄຟຟ້າເຄື່ອງເຢັນ, ສູນຂັບຂີ່ລົດ ເຊິ່ງໃນຊຸດທີ I ເຝິກອົບຮົມສຳເລັດ 7 ນ້ອງ, ຍິງ 5 ນ້ອງ; ຊຸດ ທີ II ເຝິກອົບຮົມສຳເລັດ 30 ນ້ອງ, ຍິງ 17 ນ້ອງ, ໄດ້ເຝິກອົບຮົມໃຫ້ເອື້ອຍນ້ອງແມ່ຍິງຫຍິບກະເປົາຢູ່ບ້ານກອງລໍ, ເມືອງຄູນຄຳ ຈຳນວນຜູ້ເຂົ້າເຝິກ 10 ຄົນ”[2].

“ຫັດຖະກຳ-ຕໍ່າແຜ່ນແພຍ້ອມສີທຳມະຊາດ: ໄດ້ຊຸກຍູ້ໃຫ້ເອື້ອຍນ້ອງແມ່ຍິງບ້ານໜອງປີງ ເມືອງຍົມມະລາດຜະລິດຫັດຖະກຳ-ຕຳແຜ່ນແພ ເພື່ອເປັນສິນຄ້າປະຈຳເມືອງ ຈຳນວນ 23 ຄົນທີ່ໄດ້ເຂົ້າຮ່ວມ, ສາມາດສ້າງລາຍຮັບໃຫ້ແກ່ຄອບຄົວໄດ້ 60.000.000 ກີບຕໍ່ປີ. ຫັດຖະກຳຕໍ່າຫູກ: ໄດ້ສົ່ງເສີມໃຫ້ເອື້ອຍນ້ອງແມ່ຍິງຢູ່ບ້ານໂພວາໃຕ້ ເມືອງມະຫາໄຊຕໍ່າຫູກ ຈຳນວນ 2 ຄອບຄົວ ສ້າງລາຍຮັບເຂົ້າຄອບຄົວໄດ້ 23.000.000 ກີບຕໍ່ປີ.

ຫັດຖະກຳ-ຈັກສານ: ໄດ້ສົ່ງເສີມເອື້ອຍນ້ອງແມ່ຍິງຖັກຝອຍເປັນສິນຄ້າສ້າງລາຍຮັບເຂົ້າຄອບຄົວມີ 2 ບ້ານຂອງເມືອງໜອງບົກຄື: ບ້ານດົງກະສິນ ຈຳນວນ 59 ຄອບຄົວ ສາມາດຖັກຝອຍໄດ້ 64.350 ກ້ານ ສ້າງລາຍຮັບໄດ້ 712.700.000 ກີບຕໍ່ປີ, ບ້ານດົງບູນ ຈຳນວນ 71 ຄອບຄົວ ສາມາດຖັກຝອຍໄດ້ 66.350 ກ້ານ ສ້າງລາຍຮັບເຂົ້າຄອບຄົວໄດ້ 1.110.890.000 ກີບຕໍ່ປີ. ນອກຈາກນັ້ນ, ເອື້ອຍນ້ອງແມ່ຍິງບ້ານບຶງສານເທິງ, ເມືອງໜອງບົກຍັງໄດ້ຕໍ່າສາດ ຈຳນວນ 63 ຄອບຄົວ ສາມາດສ້າງລາຍຮັບເຂົ້າຄອບຄົວໄດ້ 99.420.000 ກີບຕໍ່ປີ.

ການປູກຝັງ ແລະລ້ຽງສັດ: ໄດ້ສົ່ງເສີມການປູກຝັງໂດຍເລີ່ມຈາກຫົວໜ່ວຍຄອບຄົວມີການຂະຫຍາຍຕົວນັບມື້ກວ້າງຂວາງອອກເຊັ່ນ: ປູກສາລີຫວານ, ເຜືອກ, ມັນດ້າງ, ຖົ່ວດິນ, ໝາກເຜັດ, ໝາກເຂືອ, ໝາກຖົ່ວ,ຜັກບົ່ວ, ຜັກຫອມ, ກະລໍ່າປີ ແລະພືດຜັກອື່ນໆ ສາມາດຕອບສະໜອງໃຫ້ແກ່ການບໍລິໂພກຂອງປະ

[1] ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານຮອບດ້ານຂອງສະຫະພັນແມ່ຍິງແຂວງຄຳມ່ວນ ປະຈຳປີ 2023, ໜ້າ 4.
[2] ບົດສະຫຼຸບການເຄື່ອນໄຫວວຽກງານສະຫະພັນແມ່ຍິງແຂວງ ປະຈຳປີ 2023, ໜ້າ 6.

ຊາກອນພາຍໃນແຂວງ ແລະເປັນສິນຄ້າສົ່ງອອກສ້າງລາຍໄດ້ໃຫ້ແກ່ແມ່ຍິງໄດ້ເປັນຢ່າງດີ. ການປູກໝາກແຕງ, ປູກໝາກຖົ່ວຂອງເອື້ອຍນ້ອງແມ່ຍິງບ້ານດອນຊຽວ ເມືອງໜອງບົກ ຈຳນວນ 1 ຄອບຄົວ ສາມາດສ້າງລາຍຮັບເຂົ້າຄອບຄົວໄດ້ 33.900.000 ກີບຕໍ່ປີຕໍ່ຄອບຄົວ; ປູກຜັກໃນຮົ່ມຂອງເອື້ອຍນ້ອງແມ່ຍິງບ້ານສົ້ມ, ເມືອງເຊບັ້ງໄຟໄດ້ 1 ຄອບຄົວ ສ້າງລາຍຮັບເຂົ້າສູ່ຄອບຄົວໄດ້ 144.000.000 ກີບຕໍ່ປີຕໍ່ຄອບຄົວ; ການລ້ຽງປາກະຊັງຂອງເອື້ອຍນ້ອງແມ່ຍິງບ້ານສອງເໜືອງໃຕ້ ເມືອງໜອງບົກ ຈຳນວນ 2 ຄອບຄົວແຕ່ລະຄອບຄົວສາມາດສ້າງລາຍຮັບເຂົ້າຄອບຄົວໄດ້ 200.000.000 ກີບຕໍ່ປີ”(1).

ໄດ້ສ້າງຕັ້ງກອງທຶນ: ແມ່ນມີກຸ່ມທ້ອນເງິນຂອງແມ່ຍິງຂັ້ນບ້ານໃນ 4 ເມືອງມີເງິນໝູນວຽນທັງໝົດ 12.823.237.188 ກີບ, ກອງທຶນຊ່ວຍເຫຼືອເຊິ່ງກັນແລະກັນ (ເສຍຊີວິດ) ໃນ 6 ເມືອງ ມີເງິນທັງໝົດ 519.266.000 ກີບ. ໜ່ວຍງານບໍລິການການເງິນຈຸລະພາກເພື່ອພັດທະນາແມ່ຍິງ ແລະຄອບຄົວໃນ 7 ເມືອງມີເງິນຝາກ 3.755.927.000 ກີບ ເຊິ່ງເປັນທ່າແຮງໃຫ້ແກ່ການພັດທະນາຂອງແມ່ຍິງບັນດາເຜົ່າທີ່ຢູ່ພາຍໃນແຂວງເຂົ້າໃນການແກ້ໄຂຄວາມທຸກຍາກຂອງເອື້ອຍນ້ອງແມ່ຍິງໃນການພັດທະນາພື້ນຖານໂຄງລ່າງ, ການປູກຝັງ-ລ້ຽງສັດ, ຫັດຖະກຳຕ່ຳຫູກທໍໄໝ ແລະທຸລະກິດຂະໜາດນ້ອຍຂອງຄອບຄົວໃຫ້ຄວາມສະດວກວ່ອງໄວ.

ຄຽງຄູ່ກັບຜົນສຳເລັດໃນຫຼາຍດ້ານນັ້ນ, ກໍຍັງມີຂໍ້ຈຳກັດບາງດ້ານທີ່ຈະຕ້ອງໄດ້ປັບປຸງແກ້ໄຂຄື:

1). ການຈັດຕັ້ງໂຄສະນາສຶກສາອົບຮົມກ່ຽວກັບການແກ້ໄຂຄວາມທຸກຍາກຂອງປະຊາຊົນ, ຂອງເອື້ອຍນ້ອງແມ່ຍິງບັນດາເຜົ່າຍັງບໍ່ທັນເຮັດໄດ້ຢ່າງຕໍ່ເນື່ອງ, ບໍ່ທັນມີຫຼາຍແບບ, ຫຼາຍວິທີ, ກວ້າງຂວາງທົ່ວເຖິງ ແລະແທດເໝາະກັບເປົ້າໝາຍເຮັດໃຫ້ຄວາມຮັບຮູ້ ແລະເຂົ້າໃຈຂອງປະຊາຊົນ, ເອື້ອຍນ້ອງແມ່ຍິງບັນດາເຜົ່າໃນການແກ້ໄຂຄວາມທຸກຍາກຕາມແນວທາງ, ນະໂຍບາຍຂອງພັກ-ລັດກໍຄືແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງຍັງເຮັດບໍ່ທັນເລິກເຊິ່ງ ສະແດງອອກຍັງມີປະຊາຊົນຈຳນວນໜຶ່ງມີແນວຄິດເອື່ອຍອີງລໍຖ້າແຕ່ການຊ່ວຍເຫຼືອຈາກຂັ້ນເທິງ.

2). ການປັບປຸງແບບແຜນວິທີເຮັດວຽກທີ່ແທດເໝາະກັບສະພາບຈຸດພິເສດຂອງແຕ່ລະທ້ອງຖິ່ນຮາກຖານ, ທ່າແຮງຂອງປະຊາຊົນເອື້ອຍນ້ອງແມ່ຍິງ, ແຕ່ລະສາຂາອາຊີບເພື່ອຕິດພັນກັບການແກ້ໄຂຄວາມທຸກຍາກຂອງສະຫະພັນແມ່ຍິງຍັງຊັກຊ້າ ນັບທັງການສຶກສາອົບຮົມປຸກລະດົມຂົນຂວາຍເຂົ້າໃນອົງການຈັດຕັ້ງແມ່ຍິງຍັງບໍ່ທັນກວ້າງຂວາງ. ການປັບປຸງລະບົບການຈັດຕັ້ງສະຫະພັນແມ່ຍິງຂັ້ນຮາກຖານບ້ານ, ຫົວໜ່ວຍທຸລະກິດ, ຕາມຫົວໜ່ວຍວິສາຫະກິດຍັງບໍ່ທັນໜັກແໜ້ນ ແລະການເຄື່ອນໄຫວຍັງບໍ່ຕໍ່ເນື່ອງ, ມີບາງໜ່ວຍແມ່ຍິງຍັງບໍ່ຮູ້ເຖິງພາລະບົດບາດ, ສິດ ແລະໜ້າທີ່ຂອງສະຫະພັນແມ່ຍິງ ກໍຄືໜ້າທີ່ຂອງສະມາຊິກແມ່ຍິງ.

3). ການບຳລຸງສ້າງພະນັກງານແຕ່ລະຂັ້ນ ໂດຍສະເພາະແມ່ນເຂດຊົນນະບົດຫ່າງໄກ

(1) ບົດສະຫຼຸບລາຍງານເປົ້າໝາຍຄອບຄົວ ແລະກຸ່ມການຜະລິດ 10 ເມືອງ ແຂວງຄຳມ່ວນ.

ສອກຫຼີກເພື່ອປະກອບເຂົ້າໃນການແກ້ໄຂຄວາມທຸກຍາກ, ພ້ອມທັງການປະຕິບັດນະໂຍບາຍຕໍ່ແມ່ຍິງຍັງມີລັກສະນະກວມລວມບໍ່ທັນຮັດກຸມເທົ່າທີ່ຄວນ; ການຊຸກຍູ້ຂະບວນການປະຕິບັດຂໍ້ແຂ່ງຂັນ 3 ດີຍັງບໍ່ທັນຟົດຟື້ນ ແລະກວ້າງຂວາງ.

4). ການມີສ່ວນຮ່ວມຂອງເອື້ອຍນ້ອງແມ່ຍິງເຂົ້າໃນການພັດທະນາເພື່ອແກ້ໄຂຄວາມທຸກຍາກບໍ່ທັນກວ້າງຂວາງ, ຍັງມີການຜະລິດແບບພໍໃຊ້ພໍລາວ, ບໍ່ທັນກາຍເປັນສິນຄ້າຈຶ່ງເຮັດໃຫ້ບົດບາດຂອງແມ່ຍິງໃນວຽກງານແກ້ໄຂຄວາມທຸກຍາກໃນໄລຍະຜ່ານມາບໍ່ທັນໂດດເດັ່ນເທົ່າທີ່ຄວນ.

ເພື່ອປະຕິບັດຕາມແນວທາງນະໂຍບາຍຂອງພັກ ກໍຄືມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກໃນການສືບຕໍ່ບຸກທະລຸທັງ 4 ດ້ານຢ່າງແຂງແຮງຕໍ່ເນື່ອງ, ໃນນັ້ນການບຸກທະລຸການແກ້ໄຂຄວາມທຸກຍາກຂອງປະຊາຊົນດ້ວຍການຂຸດຄົ້ນ, ສຸມແຫຼ່ງທຶນ, ສຸມພະນັກງານ ແລະຄວາມພະຍາຍາມເຂົ້າໃສ່ຕົວຈິງ, ກໍ່ສ້າງພື້ນຖານໂຄງລ່າງດ້ານເສດຖະກິດ-ສັງຄົມຢ່າງມີຈຸດສຸມເປັນກຳລັງແຮງຊຸກດັນໃຫ້ແກ່ການພັດທະນາໃນຂົງເຂດອື່ນໆຢ່າງແຂງແຮງນັ້ນ, ຕາມທັດສະນະຂອງຜູ້ຂຽນແລ້ວເວົ້າລວມ, ເວົ້າສະເພາະແມ່ນສະຫະພັນແມ່ຍິງແຂວງຄຳມ່ວນຄວນເອົາໃຈໃສ່ບາງດ້ານດັ່ງນີ້:

ໜຶ່ງ, ສະຫະພັນແມ່ຍິງແຕ່ລະຂັ້ນຕ້ອງເສີມຂະຫຍາຍບົດບາດຂອງຕົນຕິດພັນກັບແນວທາງ, ນະໂຍບາຍຂອງພັກ-ລັດໃນແຕ່ລະໄລຍະໂດຍຈັດຕັ້ງເຊື່ອມຊຶມເອກະສານສຳຄັນຕ່າງໆທີ່ເປັນການຍົກສູງຄວາມຮູ້ ແລະຄວາມເຂົ້າໃຈຂອງແມ່ຍິງຕໍ່ການປະກອບສ່ວນພັດທະນາສ້າງສາປະເທດ ກໍຄືການແກ້ໄຂຄວາມທຸກຍາກພາຍໃນແຂວງ, ຊຸມຊົນຂອງຕົນຖືເອົາການຊຸກຍູ້ສົ່ງເສີມແມ່ຍິງເຂົ້າຮ່ວມໃນຂະບວນການແກ້ໄຂຄວາມທຸກຍາກຂອງປະຊາຊົນແມ່ນໜ້າທີ່ການເມືອງຂອງຕົນ.

ສອງ, ການແກ້ໄຂຄວາມທຸກຍາກຂອງປະຊາຊົນຕ້ອງຕິດແໜ້ນກັບແນວທາງ, ແຜນນະໂຍບາຍຂອງພັກ-ລັດ; ສະນັ້ນ, ຄະນະພັກ-ຄະນະນຳຂອງແຂວງ ຈຳເປັນຕ້ອງເອົາໃຈໃສ່ໃນການພັດທະນາເສດຖະກິດ-ສັງຄົມຂອງຕົນ ເພື່ອປັບປຸງຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນແນໃສ່ເພື່ອລົບລ້າງຄວາມທຸກຍາກຂອງປະຊາຊົນໃຫ້ໝົດໄປໃນປີ 2025 ຕາມແຜນຍຸດທະສາດທີ່ພັກ-ລັດວາງໄວ້. ຕ້ອງມີການປະສານງານ ແລະສົມທົບ ລະຫວ່າງໜ່ວຍງານຕ່າງໆຈາກສູນກາງ ແລະທ້ອງຖິ່ນກັບຫຼາຍຂົງເຂດວຽກງານທີ່ກ່ຽວຂ້ອງ ເພື່ອພ້ອມກັນສຸມທຸກທ່າແຮງທີ່ມີເຂົ້າໃນການແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ.

ສາມ, ການແກ້ໄຂຄວາມທຸກຍາກຕ້ອງຕິດພັນກັບການຫັນລົງກໍ່ສ້າງຮາກຖານຂອງຄະນະສະຫະພັນແມ່ຍິງ ແຕ່ລະຂັ້ນຊຸກຍູ້ການປູກ-ການລ້ຽງເຂົ້າໃນການແກ້ໄຂຄອບຄົວຕົນທຸກຍາກຢ່າງຕັ້ງໜ້າ. ແຕ່ລະຄອບຄົວຕ້ອງປຸກລະດົມສະມາຊິກຄອບຄົວຂອງຕົນເຂົ້າໃນການແກ້ໄຂຄວາມທຸກຍາກ, ສ້າງທຸກຄົນໃນຄອບຄົວໃຫ້ມີວຽກເຮັດງານທຳ, ປະກອບອາຊີບໃນສາຂາວິຊາຕ່າງໆ ແລະປະກອບທຸລະກິດຕ່າງໆທີ່ເຫັນວ່າຄອບຄົວຕົນເອງເໝາະສົມ, ສາມາດດຳເນີນທຸລະກິດໄປໄດ້.

ສີ່, ສືບຕໍ່ຫັນທຶນ, ຫັນພະນັກງານລົງກໍ່ສ້າງຮາກຖານການເມືອງ; ສ້າງກຸ່ມບ້ານຕາມ

ຄຳສັ່ງ ວ່າດ້ວຍການສ້າງບ້ານເປັນຫົວໜ່ວຍພັດທະນາ, ສ້າງບ້ານໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດ, ສະບັບເລກທີ 03/ກມສພ; ປັບປຸງລະບົບການເມືອງຢູ່ຮາກຖານໃຫ້ມີຄວາມໜັກແໜ້ນເຂັ້ມແຂງ; ສືບຕໍ່ຈັດພູມລຳເນົາ ແລະອາຊີບຄົງທີ່ຈຳເປັນໄປເຖິງຊົນນະບົດ, ສ້າງຕັ້ງ ແລະຄຸ້ມຄອງກອງທຶນພັດທະນາບ້ານປຸກລະດົມທຸກພາກສ່ວນໃນສັງຄົມປະກອບສ່ວນທຶນຮອນ ເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນ, ຮອດປີ 2025 ແກ້ໄຂບ້ານ ແລະຄອບຄົວທຸກຍາກໃຫ້ໄດ້ໂດຍພື້ນຖານ.

ສັງລວມແລ້ວ, ບົດບາດຂອງສະຫະພັນແມ່ຍິງແຕ່ລະຂັ້ນໃນການແກ້ໄຂຄວາມທຸກຍາກຂອງປະຊາຊົນແມ່ນການເສີມຂະຫຍາຍບົດບາດຂອງສະຫະພັນແມ່ຍິງເຂົ້າວຽກງານໃຫ້ມີຄວາມເຂັ້ມແຂງ ແລະແມ່ນການຈັດຕັ້ງຜັນຂະຫຍາຍແນວທາງ, ນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ ແນໃສ່ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ບັນລຸຕາມເປົ້າໝາຍສະຫັດສະຫວັດດ້ານການພັດທະນານຳພາປະເທດຊາດອອກຈາກສະຖານະພາບຄວາມດ້ອຍພັດທະນາໃນຕໍ່ໜ້າ. ເພື່ອໃຫ້ບັນລຸຈຸດ ປະສົງດັ່ງກ່າວຜ່ານມາສະຫະພັນແມ່ຍິງທຸກຂັ້ນໄດ້ເສີມຂະຫຍາຍບົດບາດຂອງຕົນສຸມໃສ່ກະຕຸກຊຸກຍູ້ສ້າງເງື່ອນໄຂສິ່ງອຳນວຍຄວາມສະດວກໃຫ້ປະຊາຊົນ ກໍຄືສ້າງໃຫ້ແມ່ຍິງໄດ້ມີວຽກເຮັດງານທຳ, ມີວິຊາອາຊີບທີ່ຖາວອນໝັ້ນຄົງ, ມີຄວາມຮູ້-ຄວາມສາມາດເຂົ້າໃນການຜະລິດໃຫ້ເຂັ້ມແຂງ ແລະມີລາຍຮັບສູງຂຶ້ນ, ຫັນເອົາການຜະລິດແບບທຳມະຊາດໃຫ້ກາຍເປັນການຜະລິດສິນຄ້າ ທັງຊຸກຍູ້ການຜະລິດໃຫ້ຂະຫຍາຍຕົວໄປຕາມກົນໄກຄຸ້ມຄອງເສດຖະກິດໃໝ່, ເສີມຂະຫຍາຍສິດເປັນເຈົ້າ ແລະຫົວຄິດປະດິດສ້າງຂອງເອື້ອຍນ້ອງແມ່ຍິງຫັນມານຳໃຊ້ວິທະຍາສາດເຕັກນິກ, ເຕັກໂນໂລຊີເຂົ້າໃນການຜະລິດກະສິກຳສາມາດກຸ້ມຕົນເອງ ແລະສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ເຮັດໃຫ້ຊີວິດການເປັນຢູ່ຂອງເອື້ອຍນ້ອງແມ່ຍິງນັບມື້ນັບດີຂຶ້ນ.


ສະຫະພັນແມ່ຍິງແຂວງ ໃນນາມໂຄງການເພີ່ມໂອກາດການເປັນຜູ້ປະກອບການ ແລະການຈ້າງງານສຳລັບໄວໜຸ່ມ ແລະແມ່ຍິງຂອງອົງການ Action Education ໄດ້ຈັດຝຶກອົບຮົມການສົ່ງເສີມຜະລິດຕະພັນເຂົ້າໂຄບ ແລະເຂົ້າກຽບ ເພື່ອສ້າງເປັນສິນຄ້າປະຈຳທ້ອງຖິ່ນໃຫ້ແກ່ກຸ່ມແມ່ຍິງ ແລະໄວໜຸ່ມ ບ້ານ ກອງລໍ ເມືອງ ຄູນຄຳ ວັນທີ 24-26 ມັງກອນ 2025

# ການມີສ່ວນຮ່ວມຂອງປະຊາຊົນໃນການສ້າງຄວາມເຂັ້ມແຂງໃຫ້ແກ່ອົງການບໍລິຫານລັດ ຢູ່ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ

ຂຽນໂດຍ: ນ. ຕຸ້ຍ ບົວມະນີຈັນ

ອົງການບໍລິຫານລັດເປັນອົງການຈັດຕັ້ງໃນການປະຕິບັດກົດໝາຍ, ເປັນອົງການບໍລິຫານລັດທີ່ມີ ຄວາມຮັບຜິດຊອບປະຕິບັດພາລະບົດບາດໃນການຄຸ້ມຄອງ, ດັດປັບສັງຄົມໃຫ້ມີຄວາມເປັນເອກະພາບ, ໄດ້ຮັບການຈັດຕັ້ງຂຶ້ນຢ່າງເປັນລະບົບແຕ່ສູນກາງລົງຮອດທ້ອງຖິ່ນ ປະກອບດ້ວຍກົງຈັກບໍລິຫານລັດ, ໄດ້ນຳໃຊ້ອຳນາດລັດ ເພື່ອປະຕິບັດບົດບາດໃນການຄຸ້ມຄອງ, ບັນຊາຕໍ່ກັບທຸກຂົງເຂດວຽກງານທົ່ວ ສປປ ລາວ; ອົງການບໍລິຫານລັດ "ແມ່ນອົງການຄຸ້ມຄອງລັດ ຫຼື ຄຸ້ມຄອງວຽກງານທຸກດ້ານ, ມີໜ້າທີ່ປະຕິບັດກົດໝາຍ ແລະນຳພາຈັດຕັ້ງປະຕິບັດແຜນນະໂຍບາຍ, ແຜນການຂອງລັດ, ບັນດາກະຊວງ, ທະບວງ, ກົມ, ພະແນກ ແມ່ນອົງການບໍລິຫານ"(1). ການສ້າງຄວາມເຂັ້ມແຂງໃຫ້ແກ່ອົງການບໍລິຫານລັດເນື້ອແທ້ແມ່ນຍາກຍົກລະດັບ ຄວາມສາມາດໃນການບໍລິຫານ, ຍາກກະຕຸກຊຸກຍູ້, ຍາກກະຕຸ້ນໃຫ້ອົງການດັ່ງກ່າວເພີ່ມທະວີຄວາມຮັບຜິດ ຊອບໃນການເຮັດໜ້າທີ່ບໍລິຫານລັດ ເນື່ອງຈາກວ່າໃນໄລຍະໃໝ່ນີ້ມີຫຼາຍບັນຫາທີ່ທ້າທາຍທົດສອບ ແລະມີຫຼາຍເງື່ອນໄຂທີ່ເອື້ອອຳນວຍໃຫ້ແກ່ການບໍລິຫານລັດໃຫ້ສູງຂຶ້ນ ຈາກການຄົ້ນຄວ້າ, ວິເຄາະ-ວິໄຈເຫັນວ່າຖ້າຫາກອົງການບໍລິຫານລັດມີຄວາມເຂັ້ມແຂງຈະເຮັດໃຫ້ການພັດທະນາປະເທດຊາດມີຄວາມຈະເລີນ, ຄວາມສີວິໄລໄວຂຶ້ນ ເຊິ່ງວຽກງານດັ່ງກ່າວຈະມີຄວາມເຂັ້ມແຂງໄດ້ຈຳເປັນຕ້ອງມີການປະກອບສ່ວນຂອງປະຊາຊົນເປັນ ຜູ້ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດວຽກງານໃນທົ່ວສັງຄົມ. ສະນັ້ນ, ການສ້າງຄວາມເຂັ້ມແຂງໃຫ້ແກ່ອົງການບໍລິຫານລັດເວົ້າລວມ, ເວົ້າສະເພາະແມ່ນຢູ່ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນຈຶ່ງກາຍເປັນວຽກງານໜຶ່ງທີ່ສຳຄັນ ແລະເປັນວຽກທີ່ຈຳເປັນໃນເງື່ອນໄຂປັດຈຸບັນກໍຄືອະນາຄົດ.

ພາຍໃຕ້ອຸດົມການຂອງລັດທິມາກ-ເລນິນ, ບົນພື້ນຖານຄວາມຮັບຮູ້ວ່າສັງຄົມນິຍົມແມ່ນຮູບການຂະຫຍາຍຕົວສູງສຸດຂອງລະບອບປະຊາທິປະໄຕປະຊາຊົນ, ການເສີມຂະຫຍາຍລະບອບປະຊາທິປະໄຕ ປະຊາຊົນໃຫ້ເຂັ້ມແຂງແມ່ນຄວາມຈຳເປັນທີ່ຂາດບໍ່ໄດ້ໃນການສ້າງປະຖົມປັດໄຈສຳລັບການນຳພາປະເທດກ້າວຂຶ້ນສັງຄົມນິຍົມຂອງປະເທດເຮົາ. ສປປ ລາວເຮົາແມ່ນຢູ່ໃນໄລຍະແຫ່ງການສືບຕໍ່ສ້າງ ແລະຂະຫຍາຍລະບອບປະຊາທິປະໄຕ ປະຊາຊົນ; ລະບອບສິດເປັນເຈົ້າ, ສິດເສລີພາບ, ປະຊາທິປະໄຕຂອງ ປະຊາຊົນ

(1) ວັດຈະນານຸກົມ ພາສາຫວຽດນາມ, ປີ 1997, ໜ້າ 208, ພິມໃນປຶ້ມອະທິບາຍຄຳສັບການປົກຄອງ (ຮັບໃຊ້ຄົ້ນຄວ້າທົ່ວໄປ), ປີ 2021, ໜ້າ 187.

ໄດ້ຮັບການເສີມຂະຫຍາຍໃນລະດັບສູງ ເພື່ອຄວາມສົມບູນພູນສຸກຂອງປະຊາຊົນລາວບັນດາ ເຜົ່າ ພາຍໃຕ້ການນຳພາຂອງພັກ ປະຊາຊົນປະຕິວັດລາວ ແລະການຄຸ້ມຄອງຂອງ "ລັດປະຊາທິ ປະໄຕປະຊາຊົນ, ອຳນາດທັງໝົດເປັນຂອງປະຊາຊົນ, ໂດຍປະຊາຊົນ ແລະເພື່ອຜົນປະໂຫຍດ ຂອງປະຊາຊົນ"(1). ກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ ໄດ້ໃຫ້ທັດສະນະວ່າ: "ປັບປຸງກົນໄກການຄຸ້ມຄອງໃຫ້ມີຄວາມເປັນລະບົບເອກະພາບ ແລະເຂັ້ມແຂງ ຄຽງຄູ່ກັບຮັບປະກັນແບບ ແຜນໃຫ້ປະຊາຊົນຮູ້, ປະຊາຊົນໄດ້ປຶກສາຫາລື ແລະປະຊາຊົນເຂົ້າຮ່ວມການຈັດຕັ້ງປະຕິບັດ"(2); ປັດຈຸບັນລະບອບປະຊາທິປະໄຕປະຊາຊົນຢູ່ປະເທດເຮົາໄດ້ຮັບການເສີມຂະຫຍາຍໃຫ້ມີຄວາມເຂັ້ມແຂງຢ່າງຕໍ່ເນື່ອງ, ແຕ່ເຖິງແນວໃດກໍຕາມພວກເຮົາກໍບໍ່ສາມາດປະຕິເສດໄດ້ວ່າຍັງມີຫຼາຍດ້ານທີ່ຈະຕ້ອງໄດ້ສືບຕໍ່ປັບປຸງ, ແກ້ໄຂ ເປັນຕົ້ນແມ່ນດ້ານສິດເປັນເຈົ້າຢ່າງເຕັມສ່ວນຂອງປະຊາຊົນ, ຄວາມຕື່ນຕົວທາງດ້ານການເມືອງຂອງປະຊາຊົນໃນທົ່ວປະເທດ ໂດຍລວມຍັງບໍ່ທັນບັນລຸໄດ້ເທົ່າທີ່ຄວນ; ການເຄື່ອນໄຫວວຽກງານຂອງລັດຍັງບໍ່ທັນຕອບສະໜອງໄດ້ຕາມຄວາມຕ້ອງການຂອງປະຊາຊົນລາວບັນດາເຜົ່າໄດ້ຢ່າງຄົບຖ້ວນ ແລະທົ່ວເຖິງ. ດັ່ງນັ້ນ, ເພື່ອສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ອົງການບໍລິຫານລັດຈຶ່ງເຫັນໄດ້ຄວາມສຳຄັນ ແລະຈຳເປັນໃນການມີສ່ວນຮ່ວມຂອງປະຊາຊົນໃນສັງຄົມ ເພື່ອການປົກຄອງລັດ, ການບໍລິຫານລັດທີ່ດີເຮັດໃຫ້ການບໍລິຫານລັດແບບມີສ່ວນຮ່ວມຂອງປະຊາຊົນໄດ້ຮັບການສົ່ງເສີມຢ່າງແຜ່ຫຼາຍໃນທົ່ວໂລກ, ໃນນີ້ ການມີສ່ວນຮ່ວມຂອງປະຊາຊົນມີສ່ວນຮ່ວມໂດຍກົງ, ການມີສ່ວນຮ່ວມທາງອ້ອມ ແລະການມີສ່ວນຮ່ວມ ໂດຍການເປີດໂອກາດມີສ່ວນຮ່ວມໃນການຕັດສິນໃຈ, ການຈັດຕັ້ງປະຕິບັດ, ຮັບຜົນປະໂຫຍດ ແລະການມີສ່ວນຮ່ວມໃນການປະເມີນຜົນ ເຊິ່ງປະຊາຊົນໄດ້ປະກອບສ່ວນໃນການເຄື່ອນໄຫວວຽກງານຂອງລັດ ສະແດງອອກໃນຫຼາຍດ້ານ ເປັນຕົ້ນແມ່ນການມີສ່ວນຮ່ວມພຽງແຕ່ໃນນາມ; ການມີສ່ວນຮ່ວມການຈັດຕັ້ງປະຕິບັດ; ການມີສ່ວນຮ່ວມດ້ວຍເຫດຈຳເປັນສຸດວິໄສໃດໜຶ່ງ; ການມີສ່ວນຮ່ວມໃນການຮັບຮູ້; ການມີສ່ວນ ຮ່ວມໃນການປຶກສາຫາລື; ການມີສ່ວນຮ່ວມໃນລະດັບທີ່ຄຳຄິດເຫັນໄດ້ຮັບການພິຈາລະນາທີ່ມີຂອບເຂດ ຈຳກັດໃນການຈັດຕັ້ງປະຕິບັດ; ການມີສ່ວນຮ່ວມເຕັມສ່ວນ; ການມີສ່ວນຮ່ວມໃນລະດັບທີ່ໄດ້ຮັບການມອບສິດໃນການຄຸ້ມຄອງບໍລິຫານບາງສ່ວນຈາກລັດ ແລະການມີສ່ວນຮ່ວມຢ່າງເຕັມສ່ວນໃນການຄຸ້ມຄອງ ບໍລິຫານ. ການມີສ່ວນຮ່ວມຂອງປະຊາຊົນເຫຼົ່ານັ້ນແມ່ນການມີສ່ວນຮ່ວມທີ່ປະຊາຊົນເປັນເຈົ້າ, ສາມາດມີອຳນາດ, ມີອິດທິພົນຕໍ່ການບໍລິຫານລັດ.

ການມີສ່ວນຮ່ວມຂອງປະຊາຊົນໃນການສ້າງຄວາມເຂັ້ມແຂງໃຫ້ແກ່ອົງການບໍລິຫານລັດ ຢູ່ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ ໃນລະບອບປະຊາທິປະໄຕປະຊາຊົນ ໝາຍເຖິງການເຮັດໃຫ້ປະຊາຊົນໄດ້ຮັບຮູ້ເຖິງສິດ ແລະພັນທະຂອງຕົນເອງທີ່ກຳນົດໄວ້ໃນລັດຖະທຳມະນູນ ແລະກົດໝາຍ, ແລະລະບຽບຕ່າງໆທີ່ວາງອອກແຕ່ລະໄລຍະ,

(1) ລັດຖະທຳມະນູນ (ສະບັບປັບປຸງ), ມາດຕາ 2, ປີ 2015.

(2) ເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ, ປີ 2021, ໜ້າ 74.

ມີຂໍ້ມູນຂ່າວສານທີ່ຄົບຖ້ວນ, ທັນສະພາບ, ທັນເຫດການກ່ຽວກັບການດຳເນີນງານຕ່າງໆຂອງລັດ ເພື່ອເປັນພື້ນຖານໃຫ້ແກ່ການມີສ່ວນຮ່ວມຂອງປະຊາຊົນໃນການຄົ້ນຄິດ, ນຳສະເໜີຂໍ້ຄິດເຫັນຕ່າງໆເປັນບ່ອນອີງໃຫ້ແກ່ລັດໃນການກຳນົດນະໂຍບາຍ ເພື່ອຈັດຕັ້ງປະຕິບັດພ້ອມທັງເປັນເງື່ອນໄຂໃຫ້ປະຊາຊົນ ໄດ້ປະກອບສ່ວນໃນການຕິດຕາມ, ກວດກາການເຄື່ອນໄຫວຂອງລັດໃຫ້ເປັນໄປຢ່າງໂປ່ງໃສແນໃສ່ຮັບປະກັນຜົນປະໂຫຍດອັນຊອບທຳຂອງປະຊາຊົນ ກໍຄືຜົນປະໂຫຍດຂອງຊາດ. ການໃຫ້ປະຊາຊົນໄດ້ປະກອບສ່ວນປຶກສາຫາລືເຊັ່ນ: ການເປີດຮັບຟັງຄຳຄິດຄຳເຫັນຂອງປະຊາຊົນ, ການຮັບຄຳໜີຕິຊົມ, ຄຳຮ້ອງຟ້ອງ, ຮ້ອງທຸກ ແລະຂໍ້ສະເໜີຕ່າງໆຂອງປະຊາຊົນທັງເປັນໂອກາດໃຫ້ລັດຖະບານສາມາດຊີ້ແຈງ ແລະແກ້ໄຂຂໍ້ຂ້ອງໃຈຕ່າງໆໃຫ້ແກ່ປະຊາຊົນໄດ້ ຢ່າງຖືກຕ້ອງ ແລະຊັດເຈນເຮັດໃຫ້ລັດໄດ້ໃກ້ຊິດຕິດແທດກັບປະຊາຊົນຫຼາຍຂຶ້ນ. ເມືອງຫາດຊາຍຟອງເປັນໜຶ່ງເມືອງໃນ 9 ຕົວເມືອງຂອງນະຄອນຫຼວງວຽງຈັນ, ມີຊາຍແດນລຽບຕາມລຳແມ່ນ້ຳຂອງ ຍາວ 56 ກິໂລແມັດ, "ມີເນື້ອທີ່ທັງໝົດ 258 ກິໂລຕາແມັດ ຫຼື ເທົ່າກັບ 25.800 ເຮັກຕາ, ມີດ່ານເຂົ້າ-ອອກ ລະຫວ່າງປະເທດ 2 ແຫ່ງ ຄື: ດ່ານສາກົນຂົວມິດ ຕະພາບລາວ-ໄທ 1 ແລະດ່ານທ້ອງຖິ່ນທ່າເດື່ອ, ເປັນເສັ້ນທາງຜ່ານຂອງລົດໄຟ ລາວ-ໄທ, ມີສາງຄ່ຽນຖ່າຍສິນຄ້າທ່າບົກທ່ານາແລ້ງ (ເຂດໂລຈິດສ໌ຕິກ); ທົ່ວເມືອງປະກອບມີ 60 ບ້ານ; ໃນນັ້ນ, ຈຳນວນ 36 ບ້ານທີ່ມີຊາຍແດນ ຕິດກັບແມ່ນ້ຳຂອງ, ມີຄອບຄົວທັງໝົດ 19.875 ຄອບຄົວ, ມີ 21.889 ຫຼັງຄາເຮືອນ, ມີພົນລະເມືອງທັງໝົດ 107.132 ຄົນ, ຍິງ 55.170 ຄົນ ປະຊາກອນສ່ວນຫຼາຍແມ່ນ ປະກອບອາຊີບປູກຝັງ-ລ້ຽງສັດກວມເອົາ 70% ຂອງພົນລະເມືອງທັງໝົດ"(1); "ທົ່ວເມືອງມີພະນັກງານ-ລັດຖະກອນທັງໝົດ 1.279 ຄົນ, ຍິງ 553 ຄົນ (ທຽບໃສ່ປີ 2023 ເພີ່ມຂຶ້ນ 21 ຄົນ, ຍິງ 2 ຄົນ), ໃນນັ້ນ, ມີພະນັກງານສາຍຕັ້ງທີ່ຂຶ້ນກັບພະແນກຕ່າງໆຂັ້ນນະຄອນຫຼວງ ຈຳນວນ 297 ຄົນ, ຍິງ 138 ຄົນ, ສາຍຂວາງທີ່ຂຶ້ນກັບອົງການປົກຄອງເມືອງ ຈຳນວນ 69 ຄົນ, ຍິງ 32 ຄົນ, ພະນັກງານຄູທົ່ວເມືອງ ຈຳນວນ 471 ຄົນ, ຍິງ 323 ຄົນ, ພະນັກ ງານນັກຮົບເກົ່າ ຈຳນວນ 19 ຄົນ, ຍິງ 0 ຄົນ, ພະນັກງານ ປກຊ ຈຳນວນ 113 ຄົນ, ຍິງ 16 ຄົນ, ພະນັກງານ ປກສ ຈຳນວນ 253 ຄົນ, ຍິງ 30 ຄົນ, ພະນັກງານໄຟຟ້າເມືອງ ຈຳນວນ 57 ຄົນ, ຍິງ 14 ຄົນ" , ໄດ້ສົ່ງ ພະນັກງານໄປຍົກລະດັບທິດສະດີການເມືອງ-ການປົກຄອງ ນະຄອນຫຼວງ ຈຳນວນ 3 ສະຫາຍ ຍິງ 01 ສະຫາຍ."(2).

ໃນໄລຍະຜ່ານມາຄະນະພັກ-ຄະນະນຳຂອງເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ ໄດ້ເອົາໃຈໃສ່ໃນການຈັດຕັ້ງຄວາມເຂັ້ມແຂງໃຫ້ເມືອງດ້ວຍຫຼາຍຮູບການ ເປັນຕົ້ນແມ່ນໄດ້ຈັດຕັ້ງປາຖະກະຖາເລົ່າມູນເຊື້ອອັນ

(1) ບົດສະຫຼຸບການນຳພາ-ຊີ້ນຳວຽກງານຮອບດ້ານຂອງອົງຄະນະພັກເມືອງຫາດຊາດຟອງ ສະໄໝທີ VII ໃນໄລຍະ 1 ປີ ຜ່ານມາ ແລະທິດທາງແຜນວຽກຈຸດສຸມຕໍ່ໜ້າ ປີ 2024, ສະບັບເລກທີ 18/ຈມ.ຫຊຟ, ລົງວັນທີ 17 ມັງກອນ 2024, ໜ້າ 1.

(2) ຫ້ອງວ່າການປົກຄອງເມືອງຫາດຊາດຟອງ, ສະຖິຕິສັງລວມພະນັກງານທົ່ວເມືອງຫາດຊາຍຟອງ ສົກປີ 2024, ໜ້າ 1.

ສຳຄັນຕ່າງໆຂອງພັກ, ຂອງຊາດໃຫ້ແກ່ພະນັກງານ, ສະມາຊິກພັກຕະຫຼອດຮອດພໍ່ແມ່ປະຊາ ຊົນພາຍໃນເມືອງໄດ້ທັງໝົດ 9 ຄັ້ງ, ມີຜູ້ເຂົ້າຮ່ວມທັງໝົດ 1.069 ເທື່ອຄົນ, ຍິງ 317 ເທື່ອຄົນ; ສຳເລັດການຈັດກອງປະຊຸມປະເມີນຜົນຈັດຕັ້ງເຊື່ອມຊຶມ ແລະຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກຕິດພັນກັບມະຕິກອງປະຊຸມໃຫຍ່ ຄັ້ງທີ VII ຂອງອົງຄະນະພັກ ນະຄອນຫຼວງວຽງຈັນ ກໍຄືມະຕິກອງ ປະຊຸມໃຫຍ່ ຄັ້ງທີ VII ຂອງອົງຄະນະພັກເມືອງເຂົ້າສູ່ລວງເລິກຂອງທຸກຂົງເຂດວຽກງານ, ຂະແໜງການ ແລະຮາກຖານບ້ານ; ສຳເລັດການຈັດກອງປະຊຸມຕີລາຄາການນຳພາ-ຊີ້ນຳຮອບດ້ານຂອງອົງຄະນະພັກເມືອງຫາດ ຊາຍຟອງ ກາງສະໄໝຂອງ ກອງປະຊຸມໃຫຍ່ ຄັ້ງທີ VII ແຕ່ປີ 2020-2023 ແລະທິດທາງແຜນວຽກຈຸດສຸມໃນໄລຍະທ້າຍສະໄໝ ສາມາດຈັດເກັບລາຍຮັບເຂົ້າງົບປະມານໄດ້ທັງໝົດ 33.244.028.986 ກີບ, ໄດ້ຮັບອະນຸມັດທັງໝົດ 29 ໂຄງການ, ທົ່ວເມືອງມີເນື້ອທີ່ຜະລິດກະສິກຳທັງໝົດ 9.006 ເຮັກຕາຕໍ່ປີ, ກຸ່ມການຜະລິດກະສິກຳເປັນສິນຄ້າ ຈຳນວນ 22 ກຸ່ມ, ມີ 423 ຄອບຄົວ ເນື້ອທີ່ທັງໝົດ 751,44 ເຮັກຕາ, ກຸ່ມຜະລິດພືດຜັກ ສະອາດເປັນສິນຄ້າມີທັງໝົດ 184 ຄອບຄົວ, ເນື້ອທີ່ 114,14 ເຮັກຕາ ເປັນມູນຄ່າ 552,00 ໂດລາສະຫະລັດ, “ທົ່ວເມືອງມີໂຮງງານທັງໝົດ 140 ແຫ່ງ; ຫົວໜ່ວຍທຸລະກິດ ຈຳນວນ 2.384 ຫົວໜ່ວຍ; ໃນນັ້ນ, ຂັ້ນກະຊວງອອກອະນຸຍາດ ຈຳນວນ 1.276 ຫົວໜ່ວຍ, ຂັ້ນພະແນກອອກອະນຸຍາດ ຈຳນວນ 873 ຫົວໜ່ວຍ ແລະຂັ້ນເມືອງອອກອະນຸຍາດ ຈຳນວນ 236 ຫົວໜ່ວຍ; ສິນຄ້າໂອດ໋ອບມີທັງໝົດ 8 ຫົວໜ່ວຍ ທຽບໃສ່ປີ 2022 (ເພີ່ມຂຶ້ນໃໝ່ 1 ຫົວໜ່ວຍ) ແລະມີຄອບຄົວຕົວແບບ ຈຳນວນ 25 ຄອບຄົວ”[1], ເຄື່ອນ ໄຫວວຽກງານການພັດທະນາ ຕາມດຳລັດວ່າດ້ວຍມາດຕະຖານພົ້ນທຸກ ແລະມາດຕະຖານພັດທະນາສາມາດປະກາດຮັບຮອງບ້ານພົ້ນທຸກ, ບ້ານພັດທະນາ, ບ້ານສາທາລະນະສຸກແບບຢ່າງ ແລະບ້ານວັດທະນະທຳໄດ້ 60 ບ້ານ, ບ້ານປ້ອງກັນຄວາມສະຫງົບດີໄດ້ 53 ບ້ານ ແລະບ້ານປ້ອງກັນຊາດເຂັ້ມແຂງໄດ້ 3 ບ້ານ; ສາມາດເປັນຄອບຄົວແບບຢ່າງການປະຕິບັດກົດໝາຍໄດ້ “7.832 ຄອບຄົວ, ໃຫ້ຄຳປຶກສາທາງດ້ານກົດໝາຍ ເຄື່ອນທີ ຈຳນວນ 33 ເລື່ອງ, ແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນທົ່ວເມືອງ 75 ເລື່ອງ, ໄດ້ເປີດເຝິກອົບຮົມກົດໝາຍ ລະບົບ 45 ວັນ, ມີນັກສຳມະນາກອນທັງໝົດ 37 ຄົນ, ຍິງ18 ຄົນ”[2], ຜົນສຳເລັດເຫຼົ່ານັ້ນລ້ວນແລ້ວແຕ່ເປັນການປະກອບສ່ວນຈາກປະຊາຊົນເຮັດໃຫ້ມີກຳລັງແຮງຊຸກຍູ້ດ້ານການເມືອງ, ດ້ານເສດຖະກິດ, ດ້ານວັດທະນະທຳ-ສັງຄົມ ແລະດ້ານປ້ອງກັນຊາດ ແລະປ້ອງກັນຄວາມສະຫງົບມີຄວາມເຂັ້ມແຂງຂຶ້ນ ເຊິ່ງຜ່ານມາສາມາດຕີລາຄາໄດ້ຢ່າງຊັດເຈນວ່າການປະກອບສ່ວນຂອງປະຊາຊົນໃນການສ້າງຄວາມເຂັ້ມແຂງໃຫ້ແກ່ອົງການບໍລິຫານລັດຢູ່ເມືອງຫາດຊາຍຟອງມີຜົນສຳເລັດຫຼາຍດ້ານ, ຄຽງຄູ່ກັນນັ້ນຍັງມີຜົນສຳເລັດອີກຈຳນວນໜຶ່ງ ເປັນຕົ້ນແມ່ນການມີສ່ວນຮ່ວມດ້ານການກໍ່ສ້າງພື້ນຖານໂຄງ

---

(1),(2) ບົດສະຫຼຸບການນຳພາ-ຊີ້ນຳວຽກງານຮອບດ້ານຂອງອົງຄະນະພັກເມືອງຫາດຊາດຟອງ ນະຄອນຫຼວງວຽງຈັນ ສະໄໝທີ່ VII ໃນໄລຍະ 1 ປີ ຜ່ານມາ ແລະທິດທາງແຜນວຽກຈຸດສຸມຕໍ່ໜ້າ ປີ 2024, ສະບັບເລກທີ 18/ຈມ.ຫຊຟ, ລົງວັນທີ 17 ມັງກອນ 2024, ໜ້າ 2, 6.

ລ່າງທີ່ເປັນການ "ປະກອບສ່ວນດ້ວຍທຶນຮອນຂອງປະຊາຊົນ ແລະຫົວໜ່ວຍທຸລະກິດໃນການກໍ່ສ້າງສ້ອມແປງເສັ້ນທາງຮ່ອມມີທັງໝົດ 14 ເສັ້ນ, ຄວາມຍາວ 7.224 ແມັດ; ໃນນັ້ນ, ສ້ອມແປງທາງດິນແດງ ຈຳນວນ 6 ເສັ້ນ ຍາວ 4.859 ແມັດ, ມູນຄ່າ 0,24 ຕື້ກີບ, ກໍ່ສ້າງເສັ້ນທາງເບຕົງ ຈຳນວນ 8 ເສັ້ນ ຍາວ 2.365 ແມັດ, ສ້າງ (ປັ້ນ) ພະພຸດທະຮູບ ຈຳນວນ 7 ອົງ, ກໍ່ສ້າງປະຕູໂຂງວັດ ຈຳນວນ 2 ແຫ່ງ, ກໍ່ສ້າງຫໍກອງ ຈຳນວນ 3 ແຫ່ງ, ກໍ່ສ້າງ (ປັ້ນ) ພະຍານາກ ຈຳນວນ 7 ໂຕ, ກໍ່ສ້າງວັດ ຈຳນວນ 3 ແຫ່ງ, ກໍ່ສ້າງສ້ອມແປງພຸດທະສີມາ (ສິມ) 3 ແຫ່ງ, ກໍ່ສ້າງກຸດຕິ ຈຳນວນ 5 ຫຼັງ ແລະອະນຸຍາດສ້າງສາລາໂຮງທຳ ຈຳນວນ 5 ຫຼັງ ລວມມູນຄ່າທັງໝົດ 3,70 ຕື້ກີບ"[(1)]. ສະນັ້ນ, ຈຶ່ງສາມາດເວົ້າໄດ້ວ່າການປະກອບສ່ວນຂອງປະຊາຊົນສາ ມາດເຮັດໃຫ້ການເຄື່ອນໄຫວວຽກງານຂອງອົງການຈັດຕັ້ງລັດມີຄວາມເຂັ້ມແຂງເວົ້າລວມ, ເວົ້າສະເພາະ ສ້າງຄວາມເຂັ້ມແຂງໃຫ້ແກ່ອົງການບໍລິຫານລັດຢູ່ເມືອງຫາດຊາຍຟອງ ກໍຄືເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນ, ເສດຖະກິດຂະຫຍາຍຕົວ, ມີການພັດທະນາຮອບດ້ານໃນທົ່ວສັງຄົມ.

ຄຽງຄູ່ກັບຜົນງານການເຄື່ອນໄຫວທີ່ພົ້ນເດັ່ນໃນການສ້າງຄວາມເຂັ້ມແຂງໃຫ້ແກ່ອົງການບໍລິຫານລັດຢູ່ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ ກໍຍັງມີບາງບັນຫາທີ່ຍັງຄົງຄ້າງຈຳນວນໜຶ່ງທີ່ຈຳເປັນຈະຕ້ອງໄດ້ສຸມໃສ່ແກ້ໄຂຢ່າງເປັນເຈົ້າການ ເປັນຕົ້ນແມ່ນ:

1). ຄຸນນະພາບທາງດ້ານການເມືອງຂອງຖັນແຖວພະນັກງານ-ລັດຖະກອນ ຍັງບໍ່ທັນສູງຖ້າທຽບໃສ່ລະດັບຄວາມຮຽກຮ້ອງຕ້ອງການຂອງປະຊາຊົນ, ຂອງໜ້າວຽກໃນການພັດທະນາສັງຄົມ ກໍຄືເມືອງຫາດຊາຍຟອງ ສະແດງອອກຍັງມີພະນັກງານ-ລັດຖະກອນຈຳນວນໜຶ່ງຄຸນທາດການເມືອງບໍ່ໜັກແໜ້ນ, ຄວາມເສຍສະລະ ແລະນ້ຳໃຈປະຕິວັດລົດຖອຍລົງ ເປັນຕົ້ນແມ່ນຍັງມີປາກົດການອາດຍາສິດ, ບໍ່ເປັນຫ່ວງເປັນໄຍເຖິງຊີວິດ ການເປັນຢູ່ຂອງປະຊາຊົນ, ສວຍໃຊ້ສິດອຳນາດ ຫຼື ສວຍໃຊ້ຊ່ອງຫວ່າງຂອງກົດໝາຍ, ລະບຽບ ແລະຂໍ້ກຳນົດຕ່າງໆ ເພື່ອລັກໂລບເອົາຂອງລັດ, ກິນສິນບົນ, ຫຼິ້ນກິນຟຸມເຟືອຍ, ສໍ້ລາດບັງຫຼວງ, ສ້າງຮັ່ງຄູນມີໃຫ້ແກ່ຕົວເອງ ແລະກຸ່ມກ້ອນພັກພວກຈຸ້ມເຈື້ອເຊື້ອສາຍຂອງຕົນແບບຜິດກົດໝາຍຍັງປາກົດມີຢູ່ໃນອົງການຈັດຕັ້ງລັດ.

2). ດ້ານລະດັບຄວາມຮູ້, ຄວາມສາມາດຂອງປະຊາຊົນບາງຈຳນວນຍັງບໍ່ທັນສູງ, ຍັງບໍ່ທັນຕື່ນໂຕ ເຂົ້າຮ່ວມຂະບວນການ ເພື່ອປະກອບສ່ວນພັດທະນາສັງຄົມດ້ານຕ່າງໆຮ່ວມກັບອົງການຈັດຕັ້ງຍັງບໍ່ທັນຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຕົວຈິງຂອງສັງຄົມເຫັນໄດ້ຈາກການປະກອບຄຳຄິດເຫັນຕບໍ່ທັນພົ້ນເດັ່ນ, ການປະກອບສ່ວນດ້ານຕ່າງໆຍັງບໍ່ເປັນປົກກະຕິ.

3). ການບໍລິການປະຊາຊົນຍັງປະຕິບັດບໍ່ໄດ້ດີເທົ່າທີ່ຄວນ ເມື່ອທຽບໃສ່ທ່າອ່ຽງຂອງຍຸກສະໄໝ, ການບໍລິການປະຊາຊົນດ້ວຍລະບົບທັນສະໄໝ ຍັງບໍ່ທັນສະດວກ ແລະມີປະສິດ

---

(1) ບົດສະຫຼຸບຮັບຮອງເອົາຜົນກອງປະຊຸມຕີລາຄາການນຳພາ-ຊີ້ນຳຮອບດ້ານ ຂອງຄະນະບໍລິຫານງານພັກ ເມືອງຫາດຊາຍຟອງ ກາງສະໄໝທີ VII ແລະທິດທາງແຜນວຽກຈຸດສຸມໃນໄລຍະທ້າຍສະໄໝ ຮອດປີ 2025, ສະບັບເລກທີ 082/ຄພມ.ຫຊຟ, ລົງວັນທີ 24/3/2023, ໜ້າ 14.

ທີ່ຜົນສູງເທົ່າທີ່ຄວນ; ການໂຄສະນາເຜີຍແຜ່ແນວທາງ, ນະໂຍບາຍ, ນິຕິກຳຕ່າງໆໃຫ້ປະຊາຊົນຍັງບໍ່ທົ່ວເຖິງ ແລະເລິກເຊິ່ງ ເປັນຕົ້ນແມ່ນຂອດການຜັນຂະຫຍາຍ, ເຜີຍແຜ່ນິຕິກຳຍັງເຮັດໄດ້ໜ້ອຍ; ການຈັດຕັ້ງປະຕິບັດແຜນນະໂຍບາຍບາງຄັ້ງຍັງບໍ່ທັນແທດເໝາະກັບສະພາບຕົວຈິງ; ກົດໝາຍ ແລະນິຕິກຳຈຳນວນໜຶ່ງຍັງບໍ່ຮັດກຸມ, ຕີຄວາມໝາຍໄດ້ຫຼາຍແງ່ມູມ ເຮັດໃຫ້ເກີດມີຊ່ອງວ່າງສວາຍໃຊ້ສິດອຳນາດໃນທາງທີ່ຜິດ ທັງເປັນການສິ້ນເປືອງດ້ານເວລາ ແລະຊັບພະຍາກອນ, ຫຼາຍນິຕິກຳອອກມາແລ້ວແຕ່ບໍ່ໄດ້ຖືກນຳໃຊ້ເທົ່າທີ່ຄວນ ເຮັດໃຫ້ປະຊາຊົນບໍ່ຮັບຮູ້, ເຂົ້າໃຈເທົ່າທີ່ຄວນ.

4). ຄວາມເປັນເຈົ້າການ, ສະຕິຕື່ນຕົວຂອງພໍ່ແມ່ປະຊາຊົນ ແລະການຈັດຕັ້ງ-ສັງຄົມຈຳນວນໜຶ່ງ ຕໍ່ວຽກງານການສ້າງຄວາມເຂັ້ມແຂງໃຫ້ແກ່ອົງການບໍລິຫານລັດຢູ່ເມືອງຫາດຊາຍຟອງ ຍັງບໍ່ທັນສູງເທົ່າທີ່ຄວນ ເປັນຕົ້ນແມ່ນເກີດມີປາກົດການຫຍໍ້ທໍ້ໃນສັງຄົມ, ດ້ານວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ, ການແກ້ໄຂຄວາມບໍ່ເປັນລະບຽບຮຽບຮ້ອຍໃນຕົວເມືອງມີຫຼາຍບ່ອນແກ້ແລ້ວແກ້ອີກແຕ່ກໍບໍ່ສຳເລັດ.

ເພື່ອປະກອບສ່ວນເຂົ້າໃນການສ້າງຄວາມເຂັ້ມແຂງໃຫ້ແກ່ອົງການບໍລິຫານລັດຢູ່ເມືອງຫາດຊາຍຟອງນະຄອນຫຼວງວຽງຈັນຊຸກຍູ້ໃຫ້ປະຊາຊົນມີສ່ວນຮ່ວມນຳ ຕາມທັດສະນະຂອງຜູ້ຂຽນຄວນເອົາໃຈໃສ່ ບາງວິທີດັ່ງນີ້:

ໜຶ່ງ, ສ້າງຄວາມເຂັ້ມແຂງດ້ານຄຸນທາດການເມືອງ ໂດຍການສ້າງຈັນຍາບັນ, ຈັນຍາທຳ, ນ້ຳໃຈຮັບໃຊ້ປະຊາຊົນ ດ້ວຍຄວາມຈິງໃຈໃຫ້ແກ່ພະນັກງານ-ລັດຖະກອນໃນກົງຈັກລັດທຸກຂັ້ນໃນທຸກຂົງເຂດວຽກງານ ທົ່ວເມືອງຫາດຊາຍຟອງ ໂດຍສະເພາະແມ່ນວຽກໃດມີຜົນປະໂຫຍດຕໍ່ປະຊາຊົນຕ້ອງເຮັດສຸດຄວາມສາມາດ, ວຽກໃດທີ່ເກີດຜົນເສຍຕໍ່ປະຊາຊົນຕ້ອງຫຼີກລ່ຽງ; ພ້ອມກັນນັ້ນ, ກໍຕ້ອງຮັກແພງ, ສາມັກຄີ, ນັບຖືປະຊາຊົນ, ມີຄວາມເສຍສະລະຜົນປະໂຫຍດສ່ວນຕົວ ເພື່ອສ່ວນລວມສູງນັ້ນກໍເພື່ອເຮັດໃຫ້ປະຊາຊົນຮັກແພງນັບຖືເຫຼື້ອມໃສສັດທາ, ເຊື່ອໝັ້ນຕໍ່ພະນັກງານ-ລັດຖະກອນ; ພ້ອມກັນນີ້, ຖັນແຖວພະນັກງານ-ລັດຖະກອນຕ້ອງກຳແໜ້ນ ແນວທາງຂອງພັກ, ສືບຕໍ່ຍຶດໝັ້ນທິດສະດີມາກ-ເລນິນ, ແນວຄິດໄກສອນ ພົມວິຫານ, ແນວທາງ, ແຜນນະໂຍບາຍຂອງພັກຢ່າງສະເໝີຕົ້ນສະເໝີປາຍ, ຍົກສູງຄຸນທາດການເມືອງ, ຄວາມຮູ້, ຄວາມສາມາດໃຫ້ສະມາຊິກພັກ, ພະນັກງານ ແລະປະຊາຊົນບັນດາເຜົ່າໃຫ້ທົ່ວເຖິງ; ຜັນຂະຫຍາຍເປັນແຜນນະໂຍບາຍແຜນວຽກທີ່ຈະແຈ້ງ, ຊັດເຈນ ເປັນລະບົບ ແລະສາມາດປະຕິບັດໄດ້ຢ່າງແທ້ຈິງ; ກຳນົດແຈ້ງກ່ຽວກັບຂອບເຂດ, ຮູບແບບລະດັບການມີສ່ວນຮ່ວມຂອງປະຊາຊົນ ໃນແຕ່ລະຂົງເຂດວຽກງານຕາມກົດໝາຍ ແລະນິຕິກຳຕ່າງໆທີ່ກ່ຽວຂ້ອງໃຫ້ແທດເໝາະກັບສະພາບເງື່ອນໄຂຕົວຈິງຂອງສັງຄົມ.

ສອງ, ເພີ່ມທະວີເອົາໃຈໃສ່ຍົກລະດັບຄວາມຮູ້ໃນທຸກດ້ານຂອງປະຊາຊົນໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ ແນໃສ່ສ້າງໃຫ້ມີແຫຼ່ງຊັບພະຍາກອນມະນຸດທີ່ມີຄຸນນະພາບ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງພາລະກິດແຫ່ງການເສີມຂະຫຍາຍລະບອບປະຊາທິປະໄຕ ປະຊາຊົນຢູ່ປະເທດເຮົາ ເຊິ່ງການຍົກລະດັບຄວາມຮູ້, ຄວາມສາມາດດ້ານຕ່າງໆ ເພື່ອເຮັດໃຫ້ປະຊາຊົນມີສະຕິປັນຍາສາມາດເຂົ້າໃຈແຈ້ງຕໍ່ສິດ ແລະພັນທະຂອງຕົນ, ມີ

ຄວາມຮູ້ອັນໃໝ່ ເພື່ອແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໃຫ້ນັບມື້ດີຂຶ້ນ ໂດຍສະເພາະແມ່ນສຸມໃສ່ແກ້ໄຂບັນຫາຄວາມທຸກຍາກຂອງປະຊາຊົນ, ສ້າງຂວັນກຳລັງໃຈ, ເງື່ອນໄຂພຽງພໍໃຫ້ແກ່ປະຊາຊົນ ເຮັດໃຫ້ປະຊາຊົນມີ ຄວາມຕື່ນຕົວປະກອບສ່ວນໃນພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດ ຕາມແນວທາງຂອງພັກ-ນະໂຍບາຍຂອງລັດ, ມີຄວາມຕື່ນໂຕເຂົ້າຮ່ວມຂະບວນການປະກອບສ່ວນດ້ານຕ່າງໆ ຮ່ວມກັບອົງການຈັດຕັ້ງຫຼາຍຂຶ້ນຢ່າງເປັນປົກກະຕິ.

ສາມ, ເພີ່ມທະວີການສ້າງຄວາມເຂັ້ມແຂງໃຫ້ແກ່ອົງການບໍລິຫານລັດໃຫ້ໄດ້ຮັບທັງດ້ານປະລິມານ ແລະຄຸນນະພາບ ຈຳຕ້ອງໄດ້ມີປະຊາຊົນເປັນຜູ້ສະໜັບສະໜູນ, ໃຫ້ຄວາມຮ່ວມມືຈຶ່ງເຮັດໃຫ້ວຽກງານດັ່ງກ່າວປະສົບຜົນສຳເລັດໄດ້, ບົນພື້ນຖານໃຫ້ມີຄວາມກະທັດຮັດເນັ້ນການຈັດຕັ້ງປະຕິບັດໃຫ້ປະຈັກຕາ, ປ່ຽນແທນການໃຊ້ເວລາຫຼາຍກັບມີແຕ່ເວົ້າ ແຕ່ບໍ່ປະຕິບັດ, ມີກົນໄກຕິດຕາມ, ປະເມີນລະດັບຄວາມຮັບຮູ້ດ້ານແນວທາງນະໂຍບາຍຈາກການຕີລາຄາລະດັບຄວາມສາມາດໃນການຈັດຕັ້ງຜັນຂະຫຍາຍເຂົ້າໃນການເຄື່ອນໄຫວວຽກງານຕົວຈິງຢ່າງມີປະສິດທິຜົນຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງປະຊາຊົນບັນດາເຜົ່າຢ່າງແທ້ຈິງ. ບໍລິການປະຊາຊົນດ້ວຍຄວາມເພິ່ງພໍໃຈເຮັດໃຫ້ປະຊາຊົນມີຄວາມເຊື່ອໝັ້ນຕໍ່ການຈັດຕັ້ງ; ປັບປຸງກົດໝາຍ ແລະນິຕິກຳໃຫ້ກະທັດຮັດ, ແທດເໝາະກັບສະພາບຕົວຈິງ; ສ້າງບຸກລະກອນທີ່ມີພອນສະຫວັນ ແລະເກັ່ງດ້ານການໂຄສະນາປຸກລະດົມຂົນຂວາຍ; ຜັນຂະຫຍາຍ, ເຜີຍແຜ່ນິຕິກຳໃຫ້ຫຼາຍຂຶ້ນ ດ້ວຍຫຼາຍຮູບການທີ່ສ້າງສັນ ແລະແທດເໝາະກັບຍຸກສະໄໝ ເພື່ອໃຫ້ສາມາດສື່ສານກັບສາທາລະນະ, ສ້າງຄວາມຮັບຮູ້, ຄວາມເຂົ້າໃຈໃຫ້ປະຊາຊົນໃນສັງຄົມມີຄວາມເຂົ້າໃຈຢ່າງທົ່ວເຖິງ; ສົ່ງເສີມການຈັດຕັ້ງປະຕິບັດຍຸດທະສາດ ວ່າດ້ວຍການມີສ່ວນຮ່ວມຂອງປະຊາຊົນພົນລະເມືອງຕໍ່ການພັດທະນາໃນດ້ານນັ້ນໆໄປຄວບຄູ່ກັນຢ່າງເປັນປົກກະຕິ ແລະຕໍ່ເນື່ອງ.

ສີ່, ຊຸກຍູ້ປະຊາຊົນ ແລະການຈັດຕັ້ງທົ່ວສັງຄົມໃຫ້ມີຄວາມເປັນເຈົ້າການ, ມີສະຕິຕື່ນຕົວຕໍ່ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະລະບຽບການຕ່າງໆຢ່າງເຂັ້ມງວດ ເພື່ອປະກອບສ່ວນສ້າງຄວາມເຂັ້ມແຂງໃຫ້ແກ່ອົງການບໍລິຫານລັດຢູ່ເມືອງຫາດຊາຍຟອງໃຫ້ສູງຂຶ້ນ, ຮັບປະກັນທາງດ້ານການຈັດຕັ້ງປະຕິບັດກົດໝາຍ, ຕອບສະໜອງຄວາມຮຽກຮ້ອງຕ້ອງການຕົວຈິງໃນການພັດທະນາອົງການຈັດຕັ້ງກໍຄືສັງຄົມ ໃຫ້ເປັນຮູບປະທຳຫຼາຍຂຶ້ນ, ບົນພື້ນຖານການຍົກສູງຄວາມເປັນເຈົ້າການຂອງປະຊາຊົນ ແລະການຈັດຕັ້ງເຂົ້າຮ່ວມຈັດຕັ້ງປະຕິບັດພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດໄດ້ຢ່າງມີປະສິດທິພາບ ແລະປະສິດທິ ຜົນສູງຂຶ້ນ. ລັດປົກປ້ອງສິດ, ອິດສະຫຼະພາບ ແລະສິດປະຊາທິປະໄຕຂອງປະຊາຊົນ ບໍ່ມີໃຜຈະລ່ວງລະເມີດ ໄດ້ ເຮັດໃຫ້ປະຊາຊົນຮັບຮູ້ຢ່າງກວ້າງຂວາງ ແລະພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ ເພື່ອຮັບປະກັນສິດແລະຜົນປະໂຫຍດອັນຊອບທຳຂອງປະຊາຊົນ ເພື່ອຫຼຸດຜ່ອນປາກົດການຫຍໍ້ທໍ້ໃນສັງຄົມໃຫ້ໝົດໄປເທື່ອລະກ້າວ ໄປຄຽງຄູ່ກັບການປົກປັກຮັກສາວັດທະນາທຳ, ຮີດຄອງປະເພນີອັນດີງາມຂອງຊາດ ແລະຄວາມເປັນລະບຽບຮຽບຮ້ອຍທົ່ວເມືອງຫາດ

ຊາຍຟອງ ກໍຄືສັງຄົມຫຼາຍໆຈຸດຈະປາກົດມີຂຶ້ນຕາມລຳດັບ ແລະເປັນປົກກະຕິໄດ້.

ສະຫຼຸບແລ້ວ, ການມີສ່ວນຮ່ວມຂອງປະຊາຊົນໃນການສ້າງຄວາມເຂັ້ມແຂງໃຫ້ແກ່ອົງການບໍລິຫານ ລັດຢູ່ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນແມ່ນຄວາມຈຳເປັນພາວະວິໄສໃນການປະຕິບັດພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດໃຫ້ມີປະສິດທິພາບ ແລະປະສິດທິຜົນສູງຂຶ້ນ ທັງເສີມຂະຫຍາຍລະບອບປະຊາທິປະໄຕ ປະຊາຊົນໃຫ້ເຂັ້ມແຂງພາຍໃຕ້ອຸດົມການສ້າງສັງຄົມນິຍົມ, ການບໍລິຫານລັດປະຊາທິ ປະໄຕ ປະຊາຊົນລາວ; ສືບຕໍ່ເອົາໃຈໃສ່ປະຕິບັດຂອບເຂດ, ສິດ ແລະພາລະບົດບາດຂອງລັດຢ່າງຄົບຖ້ວນ ຕາມລັດຖະທຳມະນູນ ແລະກົດໝາຍກຳນົດ, ຖ້າລັດປະຕິບັດພັນທະຂອງຕົນໄດ້ດີຈະເຮັດໃຫ້ປະຊາຊົນພົນລະເມືອງເຄົາລົບນັບຖື, ເຊື່ອໝັ້ນ, ໄວ້ເນື້ອເຊື່ອໃຈຕໍ່ການຄຸ້ມຄອງ, ການຈັດຕັ້ງປະຕິບັດວຽກງານຂອງລັດໃນທົ່ວສັງຄົມ, ກົງກັນຂ້າມຖ້າຫາກລັດບໍ່ສາມາດປະຕິບັດບົດບາດ ຂອງຕົນໄດ້ຢ່າງເຕັມສ່ວນ ປະຊາຊົນຈະເສຍຄວາມສັດທາ, ບໍ່ເຊື່ອໝັ້ນພັກ-ລັດ ທັງບໍ່ເຊື່ອໝັ້ນຕໍ່ບັນດາອົງການຈັດຕັ້ງຂອງລັດ. ສະນັ້ນ, ວຽກງານອົງການບໍລິຫານລັດຈະງ່າຍແນວໃດກໍຕາມ ເມື່ອບໍ່ໄດ້ຮັບການສະໜັບສະໜູນຈາກປະຊາຊົນວຽກງານດັ່ງກ່າວກໍ ຈະບໍ່ສຳເລັດຜົນ; ກົງກັນຂ້າມເຖິງວຽກຈະຫຍຸ້ງຫຍາກປານໃດກໍຕາມ ຖ້າໄດ້ຮັບການສະໜັບສະໜູນຮ່ວມແຮງຮ່ວມໃຈຈາກປະຊາຊົນໃນສັງຄົມແລ້ວວຽກງານດັ່ງກ່າວນັ້ນຈະມີຜົນສຳເລັດຢ່າງແນ່ນອນ; ດັ່ງນັ້ນ, ທຸກວຽກງານຂອງອົງການຈັດຕັ້ງລັດຈຳເປັນຕ້ອງໄດ້ມີສ່ວນຮ່ວມຂອງປະຊາຊົນໃນການສ້າງຄວາມເຂັ້ມແຂງໃຫ້ແກ່ອົງການບໍລິຫານລັດເວົ້າສະເພາະຢູ່ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນໄດ້ໃຫ້ປະຊາຊົນໄດ້ມີ ສ່ວນຮ່ວມໃນການຮັບຮູ້, ປຶກສາຫາລື, ປະກອບຄຳຄິດເຫັນ ແລະປະຊາຊົນເຂົ້າຮ່ວມການຈັດຕັ້ງປະຕິບັດ ວຽກງານຕ່າງໆໃນສັງຄົມ, ສຸມໃສ່ສືບຕໍ່ຜັນຂະຫຍາຍ ແລະຈັດຕັ້ງປະຕິບັດ ເນື້ອໃນ 4 ບຸກລະທຸຕາມແນວ ທາງຂອງພັກໃຫ້ປາກົດຜົນເປັນຈິງ, ສ້າງເງື່ອນໄຂໃຫ້ປະຊາຊົນໄດ້ມີສ່ວນຮ່ວມໃນທຸກວຽກງານຂອງອົງການຈັດຕັ້ງລັດ, ສ້າງກ້ອນກຳລັງສາມັກຄີທົ່ວປວງຊົນໃຫ້ການປະຕິບັດສອງໜ້າທີ່ຍຸດທະສາດເຮັດໃຫ້ສັງຄົມລາວເຕັມໄປດ້ວຍຄວາມສະເໝີພາບ, ຍຸຕິທຳ ແລະໜ້າຢູ່ສຳລັບປະຊາຊົນພົນລະເມືອງລາວທຸກຄົນ, ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່ານັບມື້ດີຂຶ້ນ; ໄປຄຽງຄູ່ກັບການພັດທະນາຢ່າງຍືນຍົງຂອງປະເທດຊາດ.

# ຍົກສູງບົດບາດວຽກງານຂະບວນການຊາວໜຸ່ມ ຢູ່ສູນກາງຊາວໜຸ່ມປະຊາຊົນ ປະຕິວັດລາວ

( ຕໍ່ຈາກສະບັບປະຈຳເດືອນ 11/2024 )

ຊຽນໂດຍ: ວິນຸດ ໄຊຍະສານ

ເພື່ອຜັນຂະຫຍາຍເນື້ອໃນຈິດໃຈຂອງພັກ ໃນໄລຍະຜ່ານມາ, ຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນ ປະຕິວັດລາວໄດ້ສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ແຕ່ລະຄັ້ງ ເວົ້າລວມ, ເວົ້າສະເພາະແມ່ນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມທົ່ວປະເທດ ຄັ້ງທີ VIII ຕິດພັນກັບຈັດຕັ້ງຜັນຂະຫຍາຍ 2 ວາລະແຫ່ງຊາດ; ພ້ອມນັ້ນ, ກໍໄດ້ສຸມໃສ່ສ້າງຂະບວນການຢ່າງຕໍ່ເນື່ອງ ໂດຍຖືເອົາຂະບວນການວຽກງານວິຊາສະເພາະເປັນວຽກງານຈຸດສຸມເພື່ອເຮັດສຳເລັດວຽກງານຕາມການມອບໝາຍ ແລະສ້າງຂະບວນການຕ່າງໆດ້ວຍຫຼາຍຮູບການ, ຫຼາຍວິທີການເຊັ່ນ: ໄດ້ຈັດຕັ້ງປະຕິບັດຂະບວນຂໍ້ແຂ່ງຂັນ 4 ບຸກຂອງຊາວໜຸ່ມ, ຂະບວນການລົງກໍ່ສ້າງຮາກຖານການເມືອງ, ຂະບວນການຊ່ວຍເຫຼືອສັງຄົມໂດຍເຕົ້າໂຮມຊາວໜຸ່ມຕະລຸມບອນທົ່ວປະເທດດ້ວຍຈິດໃຈຂານອາສາ, ຂະບວນການຕອບບຸນແທນຄຸນ, ຂະບວນການລົງພົບປະຢ້ຽມຢາມອ້າຍ-ນ້ອງນາຍ ແລະພົນທະຫານຢູ່ກອງບັນຊາການທະຫານ, ຂະບວນການອອກແຮງງານ, ຂະບວນການຍ່າງເພື່ອສຸຂະພາບ, ຂະບວນການສະກັດກັ້ນ ແລະຕ້ານການຄ້າມະນຸດ, ຈັດກິດຈະກຳບໍລິຈາກເລືອດ, ນັກຮຽນເກັ່ງ, ກິລາ, ສິລະປະ, ພົບປະແລກປ່ຽນບົດຮຽນ, ຈັດພິທີແຮກສ່ຽວ, ສຳມະນາວິທະຍາສາດຖາມ-ຕອບ, ແຂ່ງຂັນເວົ້າເພື່ອຊາດ, ສະເຫຼີມສະຫຼອງວັນໄວໜຸ່ມສາກົນ, ລົງໂຄສະນາຂັບຂີ່ປອດໄພຕາມທ້ອງຖະໜົນ ແລະຜົນຮ້າຍຂອງຢາເສບຕິດຢ່າງເປັນຂະບວນຟົດຟື້ນ "ເປັນຕົ້ນແມ່ນສູນກາງຊາວໜຸ່ມປະຊາຊົນ ປະຕິວັດລາວໄດ້ຮ່ວມກັບຄະນະຊາວໜຸ່ມປະຊາຊົນ ປະຕິວັດລາວບັນດາກະຊວງ, ອົງການ ແລະນະຄອນຫຼວງວຽງຈັນໄດ້ຈັດຂະບວນການຕອບບຸນແທນຄຸນຄອບຄົວນັກຮົບປະຕິວັດອາວຸໂສທີ່ມີຜົນງານໃນສະໄໝຕໍ່ສູ້ກູ້ຊາດ ຈຳນວນ 11 ຄອບຄົວລວມມູນຄ່າ 19.080.000 ກີບ ມີຜູ້ເຂົ້າຮ່ວມ 200 ກວ່າຄົນ; ໄດ້ນຳພາພະນັກງານຊາວໜຸ່ມກະຊວງ, ອົງການ ແລະນະຄອນຫຼວງວຽງຈັນເຂົ້າຢ້ຽມຊົມອະນຸສອນສະຖານຄຸກກັກຂັງທ່ານຜູ້ນຳຢູ່ຄ້າຍໂພນເຄັງ ເນື່ອງໃນໂອກາດວັນສ້າງຕັ້ງກອງທັບ ຄົບຮອບ 74 ປີ, ມີຜູ້ເຂົ້າຮ່ວມ ຈຳນວນ 30 ຄົນ; ໄດ້ຈັດຂະບວນການບໍລິຈາກເລືອດຊ່ວຍເຫຼືອສັງຄົມເນື່ອງໃນວັນສ້າງຕັ້ງຄະນະຊາວໜຸ່ມປະຊາຊົນ ປະຕິວັດລາວຄົບຮອບ 68 ປີ ແລະວັນໄວໜຸ່ມສາກົນເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 1.672 ກວ່າຄົນ; ໃນນີ້, ໄດ້ຮັບເລືອດທັງໝົດ 1.178 ຖົງ; ຈັດຂະບວນການຊາວໜຸ່ມຕະລຸມບອນຊ່ວຍເຫຼືອຜູ້ປະສົບໄພພິບັດນ້ຳຖ້ວມ ແລະໄພພິບັດແຫ້ງແລ້ງ ໂດຍໄດ້ມອບເຄື່ອງນຸ່ງຫົ່ມ, ຢາປົວພະຍາດ, ອຸປະກອນການສຶກສາ, ອຸປະກອນກິລາ ແລະອື່ນໆໃຫ້ແກ່ບັນດາແຂວງເຊັ່ນ: ແຂວງໄຊຍະບູລີ,

ແຂວງຫົວພັນ, ແຂວງອຸດົມໄຊ, ແຂວງວຽງຈັນ, ແຂວງຄຳມ່ວນ, ແຂວງບໍລິຄຳໄຊ, ແຂວງຫຼວງພະບາງ, ແຂວງສະຫວັນນະເຂດ, ແຂວງສາລະວັນ ແລະນະຄອນຫຼວງວຽງຈັນ ລວມມູນຄ່າທັງໝົດ 391.805.000 ກີບ. ນອກນັ້ນ, ສູນກາງຊາວໜຸ່ມປະຊາຊົນ ປະຕິວັດລາວຍັງໄດ້ຮ່ວມກັບກົມຂົນສົ່ງກະຊວງໂຍທາທິການ ແລະຂົນສົ່ງ, ກົມຕຳຫຼວດຈະລາຈອນ ກະຊວງປ້ອງກັນຄວາມສະຫງົບ ແລະຄະນະຊາວໜຸ່ມປະຊາຊົນ ປະຕິວັດລາວ ນະຄອນຫຼວງວຽງຈັນໄດ້ລົງໂຄສະນາປູກຈິດສຳນຶກການຂັບຂີ່ປອດໄພຕາມທ້ອງຖະໜົນຢູ່ 2 ແຂວງ 1 ນະຄອນຫຼວງວຽງຈັນຄື: ໂຮງຮຽນມັດທະຍົມສົມບູນທາງແບ່ງວຽງຄຳ ແລະໂຮງຮຽນມັດທະຍົມທົ່ງນາມີ ເມືອງປາກກະດິງ ແຂວງບໍລິຄຳໄຊ; ໂຮງຮຽນມັດທະຍົມສົມບູນໂພນໝີທົ່ງນາມີ ເມືອງວຽງຄຳ ແລະໂຮງຮຽນມັດທະຍົມສົມບູນໂພນໂຮງ ເມືອງໂພນໂຮງ ແຂວງວຽງຈັນ; ໂຮງຮຽນມັດທະຍົມສົມບູນໂພນທອງ ເມືອງນາຊາຍທອງ ແລະໂຮງຮຽນມັດທະຍົມສົມບູນຊະນະພົນ ເມືອງສີໂຄດຕະບອງ ແລະ 4 ເມືອງຄື: ເມືອງໄຊເສດຖາ, ເມືອງຈັນທະບູລີ, ເມືອງສີໂຄດຕະບອງ ແລະເມືອງໄຊທານີ ນະຄອນຫຼວງວຽງຈັນ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 3.298 ຄົນ, ຍິງ 1.179 ຄົນ; ໄດ້ຈັດກິດຈະກຳແຂ່ງຂັນເວົ້າເພື່ອຊາດ ຄັ້ງທີ II ພາຍໃຕ້ຫົວຂໍ້: ພັດທະນາຄົນ ພັດທະນາຊາດ; ໄດ້ຈັດກິດຈະກຳເຜີຍແຜ່ 2 ວາລະແຫ່ງຊາດ ວ່າດ້ວຍບັນຫາເສດຖະກິດ-ການເງິນ ແລະບັນຫາຢາເສບຕິດໃຫ້ແກ່ຊາວໜຸ່ມ-ໄວໜຸ່ມຢູ່ເມືອງທຸລະຄົມ ແລະໂຮງຮຽນມັດທະຍົມຖິ່ນຄຳ ເມືອງທຸລະຄົມ ແຂວງວຽງຈັນ ມີຜູ້ເຂົ້າຮ່ວມ 600 ກວ່າຄົນ”[1]. ຄຽງຄູ່ກັນນັ້ນ, “ສູນກາງຊາວໜຸ່ມປະຊາຊົນ ປະຕິວັດລາວຍັງໄດ້ຮ່ວມກັບຄະນະຊາວໜຸ່ມປະຊາຊົນ ປະຕິວັດລາວນະຄອນຫຼວງວຽງຈັນ ແລະຄະນະຊາວໜຸ່ມປະຊາຊົນ ປະຕິວັດລາວເມືອງໃນ 5 ເມືອງຂອງນະຄອນຫຼວງວຽງຈັນຄື: ເມືອງໄຊເສດຖາ, ເມືອງສີສັດຕະນາກ, ເມືອງໄຊທານີ, ເມືອງຈັນທະບູລີ ແລະເມືອງສີໂຄດຕະບອງ ຈັດຕັ້ງປະຕິບັດຂະບວນການອອກແຮງງານວັນເສົາແດງ ໂດຍສະເພາະແມ່ນອະນາໄມຕາມເສັ້ນທາງຖະໜົນເລກທີ 13 ໃຕ້ ແຕ່ວົງວຽນດອນໜູນຫາສະໜາມກິລາຫຼັກ 16 ແລະຕາມເສັ້ນທາງຖະໜົນໜອງບອນ ແຕ່ໄຟແດງບ້ານໜອງບອນຫາໄຟແດງທາດຫຼວງຫາບ້ານນາໄຊ ແລະສະຖານອື່ນໆໄດ້ 5 ຄັ້ງ, ມີຜູ້ເຂົ້າຮ່ວມທັງໝົດ 4.782 ຄົນ, ຍິງ 2.333 ຄົນ”[2]

ການເຄື່ອນໄຫວວຽກງານຂະບວນການຊາວໜຸ່ມຢູ່ສູນກາງຊາວໜຸ່ມປະຊາຊົນ ປະຕິວັດລາວ ໃນໄລຍະຜ່ານມາເຖິງແມ່ນມີຜົນສຳເລັດໃນຫຼາຍດ້ານ, ແຕ່ຖ້າທຽບໃສ່ເງື່ອນໄຂໃນປັດຈຸບັນເຫັນວ່າຍັງຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂຄື:

ໜຶ່ງ, ການເຮັດວຽກງານສຶກສາອົບຮົມການເມືອງ-ແນວຄິດໃຫ້ຊາວໜຸ່ມ, ສະມາຊິກຊາວໜຸ່ມ-ເຍົາວະຊົນຍັງບໍ່ທັນທົ່ວເຖິງ ໂດຍສະເພາະແມ່ນກຸ່ມຊາວໜຸ່ມກຳມະກອນ, ຊາວຄ້າຂາຍ, ຊາວໜຸ່ມໃນອົງການຈັດຕັ້ງທາງສັງ

[1] ບົດສະຫຼຸບກົມຂະບວນການຊາວໜຸ່ມ ສູນກາງຊາວໜຸ່ມປະຊາຊົນ ປະຕິວັດລາວປະຈຳປີ 2023 ແລະທິດທາງແຜນການ ປະຈຳປີ 2024, ໜ້າ 2, 3, 5.

[2] ບົດສະຫຼຸບກົມຂະບວນການຊາວໜຸ່ມ 6 ເດືອນຕົ້ນ ປີ 2024 ແລະທິດທາງແຜນການ 6 ເດືອນທ້າຍປີ 2024, ໜ້າ 3.

ຄົມ ແລະຊາວໜຸ່ມຢູ່ເຂດຫ່າງໄກສອກຫຼີກຈຶ່ງເຮັດໃຫ້ການເຂົ້າຮ່ວມຂະບວນການຕ່າງໆຂອງຊາວໜຸ່ມຍັງບໍ່ທັນຟົດຟື້ນເທົ່າທີ່ຄວນ.

ສອງ, ຍັງບໍ່ທັນມີນິຕິກຳທີ່ເປັນບ່ອນອີງໃຫ້ແກ່ການຈັດຕັ້ງຂະບວນການຊາວໜຸ່ມເທື່ອ; ຄວາມຕື່ນຕົວ, ສະຕິຕໍ່ການຈັດຕັ້ງ, ການເຄົາລົບຕໍ່ກົດໝາຍ, ລະບຽບການ, ການເຂົ້າຮ່ວມເຊື່ອມຊຶມ ແລະເຂົ້າຮ່ວມຂະບວນການຊາວໜຸ່ມຂອງສະມາຊິກຊາວໜຸ່ມ-ເຍົາວະຊົນຈຳນວນໜຶ່ງຍັງຖືເບົາ, ບໍ່ທັນຕັ້ງໜ້າໃນການເຝິກຝົນຫຼໍ່ຫຼອມຕົນເອງເພື່ອສ້າງວຽກເຮັດງານທຳ ແລະຍັງມີຄ່ານິຍົມທີ່ບໍ່ຖືກຕ້ອງ.

ສາມ, ແບບແຜນການນຳພາ ແລະວິທີເຮັດວຽກຂອງຄະນະຊາວໜຸ່ມປະຊາຊົນ ປະຕິວັດລາວຈຳນວນໜຶ່ງຍັງບໍ່ທັນແຂງແຮງ; ຄະນະພັກ, ອົງການປົກຄອງຂັ້ນຮາກຖານບ້ານສ່ວນຫຼາຍຍັງບໍ່ທັນເຂົ້າໃຈ ແລະໃຫ້ຄວາມສຳຄັນໃນຕໍ່ວຽກງານຊາວໜຸ່ມເທົ່າທີ່ຄວນ.

ສີ່, ການຈັດຕັ້ງຂະບວນການຊາວໜຸ່ມຍັງບໍ່ທັນມີເນື້ອໃນອຸດົມສົມບູນ ແລະຮູບການທີ່ແທດເໝາະກັບຈຸດພິເສດ, ຈິດຕະສາດຂອງຊາວໜຸ່ມ ສະແດງອອກຊາວໜຸ່ມຈຳນວນໜຶ່ງຍັງບໍ່ມີຄວາມຈູບຈ້າວຫ້າວຫັນ, ກະຕືລືລົ້ນຕໍ່ການປະຕິບັດໜ້າທີ່ວຽກງານເທົ່າທີ່ຄວນ.

ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານຂະບວນການຊາວໜຸ່ມບັນລຸຜົນສຳເລັດແລະມີປະສິດທິຜົນດີທັດສະນະຜູ້ຂຽນເຫັນວ່າຄວນສຸມໃສ່ແກ້ໄຂບາງວຽກງານດັ່ງນີ້:

1). ເພີ່ມທະວີສຶກສາອົບຮົມການເມືອງ-ແນວຄິດໃຫ້ຊາວໜຸ່ມລາວ, ກໍ່ສ້າງຖັນແຖວຊາວໜຸ່ມ-ເຍົາວະຊົນ ໂດຍສະເພາະແມ່ນກຸ່ມຊາວໜຸ່ມກຳມະກອນ, ຊາວຄ້າຂາຍ, ຊາວໜຸ່ມໃນອົງການຈັດຕັ້ງທາງສັງຄົມ ແລະຊາວໜຸ່ມຢູ່ເຂດຫ່າງໄກສອກຫຼີກໃຫ້ມີຄຸນສົມບັດສົມທຳປະຕິວັດ, ມີທາດແທ້ການເມືອງໜັກແໜ້ນ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ, ຕໍ່ພັກ, ມີຄວາມຮູ້, ຄວາມສາມາດ, ຕອບສະໜອງຄວາມຮຽກຮ້ອງຕ້ອງການຕາມໜ້າທີ່ການເມືອງຂອງພັກໃນແຕ່ລະໄລຍະເປັນຢ່າງດີ, ເຮັດເປັນປົກກະຕິ ແລະທົ່ວເຖິງ ເພື່ອໃຫ້ພວກເຂົາເຂົ້າຮ່ວມໃນຂະບວນການຕ່າງໆຂອງຊາວໜຸ່ມຈັດຂຶ້ນຢ່າງເປັນຟົດຟື້ນ.

2). ເອົາໃຈໃສ່ສ້າງນິຕິກຳທີ່ພົວພັນກ່ຽວກັບວຽກງານຂະບວນການຊາວໜຸ່ມ ເພື່ອໃຫ້ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດໃນທົ່ວປະເທດ; ພ້ອມນັ້ນ, ກໍຈັດຕັ້ງເຜີຍແຜ່ບັນດາມະຕິ, ຄຳສັ່ງ, ກົດໝາຍ, ລະບຽບການ, ເລົ່າມູນເຊື້ອຂອງທ່ານຜູ້ນຳ ແລະຂອງພັກ-ລັດ, ແຜນພັດທະນາຊາວໜຸ່ມ-ເຍົາວະຊົນໃຫ້ພະນັກງານ, ສະມາຊິກຊາວໜຸ່ມ-ເຍົາວະຊົນໄດ້ຮັບຮູ້ ແລະເຂົ້າໃຈຢ່າງເລິກເຊິ່ງຕໍ່ແນວທາງ, ນະໂຍບາຍຂອງພັກ-ລັດເວົ້າລວມ, ເວົ້າສະເພາະແມ່ນຄວາມຕື່ນຕົວ, ມີສະຕິຕໍ່ການຈັດຕັ້ງ, ເຄົາລົບຕໍ່ກົດໝາຍ ແລະລະບຽບການເພື່ອໃຫ້ຊາວໜຸ່ມ-ໄວໜຸ່ມເຂົ້າຮ່ວມຂະບວນການຕ່າງໆຢ່າງເປັນຂະບວນການຟົດຟື້ນກາຍເປັນກຳລັງແຮງທີ່ແທ້ຈິງຕໍ່ກັບການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະປະຕິບັດ 2 ວາລະແຫ່ງຊາດຢ່າງແຂງແຮງ.

3). ເອົາໃຈໃສ່ຍົກລະດັບຄວາມຮູ້, ຄວາມສາມາດຂອງພະນັກງານທີ່ເຮັດວຽກງານຂະບວນການໃນຂອບເຂດທົ່ວປະເທດເພື່ອເຮັດໃຫ້ມີແບບແຜນການນຳພາ ແລະວິທີເຮັດວຽກຂອງຄະນະຊາວໜຸ່ມປະຊາຊົນ ປະຕິວັດລາວແຕ່ລະຂັ້ນມີຄວາມເຂັ້ມແຂງ; ເພີ່ມທະວີຂອດການປະສານງານແຕ່ຂັ້ນສູນກາງຮອດ

ທ້ອງຖິ່ນ ເພື່ອເຮັດໃຫ້ຄະນະພັກ, ອົງການປົກຄອງຂັ້ນຮາກຖານບ້ານເຂົ້າໃຈ ແລະເຫັນໄດ້ຄວາມສຳຄັນຂອງວຽກງານຊາວໜຸ່ມ.

4). ເພີ່ມທະວີສ້າງຂະບວນການໃນວັນສຳຄັນຕ່າງໆຂອງຊາດ, ຂອງພັກ, ຂອງຊາວໜຸ່ມຕິດພັນກັບຂະບວນການຂໍ້ແຂ່ງຂັນຮັກຊາດ ແລະພັດທະນາ ດ້ວຍຈັດຕັ້ງປະຕິບັດຂະບວນການຂໍ້ແຂ່ງຂັນ 4 ບຸກຂອງຊາວໜຸ່ມ ຕິດພັນກັບວຽກງານວິຊາສະເພາະຂອງແຕ່ລະຂະແໜງການໃຫ້ມີຄຸນນະພາບ ດ້ວຍການເພີ່ມທະວີໃນການຄົ້ນຄວ້າເນື້ອໃນ, ວິທີການພັດທະນາວຽກງານຂະບວນການຊາວໜຸ່ມໃຫ້ຖືກກັບສະພາບແວດລ້ອມ, ຈຸດພິເສດແລະຈິດຕະສາດຂອງຊາວໜຸ່ມ; ກະຕຸກຊຸກຍູ້ພະນັກງານໃຫ້ຄວາມຈູບຈ້າວທ້າວທັນຄວາມກະຕືລືລົ້ນຕໍ່ວຽກງານ.

5). ເພີ່ມທະວີການຍາດແຍ່ງ, ການຊ່ວຍເຫຼືອ, ການສະໜັບສະໜູນງົບປະມານ, ເຕັກນິກ, ວິຊາການຈາກບັນດາພາກສ່ວນຕ່າງໆເພື່ອຮັບໃຊ້ແກ່ວຽກງານຊາວໜຸ່ມ-ເຍົາວະຊົນ. ຄຽງຄູ່ກັນນັ້ນ, ກໍຄວນເອົາໃຈໃສ່ກໍ່ສ້າງພື້ນຖານໂຄງລ່າງວັດຖຸເຕັກນິກໃຫ້ແກ່ການພັດທະນາວຽກງານຂະບວນຊາວໜຸ່ມໃນເງື່ອນໄຂໃໝ່.

ສັງລວມແລ້ວ, ຍົກສູງບົດບາດວຽກງານຂະບວນການຊາວໜຸ່ມໃນເງື່ອນໄຂໃໝ່ ເປັນການຊອກຫາສະພາບບັນຫາ, ເນື້ອໃນ, ວິທີການໃນການນຳພາຈັດຕັ້ງປະຕິບັດ ແລະພັດທະນາວຽກງານຂະບວນການຊາວໜຸ່ມໃນຂອບເຂດທົ່ວປະເທດ ເພື່ອຮັບປະກັນໃຫ້ແກ່ການພັດທະນາວຽກງານຂະບວນການຊາວໜຸ່ມໃນສະເພາະໜ້າ ແລະຍາວນານໃຫ້ມີຄຸນນະພາບໂດຍຜ່ານຂະບວນການຕົວຈິງ ເຊິ່ງໃນໄລຍະຜ່ານມາການສ້າງຂະບວນການຊາວໜຸ່ມແມ່ນໄດ້ປະຕິບັດຢ່າງຕໍ່ເນື່ອງດ້ວຍຫຼາຍວິທີ, ຫຼາຍຮູບການຢ່າງເປັນຂະບວນຟົດຟື້ນສາມາດເຕົ້າໂຮມເອົາຊາວໜຸ່ມລາວບັນດາເຜົ່າເຂົ້າມາມີສ່ວນຮ່ວມໃນຂະບວນການຕ່າງໆ; ສູນກາງຊາວໜຸ່ມປະຊາຊົນ ປະຕິວັດລາວໄດ້ເອົາໃຈໃສ່ ແລະມີຄວາມຮັບຜິດຊອບສູງຕໍ່ການປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມທົ່ວປະເທດ ຄັ້ງທີ VIII, ແຜນພັດທະນາຊາວໜຸ່ມ-ເຍົາວະຊົນ 5 ປີ 2021-2025 ຄັ້ງທີ II, ຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ 2021-2030 ດ້ວຍການອອກແຮງແຂ່ງຂັນຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກຂອງຊາວໜຸ່ມ, ຂໍ້ແຂ່ງຂັນ 3 ດີ 4 ຮູ້ຂອງເຍົາວະຊົນ, ສຸມໃສ່ວຽກງານສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ຊາວໜຸ່ມ-ເຍົາວະຊົນໃຫ້ມີທັດສະນະຫຼັກໝັ້ນການເມືອງທີ່ໜັກແໜ້ນ, ມີຄຸນທາດການເມືອງ ແລະຖືເອົາວຽກງານຂະບວນການເປັນບ່ອນກໍ່ສ້າງຊາວໜຸ່ມ-ເຍົາວະຊົນແນໃສ່ສ້າງພະນັກງານໜຸ່ມໃຫ້ມີຄວາມເຕີບໃຫຍ່ໃນການນຳພາຕົວຈິງ ເພື່ອສະໜອງບຸກຄະລາກອນ ປະຕິວັດຮຸ່ນສືບທອດທີ່ມີຄຸນນະພາບໃຫ້ແກ່ການຈັດຕັ້ງພັກແຕ່ລະຂັ້ນ ກໍຄືປະກອບສ່ວນຢ່າງຕັ້ງໜ້າໃນການພັດທະນາ ແລະສ້າງສາພັດທະນາປະເທດຊາດ.

# ພັດທະນາວຽກງານເຕັກໂນໂລຊີຂໍ້ມູນຂ່າວສານ ແລະການສື່ສານ ໃນຂອບເຂດທົ່ວປະເທດ

ຂຽນໂດຍ: ນ. ພູວຽງ ແກ້ວສີມີໄຊ

ປັດຈຸບັນເຕັກໂນໂລຊີດິຈິຕອນໄດ້ຮັບການພັດທະນາຢ່າງກ້າວກະໂດດ ແລະພວມກ້າວສູ່ຍຸກສະໄໝ ອຸດສາຫະກຳ 4.0 ເຊິ່ງເປັນຍຸກຂອງການນຳໃຊ້ເຕັກໂນໂລຊີດິຈິຕອນເຂົ້າໃນທຸກຂົງເຂດວຽກງານ ມັນໄດ້ກາຍເປັນເຄື່ອງມືທີ່ສຳຄັນໃຫ້ແກ່ການເຄື່ອນໄຫວ, ການດຳລົງຊີວິດຂອງຄົນເຮົາໃຫ້ມີຄວາມສະດວກສະບາຍ, ຊ່ວຍອຳນວຍຄວາມສະດວກໃນດ້ານການຄຸ້ມຄອງ, ບໍລິຫານລັດ, ການຄ້າ, ການຜະລິດ, ການສຶກສາ, ສາທາລະນະສຸກ, ວິທະຍາສາດເຕັກນິກ ແລະດ້ານອື່ນໆ; ມັນໄດ້ກາຍເປັນປັດໄຈສຳຄັນໃຫ້ແກ່ການພັດທະນາໃນທຸກດ້ານ ໂດຍນຳໃຊ້ເຕັກໂນໂລຊີອິນເຕີເນັດແຫ່ງສັບພະສິ່ງ (IoT), ລະບົບປັນຍາປະດິດ (AI), ລະບົບຖານຂໍ້ມູນໃຫຍ່ (Big Data), ກຸ່ມຂໍ້ມູນຜູກພັນ (BlockChain), ອິນເຕີເນັດທີ່ມີຄວາມໄວສູງ 5G ສິ່ງດັ່ງກ່າວນີ້ແມ່ນບັນດາເຕັກໂນໂລຊີທີ່ທົ່ວໂລກພວມໃຫ້ຄວາມສຳຄັນ ແລະຜັນຂະຫຍາຍເຂົ້າໃນວຽກງານທຸກຂະແໜງການເພື່ອຫັນເປັນທັນສະໄໝ.

ຍ້ອນເຫັນໄດ້ບົດບາດຄວາມສຳຄັນຂອງວຽກງານເຕັກໂນໂລຊີຂໍ້ມູນຂ່າວສານ ແລະການສື່ສານ, ດັ່ງນັ້ນ, ໃນພາລະກິດປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດ, ພັກເຮົາໄດ້ຖືເອົາວຽກງານເຕັກໂນໂລຊີຂໍ້ມູນຂ່າວສານ ແລະການສື່ສານ (Information and Communication Technologies: ICT) ເປັນຂະແໜງການໜຶ່ງທີ່ຢູ່ແຖວໜ້າເພື່ອຊ່ວຍໃຫ້ທຸກຂະແໜງການ ແລະທ້ອງຖິ່ນໃນຂອບເຂດທົ່ວປະເທດປະຕິບັດໜ້າທີ່ວຽກງານໄດ້ຢ່າງສະດວກ, ວ່ອງໄວ, ທັນການ, ຂັບເຄື່ອນການຫັນເປັນອຸດສາຫະກຳ ແລະທັນສະໄໝໃນການຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ, ປະກອບສ່ວນສ້າງລາຍຮັບເຂົ້າງົບປະມານຂອງຊາດ, ສ້າງເງື່ອນໄຂອຳນວຍຄວາມສະດວກໃນການຕິດຕໍ່ພົວພັນ, ຮ່ວມມືກັບພາກພື້ນ ແລະສາກົນໄດ້ຢ່າງມີປະສິດທິພາບ. ໃນເອກະສານກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກປະຊາຊົນ ປະຕິວັດລາວ ໄດ້ໃຫ້ທັດສະນະວ່າ: "ສິ່ງເສີມການພັດທະນາພື້ນຖານໂຄງລ່າງດ້ານໂທລະຄົມມະນາຄົມ ແລະຂໍ້ມູນຂ່າວສານທາງເອເລັກໂຕຣນິກຄວາມໄວສູງໃຫ້ຂະຫຍາຍຕົວໄວ ແລະມີຄຸນນະພາບ"[1]; ມາຮອດກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ ກໍໄດ້ສືບຕໍ່ເນັ້ນໜັກວ່າ: "ຂະຫຍາຍສະຖານີຮັບ-ສົ່ງສັນຍານມືຖືລະບົບ 3G ຄວບຄຸມໃຫ້ໄດ້ 100%, 4G ໃຫ້ໄດ້ 90% ແລະ 5G ໃຫ້ໄດ້ 50%; ສູ້ຊົນຫັນເປັນທັນສະໄໝໃນການຊຳລະສະສາງ ແລະການເກັບລາຍຮັບເຂົ້າງົບປະມານດ້ວຍລະບົບ

[1] ເອກະສານກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກປະຊາຊົນ ປະຕິວັດລາວ, ປີ 2016, ໜ້າ 102.

ຕ່າງໆ ເປັນຕົ້ນຜ່ານໂທລະສັບມືຖື (Mobile Money) ເພື່ອຫຼຸດຜ່ອນການນຳໃຊ້ເງິນສົດໃນສັງຄົມ, ວິຖີຊີວິດແບບປົກກະຕິໃໝ່ ແລະ ພັດທະນາເສດຖະກິດດີຈິຕອນໃນໄລຍະໃໝ່, ສ້າງຕະຫຼາດເອເລັກໂຕຣນິກ, ການບໍລິການສາງພັກສິນຄ້າ ແລະທາງບົກ;...ສູ້ຊົນການບໍລິການລັດເປັນທັນສະໄໝ ແລະປັບປຸງການບໍລິຫານລັດເປັນລັດຖະບານເອເລັກໂຕຣນິກ (E-Government)”[1]. ຄຽງຄູ່ກັນນັ້ນ, ລັດກໍໄດ້ກຳນົດວິໄສທັດການພັດທະນາເສດເຖະກິດດີຈິຕອນແຫ່ງຊາດ ໄລຍະ 20 ປີ (2021-2040), ຍຸດທະສາດການພັດທະນາເສດຖະກິດດີຈິຕອນແຫ່ງຊາດ ໄລຍະ 10 ປີ (2021-2030) ແລະແຜນພັດທະນາເສດຖະກິດດີຈິຕອນແຫ່ງຊາດ ໄລຍະ 5 ປີ (2021-2025) ເຊິ່ງປະກອບມີ 3 ເສົາຄ້ຳຄື: ເສດຖະກິດດີຈິຕອນ, ສັງຄົມດີຈິຕອນ ແລະລັດຖະບານດີຈິຕອນ.

ໂດຍປະຕິບັດຕາມພາລະບົດບາດໃນການຄຸ້ມຄອງມະຫາພາກ ແລະດັດສົມຈຸລະພາກ; ດັ່ງນັ້ນ, ຄະນະພັກ, ຄະນະນຳ ກະຊວງເຕັກໂນໂລຊີ ແລະການສື່ສານໄດ້ສຸມໃສ່ໃນການສ້າງ ແລະປັບປຸງບັນດາກົດໝາຍ, ນິຕິກຳລຸ່ມກົດໝາຍ ເພື່ອຄຸ້ມຄອງ, ສົ່ງເສີມ ແລະດັດສົມການນຳໃຊ້ລະບົບໄອຊີທີດີຈິຕອນ; ສຸມໃສ່ປັບປຸງສະຖາບັນເຕັກໂນໂລຊີ ແລະການສື່ສານໃຫ້ກາຍເປັນສະຖາບັນທຽບເທົ່າມະຫາວິທະຍາໄລ ເພື່ອສ້າງບຸກຄະລາກອນໃຫ້ມີທັກສະດ້ານດີຈິຕອນຕອບສະໜອງແກ່ສັງຄົມໃນແຕ່ລະປີ; ໄດ້ເອົາໃຈໃສ່ນຳພາ-ຊີ້ນຳຈັດຕັ້ງປະຕິບັດແຜນງານທີ່ກຳນົດໄວ້ເປັນຕົ້ນແມ່ນສຸມໃສ່ພັດທະນາພື້ນຖານໂຄງລ່າງເຄືອຂ່າຍພາກລັດ (Government Network) ເພື່ອເຊື່ອມໂຍງທຸກກະຊວງ ແລະອົງການລັດດ້ວຍຄວາມໄວສູງ ໂດຍການນຳໃຊ້ສາຍສົ່ງແຫ່ງຊາດທີ່ມີຢູ່ແລ້ວ, ສ້າງລະບົບຫ້ອງການທັນສະໄໝ (e-office), ລະບົບອີເມວ (email) ແລະກອງປະຊຸມທາງໄກຂອງລັດຖະບານຢູ່ສູນກາງ ແລະທ້ອງຖິ່ນ ພ້ອມທັງສ້າງລະບົບປ້ອງກັນພື້ນຖານໂຄງລ່າງໂທລະຄົມມະນາຄົມ, ເຕັກໂນໂລຊີຂໍ້ມູນຂ່າວສານ ແລະການສື່ສານໃຫ້ຮັບປະກັນຄວາມປອດໄພສູງ ເພື່ອສະກັດກັ້ນການທຳລາຍເຄືອຂ່າຍ, ການໂຈລະກຳຂໍ້ມູນຂ່າວສານທຸກຮູບແບບ, ສະກັດກັ້ນຂໍ້ມູນທີ່ເປັນໄພ ແລະປົກປ້ອງຂໍ້ມູນສ່ວນບຸກຄົນ. ພ້ອມນັ້ນ, ເພື່ອຮັບປະກັນການເຊື່ອມໂຍງນຳໃຊ້ດ້ານໂທລະຄົມມະນາຄົມ ແລະອິນເຕີເນັດທາງຂະແໜງການດ້ານເຕັກໂນໂລຊີຂໍ້ມູນຂ່າວສານ ແລະການສື່ສານໄດ້ເອົາໃຈໃສ່ປັບປຸງ ແລະພັດທະນາວຽກງານດັ່ງກ່າວຢ່າງຕັ້ງໜ້າ ແລະຕໍ່ເນື່ອງ ເຊິ່ງພື້ນຖານໂຄງລ່າງໂທລະຄົມມະນາຄົມໄດ້ມີການຂະຫຍາຍແຕ່ສູນກາງລົງຮອດທ້ອງຖິ່ນ, ເຂດຫ່າງໄກສອກຫຼີກເຮັດໃຫ້ປະຊາຊົນສາມາດເຂົ້າເຖິງການບໍລິການດ້ານໂທລະຄົມ ແລະອິນເຕີເນັດ “ໃນໄລຍະໜຶ່ງປີຜ່ານມາສາມາດຂະຫຍາຍສະຖານີຮັບ-ສົ່ງສັນຍານໂທລະສັບມືຖືໄດ້ 128 ສະຖານີ ປັດຈຸບັນທົ່ວປະເທດມີສະຖານີຮັບ-ສົ່ງສັນຍານໂທລະສັບມືຖືທັງໝົດ 8.987 ສະຖານີ, ຂະຫຍາຍສາຍກາບໄຍແສງ (Optic Fiber) ໄດ້ປະມານ 4.690 ກິໂລແມັດ ປັດຈຸບັນທົ່ວປະເທດມີສາຍກາບໄຍແສງທັງໝົດ

[1] ເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ, ປີ 2021, ໜ້າ 130-131.

101.360 ກິໂລແມັດ ເທົ່າກັບ 234% ຂອງແຜນການ (ແຜນການ 2.000 ກິໂລແມັດ) ມີສັນຍານໂທລະສັບມືຖືຄອບຄຸມໄດ້ທຸກແຂວງ, ທຸກເມືອງ ແລະກວມ 97% ຂອງຈຳນວນບ້ານທັງໝົດໃນທົ່ວປະເທດ. ສຳລັບສັນຍານລະບົບ 5G ແມ່ນຢູ່ໃນການທົດລອງນຳໃຊ້ໃນນະຄອນຫຼວງວຽງຈັນ ເພື່ອກຽມຄວາມພ້ອມແກ່ການຫັນປ່ຽນສູ່ເສດຖະກິດດີຈິຕອນ ແລະອຸດສາຫະກຳ 4.0 ຕາມທິດກ້າວໃຫ້ທັນ ແລະໝູນໃຊ້ໃຫ້ເໝາະສົມກັບລະດັບການເຕີບໃຫຍ່ຂອງອຸດສາຫະກຳການຜະລິດ ແລະການບໍລິການຂອງປະເທດ; ໃນປີ 2023 ມີຜູ້ລົງທະບຽນນຳໃຊ້ໂທລະສັບຕັ້ງໂຕະ ແລະໂທລະສັບມືຖືທັງໝົດ 6.197.545 ເລກໝາຍ; ໃນນັ້ນ, ໂທລະສັບຕັ້ງໂຕະແບບມີສາຍ ແລະບໍ່ມີສາຍ ຈຳນວນ 1.233.787 ເລກໝາຍ ແລະໂທລະສັບມືຖື (ນຳໃຊ້ອິນເຕີເນັດລະບົບແບບມີສາຍ ແລະຜ່ານຊິມ 3G) ຈຳນວນ 4.963.758 ໝາຍເລກ.

ເພື່ອເຮັດໃຫ້ການບໍລິການມີຄວາມເປັນເອກະພາບ, ສະດວກວ່ອງໄວ, ທັນກັບສະພາບທາງຄະນະພັກ, ຄະນະນຳໄດ້ສຸມໃສ່ພັດທະນາລະບົບບໍລິການພາກລັດຜ່ານປະຕູດຽວ (Government Single Sign On) ປັດຈຸບັນສຳເລັດເປີດນຳໃຊ້ລະບົບບໍລິການພາກລັດປະຕູດຽວ (Gov-X) ເພື່ອລວມສູນຂໍ້ມູນ ແລະການບໍລິການຂອງພາກລັດ ກໍຄືສ້າງເງື່ອນໄຂໃຫ້ປະຊາຊົນ, ນັກທຸລະກິດ ແລະພະນັກງານທີ່ເຮັດບໍລິການສາທາລະນະສາມາດເຂົ້າເຖິງຂໍ້ມູນ ແລະການບໍລິການຂອງພາກລັດຜ່ານປະຕູດຽວຜ່ານທາງໂທລະສັບມືຖືສາມາດໂຟນ ດ້ວຍການເຊື່ອມຕໍ່ກັບບັນດາລະບົບບໍລິການຂອງລັດຄື: ລະບົບລົງທະບຽນໝາຍເລກໂທລະສັບ (3 ແກຼບ), ລະບົບກວດສອບຂໍ້ມູນບັດປະກັນສັງຄົມ LSSO, ລະບົບຄັງປັນຍາລາວ, ລະບົບລວມສູນແບບຟອມ ເອກະສານທາງການ e-Doc Tracking, ລະບົບຖານຂໍ້ມູນວິສາຫະກິດແຫ່ງຊາດ NED ແລະລະບົບໃບຂັບຂີ່ດີຈິຕອນ (e-Driving License) ໃນຮູບແບບຂອງ Web View. ສຳເລັດການພັດທະນາ ແລະປັບປຸງລະບົບຫ້ອງການທັນສະໄໝຂອງກະຊວງເຕັກໂນໂລຊີ ແລະການສື່ສານ (e-Office v3) ແລະຂະຫຍາຍການນຳໃຊ້ລະບົບຫ້ອງການທັນສະໄໝໄປຫາບັນດາພະແນກເຕັກໂນໂລຊີ ແລະການສື່ສານແຂວງ ແລະນະຄອນຫຼວງວຽງຈັນ ແລະບັນດາກະຊວງ, ອົງການຈັດຕັ້ງພັກ-ລັດມີທັງໝົດ 18 ພາກສ່ວນ ເປັນຕົ້ນແມ່ນກະຊວງ ແຜນການ ແລະການລົງທຶນ, ກະຊວງການຕ່າງປະເທດ, ກະຊວງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ, ຫ້ອງວ່າການສູນກາງພັກ, ກະຊວງພາຍໃນ, ຫ້ອງວ່າການນະຄອນຫຼວງ, ສະພາແຫ່ງຊາດ, ກະຊວງຍຸຕິທຳ, ກະຊວງສາທາລະນະສຸກ, ກະຊວງກະສິກຳ ແລະປ່າໄມ້, ຫ້ອງວ່າການປະທານປະເທດ, ກະຊວງອຸດສະຫະກຳ ແລະການຄ້າ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ, ທະນາຄານແຫ່ງ ສປປ ລາວ, ກະຊວງສຶກສາທິການ ແລະກິລາ, ກະຊວງພະລັງງານ ແລະບໍ່ແຮ່, ກະຊວງແຮງງານ ແລະສະຫວັດດີການສັງຄົມ, ກະຊວງປ້ອງກັນຄວາມສະຫງົບ. ສຳເລັດການຂະຫຍາຍລະບົບກອງປະຊຸມທາງໄກ (Video Conference) ທັງໝົດ 214 ພາກສ່ວນ; ໃນນັ້ນ, ສູນກາງ ຈຳນວນ 47 ພາກສ່ວນ ແລະທ້ອງຖິ່ນ ຈຳນວນ 167 ພາກສ່ວນ ປັດຈຸບັນມີບັນຊີທີ່ນຳໃຊ້ລະບົບກອງປະຊຸມທາງໄກທັງໝົດ 10.634 ບັນຊີ;

ໃນນັ້ນ, ສູນກາງ ຈຳນວນ 6.646 ບັນຊີ ແລະ ທ້ອງຖິ່ນ ຈຳນວນ 3.988 ບັນຊີ.

ການພັດທະນາພື້ນຖານໂຄງລ່າງໂທລະຄົມມະນາຄົມ, ໄອຊີທີ ແລະດິຈິຕອນໄດ້ສຸມໃສ່ສ້າງລະບົບເຊື່ອມໂຍງດ້ານໂທລະຄົມມະນາຄົມ ແລະອິນເຕີເນັດເຊື່ອມຕໍ່ອາຊຽນ ແລະບັນດາປະເທດໃນພາກພື້ນ ເຊິ່ງໃນໄລຍະ 1 ປີຜ່ານມາສຳເລັດການເຊື່ອມຕໍ່ສາຍສົ່ງ ລະຫວ່າງອຸປະກອນຂອງບໍລິສັດ GDMS ກັບອຸປະກອນ NIX ຂອງສູນອິນເຕີເນັດແຫ່ງຊາດ, ເຊື່ອມຕໍ່ BGP ບໍລິສັດ GDMS ກັບບັນດາບໍລິສັດທີ່ເຊື່ອມຕໍ່ກັບລະບົບສູນກາງອິນເຕີເນັດພາຍໃນ NIX; ສຳເລັດການຕິດຕັ້ງອຸປະກອນ Router IIG ຂອງບໍລິສັດດາວທຽມລາວເອເຊຍ-ປາຊີຟິກສາມາດເຊື່ອມຕໍ່ລະບົບສູນກາງອິນເຕີເນັດພາຍໃນ ແລະຕ່າງປະເທດຂອງບໍລິສັດ ດາວທຽມລາວເອເຊຍ-ປາຊີຟິກ ໂດຍຜ່ານລະບົບສູນກາງອິນເຕີເນັດຕ່າງປະເທດ IIG; ສຳເລັດການໂອນຍ້າຍບໍລິມາດສັນຍານອິນຕີເນັດຂອງບໍລິສັດສະຕາໂທລະຄົມມາຜ່ານສູນກາງອິນເຕີເນັດຕ່າງ ປະເທດທີ່ສູນອິນເຕີເນັດແຫ່ງຊາດ ຈຳນວນບໍລິມາດ 40Gbps; ສຳເລັດການຕິດຕັ້ງຕັ້ງລະບົບສູນກາງຂໍ້ຄວາມສັ້ນ SMSC ພ້ອມທັງເຊື່ອມຕໍ່ບັນດາຂໍ້ຄວາມສັ້ນຢູ່ພາຍໃນ ແລະທົດລອງຂໍ້ຄວາມສັ້ນຕ່າງປະເທດຜ່ານລະບົບ SMSC ຜ່ານສູນອິນເຕີເນັດແຫ່ງຊາດ. ໄດ້ເອົາໃຈໃສ່ປັບປຸງ ແລະຂະຫຍາຍສູນຂໍ້ມູນແຫ່ງຊາດ ເພື່ອເປັນບ່ອນຮັບຝາກຂໍ້ມູນເອເລັກໂຕຣນິກແບບລວມສູນຂອງລັດ ແລະເອກະຊົນ ເຊິ່ງປັດຈຸບັນສູນຂໍ້ມູນດິຈິຕອນໄດ້ໃຫ້ບໍລິການລູກຄ້າທັງໝົດ 23 ພາກສ່ວນຄື: ພາກລັດ ຈຳນວນ 13 ພາກສ່ວນ ແລະພາກເອກະຊົນ ຈຳນວນ 10 ພາກສ່ວນ. ພ້ອມນັ້ນ, ກໍໄດ້ສຸມໃສ່ພັດທະນາລະບົບຄວາມປອດໄພດ້ານໄຊເບີສຳເລັດສ້າງສູນປະຕິບັດການຄວາມປອດໄພໄຊເບີແຫ່ງຊາດ (SOC) ທີ່ມີໜ້າທີ່ຫຼັກໃນການເຝົ້າລະວັງ, ກວດກາ, ຕິດຕາມລະບົບເຄືອຂ່າຍຄອມພິວເຕີ, ເຄື່ອງແມ່ຂ່າຍທີ່ໃຫ້ບໍລິການຂໍ້ມູນຂ່າວສານຕ່າງໆຂອງພາກລັດ ໂດຍສະເພາະແມ່ນຂໍ້ມູນຈາກບັນດາກະຊວງທີ່ໄດ້ມາຝາກໄວ້ໃນສູນຂໍ້ມູນແຫ່ງຊາດ; ສຳເລັດການລົງຕິດຕັ້ງໂປແກຣມເຝົ້າລະວັງຜ່ານລະບົບເຄືອຄ່າຍ (End-point Detection and Response).

ດ້ານການພັດທະນາ ແລະນຳໃຊ້ນະວັດຕະກຳໄອຊີທີ: ໄດ້ເອົາໃຈໃສ່ຊຸກຍູ້, ສົ່ງເສີມໃນການຄົ້ນຄ້ວາ ແລະການປະດິດສ້າງນະວັດຕະກຳດ້ານໄອຊີທີ ເພື່ອຮັບໃຊ້ແກ່ສັງຄົມປັດຈຸບັນສຳເລັດການຄົ້ນຄວ້າ ແລະພັດທະນາລະບົບອອກ QR Code ຂອງພາກລັດ; ສຳເລັດປັບປຸງລະບົບສະຖິຕິການດາວໂຫຼດບັນດາເຕັກໂນໂລຊີພາສາລາວໃນເວັບໄຊເພັດຊະລາດ (www.phetsarath.gov.la); ສຳເລັດປັບປຸງລະບົບໂປຣແກຣມວັດຈະນານຸກົມ (Dictionary) ອອນລາຍໃຫ້ສາມາດແລ່ນໃນລະບົບ cloud ເພື່ອໃຫ້ສາມາດເຂົ້າເຖິງໄດ້ໄວ ແລະນຳໃຊ້ສະດວກຂຶ້ນກວ່າເກົ່າ; ສຳເລັດການທົດລອງນຳໃຊ້ລະບົບໂປຣແກຣມ Office ພາສາລາວ (HanCom Office) ລະບົບ Desktop (Word, Cell, Show and PDF); ສຳເລັດການຄົ້ນຄວ້າ ແລະພັດທະນາລະບົບກະດານຂໍ້ມູນຊຸມຊົນລາວພາກລັດ (www.laopedia.gov.la) ພ້ອມກັບລົງເຜີຍແຜ່ ແລະສຳຫຼວດເກັບກຳຂໍ້ມູນຢູ່ບັນດາກະຊວງ/ອົງການທຽບເທົ່າ ແລະເຝິກອົບຮົມການນຳໃຊ້ລະບົບກະດານຂໍ້ມູນຊຸມຊົນລາວພາກລັດ

(Government Laopedia) ໃຫ້ກັບບັນດາອົງການຈັດຕັ້ງພາກລັດ 3 ພາກຄື: ແຂວງບໍ່ແກ້ວ, ແຂວງຄຳມ່ວນ ແລະແຂວງອັດຕະປື ມີຜູ້ເຂົ້າຮ່ວມທັງໝົດ 190 ທ່ານ ແລະໄດ້ອັບໂຫຼດຂໍ້ມູນເຂົ້າໃນລະບົບ ຈຳນວນ 173 ຫົວເລື່ອງ. ການພັດທະນາໄປສະນີໄດ້ສົ່ງເສີມການນຳໃຊ້ຕາໜ່າງໂລຈິດສະຕິກ ແລະໄປສະນີໃນການຈັດສົ່ງ ແລະແຈກຢາຍສິນຄ້າທີ່ຊື້ຜ່ານທາງເອເລັກໂຕຣນິກ ລະຫວ່າງເຈົ້າຂອງຮ້ານ ແລະຜູ້ຊື້ໄດ້ 60%. ໄດ້ຄົ້ນຄວ້າແບ່ງຂັ້ນຄຸ້ມຄອງວຽກງານໄປສະນີລະຫວ່າງຂັ້ນສູນກາງ ແລະທ້ອງຖິ່ນ ເຊິ່ງປັດຈຸບັນຜູ້ປະກອບຂະແໜງການໄປສະນີມີທັງໝົດ 63 ບໍລິສັດ, ມີຫ້ອງການໄປສະນີທັງໝົດ 1.172 ແຫ່ງ; ໃນນັ້ນ, ພາກລັດ ຈຳນວນ 162 ແຫ່ງ, ພາກເອກະຊົນ ຈຳນວນ 1.030 ແຫ່ງ; ມີຈ່າມໄປສະນີ ຈຳນວນ 41 ແຫ່ງ, ສາຂາຈຳໜ່າຍສະແຕມ ຈຳນວນ 54 ແຫ່ງ, ຕູ້ໄປສະນີນຳໃຊ້ ຈຳນວນ 4.229 ຕູ້, ມີຫ້ອງການໄປສະນີທີ່ນຳໃຊ້ລະບົບປ່ອງອັດຕະໂນມັດ ຈຳນວນ 62 ແຫ່ງ, ໄປສະນີໄດ້ໃຫ້ບໍລິການຮັບຝາກ, ຈັດສົ່ງ ແລະແຈກຢາຍເຄື່ອງຝາກທັງພາຍໃນ ແລະຕ່າງປະເທດ ຈຳນວນ 192 ປະເທດ ໃນໄລຍະ 1 ປີຜ່ານມາໄປສະນີພັນພາຍໃນ ແລະຕ່າງປະເທດປະຕິບັດໄດ້ 15.689.738 ກິໂລກຣາມ, ເມດ່ວນພາຍໃນ ແລະຕ່າງປະເທດໄດ້ 145.582 ກິໂລກຣາມ, ຮັບ-ສົ່ງຈົດໝາຍພາຍໃນ ແລະຕ່າງປະເທດໄດ້ 83.428 ສະບັບ, ສະສົມສະແຕມພາຍໃນ ແລະຕ່າງປະເທດ 24.363 ຊຸດ”[(1)].

ເຖິງແມ່ນວ່າການພັດທະນາວຽກງານເຕັກໂນໂລຊີຂໍ້ມູນຂ່າວສານ ແລະການສື່ສານຢູ່ທົ່ວປະເທດເຮົາໄດ້ຂະຫຍາຍຕົວໄວ ແລະມີສິ່ງທີ່ພົ້ນເດັ່ນ, ແຕ່ກໍຍັງມີບາງດ້ານທີ່ຕ້ອງໄດ້ເອົາໃຈໃສ່ປັບປຸງ ແລະແກ້ໄຂ ເປັນຕົ້ນແມ່ນ:

1). ແບບແຜນນຳພາ ແລະວິທີເຮັດວຽກຂອງຄະນະນຳບາງບ່ອນໃນບາງຄັ້ງຍັງບໍ່ທັນໄດ້ລົງໃກ້ຊິດຕິດ ແທດກັບຮາກຖານ, ການນຳໃຊ້ພະນັກງານວິຊາການໃຫ້ເປັນກຳລັງແຮງສັງລວມບໍ່ທັນເອົາໃຈໃສ່ເທົ່າທີ່ຄວນ.

2). ຄວາມຮັບຮູ້ ແລະເຂົ້າໃຈຂອງພະນັກງານຢູ່ສູນກາງ ແລະທ້ອງຖິ່ນຈຳນວນໜຶ່ງຕໍ່ກັບແຜນພັດທະນາ, ແຜນເສດຖະກິດດິຈິຕອນຕິດພັນກັບສອງວາລະແຫ່ງຊາດ ຍັງບໍ່ທັນແຈ້ງ; ຄວາມເປັນເຈົ້າການ ແລະຄວາມຮັບຜິດຊອບຂອງບາງພາກສ່ວນຍັງບໍ່ທັນສູງ, ການປະສານງານກັນຍັງບໍ່ທັນກົມກຽວກັນດີ.

3). ພະນັກງານຈຳນວນໜຶ່ງຍັງຈຳກັດທາງດ້ານຄວາມຮູ້ວິຊາສະເພາະ ແລະປະສົບການຈຶ່ງເຮັດໃຫ້ການປະຕິບັດໜ້າທີ່ການເມືອງບໍ່ທັນໄດ້ດີເທົ່າທີ່ຄວນ.

4). ການນຳໃຊ້ສື່ສັງຄົມອອນລາຍຍັງບໍ່ທັນໄດ້ນຳໃຊ້ເຂົ້າໃນວຽກງານໃຫ້ເກີດປະໂຫຍດເທົ່າທີ່ຄວນ ສ່ວນຫຼາຍແມ່ນເນັ້ນໃສ່ຄວາມບັນເທີງ.

5). ເຖິງແມ່ນວ່າວຽກງານເຕັກໂນໂລຊີດິຈິຕອນໄດ້ຮັບການພັດທະນາຢ່າງກ້າວກະໂດດ, ແຕ່ລະບົບຄວາມປອດໄພທາງດ້ານອິນເຕີເນັດ ຍັງບໍ່ທັນຮັບປະກັນໄດ້ ໂດຍສະເພາະແມ່ນການຄຸ້ມຄອງສື່ສັງຄົມອອນລາຍ, ຄວາມປອດໄພທາງໄຊເບີ ແລະວິທີການຕອບໂຕ້ ຍັງບໍ່ທັນກັບສະພາບການ ເນື່ອງຈາກຍັງຂາດເຄື່ອງມືຄຸ້ມຄອງ ແລະກວດກາ.

[(1)] ແຜນພັດທະນາເຕັກໂນໂລຊີ ແລະການສື່ສານ ປີ 2024, ໜ້າ 7, 9, 11, 16.



ອ່ານຕໍ່ສະບັບໜ້າ